*LAO.3647.00*

WINTER 2003

# ແບບສອນອ່ານ

# ພາສາລາວ

## ຊັ້ນ ປ. ໓

## LAO THIRD GRADE

FOLSOM CORDOVA UNIFIED
BILINGUAL OFFICE
CORDOVA LANE SCHOOL
2460 Cordova Lane
Rancho Cordova, California 95670
(916) 635-6811

#3

ພຣະຣາຊອານາຈັກລາວ

ກະຊວງສຶກສາທິການ

# ແບບສອນອ່ານ

ພາສາລາວ

# ຊັ້ນ ປ. ໓

LAO THIRD GRADE

# ສາຣະບານ

ໜ້າ

ໍ໑. ເດັກມີຄວາມອຸດສາຫະບຸ້ນຶ້ງ . . . . . . . ໑
໒. ຕ້ອງໄປໂຮງຮຽນໃຫ້ທັນເວລາ . . . . . . . ໓
໓. ຕ້ອງນັບຖືຄຣູຂອງເຮົາ . . . . . . . . ໖
໔. ເດັກສວນຄົນແລະແມງກະເບື້ອ . . . . . . . ໙
໕. ທຳຄວາມດີໂດຍບໍ່ຄິດຫາຄຸນ . . . . . . . ໑໑
໖. ຄວາມຮັກຂອງອ້າຍນ້ອງ . . . . . . . . ໑໔
໗. ຄຳສອນເດັກ . . . . . . . . . ໑໗
໘. ຄົນມັກຄຸຍແລະເວົ້າໂບກ . . . . . . . . ໒໐
໙. ລີ້ນແລະຫົວໃຈ . . . . . . . . . ໒໓
໑໐. ຄວາມມີໃຈດີຕໍ່ຄົນອື່ນ . . . . . . . . ໒໕
໑໑. ແມ່ພບາດ . . . . . . . . . . ໒໘
໑໒. ຊາດຕ່າງ ໆ ໃນອິນດູຈີນ . . . . . . . ໓໐
໑໓. ຄວາມຈົ່ມຂອງເດັກນ້ອຍ . . . . . . . ໓໓
໑໔. ຈີນໃນປະເທດອິນດູຈີນ . . . . . . . ໓໗
໑໕. ປ້ອງເສດໃນອິນດູຈີນ . . . . . . . ໓໙
໑໖. ເຫງັນແລະໄກ່ນູ້ . . . . . . . . ໔໓
໑໗. ຄົນຂີ້ເຫລົ້າ . . . . . . . . . ໔໗
໑໘. ຄົນຂີ້ປາ . . . . . . . . . ໔໘

| | | ໜ້າ |
|---|---|---|
| ໑໙. | ງານແລະບຸນຕ່າງ ໆ ໃນສິບສອງເດືອນ | ໔໓ |
| ໒໐. | ງານບຸນຕ່າງ ໆ ໃນສິບສອງເດືອນ | ໔໗ |
| ໒໑. | ວຽກການຂອງຊາວນາ | ໖໑ |
| ໒໒. | ລູກຕ້ອງເປັນຄົນສອນງ່າຍ | ໖໔ |
| ໒໓. | ການຫລິ້ນການພະນັນເປັນການຊົ່ວ | ໖໘ |
| ໒໔. | ຄວາມໂງ່ຊ້າ | ໗໐ |
| ໒໕. | ວິຊາກັບສົມບັດຜູ້ດີ | ໗໓ |
| ໒໖. | ຕົວຢ່າງຄວາມຮັກບິດາມາດາ | ໗໖ |
| ໒໗. | ຄົນເດີນທາງກັບໝາ | ໘໐ |
| ໒໘. | ບໍ່ຄວນຮ້າຍແລະຂົ່ມເຫັງສັດ | ໘໒ |
| ໒໙. | ບໍ່ຄວນບຽດບຽນລູກນົກ | ໘໕ |
| ໓໐. | ອ້າຍດີຜູ້ນຶ່ງ | ໘໘ |
| ໓໑. | ປາຄຶດແກ້ແຄ້ນ | ໙໐ |
| ໓໒. | ທາດຫລວງວຽງຈັນ | ໙໓ |
| ໓໓. | ທາດຫລວງວຽງຈັນ (ຕໍ່) | ໙໖ |
| ໓໔. | ຄວາມຊື່ສັດຕໍ່ສຫາຍ | ໙໘ |
| ໓໕. | ຕົວຢ່າງຄວາມສັດຊື່ | ໑໐໒ |
| ໓໖. | ນັກຮຽນສັດຊື່ | ໑໐໔ |
| ໓໗. | ໝາກມັ່ງຄຸດ | ໑໐໖ |
| ໓໘. | ໂລບມາກມັກລາບຫາຍ | ໑໐໙ |





| | | ໜ້າ |
|---|---|---|
| ໓໙. | ເຮົາຄວນເປັນຄົນສຸພາບ | ໑໑໒ |
| ໔໐. | ຄຶດກ່ອນຈຶ່ງເວົ້າ | ໑໑໕ |
| ໔໑. | ຄວາມຈເລີນຂອງການຄົມນາຄົມ | ໑໑໘ |
| ໔໒. | ບຸນຄຸນຂອງຄຣູ (ຄຳກາບ) | ໑໒໑ |
| ໔໓. | ບຸນຄຸນຂອງຄຣູ (ຕໍ່) (ຄຳຮ່າຍ) | ໑໒໓ |
| ໔໔. | ການເກືອກູນຜູ້ອື່ນ | ໑໒໖ |
| ໔໕. | ເມືອງແລະບ້ານນອກ | ໑໒໙ |
| ໔໖. | ຢ່າປມາດການຫັດຖະກັມ | ໑໓໒ |
| ໔໗. | ການຂຽນຈົດໝາຍ | ໑໓໕ |
| ໔໘. | ນິທານຄອບຄົວຊຳພອນ | ໑໓໗ |
| ໔໙. | ນິທານຄອບຄົວຊຳພອນ (ຕໍ່) | ໑໓໙ |
| ໕໐. | ການເດີນທາງແຕ່ກ່ອນກັບດຽວນີ້ | ໑໔໒ |
| ໕໑. | ການສ້າງຖນົນແລະທາງຣົຖໄຟ | ໑໔໔ |
| ໕໒. | ຄົນບໍ່ທ່ຽງທັມ | ໑໔໖ |
| ໕໓, | ປໂຍດຂອງຖນົນແລະທາງຣົຖໄຟ | ໑໔໙ |
| ໕໔. | ເສືອແລະຫນູ | ໑໕໒ |
| ໕໕. | ມ້າສລາດຕົວນຶ່ງ | ໑໕໔ |
| ໕໖. | ເມືອສົມອິກກັບເມືອບ້ານເກົ່າ | ໑໕໖ |
| ໕໗. | ດ້ວຍຄວາມອົດທົນ, ຈະທຳອັນໃດກໍ່ສຳເຣັດໝົດ | ໑໕໘ |
| ໕໘. | ເຈົ້ານາຍທ່ຽງທັມຄົນນຶ່ງ | ໑໖໑ |

| | | ໜ້າ |
|---|---|---|
| ໕໙. | ແມວ | ໑໖໓ |
| ໖໐. | ຫມາແລະຕ່ອນຊີ້ນ | ໑໖໕ |
| ໖໑. | ການຫມາບັກເຫລ່ວຂອງຂ້ອຍ | ໑໖໗ |
| ໖໒. | ຫມາບັກເຫລ່ວຂອງຂ້ອຍ (ຕໍ່) | ໑໗໐ |
| ໖໓. | ເຕົ່າແລະຫນູ | ໑໗໒ |
| ໖໔. | ຄວາມລະວັງແມ່ນຕົ້ນຂອງຄວາມແນ່ນອນ | ໑໗໔ |
| ໖໕. | ການຕຶກເບັດ | ໑໗໗ |
| ໖໖. | ການຫາປາໃນທະເລສາບປະເທດຂະເມນ | ໑໗໙ |
| ໖໗. | ການຫາປາໃນທະເລສາບປະເທດຂະເມນ (ຕໍ່) | ໑໘໑ |
| ໖໘. | ສິລປະສາດ | ໑໘໔ |
| ໖໙. | ນະໄຫອີ | ໑໘໖ |
| ໗໐. | ຄວາມສັດຊື່ໃນການຄ້າຂາຍ | ໑໘໙ |
| ໗໑. | ອ້າຍນ້ອງສອງຄົນ | ໑໙໑ |
| ໗໒. | ຄຳເວົ້າດີມີຄ່າກວ່າຂອງທີ່ໃຫ້ | ໑໙໕ |
| ໗໓. | ຄວາມພຍາຍາມພາກພຽນບໍ່ອາດພາໃຫ້ສຳເລັດສເມີ | ໑໙໗ |
| ໗໔. | ການຊ່ວຍເຫລືອຊຶ່ງກັນແລະກັນ | ໑໙໙ |
| ໗໕. | ການສ້າງສາຂອງລັດຖະບານ | ໒໐໒ |
| ໗໖. | ການສ້າງສາຂອງລັດຖະບານ (ຕໍ່) | ໒໐໕ |
| ໗໗. | ປາໄດ້ດູຖູກຄົນໃຊ້ຂອງຕົນ | ໒໐໘ |
| ໗໘. | ສອງສະຫາຍ | ໒໑໐ |



| | | ໜ້າ |
|---|---|---|
| ໗໙. | ເຮົາຕ້ອງພຍາຍາມໃຫ້ໄດ້ດີຂຶ້ນໄປສເມີ | ໒໑໓ |
| ໘໐. | ຕ້ອງລະວັງຕົວສເມີ | ໒໑໕ |
| ໘໑. | ວຽງຈັນ | ໒໑໘ |
| ໘໒. | ທີ່ປະເທດຂະເມນ | ໒໒໑ |
| ໘໓. | ທີ່ປະເທດຂະເມນ (ຕໍ່) | ໒໒໓ |
| ໘໔. | ເມືອງພະນົມເປັນ | ໒໒໖ |
| ໘໕. | ເມືອງເວ້ | ໒໒໘ |
| ໘໖. | ເຂດແດນຄວາມຈະເຣີນຂອງລາວ | ໒໓໑ |
| ໘໗. | ໄຊງ່ອນ | ໒໓໓ |
| ໘໘. | ໄຊລີງ "ເຈີເລີນ" | ໒໓໖ |
| ໘໙. | ບາງກອກ | ໒໓໙ |
| ໙໐. | ການກິນບາກົນ | ໒໔໒ |
| ໙໑. | ບຶງໃຈບຸນຜູ້ນຶ່ງ | ໒໔໕ |
| ໙໒. | ບຶງໃຈບຸນຜູ້ນຶ່ງ (ຕໍ່) | ໒໔໗ |
| ໙໓. | ຫລີປີ | ໒໕໑ |

# ໑. ເດັກມີຄວາມອຸດສາຫະຜູ້ນຶ່ງ



ພໍ່ບອກທ້າວໂງ່ນ ຜູ້ເປັນລູກວ່າ "ອ່ານໜັງສືໜ້ານີ້ໃໝ່ອີກດູ" ທ້າວໂງ່ນນັ່ງຕັ້ງອີ້ ວາງປື້ມເທິງໂຕະ ກົ້ມເບິ່ງປື້ມ ແລະ ຕັ້ງໃຈອ່ານບົດຮຽນຂອງຕົນທຸກແຖວ. ຢູ່ໃກ້ໆ ປ່ອງຢ້ຽມ ມີນົກນ້ອຍຕົວນຶ່ງຮ້ອງຢູ່ເປັນໜ້າອອນຊອນ, ທ້າວໂງ່ນກໍບໍ່ຟັງ ເພາະລາວຈະຕ້ອງໄດ້ອ່ານໜັງສືອີກເທື່ອໜຶ່ງ, ກົກສີດາກົກນຶ່ງ ເດ່ງວ່າທີ່ມີໝາກສຸກເຫຼືອງງາມ ນາຫາປ່ອງຢ້ຽມ, ກິ່ນໝາກສີດາ ສຸກຫອມອົ້ນໄປຖືກດັງທ້າວໂງ່ນ ລາວກໍບໍ່ໄປເກັບ ເພາະຍັງຈະໄດ້ອ່ານໜັງສືອີກສາມສີ່ແຖວ.

ຢູ່ຕໍ່ເຮືອນ; ມີເດັກນ້ອຍຫລາຍຄົນພວມຫລິ້ນມ່ວນຢູ່: ລາງຄົນກໍຫລິ້ນໝາກຂ່າງ, ລາງຄົນກໍປ່ອຍວ່າວ ທັງຮ້ອງທັງຫົວ ທ້າວໂງ່ນກໍບໍ່ມົວຫລຽວເບິ່ງຫລືຫົວຕອບເອົາ ເພາະລາວຢາກອ່ານ

ບົດຮຽນຂອງຕົນໃຫ້ແລ້ວ ຄັນອ່ານສຸດແລ້ວ, ທ້າວໂງ່ນກໍພັບປຶ້ມໄວ້ ທັງມີຄວາມດີໃຈດ້ວຍວ່າໄດ້ຟັງຄວາມພໍ່ ແລະໄດ້ອ່ານບົດຮຽນຂອງຕົນຈົບສຸດ ໃນຂນະນີ້, ທ້າວໂງ່ນໄດ້ສະແດງກິຣິຍາເປັນເດັກຜູ້ນຶ່ງທີ່ມີຄວາມພາກພຽນອົດທົນໄດ້ດີເຫມືອນຜູ້ໃຫຍ່.

ຄຳອະທິບາຍ.– ອຸດສາຫະ : ອົດທົນ, ຂົມໃຈສູ້.
ພາກພຽນ : ດຸຫມັ່ນ, ພິປອງເຮັດໃຫ້ໄດ້.

ຄຳຖາມ.– ໑.– ພໍ່ບອກທ້າວໂງ່ນຜູ້ເປັນລູກວ່າຢ່າງໃດ?
໒.– ທ້າວໂງ່ນເຮັດແນວໃດ?
໓.– ຜູ້ໄດ້ປອງປຸ້ນມີຫຍັງ?
໔.– ເປັນຫຍັງ ທ້າວໂງ່ນຈຶ່ງບໍ່ຢາກຟັງສຽງນົກຮ້ອງ?

ໃຈຄວາມ.– ທ້າວໂງ່ນອົດພຽນອ່ານຫນັງສືບໍ່ຫົວຊາບ່ຳສຽງນົກຮ້ອງ ຫລືກິ່ນຫມາກສີດາຊຶ່ງມາຖືກດັງ. ລາວບໍ່ອອກໄປແລ່ນຫລິ້ນກັບຫມູ່ ການປະພຶດຂອງລາວນີ້ ສະແດງໃຫ້ເຫັນວ່າທ້າວໂງ່ນເປັນເດັກນ້ອຍພາກພຽນຫລາຍ.

ສັບ.– ເດັກອຸດສາຫະ.
ນາມ : ບົດຮຽນ, ປຶ້ມ, ຫນາ, ແຖວ, ປອງປຸ້ນ.
ຄຸນນາມ : ຂອບຊອບ, ສຸກເຫລືອງງາມ.
ກິຣິຍາ : ອ່ານ, ຟັງ, ຫລິ້ນ.



ໄວຍາກອນ.– ເພື່ອຈະຂຽນ, ເພິ່ນໃຊ້ຕົວຫນັງສືອັກສອນລາວມີ ໒໗ ຕົວ ຄື ກ. ຂ. ຄ. ງ. ຈ. ສ. ຊ. ຍ. ດ. ຕ. ຖ. ທ. ນ. ບ. ປ. ຜ. ຝ. ພ. ຟ. ມ. ຢ. ຣ. ລ. ວ. ຫ. ອ. ຮ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ອຸດສາຫະ, ສຸກ, ຫມາກຂ່າງ, ເຫລືອງ.

ຄຳເຄົ້າດຽວກັນ.– ຫລິ້ນ – ເຫລັ້ນ, ອຸດສາຫະ – ອົດສາ, ປຶ້ມ – ປຶ້ງ.

ແຕ່ງເຣື່ອງ.– ຈົ່ງແຕ່ງເຣື່ອງເດັກນ້ອຍຜູ້ນຶ່ງ ທີ່ຢາກທຳທຸຣະຂອງຕົນໃຫ້ແລ້ວກ່ອນຈຶ່ງໄປຫລິ້ນ.

---

# ໒. ຕ້ອງໄປໂຮງຮຽນໃຫ້ທັນເວລາ

ເຊົ້າມື້ນຶ່ງ, ທ້າວພັນໄປໂຮງຮຽນ, ແຕ່ລາວບໍ່ຟ້າວ, ເມື່ອໄປປ່ານທາງໄດ້ພົບທ້າວກົງເພື່ອນຂອງລາວ. ທ້າວກົງເວົ້າກັບທ້າວ



ພັນວ່າ "ເຮົາຈະຟ້າວໄປສັງ ! ເພິ່ນຍັງບໍ່ທັນຕີລະຄັງເທື່ອ ເຊົາປຸ້ນຄາວນຶ່ງກ່ອນບ້າ ເຖິງຈະພາກັນຫລິ້ນອີກຈັກຫລາຍບາທີກໍຍັງໄດ້ປຸ້, ເພາະເຮົາມີເງິນຕິດຕົວປຸ້ສອງສາມອັດ, ຈັກຫນ່ອຍຈຶ່ງຄ່ອຍໄປໂຮງຮຽນກໍທັນເຮົາຍັງມີເວລາປຸ້ຕອກ" ທ້າວພັນຈຶ່ງຕອບວ່າ ແມ່ນແຫລ້ວ ! ບໍ່ທັນຮອດໂມງກໍຈິງແຕ່ເຮົາຕ້ອງຟ້າວແດ່ ເພື່ອໄປໃຫ້ທັນໂມງເຂົ້າຮຽນ, ຄັນເຮົາຈະຄອງຖ້າໃຫ້ເພິ່ນຕີລະຄັງແລ້ວຈຶ່ງໄປເຖິງຈະຟ້າວປານໃດ ກໍບໍ່ທັນໂມງ ແລະພວກເຮົາກໍຈະຖືກໂທດບໍາອີກ" ວ່າແລ້ວທ້າວພັນກໍເລີຍຍ່າງຕໍ່ໄປ ທ້າວກິງຈຶ່ງຍ່າງບໍາຫລັງ.

## ເຮົາຄວນມາໂຮງຮຽນໃຫ້ທັນເວລາສເມີ

ຄຳອະທິບາຍ.– ໂຮງຮຽນ : ແມ່ນບ່ອນຮ່ຳຮຽນຂອງນັກຮຽນ. ເວລາ : ຫຸ້ມ, ໂມງ, ຍາມ. ລະຄັງ : ເຄື່ອງຕີສັນຍາໃຫ້ຮູ້ເວລາ. ຄາວນຶ່ງ : ຍາມນຶ່ງ, ເວລານຶ່ງ, ບຶດນຶ່ງ. ບາທີ : ຈຳນວນເວລາສ່ວນຍ່ອຍຂອງໂມງ ຄື ໖໐ ບາທີເປັນນຶ່ງຊົ່ວໂມງ. ຟ້າວ : ຮີບຮ້ອນ. ຖືກໂທດ : ຖືກດັດສັນດານ. ເງິນ : ແມ່ນຊັບສົມບັດ, ຂອງມີຣາຄາ.

ຄຳຖາມ.– ໑.– ເປັນຫຍັງທ້າວພັນໄປໂຮງຮຽນບໍ່ຟ້າວ ?
໒.– ທ້າວກິງເວົ້າກັບທ້າວພັນວ່າຢ່າງໃດ ?
໓.– ທ້າວພັນຕອບວ່າຢ່າງໃດ ?
໔.– ເປັນຫຍັງເຈົ້າຈຶ່ງຕ້ອງໄປໂຮງຮຽນໃຫ້ທັນເວລາ ?



໕.– ນັກຮຽນໄປໂຮງຮຽນທັນໂມງ ກັບ ນັກຮຽນມັກຂາດ ຕ່າງກັນຢ່າງໃດ ?

ໃຈຄວາມ.– ເວລາໄປໂຮງຮຽນ. ເຮົາບໍ່ຄວນຈະເຊາະແຊະແວ່ຫລິ້ນໄປຕາມທາງ ແລະບໍ່ຕ້ອງຄອງຖ້າເພິ່ນຕີລະຄັງເຂົ້າຮຽນເຫມືອນທ້າວພັນຈັກເທື່ອ, ຄັນຖ້າເຮົາໄປບໍ່ທັນໂມງເຂົ້າຮຽນ ເຮົາກໍຈະຖືກໂທດ ! ເຮົາຄວນໄປໂຮງຮຽນໃຫ້ທັນເວລາສເມີ.

ສັບ.– ຕ້ອງໄປໂຮງຮຽນໃຫ້ທັນເວລາ.
ນາມ : ບາທີ, ລະຄັງ, ເງິນ, ໂຮງຮຽນ.
ກິລິຍາ : ໄປ, ຕີ, ຫລິ້ນ, ຍ່າງ.
ໄວຍາກອນ.– ຄຳເວົ້າ, ຕົວອັກຂະຣະ.

ຂໍ້ສັງເກດໄວຍາກອນ ເວລາເຮົາອ່ານ : ໂຮງຮຽນ, ເຮົາອ່ານເປັນຄຳດຽວ. ຕອນແລງ ຂ້ອຍຈະໄປຫາເຈົ້າບໍ່ໃນວັນນີ້ ນັ້ນມີເຈັດຄຳ, ຄຳນຶ່ງ ໆ ຂອງຄຳເຫລົ່ານີ້ມີຕົວຫນັງສືຫລາຍຕົວ ໂ–ຮ–ງ–ຮ–ຽ–ນ ສະນັ້ນ, ເພື່ອຈະຂຽນຄຳເຫລົ່ານີ້ທັງຫມົດ ຈຳເປັນຕ້ອງໃຊ້ສຣະ ໒໘ ຕົວ ພຍັນຊນະ ໒໗ ຕົວ ແລະວັນນະຍຸດ ໔ ຕົວ ສຣະ, ພຍັນຊນະ ແລະວັນນະຍຸດເຫລົ່ານີ້ໂຮມເຂົ້າກັນເອີ້ນວ່າອັກຂະຣະ

ບົດຮຽນ.– ໑.– ເພື່ອປາກປາກແລະຂຽນ ເພິ່ນໃຊ້ຄຳເວົ້າຫລາຍຄຳ ໂຮງຮຽນ ເປັນຄຳເວົ້າຄຳນຶ່ງ.

໒.– ເພື່ອຈະຂຽນຄຳນຶ່ງ ເພິ່ນໃຊ້ຕົວໜັງສືຫລາຍຕົວ ໃນຄຳວ່າ : ໂຮງຮຽນ ມີໜັງສືເຖິງຫົກຕົວ.

໓.– ພຍັນຊນະລາວ ມີ ໒໗ ຕົວ ຄື ກ.ຂ.ຄ.ງ.ຈ.ສ.ຊ. ຍ.ດ.ຕ.ຖ.ທ.ນ.ບ.ປ.ຜ.ຝ.ພ.ຟ.ມ.ຢ.ຣ.ລ.ວ.ຫ.ອ.ຮ.
ສຣະດ່ຽວ ໑໑ ຕົວ ຄື ອະ, ອາ, ອິ, ອີ, ອຸ, ອູ, ເອ, ໂອ, ອໍ, ໃອ, ໄອ.

ແລະ ວັນນະຍຸດ ໔ ຕົວ ຄື ໄມ້ເອກ ( ່ ), ໄມ້ໂທ ( ້ ), ໄມ້ຕຣີ ( ໊ ), ແລະໄມ້ຈັດຕວາ ( ໋ ).

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ໂຮງຮຽນ, ລະຄັງ, ຈັກໜ່ອຍ, ຄາວນັ້ງ, ຫລົ້ນ, ຖືກໂທດ.

ຄຳຄ້າຍຄຽງກັນ.– ໜ່ອຍ – ໜ້ອຍ, ຄອງ – ຄອບ; ເພິ່ນ – ເພື່ອນ.

ແຕ່ງເລື່ອງ.– ໃຫ້ເຈົ້າແຕ່ງເລື່ອງນັກຮຽນດຸໝັ່ນຜູ້ນຶ່ງ.

---

# ໓. ຕ້ອງນັບຖືຄຣູຂອງເຮົາ

ຕັ້ງແຕ່ໃດ ໆ ມາ, ບໍ່ວ່າໃນປະເທດໃດ, ເພິ່ນໄດ້ສັ່ງສອນໃຫ້ລູກສິດນັບຖືຄຣູເປັນນິດຕລອດມາ, ມີນິທານເລື່ອງນຶ່ງ ໃນໜັງສືຝຣັ່ງກ່າວເຖິງການນັບຖືຄຣູວ່າ ມີພຣະມະຫາຣາຊາ ໂຮເມງອົງ





ນຶ່ງ ໄດ້ຣັບສັ່ງໃຫ້ເອົາຊອກຫາຄົນຜູ້ມີຄວາມສລາດສລຽວທີ່ສຸດ ໃນພຣະຣາຊອານາຈັກຂອງພຣະອົງ ເພື່ອຈະໃຫ້ມາຝຶກຫັດພຣະຣາຊໂອຣົດຂອງພຣະອົງ ແລະກໍໄດ້ມາສົມພຣະທັຍ.

ມື້ນຶ່ງ, ພຣະອົງສເດັດເຂົ້າໄປໃນຫ້ອງຮຽນຂອງເຈົ້ານ້ອຍ ກໍໄດ້ເຫັນເຈົ້ານ້ອຍນັ່ງຢູ່ເທິງຕັ່ງອີ່ແລະປະໃຫ້ຄຣູຂອງຕົນຢືນຢູ່, ກໍທົງຂັດພຣະທັຍນຶ່ງນັກ ຈຶ່ງກິ້ງພຣະເນດໃສ່ພຣະຣາຊໂອຣົດນ້ອຍ ແລະ ຣັບສັ່ງວ່າ "ຢູ່ທີ່ນີ້ຜູ້ໃດຈະມີຄຸນຄວາມດີແລະຮູ້ຫລັກນັກປາດຍວດຍິ່ງກວ່າກັນ ? ຮີບລຸກອອກແລະຍົກທີ່ນັ່ງໃຫ້ແກ່ຄຣູຂອງເຈົ້າ ເພາະຄຣູນີ້ ຄວນໄດ້ນ່ອນນັ່ງທີ່ມີບົດຈຳເປັນ ເຈົ້າຕ້ອງຢືນຢູ່ຕໍ່ໜ້າຂອງເພິ່ນ. ລູກເຮີຍ ! ລຸກຂຶ້ນ, ແລ້ວຕັ້ງໃຈຟັງຄຳສອນອັນຖືກຕ້ອງໂດຍໂຄຣົບ" ດັ່ງນີ້. ນັກຮຽນທັງຫລາຍເຮີຍ ! ໃຫ້ໝູ່ເຈົ້າໂຄຣົບນັບຖືຄຣູຢູ່ສເມີ ໆ.

ຄຳອະທິບາຍ.– ພຣະມະຫາອາຊາໂຣເມງ : ພຣະເຈົ້າແຜ່ນດິນແຫ່ງກຸງໂຣມ (ປະເທດອິຕາລີ). ອັບສັ່ງ : ບອກ (ຄຳເວົ້າສຳລັບເຈົ້າຊີວິດ). ພຣະອາຊອານາຈັກ : ແດນດິນຂອງພຣະເຈົ້າແຜ່ນດິນ (ເຂດປະເທດ). ພຣະອາຊໂອຣົດ : ລູກຊາຍເຈົ້າຊີວິດ. ຂັດພຣະທັຍ : ຂັດໃຈ. ກົ້ງພຣະເນດ : ກົ້ງຕາ.

ຄຳຖາມ.– ໑.– ເປັນຫຍັງເພິ່ນຈຶ່ງໄດ້ສັ່ງສອນໃຫ້ລູກສິດ ນັບຖືຄູເປັນນິດລອດມາ ?

໒.– ມີນິທານເລື່ອງໃດຍົກມາເປັນຕົວຢ່າງ ?

໓.– ມື້ນຶ່ງພຣະອົງໄດ້ສເດັດເຂົ້າໄປໃສ ?

໔.– ແລະໄດ້ເຫັນຫຍັງ ?

ໃຈຄວາມ.– ຊູ່ຄົນເກີດມາຕ້ອງມີຄຣູບາອາຈານສັ່ງສອນ ຈຶ່ງຈະເປັນຄົນດີໄດ້. ເຖິງຈະມີຍົດສັກສູງກໍຄວນໄຕອົບຄູເກົ່າຂອງຕົນເລື້ອຍໆ.

ສັບ.– ຕ້ອງນັບຖືຄູຂອງເຮົາ.

ນາມ : ປະເທດ, ລູກສິດ, ຄຣູ, ພຣະມະຫາອາຊາ.

ຄຸນນາມ : ຜູ້ສລາດສລ່ຽວ, ນ້ອຍ.

ກິຣິຍາ : ສັ່ງສອນ, ນັບຖື, ລຸກຂຶ້ນ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ ປະເທດ, ສັ່ງສອນ, ສລາດສລ່ຽວ, ມະຫາອາດ.



ຄຳກ່ຽວກັນ.– ໂຣເມງ – ໂຣມ. ມະຫາອາຊາ – ມະຫາອາດ.

ແຕ່ງເລື່ອງ.– ເຈົ້າຄົງເຄີຍເຫັນວຽກການຄຣູຂອງເຈົ້າມາແລ້ວ, ສະນັ້ນ ໃຫ້ເຈົ້າເວົ້າວຽກການຂອງເພິ່ນມາສູ່ຂ້ອຍຟັງດູ.

---

# ໔. ເດັກສາມຄົນແລະແມງກະເບື້ອ



ແມງກະເບື້ອຕົວນຶ່ງ ມີປີກສີເຫລືອງ ແລະ ມີເມັດສີແດງແກມ. ປຽບດັ່ງຄົນແຕ່ງເພດດ້ວຍເຄື່ອງຜ້າຫລາຍສີ. ມັນພືປີກອັນງາມຂອງມັນອອກບິນຕອມດອກໄມ້ ດົມດອກຊ້າຍຍ້າຍມາຊົມດອກຂວາ ປູ່ຣີມທາງດ້ວຍຄືວ່າ ມັນຕ້ອງການອວດຄວາມງາມຂອງມັນແກ່ຄົນຜູ້ທ່ຽວໄປມາບ່ອນທາງນັ້ນ ຂນະນັ້ນ ເດັກນ້ອຍສາມຄົນພວມເດີນທາງກັບຈາກໂຮງຮຽນ ໄດ້ເຫັນແມງກະເບື້ອຕົວນັ້ນ ກໍຄິດນ່ອນ

ຊວນກັນເອົາຫມວກແລະປົ້ນອອກແລ່ນໄລ່ຕີບເອົາແມງກະເບື້ອ. ຜູ້ໃດກໍ່ພຍາຍາມໂດຍເຕັມກຳລັງເພື່ອຈະຈັບໃຫ້ໄດ້ກ່ອນຫມູ່. ເຂົາຍາດກັນຈັບແມງກະເບື້ອສີງາມຕົວນັ້ນມອດມຸ່ນຫມົດ.

ການໄລ່ຈັບແມງກະເບື້ອ ຂອງເດັກນ້ອຍທັງສາມໄດ້ຜົນອັນໃດແດ່ ? ບໍ່ມີສັງເລີຍ, ມີແຕ່ການຍາດກັນໂດຍຫາປໂຍດບໍ່ໄດ້, ທັງເປັນການຫລິ້ນບຽດບຽນສັດນ້ອຍ ຊຶ່ງບໍ່ມີຄວາມຜິດ ໃຫ້ມັນຕາຍຢ່າງບໍ່ຄຶດສົງສານທີ່ສຸດ

<u>ຄຳອະທິບາຍ</u>.– ແຕ່ງເພັດ : ເອົ້າດ້ວຍເຄື່ອງກີເສື້ອຜ້າ.

ມອດ : ຕາຍ. ບໍ່ຄຶດສົງສານ : ບໍ່ຄຶດອີຕົນ. ອວດ : ສະແດງອິດຂອງຕົນ. ມອດມຸ່ນຫມົດ : ຂາດຈີກອອກເປັນນັ້ນເປັນທ່ອນຕາຍໄປຫມົດ.

<u>ຄຳຖາມ</u>.– ໑.– ເດັກສາມຄົນໄລ່ຍາດຕີເອົາແມງກະເບື້ອນັ້ນ ໄດ້ຜົນຢ່າງໃດແດ່ ? ເປັນຫຍັງເຂົາຈຶ່ງໄລ່ຍາດກັນ ?

໒.– ເດັກນ້ອຍສຸຄົນ ຄວນປະພຶດແນວນັ້ນສຸຄົນບໍ່ ?

໓.– ເຈົ້າເຫັນດີນຳເຂົາຫລື ?

໔.– ເປັນຫຍັງເພິ່ນຈຶ່ງຫ້າມບໍ່ໃຫ້ເຮົາຂ້າສັດ ?

<u>ໃຈຄວາມ</u>.– ເດັກນ້ອຍຊຶ່ງມັກຫລິ້ນໃຫ້ເສັຽຫາຍ ຫລືບຽດບຽນສັດເຊັ່ນນີ້ແມ່ນການປະພຶດຊົ່ວ, ເຮົາບໍ່ຄວນປະພຶດເຊັ່ນນັ້ນເລີຍ. ຄວນປະປ່ອຍໃຫ້ສັດແລະຕົ້ນໄມ້ເກີດ ປູດາມອຳເພີໃຈຂອງມັນ.



<u>ສັບ</u>.– ເດັກກັບແມງກະເບື້ອ.

<u>ນາມ</u> : ປີກ, ດອກໄມ້, ໂຮງຮຽນ, ປຶ້ມ.

<u>ຄຸນນາມ</u> : ເຫລືອງ, ແດງ.

<u>ກິຣິຍາ</u> : ບິນ, ດົມ, ຈັບ, ຍາດກັນ.

<u>ໄວຍາກອນ</u>.– ໃນສຣະ ໒໘ ຕົວນັ້ນ ມີ ສຣະສຽງສັ້ນ ແລະສຽງຍາວ.

ສຣະສຽງສັ້ນນັ້ນຄື : ×ະ ×ິ ×ຶ ×ຸ ເ×ະ ແ×ະ ໂ×ະ ເ×າະ ເ×ິ ເ×ັຍະ ເ×ຶອ ×ົວະ ×ໍາ ໄ× ໃ× ເ×ົາ.

ແລະສຣະສຽງຍາວມີ ຄື : ×າ ×ີ ×ື ×ູ ເ× ແ× ໂ× ເ×ືອ ×ົວ.

<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ແຕ່ງເພັດ, ທາງ, ຂນະນັ້ນ, ໄລ່, ພຍາຍາມ, ມອດມຸ່ນ.

<u>ຄຳເຄົ້າດຽວກັນ</u>.– ອວດ : ອ້າງ. ເອ່ນສີ : ໂອໂຖງ, ເອ້. ດົບ : ຕ່ອຍ, ຕີ, ຕຸບ.

<u>ແຕ່ງເຣື່ອງ</u>.– ຈົ່ງແຕ່ງເຣື່ອງ ແມງກະເບື້ອ ຕົວນຶ່ງ ທີ່ບິນ ຊົມດອກໄມ້ຕ່າງ ໆ.

---

## ໕. ທຳຄວາມດີໂດຍບໍ່ຄຶດຫາຄຸນ

ທ້າວສົງນ້ອຍ ເປັນ ເດັກ ກຳພ້າແມ່ ມາແຕ່ນ້ອຍ ໆ ແລະ ມີແມ່ນ້ຳນາລ້ຽງ. ແມ່ນ້ຳເປັນຄົນຮ້າຍແລະຂີ້ເຫງົ່າເຕັມທີ ມັກໃຫ້

ທ້າວສັງນ້ອຍກິນເຂົ້າໜ້ອຍດຽວກັບປາແຫ້ງ ແຕ່ໃຫ້ເຮັດວຽກບໍ່ຂາດມື້. ສ່ວນລູກລາວສອງຄົນນັ້ນ ລາວໃຫ້ກິນອີ່ມນອນດີທັງບົວຣະບັດເຄື່ອງນຸ່ງຂອງຖືບ່ຳ.

ມື້ນຶ່ງ ແມ່ນ້າໃຊ້ທ້າວສັງນ້ອຍໄປເອົາຟືນໃນປ່າ, ລາວກັບມາຈວນຄ່ຳແດ່ ແມ່ນ້າເລີຍຮ້າຍໃຫ້, ແຕ່ລາວກໍ່ອົດເອົາບໍ່ຈົ່ມ ບໍ່ຕອບປະການໃດ. ພາຍລຸນມາ ພໍ່ທ້າວສັງຮູ້ຈັກວ່າ ເມັຽຕົນກົດຂີ່ຂົ່ມເຫັງລູກຫລາຍ ກໍ່ເລີຍຄຽດແລະປາກໄລ່ເມັຽໜີຈາກເຮືອນ. ທ້າວສັງນ້ອຍຮູ້ດັ່ງນັ້ນຈຶ່ງຂໍໂທດພໍ່ຕົນຕ່າງແມ່ນ້າວ່າ "ພໍ່ເອີຍ! ຢ່າໄລ່ລາວໜີເທາະ, ຖ້າວ່າລາວບໍ່ໜີແລ້ວກໍ່ມີແຕ່ຂ້ອຍຜູ້ດຽວທີ່ໄດ້ຮັບຄວາມລຳບາກ, ແຕ່ຖ້າລາວຖືກໄລ່ໜີໄປແລ້ວ, ນ້ອງອີກສອງຄົນກັບຂ້ອຍກໍ່ເຫັນຈະໄດ້ຮັບຄວາມຍາກບ່າກັບໝົດທັງສາມຄົນ.



ເມື່ອພໍ່ໄດ້ຍິນລູກວ່າດັ່ງນັ້ນ ກໍ່ເລີຍລະເສັຽທັງຄວາມຄຽດຄ້ອຍຂົມໃຈໃນເມັຽໃໝ່ຂອງຕົນ. ດັ່ງແຕ່ນັ້ນມາ, ແມ່ນ້າໄດ້ເຫັນລູກນ້າທຳ



ຄວາມດີໃຫ້ແກ່ຕົນໂດຍບໍ່ຄິດຫາຄຸນດັ່ງນີ້ ກໍ່ເລີຍຮັກຫອມທ້າວສັງນ້ອຍຄືດັ່ງລູກຄີງ ໆ ຂອງຕົນ.

ຄຳອະທິບາຍ.– ຂົ່ມເຫັງ : ບຽດບຽນ, ປອງເຮັດຄວາມທຸກໃຫ້. ຄຽດຄ້ອຍຂົມໃຈ : ຊັງແລະໜ່າຍແໜງ. ຮັກຫອມ : ຮັກແພງ.

ຄຳຖາມ.–
໑.– ເປັນຫຍັງແມ່ນ້າຈຶ່ງໃຫ້ທ້າວສັງນ້ອຍກິນເຂົ້າແຕ່ໜ້ອຍດຽວ ?
໒.– ໃນມື້ນຶ່ງນັ້ນ, ເປັນຫຍັງແມ່ນ້າຈຶ່ງຮ້າຍໃຫ້ທ້າວສັງນ້ອຍ ?
໓.– ພາຍລຸນມາພໍ່ທ້າວສັງນ້ອຍເປັນແນວໃດ ?
໔.– ແມ່ນ້າຂົ່ມເຫັງທ້າວສັງນ້ອຍຢ່າງໃດ ?

ໃຈຄວາມ.– ແມ່ນ້າສ່ວນຫລາຍ ມັກຂົ່ມເຫັງລູກນ້າສເນີ ເມື່ອແມ່ນ້າຮ້າຍຫລືຂົ່ມເຫັງ, ເຮົາຕ້ອງອົດອອມເອົາ. ຖ້າເຮົາອົດບໍ່ຊາ ແລະຕັ້ງໃຈເຮັດວຽກການຂອງເຮົາແລ້ວ ແມ່ນ້າຫາກຈະກັບຄືນມາຮັກຫອມເຮົາດອກ.

ສັບ.– ທຳຄວາມດີໂດຍບໍ່ຄິດຫາຄຸນ.

ນາມ : ເດັກກຳພ້າ, ວຽກ, ແມ່ນ້າ, ລູກ.

ຄຸນນາມ : ຮ້າຍ, ໃໝ່, ແຫ້ງ.

ກິຣິຍາ : ຂົ່ມເຫັງ, ຮັກ, ຄຽດ.

ໄວຍາກອນ.– ວັນນະຍຸດ. ວັນນະຍຸດ ຄື ເຄື່ອງໝາຍບັງຄັບສຽງໃຫ້ມີສຽງສູງສຽງຕ່ຳ ແລະ ແບ່ງອອກມີ ໔ ແນວ ຄື (×່) ໄມ້ເອກ. (×້) ໄມ້ໂທ. (×໊) ໄມ້ຕຣີ. (×໋) ໄມ້ຈັດຕວາ. ຫລືໄມ້ຕິນກາ ຫລືກາກະບາດ.

ຄຳເຄົ້າດຽວກັນ.– ຄຸນ : ຄຸນໃນ, ຄຸນນັງ. ຫນ້ອຍ : ນ້ອຍ, ນິດ. ໂທດ : ໂທໂສ, ໂທສາ, ອະໂທໂສ, ນິຣະໂທດ.

ແຕ່ງເລື່ອງ.– ໃຫ້ເຈົ້າແຕ່ງເລື່ອງເດັກນ້ອຍຜູ້ນຶ່ງມາໃຫ້ຟັງ.

## ໓. ຄວາມຮັກຂອງອ້າຍນ້ອງ



ແຕ່ກ່ອນ, ມີພຣະຍາກຸງສີສັດນາຄະນະຫຸດຜູ້ນຶ່ງ ຊຶ່ງເພິ່ນເລົ່າລືວ່າ ມີໃຈດີຫາທີ່ສຸດບໍ່ໄດ້ ເພິ່ນຮັກເອື້ອຍຂອງເພິ່ນເປັນທີ່ຍິ່ງຈົນເຖິງເວລາເຖົ້າແກ່.



ມື້ນຶ່ງ ເອື້ອຍເພິ່ນເຈັບ ພຣະຍາກໍ່ໄປຕົ້ມເຂົ້າປຽກໃຫ້ແກ່ເອື້ອຍເພິ່ນເອງ ເວລາເພິ່ນພວມເປົ່າໄຟຢູ່ນັ້ນ ໄຟເລີຍແຕກມາຕາວດາເບື້ອງຂວາໜ້ອຍນຶ່ງ ເອື້ອຍເລີຍເວົ້າວ່າ "ຢູ່ເຮືອນເຮົາຄົນໃຊ້ກໍ່ມີເຕັມ, ເປັນຫຍັງພຣະຍາຈຶ່ງຫາຄວາມຍາກເຂົ້າຕົວ ?" ພຣະຍາຕອບວ່າ "ເຮົາທັງສອງກໍ່ເຖົ້າແກ່ແລ້ວ, ໃນຈະຫລິງເຫັນວ່າຂ້ອຍຈະປີນຢູ່ຕົ້ມເຂົ້າໃຫ້ເຈົ້າກິນໄດ້ດົນປານໃດ ?"

ພຣະຍາຜູ້ນີ້ ເປັນຫນ້າຍ້ອງບໍ່ເຫລືອເກີນ ເພາະເພິ່ນປະພຶດຕໍ່ເອື້ອຍຂອງເພິ່ນ ຕາມທີ່ນ້ອງຄວນປະພຶດຕໍ່ເອື້ອຍອ້າຍພີ່ນ້ອງຮ່ວມອຸທອນດຽວກັນ ຢູ່ເຮືອນດຽວກັນ, ໄດ້ຮັບຄວາມສຸກທຸກຮ່ວມກັນຕ້ອງຮັກແພງກັນຢູ່ສເມີ ຈຶ່ງຈະເປັນການດີທີ່ສຸດ.

ຄຳອະທິບາຍ.– ພຣະຍາ : ນາມບັດຂອງຂ້າຣາຊການຊັ້ນຜູ້ໃຫຍ່. ເລົ່າລື : ເວົ້າຕໍ່ກັນໄປ. ສັດນາຄະນະຫຸດ : ຊ້າງລ້ານນຶ່ງ. ອຸທອນ : ທ້ອງ.

ຄຳຖາມ.–
໑.– ກຸງສີສັດນາຄະນະຫຸດນັ້ນຢູ່ໃສ ?
໒.– ພຣະຍາອົງນັ້ນມີນ້ອງອ້າຍບໍ່ກັນຈັກຄົນ ?
໓.– ເປັນຫຍັງ ເພິ່ນຈຶ່ງອົດສາໄປຕົ້ມເຂົ້າໃຫ້ເອື້ອຍເພິ່ນກິນ ?
໔.– ເຮົາຄວນເອົາແບບພຣະຍານີ້ຫລືບໍ່ ?

ໃຈຄວາມ.– ເດັກສູ່ຄົນຕ້ອງຮັກແພງພີ່ນ້ອງໃນເຮືອນດຽວກັນເຖິງເຮົາຈະມີບິດຖາບັນດາສັກ ຫລື ຮັ່ງມີຫລາຍກໍດີ ເຮົາຕ້ອງຮັກແພງແລະນັບຖືນ້ອງອ້າຍຂອງເຮົາສເມີ.

ສັບ.– ຄວາມຮັກຂອງອ້າຍນ້ອງ

ນາມ : ເອື້ອຍ, ໄພ, ຄົນໃຊ້, ນ້ອງ.

ຄຸນນາມ : ດີ, ເຖົ້າແກ່, ເຈັບ.

ກິອິບາ : ເລົ່າລື, ຮັກແພງ, ຕົ້ມ, ປະພຶດ.

ໄວຍາກອນ.– ອັກສອນລາວແບ່ງອອກເປັນສາມຊ່ຳ.

໑) ອັກສອນກາງມີ ໘ ຄື ກ. ຈ. ດ. ຕ. ບ. ປ. ຢ. ອ.
໒) ອັກສອນສູງ ມີ ໖ ຄື ຂ. ສ. ຖ. ຜ. ຝ. ຫ.
໓) ອັກສອນຕ່ຳ ມີ ໑໓ ຄື ຄ. ງ. ຊ. ຍ. ພ. ຟ. ມ. ຣ. ລ. ວ. ຮ. ທ. ນ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ ເລົ່າລື, ເຖົ້າແກ່, ເຂົ້າປຽກ, ພວມເປົ່າໄຟ, ເບື້ອງຂວາ, ຫລິ້ງເຫັນ, ຄວາມຮັກແພງ, ຮັກແພງ.

ຄຳເຄົ້າດຽວກັນ.– ແຕ່ກ່ອນ : ແຕ່ກີ້, ແຕ່ເກົ່າ. ເຮືອນ : ຮົງ ຮ້ານ, ຮອກ.

ແຕ່ງເລື່ອງ.– ນັກຮຽນຄົງຈະໄດ້ເຫັນ ຫລື ໄດ້ຢູ່ເມືອງວຽງຈັນມາແລ້ວ. ໃຫ້ເຈົ້າແຕ່ງເລື່ອງນີ້ມາໃຫ້ຂ້ອຍຟັງດູ.



# ກ. ຄຳສອນເດັກ



ເດັກທັງຫລາຍເອີຍ ! ຖ້າພວກເຈົ້າຢາກມີຄວາມສຸກສະບາຍໃນພາຍໜ້າ ພວກເຈົ້າຕ້ອງຟັງແລະເຊື່ອຄຳສັ່ງສອນຂອງບິດາມານດາຂອງຕົນ. ຜູ້ຍິງເມື່ອຫວ່າງຈາກການຮຽນກໍຕ້ອງກຳກັບ ວຽກເຮືອນການຊານຊ່ວຍພໍ່ແມ່ ຫັດຕ່ຳຫູກແລະຫຍິບເສື້ອ. ຜູ້ຊາຍກໍຄືກັນ ເມື່ອຫວ່າງຈາກການຮຽນກໍຄວນຊ່ວຍພໍ່ແມ່ຕາມກຳລັງຂອງຕົນ. ດັ່ງນັ້ນ ເດັກທັງຫລາຍເອີຍ ! ເມື່ອພວກເຈົ້າພວມຮຽນ ຕ້ອງໄປໂຮງຮຽນໃຫ້ທັນເວລາແລະປ່າອາດ ເພາະການນີ້ແມ່ນການອັນປະເສີດ ທີ່ພວກເຈົ້າຄວນທຳ ໃນເວລາ ພວກເຈົ້າ ຍັງອ່ອນຢູ່ແລະຍັງບໍ່ທັນທຳການຫາລ້ຽງຊີວິດໄດ້ດ້ວຍຕົນເອງເທື່ອ. ພໍ່ແມ່ຂອງພວກເຈົ້າຕ້ອງການໃຊ້ພວກເຈົ້າກໍລາງເທື່ອລາງຄາວທັ່ງນັ້ນ. ດັ່ງນັ້ນ, ຈົ່ງໄປ

ໂຮງຮຽນສາ ! ພວກເຈົ້າຈະໄດ້ຮຽນຫລັກແຫ່ງວິຊາຕ່າງ ໆ ຊຶ່ງພວກເຈົ້າຄວນຈະໄດ້ໄວ້ໃຊ້ໃນພາຍຫນ້າ. ຢ່າອ່ອນໃຈ ຖ້າພວກເຈົ້າຢາກມີຜົນສຳເຣັດໃນການສອບເສັງ. ດັ່ງນີ້ກໍຈະນັບວ່າພວກເຈົ້າໄດ້ປະພຶດດີ ຕາມທາງທີ່ເດັກດີທັງຫລາຍໄດ້ປະພຶດມາກ່ອນພວກເຈົ້າແລ້ວ ແຕ່ນັ້ນ ກຽດຕິຍົດ ແລະ ຄວາມສຸກ ສຳຣານ ກໍຈະ ຫລັ່ງໄຫລ ມາສູ່ ພວກເຈົ້າບໍ່ຮູ້ຂາດເລີຍ.

<u>ຄຳອະທິບາຍ</u>.— ຄວາມສຸກ : ຄວາມສະບາຍ. ປະເສີດ : ດີເລີດ, ດີຍິ່ງ. ສຳເຣັດ : ເສັດແລ້ວ. ປະພຶດ : ເຮັດ. ສຸກ : ສຳຣານ, ສະບາຍກາຍແລະໃຈ.

<u>ຄຳຖາມ</u>.— ໑.– ເພື່ອຢາກມີຄວາມສຸກໃນພາຍຫນ້າ ເຈົ້າຕ້ອງເຮັດຢ່າງໃດ ? ໒.– ຜູ້ຍິງ ເມື່ອຫວ່າງການຮຽນແລ້ວ ຕ້ອງເຮັດຢ່າງໃດ ? ຜູ້ຊາຍເດ ? ໓.– ການອັນປະເສີດຂອງເດັກແມ່ນອັນໃດ ? ໔.– ເພື່ອຢາກສຳເຣັດໃນການສອບເສັງ ເຈົ້າຕ້ອງເຮັດຢ່າງໃດ ?

<u>ໃຈຄວາມ</u>.— ບໍ່ວ່າເດັກຄົນໃດ, ຖ້າເຈົ້າຢາກມີຄວາມສຸກໃນພາຍຫນ້າ, ເຈົ້າຕ້ອງຟັງຄຳສັ່ງສອນ ຂອງບິດາມາດາ ແລະ ເອົາໃຈໃສ່ໃນການຮ່ຳຮຽນຢ່າຂາດ. ຜົນສຸດທ້າຍ ເຈົ້າຈະສຳເຣັດໃນການສອບເສັງ. ເມື່ອໃດບໍ່ມາ ກຽດຕິຍົດແລະຄວາມສຸກສຳຣານກໍຈະຫລັ່ງໄຫລມາສູ່ເຈົ້າເອງ.



<u>ສັບ</u>.— ຄຳສອນເດັກ

<u>ນາມ</u> : ເດັກ, ຄຳສັ່ງສອນ, ບິດາ, ມາດາ, ວິຊາ.

<u>ຄຸນນາມ</u> : ສຸກ, ສະບາຍ, ປະເສີດ.

<u>ກິຣິຍາ</u> : ຊ່ວຍ, ດ່າຫຸກ, ເຊື່ອ.

<u>ໄວຍາກອນ</u>.— ອັກສອນລາວທັງສາມຫມວດ ຄື : ສຣະ ພຍັນຊນະ ແລະວັນນະຍຸດ. ເມື່ອເອົາມາຂຽນຕາມຄຳເວົ້າ ຕ້ອງປະສົມກັນ ຈຶ່ງຈະອອກສຽງໄດ້ຕາມສຳນຽງຄຳເວົ້າ ການປະສົມອັກສອນມີຢູ່ ໒ ວິທີ ຄື :

໑) ເອົາ ສຣະ ກັບ ພຍັນຊນະປະສົມກັນ ວິທີນີ້ ຮຽກວ່າ ແມ່ກະກາ.

໒) ເອົາສຣະ ກັບ ພຍັນຊນະປະສົມກັນ ແລ້ວໃສ່ຕົວສະກົດ ວິທີນີ້ ຮຽກວ່າ ແມ່ທັງ ໘.

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຄວາມສຸກ, ເຊື່ອ, ທຸກ, ປະເສີດ, ຊີວິດ, ຜົນ, ກຽດຕິຍົດ, ຫລັ່ງໄຫລ.

<u>ຄຳເຄົ້າດຽວກັນ</u>.— ໂຮງ : ເຮືອນ, ຮ້ານ. ຊ່ອຍ : ຊ່ວຍ, ເຊີດຊູ.

<u>ແຕ່ງເອື່ອງ</u>.— ໃຫ້ເຈົ້າແຕ່ງເຣື່ອງເດັກຟັງຄຳສັ່ງສອນຂອງພໍ່ແມ່ບໍ່ນຶ່ງ. ເມື່ອພາຍຫນ້າໄປ, ມັນຈະເປັນຢ່າງໃດ ?

# ໗. ຄົນມັກຄຸຍແລະເວົ້າໂບກ



ມື້ນຶ່ງ, ທ້າວແກ້ວກັບທ້າວຈູມ ກາຍໄປຕໍ່ໜ້າສວນໝາກຟັກ. ທ້າວແກ້ວເຫັນໝາກຟັກໃຫຍ່ໜ່ວຍນຶ່ງ ຈຶ່ງຮ້ອງວ່າ "ໂຫ ! ເບິ່ງແມ່ ! ໝາກຟັກໜ່ວຍນັ້ນເກີນວ່າໃຫຍ່, ເຮົາຍັງບໍ່ເຄີຍເຫັນໝາກຟັກໜ່ວຍໃຫຍ່ປານນີ້ຈັກເທື່ອ," ທ້າວຈູມຄົນນັກຄຸຍ ຈຶ່ງເວົ້າໂບກອຶ່ນທັງຫົວເຍີ່ບວ່າ "ຮິ ! ຊາຫຍັງສ່ຳນີ້ ເທື່ອນຶ່ງເຮົາເຫັນໜ່ວຍນຶ່ງໃຫຍ່ທໍ່ເຮືອນຫລັງນັ້ນພຸ້ນ" ທ້າວແກ້ວເຫັນຫົວແລ້ວຈຶ່ງຕອບວ່າ "ເອີ ຄືກັນກັບໝໍ້ກະທະທີ່ເຮົາເຫັນສີຫ້າມື້ມາແລ້ວຫັ້ນຕິ ! ໃຫຍ່ວ່າກັບສິມວັດບ້ານເຮົານີ້ລະ." ທ້າວຈູມຈຶ່ງຖາມວ່າ "ບີ້ະ ໝໍ້



ໃຫຍ່ໜ່ວຍນັ້ນຈະເອົາໄວ້ໃຊ້ເຮັດຫຍັງໝໍ້" ທ້າວແກ້ວຈຶ່ງເວົ້າວ່າ "ຮວາຍ ! ໂດບໍ່ຮູ້ຈັກວະ. ກໍສຳລັບໄວ້ຕົ້ມໝາກຟັກໃຫຍ່ທີ່ໂດເຫັນນັ້ນຕິ" ທ້າວຈູມຮູ້ເນື້ອວ່າ ສະຫາຍຂອງຕົນເວົ້າສຽດໃຫ້ ກໍເລີຍເວົ້າເຣື່ອງໃໝ່ໄປ. ເຮົາຄວນເວົ້າແຕ່ຄວາມຈິງສເມີ. ຖ້າຈະເລົ່າເຣື່ອງໃດເຣື່ອງນຶ່ງກໍຕ້ອງເລົ່າໃຫ້ຖືກຕາມຄວາມເປັນຈິງ, ປາໂດ້ເວົ້າໂບກໜັບຂຶ້ນຕື່ມ.

ຄຳອະທິບາຍ.– ເວົ້າໂບກ : ເວົ້າຍົກຂຶ້ນຫລາຍເກີນກວ່າຂອງທີ່ມີຈິງ. ຫົວເຍີ່ບ : ຫົວຂວັນ, ຫົວດູຖູກ. ຄວາມຈິງ : ຄວາມມີແທ້.

ຄຳຖາມ.– ໑.– ທ້າວແກ້ວກັບທ້າວຈູມໄປໃສ ? ໒.– ທ້າວແກ້ວເຫັນໝາກຟັກເວົ້າວ່າຢ່າງໃດ ? ໓.– ທ້າວຈູມເວົ້າກັບທ້າວແກ້ວຢ່າງໃດ ? ໔.– ເປັນຢ່າງໃດ ທ້າວຈູມຈຶ່ງຮູ້ເນື້ອວ່າທ້າວແກ້ວເວົ້າສຽດຕິ ? ໕.– ເຮົາຄວນເວົ້າແຕ່ຄວາມຢ່າງໃດ ?

ໃຈຄວາມ.– ເຮົາທັງຫລາຍ ບໍ່ຄວນເວົ້າຄຸຍແລະເວົ້າໂບກ ເໝືອນດັ່ງທ້າວແກ້ວກັບທ້າວຈູມຈັກເທື່ອ ເພາະຄົນອື່ນຈະບໍ່ເຊື່ອຖືໃນຄວາມເວົ້າຂອງເຮົາ. ເຮົາຄວນເວົ້າແຕ່ຄວາມ

ຈົ່ງສເມີ: ຄົນທັງຫລາຍຈຶ່ງຈະນັບຖືແລະເຊື່ອຖືເຮົາ.

ສັບ.– ເວົ້າໄບກ

ນາມ : ສວນ, ຫມາກຟັກ, ເຮືອນ, ສົມ.

ຄຸນນາມ : ໃຫຍ່, ໃຫມ່.

ກິລິຍາ : ຫົວ, ເຫັນ, ຄົ້ນ, ເວົ້າສຽດ.

ໄວຍາກອນ.– ແມ່ກະກາ ແມ່ນວິທີເອົາສອະກັບພຍັນຊນະ ປະສົມ
ກັນ ວິທີນີ້ກໍມີ ໒ ຢ່າງຄື : ໑) ເອົາສອະກັບພຍັນຊນະປະ
ສົມກັນຕາມທັມດາ ບໍ່ໃສ່ວັນນະຍຸດ ຮຽກວ່າ ແມ່ກະກາ
ທັມດາ ໒) ແມ່ກະກາທີ່ໃສ່ວັນນະຍຸດ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຫມາກຟັກ, ເວົ້າ
ໄບກ, ມັກຄຸຍ, ຄວາມຈິງ, ເວົ້າສຽດ.

ຄຳເຄົ້າຄຽງກັນ.– ໃຫຍ່ : ບຶງ, ເທິບ, ບວດ. ເປື່ອຍ : ປອກ, ປົວະປວນ.

ແຕ່ງເລື່ອງ.– ຈົ່ງແຕ່ງເລື່ອງຄົນມັກຄຸຍຜູ້ນຶ່ງ.



# ໗. ລີ້ນແລະຫົວໃຈ



ມື້ນຶ່ງ, ນາຍຜູ້ນຶ່ງ ບອກຄົນໃຊ້ຂອງລາວວ່າ "ໃຫ້ມຶງເອົາຫມູຕົວນຶ່ງຢູ່ໃນຄອກນັ້ນໄປຂ້າ ແລະເລືອກເອົາເຄື່ອງທີ່ດີກວ່າຫມູ່ມາໃຫ້ກູ!" ຄົນໃຊ້ຮັບສັ່ງແລ້ວກໍເອົາຫມູໄປຂ້າ, ແລ້ວເອົາລີ້ນກັບຫົວໃຈໄປໃຫ້ນາຍຂອງຕົນ.

ຢູ່ມາອີກສອງສາມມື້, ນາຍຊ້ຳບອກໃຫ້ຄົນໃຊ້ຜູ້ເກົ່າເອົາຫມູໄປຂ້າອີກ ແລະສັ່ງໃຫ້ເລືອກເອົາເຄື່ອງທີ່ຊົ່ວກວ່າຫມູ່ມາໃຫ້.

ເທື່ອທີສອງນີ້ ຄົນໃຊ້ກໍເອົາລີ້ນກັບຫົວໃຈໄປໃຫ້ອີກ. ຜູ້ເປັນນາຍຈຶ່ງຖາມວ່າ "ມຶງເຮັດຢ່າງນີ້ ຈະຫມາຍຄວາມວ່າຢ່າງໃດ?" ຄົນໃຊ້ຕອບວ່າ "ນາຍເອີຍ! ເວລາມັນດີ ຈະຫາອັນໃດດີກວ່າລີ້ນບໍ່

ພາເວົ້າ ກັບຫົວໃຈຜູ້ພາຄິດບໍ່ມີແລ້ວ, ແລະເວລາມັນຊົ່ວຈະຫາອັນໃດຊົ່ວເກີນກວ່າລີ້ນຜູ້ພາເວົ້າກັບຫົວໃຈຜູ້ພາຄິດກໍ່ບໍ່ມີອີກຄືກັນ."

ຄຳອະທິບາຍ.– ຄົນໃຊ້ : ຄົນເຮັດວຽກຢູ່ໃຕ້ອຳນາດຂອງນາຍ. ຊົ່ວ : ບໍ່ດີຫລາຍ. ດີກວ່າ : ດີລື່ນ. ຮັບຄຳສັ່ງ : ຖືກມອບຫມາຍ.

ຄຳຖາມ.– ໑.– ເທື່ອທີ່ນຶ່ງຄົນໃຊ້ຂ້າຫມູແລ້ວ ເອົາຫຍັງມາໃຫ້ນາຍຂອງມັນ ? ໒.– ເທື່ອທີ່ສອງ ມັນເອົາຫຍັງມາໃຫ້ນາຍຂອງມັນອີກ ? ໓.– ຄົນໃຊ້ເຮັດດັ່ງນັ້ນຫມາຍຄວາມວ່າຢ່າງໃດ ? ໔.– ລີ້ນແລະຫົວໃຈ ຍົກເປັນສຸພາສິດອັນນຶ່ງໄດ້ບໍ່ ?

ໃຈຄວາມ.– ເລື່ອງທີ່ຄົນໃຊ້ເອົາຫມູໄປຂ້າຕາມຄຳສັ່ງຂອງນາຍສອງຄັ້ງ ແລະຄັ້ງໃດ ກໍເອົາແຕ່ລີ້ນກັບຫົວໃຈໄປໃຫ້ນາຍຂອງຕົນນັ້ນ ດ້ວຍວ່າ ມັນປະສົງຢາກໃຫ້ນາຍຊາບວ່າ : ຄົນເຮົານີ້ດີຫລືຊົ່ວກໍເພາະລີ້ນກັບຫົວໃຈ ເພາະວ່າລີ້ນເປັນຜູ້ພາເວົ້າແລະຫົວໃຈເປັນຜູ້ພາຄິດ.

ສັບ: ລີ້ນແລະຫົວໃຈ

ນາມ : ຄົນໃຊ້, ຄອກ, ຫມູ, ລີ້ນ, ຫົວໃຈ.

ຄຸນນາມ : ດີ, ຊົ່ວ.

ກິລິຍາ : ຂ້າ, ເວົ້າ, ເລືອກ.



ໄວຍາກອນ.– ແມ່ທັງ ໘ ນັ້ນ ແມ່ນແມ່ ກະກາທີ່ປະສົມຕົວສະກົດເຂົ້ານຳ ຕົວສະກົດໃນອັກສອນລາວທັງຫມົດມີ ໘ ຕົວ ຈຶ່ງຮຽກວ່າແມ່ທັງ ໘ ຄື :

| | | | | | | | |
|---|---|---|---|---|---|---|---|
| ຕົວ | ກ | ສະກົດຮຽກວ່າແມ່ | ກັກ, | ຕົວ | ບ | ສະກົດຮຽກວ່າແມ່ | ກັບ |
| " | ງ | " | ກັງ | " | ມ | " | ກາມ |
| " | ດ | " | ກັດ | " | ຍ | " | ກາຍ |
| " | ນ | " | ກັນ | " | ວ | " | ກາວ |

ການປະສົມແມ່ທັງ ໘ ນີ້ ກໍມີຢູ່ ໒ ວິທີ ຄື ແມ່ທັງ ໘ ທັນຕາ ແລະແມ່ທັງ ໘ ໃສ່ວັນນະຍຸດ

## ໑໐. ຄວາມມີໃຈດີຕໍ່ຄົນອື່ນ



ໃນໂລກນີ້ເຮົາບໍ່ໄດ້ຢູ່ຢຽວແຕ່ຜູ້ດຽວ ຍັງມີຄົນອີກຫລາຍຮ້ອຍຫລາຍພັນ ທີ່ເຮົາຈະຕ້ອງໄດ້ຕິດຕໍ່ກ່ຽວຂ້ອງນຳ, ພໍ່ແມ່ເຮົາຊະອອນ

ຫອນຫົກາງເພິ່ງຕົວຄົນດຽວ, ຄົນເຮົາຕ້ອງອາສັຍຫມາຍເພິ່ງຊຶ່ງ
ກັນແລະກັນຢູ່ສເນີ. –ຖ້າໃຜກາງຕ່ແຕ່ຕົວຄົນດຽວ ເຖິງວ່າຈະບໍ່ເຮັດ
ຄວາມຊົ່ວຮ້າຍ ແກ່ຜູ້ອື່ນ ກໍຄົງບໍ່ພົ້ນຈາກ ຄວາມຍາກ ລຳບາກ ເປັນແທ້
ດັ່ງນັ້ນ, ເຮົາຕ້ອງມີນ້ຳໃຈກວ້າງ, ອີດູກຸນາ, ຊ່ວຍເຫລືອເພື່ອນມະນຸດ
ຄືກັນກັບເຮົາ. ຖ້າເຈົ້າຊ່ວຍເອົາຄົນຜູ້ນຶ່ງທີ່ລົ້ມໃຫ້ລຸກຂຶ້ນ, ຖ້າເຈົ້າ
ຊ່ວຍເກັບໄມ້ເທົ້າປູ່ເຖົ້າທີ່ຕົກລົງດິນສົ່ງໃຫ້ເພິ່ນ, ຖ້າເຈົ້າຊ່ວຍບອກ
ທາງແກ່ຄົນຫລົງທາງຫລືຄົນຕາບອດ, ຖ້າເຈົ້າໃຫ້ທານເຂົ້າຂອງ
ເງິນຄຳ ເຄື່ອງນຸ່ງຫົ່ມ ປາປົວພຍາດຫລືບ່ອນຢູ່ອາສັຍເປັນຕົ້ນ ແກ່
ຄົນທຸກໄຮ້ເຂັນໃຈຕາມແຕ່ເຈົ້າຈະໃຫ້ທານໄດ້. ແລ້ວໄດ້ຊື່ວ່າເຈົ້າໄດ້
ເຮັດຄວາມດີທັງມວນແກ່ຄົນອື່ນ.

ຜູ້ທີ່ເຮັດຄວາມດີມີໃຈກວ້າງຕໍ່ເພື່ອນມະນຸດ ຈະໄດ້ຮັບແຕ່
ຄວາມນັບຖື, ລືຊາ, ຄວາມປ້ອງບໍ່ສ່ອະເສີນ ແລະຄວາມເປັນການສະ
ບາຍໃຈຕລອດໄປ.

ຄຳອະທິບາຍ.– ກະຣຸນາ : ອີດູ. ອາສັຍ : ຢູ່, ເພິ່ງພາ. ສ່ອະເສີນ :
ປ້ອງບໍ່, ປົກປ້ອງ. ປົວພຍາດ : ຮັກສາໂຣກ.

ຄຳຖາມ.– ໑.– ເຮົາຈະຢູ່ແຕ່ເຮົາຄົນດຽວໃນໂລກນີ້ໄດ້ບໍ່ ? ໒.– ເມື່ອໃຫ້
ເຮົາອາສັຍຫມາຍເພິ່ງຜູ້ດຽວດັ່ງນີ້ ເຮົາເດຄວນໃຫ້ຜູ້ອື່ນ
ເພິ່ງເຮົາບໍ່ ? ໓.– ຄົນຊະນິດໃດເຮົາຄວນຊ່ວຍເຫລືອເຂົາ
ກວ່າສູ່ຄົນ ? ໔. ເມື່ອຊ່ວຍຜູ້ໃດຜູ້ນຶ່ງເຮົາຄວນຈະຄອຍຖ້າ
ຕອບແທນຫລືບໍ່ ?



ໃຈຄວາມ.– ເຮົາຈະຢູ່ແຕ່ຄົນດຽວໃນໂລກນີ້ບໍ່ໄດ້ດອກ. ເຮົາຈະຕ້ອງ
ອາສັຍຄົນອື່ນຢູ່ສເນີ ເພາະຜູ້ນຶ່ງຜູ້ດຽວ ຈະເຮັດວຽກຊູ່
ແນວບໍ່ໄດ້ ເກີດມາເປັນມະນຸດຕ້ອງມີໃຈກວ້າງຂວາງກັບ
ຫມົດສູ່ຄົນ ຄື ຊ່ວຍເຫລືອເຂົາ ເວລາເຂົາຂາດເຂີນຫລື
ຕ້ອງການເຮົາ.

ສັບ.– ຄວາມມີໃຈດີຕໍ່ຄົນອື່ນ.

ນາມ : ໂລກ, ຄວາມຊົ່ວ, ຜູ້ອື່ນ, ເພື່ອນ, ໄມ້ເທົ້າ.

ຄຸນນາມ : ກວ້າງ, ທຸກໄຮ້.

ກິຣິຍາ : ຊ່ວຍເຫລືອ, ລົ້ມ, ລຸກຂຶ້ນ.

ໄວຍາກອນ.– ສຣະໃນອັກສອນລາວ. ມີສຣະ ໒໗ ຕົວ ຄື : ×ະ
×າ ×ິ ×ີ ×ຶ ×ື ×ຸ ×ູ ເ×ະ ເ× ແ×ະ ແ×
ໂ×ະ ໂ× ເ×າະ ×ໍ ເ×ິ ເ×ີ ເ×ັຍະ ເ×ັຍ
ເ×ືອ ເ×ືອ ×ົວະ ×ົວ ×ໍາ ໄ× ໃ× ເ×ົາ

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ອາສັຍ, ຄວາມຊົ່ວ,
ຮ້າຍ, ລຸກຂຶ້ນ, ເຄື່ອງນຸ່ງຫົ່ມ, ໃຈກວ້າງ, ສ່ອະເສີນ.

ຄຳເຄົ້າດຽວກັນ.– ໂລກ : ໂລກີ, ໂລກາ, ໂລກກະວິຖານ. ກຸນາ :
ກະຣຸນາ.

ແຕ່ງເອື້ອງ.– ຈົ່ງແຕ່ງເອື້ອງຄົນຜູ້ມີໃຈດີຕໍ່ຜູ້ອື່ນຜູ້ນຶ່ງ.

# ໑໑. ແມ່ພຍາດ



ແມ່ພຍາດເປັນເຊື້ອຈຸລິນຊີ, ຖ້າບໍ່ໃຊ້ກ້ອງຈຸລະທັດສ່ອງ ຈະເບິ່ງດ້ວຍຕາເປົ່າບໍ່ອາດຈະເຫັນຕົວໄດ້ ມັນມີຫລາຍຮ້ອຍຫລາຍພັນແນວຕ່າງ ໆ ກັນ. ມັນເກີດແນ່ແຜ່ຫລາຍອອກໄປໄດ້ໄວທີ່ສຸດບໍ່ໄດ້ ແລະມີຢູ່ທຸກບ່ອນ ຕາມດິນ, ຕາມນ້ຳ, ຕາມອາກາດ ອ້ອມຕົນຕົວເຮົາແລະຢູ່ໃນຕົວເຮົາເອງກໍ່ມີ. ຢູ່ໃນຕົວຂອງຄົນເຮົາ ມີແມ່ພຍາດສອງແນວຄື ແມ່ພຍາດຮ້າຍຊຶ່ງເຮັດອັນຕລາຍໃຫ້ເຮົາ ແລະແມ່ພຍາດດີຊຶ່ງເປັນປໂຍດແກ່ຊີວິດຂອງເຮົາ ແມ່ພຍາດຮ້າຍນັ້ນພາໃຫ້ເກີດໂຣກຕິດຕໍ່ກັນ ຄື : ໂຣກຕາແດງ, ໂຣກປອດແຫ້ງ, ໂຣກອື່ທຸດ ແລະໂຣກພາບຸ (ຫລືອະຫິວາດຕະກະໂຣກ) ເປັນຕົ້ນ.

ເມື່ອຢາກເວັ້ນຈາກພຍາດຕ່າງ ໆ ທີ່ກ່າວມາແລ້ວນີ້ ຕ້ອງຖືຕາມຄຳສອນຂອງສຸຂາພິບານໃຫ້ຄັດເຄັ່ງ: ຕ້ອງປົວຮະບັດເຄື່ອງນຸ່ງ



ຫົ່ມທີ່ຢູ່ອາສັຍໃຫ້ສະອາດ ແລະກິນແຕ່ອາຫານ ຫລືນ້ຳທີ່ສະອາດ ຫລືຕົ້ມໃຫ້ສຸກດີແລ້ວ.

<u>ຄຳອະທິບາຍ.</u>— ຈຸລິນຊີ : ສິ່ງທີ່ມີຊີວິດເຕ້ໂຕນ້ອຍທີ່ສຸດ (ເບິ່ງດ້ວຍຕາເປົ່າບໍ່ເຫັນ). ຈຸລະທັດ : ກ້ອງສຳລັບຂຍາຍຂອງນ້ອຍ ໆ ໃຫ້ໃຫຍ່. ສຸຂາພິບານ : ວິທີຮັກສາຕົນໃຫ້ສຸກສບາຍ.

<u>ຄຳຖາມ.</u>— ໑.— ມີພຍາດແນວໃດແດ່ທີ່ມັກຕິດຕໍ່ກັນ ? ໒.— ເວລາບ້ານເມືອງເກີດໂຣກພາບຸ ເຮົາຄວນປົວຮະບັດຕົນຕົວຢ່າງໃດ ? ໓.— ແມ່ພຍາດມີຮູບຮ່າງຢ່າງໃດ ? ແລະມັກຢູ່ໃສ ? ໔.— ເຮົາເຮັດຢ່າງໃດ ຈຶ່ງຈະເວັ້ນຈາກພຍາດຕ່າງ ໆ ໄດ້ ?

<u>ໃຈຄວາມ.</u>— ແມ່ພຍາດເປັນຕົວນ້ອຍນັກ ເບິ່ງດ້ວຍຕາເປົ່າບໍ່ເຫັນໄດ້ ມັນມີຫລາຍ ແລະແຜ່ຫລາຍໄວທີ່ສຸດ ແລະມີຢູ່ທຸກບ່ອນ. ຢູ່ໃນຕົວຂອງເຮົາມີແມ່ພຍາດສອງຢ່າງ ຄື ແມ່ພຍາດຮ້າຍ ແລະແມ່ພຍາດດີ, ເມື່ອຢາກຫລີກເວັ້ນພຍາດທັງປວງ ຕ້ອງຖືຕາມຄຳສອນ ຂອງສຸຂາພິບານໃຫ້ຄັດເຄັ່ງ.

<u>ສັບ.</u>— ແມ່ພຍາດ.

<u>ບານ.</u>— ພຍາດ, ກ້ອງຈຸລະທັດ, ໂຣກຕາແດງ, ໂຣກປອດແຫ້ງ, ໂຣກພາບຸ, ສຸຂາພິບານ.

<u>ຄຸນນາມ</u>.— ອັນຕຣາຍ, ປໂຍດ, ຮ້າຍ, ສະອາດ.
<u>ກິຣິຍາ</u>.— ເຫັນ, ເກີດ, ເວັ້ນຈາກ, ບົວຣະບັດ.
<u>ໄວຍາກອນ</u>.— ການປະສົມແມ່ທັງ ໓ ນີ້ ກໍມີຢູ່ ໒ ວິທີ ຄື ແມ່ທັງ ໓ ຫັນດາ ແລະແມ່ທັງ ໓ ໄສ່ວັນນະຍຸດ.
<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ກ້ອງຂຍາຍ, ແຜ່ຍາຍ, ປອດແຫ້ງ, ໂຣກພາຍຸ, ຄັດເຄົ້ງ, ອາສັນ.
<u>ຄຳເຄົ້າດຽວກັນ</u>.— ໂຣກ : ໂຣຄາ. ປໂຍດ : ອັບໂຍດ.
<u>ແຕ່ງເລື່ອງ</u>.— ໃຫ້ເຈົ້າເວົ້າເລື່ອງຄົນຕິດພຍາດ ຜູ້ນຶ່ງ ມາໃຫ້ຟັງ ເປັນດ້ວຍເຫດໃດມັນຈຶ່ງຕິດພຍາດ.

# ໑໒. ຊາດຕ່າງໆໃນອິນດູຈີນ



ປະເທດອິນດູຈີນ ຊຶ່ງເວລານີ້ໄດ້ຖືກປົດປ່ອຍຈາກຝຣັ່ງເສດ



ແລ້ວມີ ໓ ປະເທດ ຄື : ລາວ, ຂເມນ, ແລະວຽດນາມ. ມີພົລເມືອງຢູ່ປະມານຊາວລ້ານຄົນ. ສ່ວນຫລາຍນັ້ນແມ່ນຄົນວຽດນາມ ( ແກວ ) ຊຶ່ງມີຢູ່ປະມານສິບຫ້າລ້ານຄົນ. ສ່ວນເຂົາຢູ່ຕາມທີ່ຣາບ ຄື ຕາມທີ່ດິນປົ່ງໃຫມ່ໃນແຄວ້ນຕັງແກັງ, ແຄວ້ນອານາມ ( ແກວກາງ ), ແລະແຄວ້ນໂກແຊງຊີນ ( ແກວໃຕ້ ) ນອກຈາກຄົນວຽດນາມ ຫລື ແກວແລ້ວ ຕາມແຂວງສູງ ໆ ຂອງແຄວ້ນຕັງແກັງ ຍັງມີພວກໄຕ, ພວກເຫມື່ອງ, ພວກຫມ່ານ, ພວກແມ້ວ ແລະພວກຫມ່ອງອີກ ຕາມພູຂອງແຄວ້ນອານາມ – ຝ່າຍເຫນືອມີພວກເຫມື່ອງ ແລະຫນ້ອຍ, ຝ່າຍໃຕ້ມີພວກໄຫ້ບ ຊຶ່ງມາຈາກຊາດຈາມ, ໃນແຄວ້ນໂກແຊງຊີນຍັງມີພວກໄຫ້ບນ້ອຍແລະຂເມນຢູ່ແດ່.

ໃນປະເທດຂເມນ ມີພວກຂເມນ, ຈາມ, ກຸຍ ແລະພະນອງ ໃນປະເທດລາວ ພົລເມືອງສ່ວນຫລາຍແມ່ນໄທລາວ ຊຶ່ງມັກຢູ່ຕາມແຄມນ້ຳຂອງ ແລະຕາມແຄມລຳນ້ຳສາຂາຂອງນ້ຳຂອງ, ນອກນີ້ຍັງມີພວກຜູ້ໄທ ຊຶ່ງສ່ວນຫລາຍມັກຢູ່ຕາມພູແດນແກວ, ພວກຂ້າ ເຫມື່ອງ, ແມ້ວແລະຫໍ້ ແຈກຢາຍຢູ່ບ່ອນລະເລັກລະຫນ້ອຍ. ນອກຈາກຊາດທີ່ກ່າວມາແລ້ວຍັງມີຄົນອາຊີ ຄື : ຈີນ, ແຂກອິນເດັຽ, ແຂກປາກີສຕັງ, ຍີ່ປຸ່ນ ແລະຄົນເອີຣົບ ຄື: ຝຣັ່ງເສດ, ອະເມຣິກາ ແຊກແຊງຢູ່ດ້ວຍ.

<u>ຄຳອະທິບາຍ</u>.— ປົດປ່ອຍ : ເວັ້ນ ຈາກ ເປັນ ເມືອງ ຂຶ້ນ ຝຣັ່ງ ເສດ.
ແຄວ້ນ : ຄືເຂດແຂວງໃຫຍ່ ໆ ດ້ວຍປະເທດນຶ່ງຕ່າງຫາກ ແຕ່ໂຮມຢູ່ໃນປະເທດດຽວກັນ.

ຄຳຖາມ.— ໑.– ປະເທດອິນດູຈີນແບ່ງເປັນຈັກປະເທດ ? ໒.– ປະເທດ
ວຽດນາມມີຈັກແຄວ້ນ ? ໓.– ຄືແຄວ້ນໃດແດ່ ? ໔.–ປະເທດ
ລາວມີຄົນຊາດໃດແດ່ ?

ໃຈຄວາມ.— ປະເທດອິນດູຈີນ ຊຶ່ງມີປະເທດເປັນເພື່ອນບ້ານໃກ້ຄຽງ
ກັນກັບລາວຄື ຂະເມນ ແລະວຽດນາມ, ມີພົລເມືອງປະ
ມານຊາວລ້ານຄົນ.

ສັບ.— ຊາດຕ່າງ ໆ ໃນອິນດູຈີນ.

ນາມ : ປະເທດອິນດູຈີນ, ລາວ, ຂະເມນ, ວຽດນາມ.

ຄຸນນາມ : ສູງ ໆ, ກາງ, ໃຕ້, ເໜືອ.

ກິລິຍາ : ປູ, ແຈກປາຍ.

ໄວຍາກອນ.— ອັກສອນທັງ ໓ ໝວດ ຄື ສອະ ພຍັນຊນະ ແລະ
ວັນນະຍຸດດັ່ງກ່າວມາແລ້ວນັ້ນ ໃຊ້ສຳລັບຂຽນຕາມຄຳ
ເວົ້າ; ຄຳເວົ້າລາງຄຳກໍອອກສຽງດຽວ ລາງຄຳກໍອອກ
ສຽງຫລາຍສຽງ ສຽງທີ່ດັງອອກມາແຕ່ລະເທື່ອນັ້ນເອີ້ນວ່າ
ພຍາງ (ແປວ່າສ່ວນຂອງຄຳເວົ້າ) ພຍາງໃດກໍຕ້ອງອາ
ສັບສອະພຍັນຊນະ ຫລືວັນນະຍຸດປະສົມກັນ. ຄຳເວົ້າທີ່
ມີພຍາງດຽວຫລືຫລາຍພຍາງນັ້ນມີຕົວຢ່າງດັ່ງຕໍ່ໄປນີ້ :

| | | | | |
|---|---|---|---|---|
| ປາ | ເປັນຄຳນຶ່ງ | ມີ | ໑ | ພຍາງ |
| ນະຄອນ | " | " | ໒ | " |
| ນາລິກາ | " | " | ໓ | " |



ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ປຮັ່ງເສດ, ແຂວງ,
ວຽດນາມ, ພົລເມືອງ, ແຄວ້ນ, ພວກໄທຍ, ຄົນເອີຣົບ,

ຄຳເກົ່າດຽວກັນ.— ລາວ : ລະໂວ້, ລະວ້າ, ລາວຸ.

ແຕ່ງເລື່ອງ.— ຈົ່ງແຕ່ງເລື່ອງບ້ານເກີດຂອງເຈົ້າ.

# ໑໓. ຄວາມຈົ່ມຂອງເດັກນ້ອຍ



ຂ້ອຍມາເພິ່ງແມ່ນ້ຳນີ້
ໃກ້ແມ່ຄົງຂວັນ, ກໍບໍ່ມີໃຜດີກ
ແຕ່ງ ທິວຂະບັດ ຕຸ້ມແມ່ ເພິ່ນມີ
ຂອງລົ້ນ ອາຫານດີຊ້ອຍແຊບ
ເພິ່ນກໍລູກເຊືອງຊ້ຳ ບໍ່ມີ ໃຫ້
ຮ່ວມເຫັນ

ແມ່ນ ວ່າເຮົາ ຫາກ ຮູ້
ເຫັນປູການີ້ ເພິ່ນກໍທຳຊິງ
ເສີບເຊືອງຫລົງເປັນຈ້ອຍ, ປ່າ
ຫວັງ ກອບ ກອງ ຖ້ຳ ຂອງ ທົ່ງ
ບ້ານບ່ອນ ບໍ່ມີໄດ້ນຸ່ງນ້ອຍແສນ
ເບື່ອນບາກແຄ້ນ

ບໍ່ຄືຄາວເມື່ອນັ້ນ    ດອມແມ່ສາບໃຈ
ເຖິງເພິ່ນເລົ້າໆສຽງ    ວ່າຮຸນແຮງຮ້າຍ
ບັງວ່າ ອິດອອນໄຫ້    ນອນດີກິນອີ່ມ
ອັນວ່າ ຂອງເຄື່ອງເອ້    ບໍ່ມີໄຫ້ຕໍ່ໃຜ ແທ້ນາ.

ຍາມເມື່ອເຈັບປ່ວຍໄຂ້    ເຈົ້າແມ່ເຮຣີນ
ຫມໍຢາ ມີທາງໃດ    ກວ່າໄກກໍ່ນຳຮ້ອງ
ບາດວ່າ ຫນີໄກຫ້ອງ    ມາດາແກ້ວກິ່ງ
ຍາມເຈັບຫົວ ແລະປວດທ້ອງ    ກໍ່ນອນໄຫ້ຮ່ຳດາຍ.

ກ່ອນກີ້ຂ້ອນປຸ່ນັ້ນ    ເຮືອນແມ່ແສນສນຸກ
ອັນວ່າ ເງິນຄຳມີ    ໃສ່ມີເລົ້າເລື້ອຍ
ມາປຸ ກັບແມ່ນ້າ    ຕາມເຈົ້າເພິ່ນຊາ.

ຄັນເຮົາ ມີໂຊກໄດ້    ຊື້ນກ່ອນໃດປາ
ເພີ່ນຈຶ່ງ ດາແດຮັກ    ວ່າດີບໍ່ບ້ອງ
ບາດຍາມ ເຮົາຂັດຂ້ອງ    ແປນນີ້ມາເປົ່າ
ເພິ່ນວ່າ ເຮົາໃພດຄ້ານ    ຫາຫລື້ນຄ່ຳດາຍ.

ໂອບໍ່! ອັນປຸກັບແມ່ນ້າ    ບີນຍາກຊອມໃຈ
ຄັນເຖິງ ຍາມກິນນາ    ກໍ່ຈົ່ນຈາຄ່ຳສົ້ນ
ນອນເດິກເພິ່ນວ່າເຮົາຫາເຫລັ້ນ    ຄັນນອນແຕ່ເວັນ ເພິ່ນ ຜັດຮ້ອງບາພໍ່
ເຮັດບິດ ແດ່ລະຫນ້ອຍ    ຫຽວປ້ອນປູ່ແປດວັນແທ້ນາ.



ຄຳອະທິບາຍ.– ແມ່ກົງຂວັນ : ແມ່ຜູ້ເກີດນຳ. ອາຫານ : ເຄື່ອງກິນ. ດອມ : ນຳ, ຕາມ. ດາແດຮັກ : ເອົາໃຈຮັກ.

ຄຳຖາມ.– ໑.– ເປັນດ້ວຍເຫດໃດເດັກນ້ອຍຈຶ່ງຈົ່ມໃຫ້ແມ່ນ້າ ? ໒.– ເປັນຫຍັງແມ່ນ້າຈຶ່ງບໍ່ຮັກລູກຜົວ ? ໓.– ແມ່ນ້າມີຄວາມປາງໃດໃຫ້ລູກຜົວ ? ໔.– ເວລາໃດເດັກນ້ອຍຈຶ່ງມີຄວາມສນຸກບ້າງ ? ໕.– ເປັນຫຍັງແມ່ນ້າຈຶ່ງນ້ອງບໍ່ວ່າດີ ?

ໃຈຄວາມ.– ດານທັມດາແມ່ນ້າບໍ່ຮ່ອນຮັກລູກຜົວຈັກເທື່ອ ເຖິງວ່າຈະທຳວຽກການດີປານໃດກໍ່ດານບັງບໍ່ນ້ອງວ່າດີ ແລະຍາມເຈັບເປັນມາກໍ່ບໍ່ເອົາຫົວຊາ ເຫມືອນແມ່ກົງດີບແທ້. ແມ່ນ້າທີ່ດີບໍ່ຄວນເຮັດດັ່ງນັ້ນເລີຍ.

ສັບ.– ຄວາມຈົ່ມຂອງເດັກນ້ອຍ.

ນາມ : ອາຫານ, ມີ, ຜ້າ, ເຄື່ອງເອ້, ໂຊກ.

ຄຸນນາມ : ແຊບ, ປ່ວຍ.

ກິລິຍາ : ຕຸ້ມ, ດ່າ, ຮົບ, ເຊື່ອງ, ຫ້ານ.

ໄວຍາກອນ.– ວິທີພັນສຽງ ແມ່ນການປະກອບວັນນະຍຸດເຂົ້າກັບຄຳເວົ້າທີ່ຂຽນດ້ວຍສຣະ ແລະພບັນຊນະເພື່ອໃຫ້ຄຳເວົ້ານັ້ນ

ເປັນໄປຕາມສຳນຽງ ການຜັນສຽງນັ້ນຕ້ອງພັນຕາມພຍັ
ຊນະທີ່ແບ່ງເປັນ ໓ ໝູ່ ຄື ອັກສອນກາງ, ອັກສອນສູງ
ອັກສອນຕ່ຳ ເພາະອັກສອນ ໓ ໝູ່ນັ້ນເມື່ອປະກອບວັ
ນະຍຸດແລ້ວ ຍ່ອມມີສຽງຕ່າງກັນດັ່ງຕໍ່ໄປນີ້.

ກ)– ອັກສອນກາງ ຜັນໄດ້ ໕ ສຽງຄື ສຽງສາມັນ
ສຽງເອກ, ສຽງໂທ, ສຽງຕຣີ, ສຽງຈັດວາ.

ຂ)– ອັກສອນສູງ ຜັນໄດ້ ໓ ສຽງ ຄື ສຽງສາມັນ,
ສຽງເອກ, ສຽງໂທ.

ຄ)– ອັກສອນຕ່ຳ ຜັນໄດ້ ໓ ສຽງ ຄື ສຽງສາມັນ,
ສຽງເອກ, ສຽງໂທ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ ແມ່ຄົງຂວັນ, ບົວຣະ
ບັດດຸ້ມ, ບ້ານ່ອນ, ຮຸນແຮງ, ຂັດຂ້ອງ, ຜັດ.

ຄຳເຄົ້າດຽວກັນ.– ບົວຣະບັດ : ປະຕິບັດ ປະນິບັດ, ເຣຣິນ : ຮ່ອນ
ເຣ, ຮ່ຳໄຮ.

ບົດຂຶ້ນໃຈ.– ໃຫ້ນັກຮຽນທ່ອງຂຶ້ນໃຈຕາມບົດທີ່ ໑໓ ໜ້າ ໓໓.

ແຕ່ງເຣື່ອງ.– ຈົ່ງແຕ່ງເຣື່ອງເດັກນ້ອຍຜູ້ນຶ່ງທີ່ຢູ່ກັບແມ່ນ້ຳ.



# ໑໔. ຈີນໃນປະເທດອິນດູຈີນ



ໃນຈຳນວນຄົນຕ່າງປະເທດທີ່ເປັນຊາວອາຊີ ຊຶ່ງຢູ່ໃນປະເທດອິນດູຈີນສ່ວນຫລາຍແມ່ນຈີນ.

ຈີນຫລືເຈັກທີ່ຢູ່ໃນປະເທດລາວ ແມ່ນພວກທີ່ມາແຕ່ແຂວງຍູນນານ ຫລືກຸຽງຂອງປະເທດຈີນ. ເຊື້ອສາຍຈີນຊຶ່ງຕັ້ງບ້ານເຮືອນຢູ່ໃນປະເທດອິນດູຈີນມີຫລາຍມາແຕ່ໃດໆ ແລ້ວ ຄົນຈີນນັ້ນເປັນຄົນດຸໝັ່ນ, ອົດທົນແລະຄ້າຂາຍເກັ່ງຈີນຍື້ນຊີລີຊາໃນປະເທດລາວເຮົາ ຕາມບ້ານນ້ອຍເມືອງໃຫຍ່ບ່ອນໃດໆ ກໍດີ, ພວກຈີນທີ່ຕັ້ງຕຶກຕັ້ງເຮືອນມາແຕ່ກ່ອນໄດ້ເຮັດການຄ້າຂາຍອັນນ້ອຍອັນໃຫຍ່ ຊຶ່ງໄດ້ພາເອົາກຳໄຣອັນງາມມາໃຫ້ແກ່ພວກເຂົາ

ຢູ່ຕາມປະເທດລາວພາກໃຕ້ ພໍ່ຄ້າຈີນລາງພວກຄ້າຂາຍ

ຂອງປ່າແລະໜັງສັດ, ລາງພວກກໍ່ຕິດຕໍ່ຄ້າຂາຍກັບຫ້າງໃຫຍ່ ໆ ປະເທດໄທແລະປະເທດວຽດນາມ ຄື ເມືອງໄຊລົງ, ໄຊງ່ອນ ເປັນຕົ້ນ

ຄຳອະທິບາຍ.– ເຊື້ອສາຍ : ເປັນຍາດດຽວກັນ. ກຳໄຣ : ຜົນທີ່ ເກີນຕົ້ນທຶນ. ຄົນຕ່າງປະເທດ : ຄົນຕ່າງດ້າວ, ຄົນຕ່າງ ຊາດ. ຄວາມອົດທົນ : ຄວາມບໍ່ທໍ້ຖອຍຫລືມີໃຈຕໍ່ສູ້ກັ ວຽກການຕ່າງ ໆ

ຄຳຖາມ.– ໑.– ຄົນຕ່າງປະເທດຊາວອາຊີທີ່ຢູ່ໃນອິນດູຈີນ ແມ່ນຊາ ໃດຫລາຍກວ່າໝູ່? ໒.– ເຈັກທີ່ຢູ່ໃນປະເທດລາວມາຈາ ແຂວງໃດ? ໓.– ຄົນມີນິດໄສຢ່າງໃດ? ຄົນຈີນສ່ວ ຫລາຍໃນເມືອງລາວ ເຂົາຫາກິນຢ່າງໃດ?

ໃຈຄວາມ.– ຄົນຕ່າງປະເທດທີ່ເປັນຊາວອາຊີ ຢູ່ໃນປະເທດອິນດູຈີ ສ່ວນຫລາຍແມ່ນເຈັກ, ເຂົາເປັນຄົນດຸໝັ່ນອົດທົນແລ ຄ້າຂາຍເກັ່ງ ເຫດນີ້ ເຮົາຄວນເປັນຄົນດຸໝັ່ນອົດທົ ເໝືອນເຈັກ, ເຮົາຈຶ່ງຈະຮັ່ງມີ.

ສັບ.– ຈີນໃນປະເທດອິນດູຈີນ

ນາມ : ຄົນຕ່າງປະເທດ, ເຊື້ອສາຍ, ແຂວງ, ກຳໄຣ, ພໍ່ຄ້າ.

ຄຸນນາມ : ດຸໝັ່ນ, ອົດທົນ, ນ້ອຍ, ໃຫຍ່, ງາມ.

ກິຣິຍາ : ຕັ້ງບ້ານເຮືອນ, ຄ້າຂາຍ, ຕິດຕໍ່.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ປະເທດ, ຊາວອາຊີ, ແຂວງ, ບຸນນານ, ຫ້າງໃຫຍ່, ໄຊງ່ອນ.



ຄຳເຄົ້າດຽວກັນ.– ດຸ : ດັນ. ພວກ : ພັກ, ເພື່ອນ.

ແຕ່ງເລື່ອງ.– ຈົ່ງແຕ່ງເລື່ອງພໍ່ຄ້າເຈັກຜູ້ນຶ່ງ. ມັນເປັນຄົນແນວໃດ ? ມັນສັດຊື່ໃນການຄ້າຂາຍບໍ່ ?

# ໑໕. ຝຣັ່ງເສດໃນອິນດູຈີນ



ຄົນອີຣົບທີ່ຢູ່ໃນປະເທດອິນດູຈີນນັ້ນ ແມ່ນຝຣັ່ງເສດພວກນຶ່ງ, ຫາກວ່າເຂົາມີສ່ວນເລັກນ້ອຍເທົ່ານັ້ນ.

ແຕ່ເວລາຝຣັ່ງເສດໄດ້ເຂົ້າມາຢູ່ອິນດູຈີນແລ້ວ ເຂົາກໍ່ໄດ້ຮ່ວມມື ກັບເຈົ້າຂອງປະເທດນັ້ນ ໆ ຄື ປະເທດວຽດນາມ, ປະເທດຂະເໝນ ແລະ

ປະເທດລາວ. ເຂົາໄດ້ຊ່ວຍສ້າງສາຄວາມຮຸ່ງເຮືອງຖາວອນໃຫ້ແກ່ປະເທດອິນດູຈີນເຮົາບາງປະການ.

ໃນດ້ານສ້າງສາ ເຂົາໄດ້ຊ່ວຍສ້າງຖນົນຫົນທາງຫລາຍເສັ້ນ ຊຶ່ງປູດ້ວຍຫີນແຮ່ ແລະປາງໃຫ້ສະດວກແກ່ການຄະມະນາຄົມທັງຣະດູແລ້ງແລະຝົນ. ນອກນັ້ນ, ຍັງຊ່ວຍສ້າງໂຮງເຮັດສິນຄ້າຂຶ້ນຫລາຍບ່ອນ ທັງຊ່ວຍສ້າງໂຮງການຂອງຣັຖບານທີ່ຈັບງານຂຶ້ນຕາມເມືອງຫລືແຂວງດ້ວຍ.

ໃນດ້ານສຶກສາ ຝຣັ່ງເສດກໍໄດ້ຊ່ວຍຫົວຄິດປະດິດແບບຮຽນຕ່າງ ໆ ພ້ອມດ້ວຍການສ້າງໂຮງຮຽນ ໃຫ້ແຜ່ຜາຍອອກທຸກ ໆ ປີມາ.

ໃນດ້ານສຸຂາພິບານ ຝຣັ່ງເສດກໍໄດ້ຊ່ວຍເຫລືອເຫມືອນກັນ ຄື: ການ ປັບປຸງ ວິຊາ ຄວາມຮູ້ ດ້ານ ການແພດ ໃຫ້ ດີ ຂຶ້ນ ທັງ ໂຮງຫມໍກໍໄດ້ຂຍາຍອອກໃຫ້ມີຂຶ້ນເກືອບທົ່ວປະເທດຂອງເຮົາ.

ບ່ອນສຳຄັນບ່ອນນຶ່ງ ໃນປະເທດລາວກໍຄື "ໂຮງຫມໍມະໂຫສົດ ວຽງຈັນ" ຊຶ່ງລ້ວນແຕ່ມີນາຍຫມໍຜູ້ຊຳນານທັງຫລາຍ ແລະມີຢາທີ່ສັກສິດ ຫລາຍຂນານທີ່ຣັຖບານລາວໄດ້ຈັດຕັ້ງຂຶ້ນໂດຍຄວາມຮ່ວມມືຂອງຄົນຝຣັ່ງ.



<u>ຄຳອະທິບາຍ</u>.– ຄົນເອີຣົບ : ຄົນຜິວຂາວຢູ່ທະວີບເອີຣົບ. ຮ່ວມມື : ຮ່ວມໃຈກັນ. ອານາມ : ແກວ. ຖາວອນ : ຫມັ້ນແກ່ນ. ການຄະມະນາຄົມ : ການທຽວໄປມາ. ສຸຂາພິບານ : ການຮັກສາໃຫ້ມີຄວາມສຸກ. ຫລາຍຂນານ : ຫລາຍຊນິດ. ແພດ : ຫມໍຢາ. ພະຍັນຕຣາຍ : ໄພຮ້າຍແລະອັນຕຣາຍ. ມະນຸດ : ຫມູ່ຄົນ.

<u>ຄຳຖາມ</u>.– ໑.– ຝຣັ່ງເສດທີ່ຢູ່ໃນປະເທດອິນດູຈີນ ຫລາຍເທົ່າກັນກັບຄົນລາວເຮົາບໍ່? ໒.– ຝຣັ່ງເສດເຂົ້າມາຢູ່ໃນປະເທດອິນດູຈີນນີ້ ເຂົາໄດ້ເຮັດຢ່າງໃດ ໃນການປົກຄອງແຜ່ນດິນ? ໓.– ໃນດ້ານສ້າງສາເຂົາໄດ້ຊ່ວຍເຮົາເຮັດຫຍັງແດ່? ໔.– ໃນດ້ານການສຶກສາເຂົາໄດ້ເຮັດອັນໃດໄວ້? ໕.– ຢາທີ່ດີ ໆ ແລະນາຍແພດຜູ້ຊ່ຽວຊານ ມີຢູ່ໃນໂຮງຫມໍໃດທີ່ປະເທດລາວຂອງເຮົາ?

<u>ໃຈຄວາມ</u>.– ໃນປະເທດອິນດູຈີນ ມີຝຣັ່ງເສດສ່ວນນ້ອຍ ໄດ້ເຂົ້າມາອາສັຍຢູ່. ເຂົາໄດ້ຮ່ວມມືກັບລາວ, ຫວຽດນາມ ແລະຂະເມນ ສ້າງ ບ້ານເມືອງ ໃຫ້ ຮຸ່ງເຮືອງ ໃນດ້ານ ການ ສຶກສາ ສຸຂາພິບານແລະສ້າງສາ.

<u>ສັບ</u>.– ຝຣັ່ງເສດໃນອິນດູຈີນ

ນາມ : ຝັ່ງເສດ, ຫີນທາງ, ໂຮງຮຽນ, ໂຮງຫມໍ.
ຄຸນນາມ : ນ້ອຍ, ງາມ, ຈີບ, ຫລາຍ.
ກິລິຍາ : ຮຸ່ງ, ສາງ, ປູ, ຕັ້ງ.
ໄວຍາກອນ.- ພຍັນຊນະ ໒໗ ຕົວນັ້ນມີວິທີໃຊ້ຢູ່ ໒ ຢ່າງຄື : ໑) ໃຊ້ເປັນພຍັນຊນະຕົ້ນພຍາງ. ໒) ໃຊ້ເປັນຕົວສະກົດ. ພຍັນຊນະຕົ້ນພຍາງ ແມ່ນພຍັນຊນະຕົວອອກສຽງໃນພຍາງທີ່ບໍ່ແມ່ນສຽງສະກົດ. ພຍັນຊນະຕົ້ນພຍາງນັ້ນມີ ໒ ຢ່າງຄື : ອັກສອນປຽວແລະອັກສອນນຳ.

ອັກສອນປຽວ ແມ່ນພຍັນຊນະ ຕົ້ນພຍາງຕົວດຽວ ທີ່ປະສົມດ້ວຍສຣະ ມີຕົວສະກົດຢູ່ຂ້າງຫລັງຫລືບໍ່ມີການດັ່ງນີ້ :

ກາ ປີ ແຂ ເຄືອ ບາວ ດອນ ຕ່າງ ເມືອງ.
ຕົວ ກ ຕົວ ປ ຕົວ ຂ ຕົວ ຄ ຕົວ ບ ຕົວ ດ ຕົວ ຕ ຕົວ ມ ທີ່ຢູ່ໃນຄຳ ເຫລົ່ານັ້ນແມ່ນອັກສອນປຽວ.

ອັກສອນນຳ ແມ່ນພຍັນຊນະສອງຕົວ ທີ່ຢູ່ຕົ້ນພຍາງແລະບໍ່ມີສຣະ ×ະ ຂັ້ນ ສຣະໃນພຍາງນັ້ນປະກອບຢູ່ກັບພຍັນຊນະຕົວທີ ໒ ສເມີ ແລະພຍັນຊນະຕົວທີ ໒ ນັ້ນ ຕ້ອງແມ່ນຕົວ ງ. ຍ. ນ. ມ. ຣ. ລ ຫລື ວ ສເມີ ຕົວຢ່າງດັ່ງນີ້: ຂວາ. ພຍາ. ຫມາ. ປໂບດ. ສເມີ. ຄແລງ. ຄນິ. ສເວີຍ. ຯລຯ ຕົວ ຂວ, ພຍ, ຫມ, ປບ, ສມ, ຄລ,



ຄນ, ສວ ທີ່ຢູ່ຂ້າງຫນ້ານັ້ນແມ່ນອັກສອນນຳ.

ການສະກົດຄຳ.- ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ດ້ວນສ້າງສາ, ການສຶກສາ, ພົລເມືອງ, ໂຮງພຍາບານ, ຣັຖບານ.

ຄຳເຄົ້າດຽວກັນ.- ຖາວອນ : ຖາວະຣະ, ຖາວອນວັດຖຸ.

ແຕ່ງເລື່ອງ.- ຈົ່ງແຕ່ງເລື່ອງການສ້າງສາຂອງລາວແລະຝຣັ່ງເສດທີ່ໄດ້ຮ່ວມມືກັນສ້າງໃນປະເທດເຮົາເປັນຢ່າງໃດ.

---

# ໑໙. ເຫງັນແລະໄກ່ຜູ້

ມື້ນຶ່ງ, ເຫງັນ (ເຫັນ) ຕົວນຶ່ງ ພໍ້ໄກ່ຜູ້ຕົວນຶ່ງຢູ່ໃຕ້ພຸ່ມໄມ້, ໄກ່ຕົກໃຈເລີຍຮ້ອງກະຕາກຂຶ້ນ ແລະບິນຫນີຂຶ້ນໄປຈັບຢູ່ເທິງແຫນງໄມ້ໄຜ່. ເຫງັນປ້ານເຈົ້າຂອງໄກ່ມາພໍ້ແລະອ້າຕົວເສັຽ, ຈຶ່ງເຮັດໃຈດີກັບໄກ່ແລະເວົ້າວ່າ "ການສະບາຍກັນດີ ໆ ດີ! ເປັນຫຍັງຈຶ່ງເຮັດງຽດດັ່ງນີ້ ? ໂທເຮົາບໍ່ແມ່ນສຽວກັນມາແຕ່ກ່ອນບໍ່ ?" ໄກ່ເຊື່ອໃນຄວາມເວົ້າອັນອ່ອນຫວານຂອງເຫງັນ ເລີຍຂັນຂຶ້ນດ້ວຍຄວາມມ່ວນໃຈ. ເຫງັນຈຶ່ງເວົ້າວ່າ "ໂອ ! ສຽງເຈົ້າເກີນອອນຊອນແທ້ນໍ ! ແຕ່ຂ້ອຍຍັງບໍ່ລືມວ່າພໍ່ເຈົ້າຜູ້ລ່ວງລັບໄປແລ້ວນັ້ນ ຍັງຂັນມ່ວນກວ່ານີ້ອີກ ບ້ອນລາວຫລັບຕາຂັນ" ໄກ່ຈຶ່ງຂັນໃຫມ່ຍັງຫລັບຕາແຕ່ຂ້າງດຽວ



ເພາະບັງສົງໄສໃນຄວາມສັດຊື່ຂອງ ເຫງັນ ປູ່ ເຫງັນ ຊົ່ວ ຖແລງ ດື່ມ ອີກ "ໂຫ ! ເກີນ ອອນ ຊອນ ກວ່າ ເກົ່າ ຫລາຍ ! ແຕ່ຖ້າເຈົ້າຫາກຫລັບ ຕາອັນທັງສອງເບື້ອງ, ພວກໄກ່ທີ່ ປູ່ແກ່ວໄກ້ນີ້ ກົງຈະປ້ານເຈົ້າລືນ ເກືອບຕາຍພັ້ນແລ້ວ ! ບາດນີ້, ໄກ່ ກົກບ້ອງ ເລີບຕາຍໃຈ ເຊື່ອຄຳເວົ້າ ຂອງ ເຫງັນ ກໍ່ ຫລັບ ຕາ ທັງ ສອງ ເບື້ອງ ເພື່ອປາກໃຫ້ອັນມ່ວນກວ່າ ເກົ່າອີກ. ແຕ່ບໍ່ທັນໄດ້ກົງຄ່ອນ ເຫງັນກໍໂດດຕາບ່າໄກ່ໂລດ ແລະ ເອົາໄກ່ໄປກິນປູ່ພຸ່ມໄມ້ບ່ອນປູ່ຂອງມັນ.

"ສູເຈົ້າທັງຫລາຍ ປາຟ້າວເຊື່ອຄຳບົກບ້ອງຂອງຜູ້ມັກ ຖແລງ"

ຄຳອະທິບາຍ.– ອອນຊອນ : ມ່ວນແກ່ຫູ. ຕາຍໃຈ : ຄືຫລົງເຊື່ອຈົນລືມຕົວ. ຜູ້ມັກຖແລງ : ຜູ້ມັກເວົ້າເອົາດີ. ຜູ້ລ່ວງລັບໄປ : ຜູ້ທີ່ຕາຍແລ້ວ.



ຄຳຖາມ.– ໑.– ເຫງັນກັບໄກ່ເປັນຂອງສັດຖຸກັນມາແຕ່ໃດແລ້ວ. ເປັນຫຍັງເຫງັນຈຶ່ງເວົ້າຄຳດີງາມກັບໄກ່ ? ໒.– ເປັນຫຍັງໄກ່ຈຶ່ງເຊື່ອຄວາມເວົ້າຂອງເຫງັນຈົນລືມຕາຍ? ໓.– ເຈົ້າເຫັນວ່າໄກ່ເປັນສັດມັກບ້ອງບໍ່ ? ໔.– ໄກ່ເປັນອາຫານຂອງເຫງັນດ້ວຍເຫດໃດ ?

ໃຈຄວາມ.– ຖ້າຜູ້ໃດມັກຫລົງເຊື່ອໃນຄວາມເວົ້າ ຂອງ ຄົນອື່ນເໝືອນດັ່ງໄກ່ຕົວນັ້ນເຊື່ອໃນຄວາມເວົ້າຂອງເຫງັນ ຊຶ່ງເປັນສັດຊ່າງຫລອກລໍ້ແລະຖແລງນັ້ນ ກໍອາດຈະໄດ້ຮັບອັນຕລາຍຫລືຄວາມຕາຍບ້ອນເປັນແນ່. ໄກ່ຕົວນັ້ນຕາຍກໍເພາະມັນເຊື່ອຄວາມເວົ້າຂອງເຫງັນທີ່ດົວະເອົາໄປກິນ. ເພາະດັ່ງນີ້, ເຮົາບໍ່ຄວນເຊື່ອໃນຄວາມເວົ້າຂອງຄົນອື່ນຈັກເທື່ອ.

ສັບ.– ເຫງັນແລະໄກ່ຜູ້.

ນາມ : ພຸ່ມໄມ້, ສ່ວງ, ສຽງ, ແໜງໄມ້, ຄວາມຊື່ສັດ.

ຄຸນນາມ : ອ່ອນຫວານ, ອອນຊອນ, ມ່ວນ.

ກິລິຍາ : ຮ້ອງ, ດີໃຈ, ເຊື່ອ, ສົງໄສ, ລືມ.

ໄວຍາກອນ.– ອັກສອນນ່ານັ້ນຈັດເປັນ ໓ ໝວດ ຄື : ໑) ອັກສອນປະສົມ. ໒) ອັກສອນຄວບ. ໓) ອັກສອນຈຸງ.

ອັກສອນປະສົມແມ່ນພຍັນຊນະຕົວ ໒ ຕົວ ທີ່ປຸກົບພຍາງ ຊຶ່ງຕົວປຸໜ້າແມ່ນຕົວ ຫ ປະສົມກັບພຍັນຊນະ: ງ. ນ. ມ. ຍ. ຣ. ລ. ວ. ອອກສຽງເປັນອັກສອນສູງດັ່ງນີ້:

| | | | | | | |
|---|---|---|---|---|---|---|
| ຫ | ປະສົມ | ງ | ເປັນ | ຫງ | ຕົວຢ່າງ | ເຫງົາ |
| ຫ | ,, | ນ | ,, | ຫນ | ,, | ຫນາ |

(໓) ອັກສອນຄວບ ແມ່ນເປັນອັກສອນນຳທີ່ອ່ານອອກສຽງຄວບກັບຕົວຢ່າງດັ່ງນີ້:

ຣ ຄວບ ດັ່ງ ພຣະ, ຄຣູ; ວ ຄວບ ດັ່ງ ຂວາ, ກວ້າງ;
ລ ,, ,, ພລິດ, ພລັບ; ຍ ,, ພຍັນຊນະ, ພຍາດ.

(໔) ອັກສອນຈູງແມ່ນອັກສອນນຳ ຊຶ່ງອ່ານອອກສຽງເປັນ ໒ ພຍາງ, ພຍາງໜ້າອອກສຽງ ×ະ ແຕ່ບໍ່ຂຽນສຣະ ×ະ ໄວ້ ພຍັນຊນະຕົວປຸຂ້າງຫລັງ ອອກສຽງຕາມສຣະທີ່ປະສົມປຸ ແຕ່ເປັນສຽງອັກສອນສູງສເມີ ແລະພຍັນຊນະຕົວທີ່ເປັນພຍາງຫນ້ານັ້ນຕ້ອງແມ່ນ;

໑) ພຍັນຊນະຫມວດອັກສອນສູງຄື; ຂ. ສ. ຖ. ຜ. ຝ.

໒) ,, ,, ກາງ; ກ. ຈ. ຕ. ປ. ອ. ຕົວຢ່າງດັ່ງນີ້:

| | | | | | |
|---|---|---|---|---|---|
| ຕົວ | ຂ | ດັ່ງ | ຂແໜງ | ອ່ານວ່າ | ຂະແຫນງ |
| ,, | ສ | ,, | ສບາຍ | ,, | ສະຫບາຍ |
| ,, | ກ | ,, | ສັກອາດ | ,, | ສັກກະຫອາດ |
| ,, | ຈ | ,, | ສຸຈຣິດ | ,, | ສຸດຈະຫຣິດ |



<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້: ສ່ວກັນ, ແໜງໄມ້, ຂັນຂຶ້ນ, ອອນຊອນ, ຫລັບຕາ, ພຸ້ມ, ພຸ່ມໄມ້.

<u>ຄຳເຄົ້າດຽວກັນ</u>.– ຮ້ອງ : ຮຽກ, ໃຮ່. ບົກ : ບ້ອງ, ບໍ່.

<u>ແຕ່ງເຣື່ອງ</u>.– ຈົ່ງແຕ່ງເຣື່ອງໃກ່ບຸ້ຕົວນີ້ງ.

---

# ໑໗. ຄົນຂີ້ເຫລົ້າ



ຈົ່ງເບິ່ງຄົນຜູ້ຍ່າງຕາມຖນົນນັ້ນເນີ. ຫນ້າລາວແດງ, ຕາລາວເຊື່, ເຄື່ອງນຸ່ງເປັນຫນ້າຂີ້ດຽດ, ບາດຍ່າງບໍ່ຄັກບໍ່ແນ່, ຕ້ອງສະດຸດທຸກບາດດີນ, ເວົ້າຈາອ້ແອ້ແລະຊີ້ດົນຊີ້ມືປຸຜູ້ດຽວ, ຍ່າງໄປບໍ່ພໍ່

ຄາວກໍ່ເຊົາປຸ້ເລື້ອຍ ໆ ຈົນພົ້ນຜ່າໄປໂດຍບໍ່ເຂົ້າໃຈໄດ້ ຄົນທີ່ຍ່າງຕາມ ຖນົນກໍ່ຫລີກຫນີໄປນອກທາງ ເພື່ອຢາກເວັ້ນລາວ ຄົນຜູ້ນີ້ອອກມາ ຈາກໂຮງເຫລົ້າ ບ່ອນທີ່ພາໃຫ້ມັນເສັຽກຽດຕິຍົດແລະຫມົດອາສີທຸກ ຢ່າງ. ເວລາດື່ມເຫລົ້າເມົາແລ້ວລາວບໍ່ແມ່ນຄົນອີກ ລາວຄືກັນກັບ ສັດຮ້າຍຕົວນຶ່ງຢ່າງຊິວ ໆ ຊຶ່ງຜູ້ໃດກໍ່ຢາກເວັ້ນ.

ເຫລົ້ານັ້ນ, ຖ້າໃຜພາດື່ມຫລາຍກໍ່ເປັນຂອງເບື່ອ, ມັນກັດກະ ເພາະອາຫານຂອງເຮົາ, ເຮັດໃຫ້ຕັບແຫ້ງ, ເຮັດໃຫ້ສາຍເລືອດກະ ດ້າງ, ເຮັດໃຫ້ເສັ້ນປະສາດແລະສມອງເສັຽເຖິງກັບພາໃຫ້ເປັນບ້າ ຫລືຕາຍໄປກໍ່ມີ. ຄົນເມົາເຫລົ້າເຮັດຫຍັງກໍ່ບໍ່ຮູ້ສະຕິໄດ້ເຮັດໃຫ້ເສັຽ ກິຣິຍາບໍ່ດີທັງສະຕິປັນຍາກໍ່ປູ້ລົງບ່ຳທຸກວັນ, ນັບມື້ ຈ່ອຍໄຊລົງ, ດົນໄປ ລາວກໍ່ຄົງຈະຕາຍ ຍ້ອນການດື່ມເຫລົ້ານັ້ນແຫລ້ວ.

ຄຳອະທິບາຍ.– ອາສີ : ຄວາມສງ່າ, ຄວາມງາມ. ໂລພາ : ຢາກໄດ້ ຫລາຍ. ສະຕິ : ຄວາມຮູ້ສຶກຕົວ, ຄວາມລະລຶກໄດ້.

ຄຳຖາມ.– ໑.– ຮູບຊົງຂອງຄົນຂີ້ເຫລົ້າເປັນແນວໃດ ? ໒.– ບາດຍ່າງ ຂອງມັນເປັນຢ່າງໃດ. ແລະມັນພູດຈາຢ່າງໃດ ? ໓.– ເປັນ ດ້ວຍເຫດໃດຄົນທີ່ ຍ່າງຕາມ ທາງຈຶ່ງຫລີກຫນີມັນຫມົດ ? ໔.– ເຫລົ້ານັ້ນຖ້າດື່ມ ຫລາຍມັນ ຈະເຮັດໃຫ້ ເຮົາໄດ້ຄວາມ ເສັຽຫາຍຢ່າງໃດ ?



ໃຈຄວາມ.– ການດື່ມເຫລົ້ານັ້ນພາໃຫ້ເສັຽກຽດຕິຍົດ ແລະມັກເຈັບ ເປັນທັງເສັຽຊັບສິນດ້ວຍ. ເຫລົ້າເປັນຂອງເບື່ອເມົາ ສະນັ້ນ, ເຮົາຈຶ່ງບໍ່ຄວນຫັດດື່ມມັນເລີຍ.

ສັບ.– ຄົນຂີ້ເຫລົ້າ

ນາມ : ເຫລົ້າ, ຕາ, ຖນົນ, ຕັບ, ເຄື່ອງນຸ່ງ, ໂຮງເຫລົ້າ.

ຄຸນນາມ : ແດງ, ຮ້າຍ, ຈ່ອຍ.

ກິຣິຍາ : ເວົ້າ, ຍ່າງ, ເຊົາ, ຈົມ.

ໄວຍາກອນ.– ຕົວສະກົດ ແມ່ນພຍັນຊນະຕົວທ້າຍພຍາງ ຊຶ່ງບໍ່ມີ ສອະປະສົມປູນຳ ຕົວຢ່າງ; ກາກ, ກາງ, ກອນ, ກິນ, ກຸມ, ກາຍ ຕົວ ກ. ງ. ນ. ມ. ຍ. ທີ່ຢູ່ທ້າຍແມ່ນຕົວ ສະກົດ. ຕົວສະກົດນັ້ນມີດັ່ງນີ້ :

ກ) ຕົວສະກົດທັມດາມີ ໘ ຕົວ ຄື ; ກ. ງ. ດ. ນ. ບ. ມ. ຍ. ວ. ຕົວຢ່າງດັ່ງນີ້ :

ກັກ. ກັງ. ກັດ. ກັນ. ກັບ. ການ. ກາຍ. ກາວ.

ຂ) ຕົວສະກົດພິເສດແມ່ນພຍັນຊນະຕົວອື່ນ ທີ່ໃຊ້ ສະກົດແທນຕົວສະກົດທັມດາໄດ້ ຄື ; ຂ.ຄ. ແທນ ຕົວ ກ.

| | | |
|---|---|---|
| ຕົວ | ຈ.ສ.ຊ.ດ.ຖ.ທ. | ແທນຕົວ ດ. |
| " | ອ.ລ. | " ນ. |
| " | ປ.ພ.ຟ. | " ບ. |

ຕົວສະກົດພິເສດນີ້ໃຊ້ໄດ້ແຕ່ຢູ່ໃນກາງຄຳດັ່ງນີ້ ;

ຄ.ຊ. ອັຄອາຊຸຫຸດ ອ່ານວ່າ ອັກຄະອາດຊະຫຸດ
ຈ. ກິຈການ " ກິດຈະການ
ລ. ພາລຊົນ " ພານລະຊົນ
ປ. ບາປກັມ " ບາບປະກັມ

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້; ກຽດຕິຍົດ, ເສັ້ນ ປະສາດ, ດາບບ້ອນ, ຊັບສິນ.

ຄຳເຄົ້າດຽວກັນ.– ເຊົາ : ຊົວ, ຊ້າ. ເວົ້າ : ວ່າ, ວາຈາ, ວາຈີ ດົ້ນ : ດຸດ.

ແຕ່ງເລື່ອງ.– ຈົ່ງແຕ່ງເລື່ອງກົບຂີ້ເຫລົ້າຜູ້ນຶ່ງ.

---

# ໑໗. ຄົນຂີ້ປາ

ພໍ່ແຕ່ຫລຽວເຫັນຕາກ່ຳ ກໍຮູ້ໄດ້ວ່າ ລາວເປັນຄົນຕິດປາຝິ່ນ ແລ້ວ. ເພາະໄດ້ສອງສາມປີມານີ້ ປາຝິ່ນເຮັດໃຫ້ລາວເສັຽຮູບຊົງໄປ ຫມົດ. ແຕ່ກ່ອນ, ຕາກ່ຳເປັນຄົນແຂງແຮງ, ດຽວນີ້, ລາວຈ່ອຍໄ ຫນ້າດານ້ານ ແລະບຶດ ດັງຕົວກໍ່ຫລ່າເຫລືອງສຽງປາກສັ່ນເຄືອ ເນື້ອຫນັງຫ່ຽວແຫ້ງ, ແຕ່ກ່ອນ, ລາວເປັນຄົນຫມັ້ນ ດຽວນີ້ ກໍເລີຍ ເປັນຄົນຄ້ານໄປ. ມື້ເຊົ້າ ກ່ອນຈະລຸກຈາກບ່ອນໄດ້ລາວຈຳເປັນຕ້ອງ ສູບຝິ່ນປາງນ້ອຍສິບຫ້າປົດເສັຽກ່ອນ ຈະວ່າຕາກ່ຳເປັນຂ້ອຍປາຝິ່ນກໍ ໄດ້, ເພາະຖ້າຮອດຍາມເງັ່ນມາແລ້ວ, ລາວຕ້ອງປະຖຽກການຫມົດ





ທຸກສິ່ງ. ທຸກປາງ ເພື່ອໄປສູບຝິ່ນ.

ປາຝິ່ນເປັນຂອງເບື່ອສູບຕິດປາງຮ້າຍແຮງ, ມັນເຮັດໃຫ້ເສັຽ ເວລາ, ເສັຽເງິນຄຳຊັບສິນ, ເສັຽບົດສັກ, ເສັຽສະຕິປັນຍາ, ເສັຽກຳລັງກາຍ ກຳລັງໃຈ ຕລອດເຖິງເປັນຕົ້ນເຫດຄວາມເຈັບໄຂ້ໄດ້ປ່ວຍຕ່າງໆ ອີກນຳ.

ດັ່ງນັ້ນ ເຖິງປາກຮູ້ຈັກອິດປາຝິ່ນປານໃດ ກໍບໍ່ຄວນລອງຊີມ ສູບເລີຍ.

ຄຳອະທິບາຍ.– ຮູ້ : ຊາບ. ເສັຽຮູບຊົງ : ເສັຽຮູບພັນ, ເສັຽສີ. ເງັ່ນ : ຫິວປາກສູບຈົນເຫລືອຈະອົດຈະທົນໄດ້. ບົດສັກ : ຊື່ສຽງ. ກຳລັງໃຈ : ເຫື່ອແຮງທາງໃຈ.

ຄຳຖາມ.– ໑.– ແຕ່ກ່ອນຕາກ່ຳເປັນຄົນແນວໃດ ? ດຽວນີ້ເດ ? ໒.– ເປັນດ້ວຍເຫດໃດເພິ່ນຈຶ່ງວ່າ ຕາກ່ຳເປັນຂ້ອຍ ຢາຝິ່ນ ? ໓.– ປາຝິ່ນເປັນຂອງແນວໃດ ? ໔.– ມັນ

ເຮັດໃຫ້ຄົນເຮົາເສັຽຫຍັງແດ່ ? ๕.– ຖ້າບໍ່ປ້ານເປັນຄົນ
ປາກິດາກໍ່ຕ້ອງເຮັດແນວໃດ ?

ໃຈຄວາມ.– ຢາຝິ່ນເປັນຂອງເບື່ອ. ຖ້າຜູ້ໃດສູບຕິດຈະທຳໃຫ້ເສັຽ
ຊີງ, ຊັບສິນ, ກຽດຕິຍົດແລະສະຕິປັນຍາ. ສະນັ້ນ, ເ
ຈຶ່ງບໍ່ຄວນສູບຢາຝິ່ນ, ເຖິງວ່າເຮົາຢາກຮູ້ຣົດຂອງມັນປາ
ໃດກໍດີ.

ສັບ.– ຄົນຂີ້ຢາ

ນາມ : ປີ້, ຢາຝິ່ນ, ເງິນ, ພຍາດ.

ຄຸນນາມ : ຫ່ຽວ, ຈ່ອຍ, ຫມັ່ນ.

ກິຣິຍາ : ຕິດ, ປະ, ສູບ, ຊື້ນ.

ໄວຍາກອນ.– ສຣະ ສຳລັບຊ່ວຍປະກອບກັບພຍັນຊນະ ດັ່ງພຍາ
ເພື່ອໃຫ້ອ່ານອອກສຽງໄດ້ ສຣະທັງຫມົດ ເມື່ອປະກອ
ກັບພຍັນຊນະແລ້ວນັ້ນ ລາງສຣະກໍ່ປູ່ຫນ້າ, ລາງສ
ກໍ່ປູ່ຫລັງ ແລະລຸ່ມ, ປູ່ເທິງກໍ່ມີ ດັ່ງນີ້ :

ກ) ຈຳພວກປູ່ຫນ້າ ແມ່ນສຣະ ເ×, ແ×, ໂ×, ໄ×, ໃ

ຂ) " ຫລັງ " ×ະ, ×າ, ×ອ, ×ວ, ×

ຄ) " ເທິງ " ×ັ, ×ໍ, ×ິ, ×ີ, ×ຶ, ×ື, ×

ງ) " ລຸ່ມ " ×ຸ, ×ູ

ສຣະທຸກຕົວ : ປະກອບກັບພຍັນຊນະ ດັ່ງພຍາງສເນີ
ນີ້ : ພູ, ເພ, ປີ, ເດືອນ, ເວລາຖ້າຫາກແມ່ນ



ສອນນຳ ສຣະນັ້ນປະກອບກັບພຍັນຊນະ ດັ່ງທີ່ສອງສເນີ
ດັ່ງນີ້ : ສໄນ, ພຍາ, ຂນານ, ສເນີ, ຂວາ, ຄວາຍ,
ຂວານ ຯລຯ

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຫລ່ຽວເຫັນອົດ,
ຮູບຊົງ, ເຫລືອງ, ຫ່ຽວແຫ້ງ, ສູບຝິ່ນ.

ຄຳເກົ່າກ່ຽວກັນ.– ຫ່ຽວ : ແຫ້ງ, ຫຸບ. ແດ່ກ່ອນ : ແດ່ເກົາ,
ແດ່ກີ້.

ແຕ່ງເລື່ອງ.– ຈົ່ງແຕ່ງເລື່ອງຄົນກິນຢາຝິ່ນຜູ້ນຶ່ງ.

---

# ໑໙. ງານແລະບຸນຕ່າງໆ
## ໃນສິບສອງເດືອນ

ພໍເມື່ອເດືອນຈຽງອື່ນ ຖຶງເຂດຣະດູໜາວ
ຫລຽວເຫັນອີວນີວເຫນືອຍ ຫມອກມົວມຸງພື້ນ
ເລັງແລເອົາ ໃບນາເຫລືອງແກ່
ພວກຊາວນາຊູ່ກຳ ພຽງພ້ອມກ່ຽວກອງ.
ເມື່ອງເມື່ອ ເດືອນບີ່ ຕັ້ງ ອົບແກ່ໃຮນລານ
ເສັດແລ້ວເລີຍເພລອນ ຟາດຕີດົງສ່ຽງ
ລາງກໍ່ ທຳບຸນເຂົ້າ ຄູນລານ : ບົນມ່ວນ
ພ້ອມພາຍແລ້ວ ຂົນອື່ນໃສ່ເຍັ້ງ



| | |
|---|---|
| ແຕ່ນັ້ນ ອີກແລນຕ້ອງ | ສັດພິດ ເດືອນສາມ |
| ເປັນຣະດູເດີມ "ບຸນ– | ມາກະ" ເຮົາໂລມສ້າງ |
| ບາງພ່ອງ ພາກັນດັ້ງ | ບຸນທານປັ້ນເຂົ້າຈີ |
| ປະເພນີ–ແຕ່ເກົ່າ | ເຮົາສ້າງສືບມາ ເຈົ້າເອີຍ |
| ຫນ້ອຍນຶ່ງ ເລີຍບໍ່ຊ້າ | ເດືອນສີ່ ກໍ່ມາເຖິງ |
| ສຸຣິໂຍເບື້ອງແສງ | ສ່ອງໄສແສນຮ້ອນ |
| ລາງອາຣາມຕັ້ງ | ກອງບຸນມະຫາຊາດ |
| ຄະອາວາດຜູ້ບໍ່ຄ້ານ | ຂບັນສ້າງໄຮ່ສວນ |
| ພໍ່ເມື່ອ ເດືອນຫ້າ ຂຶ້ນ | ຣີບຮ່ອນໄຮທີ່ນີ |
| ນັບເປັນ ປາງ ບຸນປີ | ໃຫມ່ລາວເຮົາຮ້ອງ |
| ສນຸກທານ ສນຸກຫລິ້ນ | ສນຸກກິນສນຸກທ່ຽວ |
| ສນຸກສົງພຣະເຈົ້າ | ສນຸກສ້າງກໍ່ພະທາຍ |



| | |
|---|---|
| ຟັງບຶນບຶນຄືນຟ້າ | ຮ້ອງຮໍ່າ ເດືອນຫົກ ພຸ້ນເປີ |
| ກີກູ້ເທພານາຍ | ປ່ອງທວານເທນ້ຳ |
| ກ້ອນວ່າ ເດືອນເພັງພ້ອມ | ບູຊາວິສາຂະນາດ |
| ບຸນບັ້ງໄຟ ມ່ວນເພັງ | ຫລວງສ້າງສົງເສີມ |

ຄຳອະທິບາຍ.– ເພັງ : ເລົ້າເອົ້າ. ປະເພນີ : ຮີດຄອງເກົ່າຮີດຄອງແຕ່ ໃດ ໆ ມາ. ສຸຣິໂຍເບື້ອງແສງ : ດາວັນສ່ອງແສງ. ອາຣາມ : ວັດ. ບຸນມະຫາຊາດ : ບຸນພຣະເວດ. ກີກູ້ເທພ່ານາຍ: ກີເທວະດາໃຊ້ປ່ອງປະຕູນ້ຳ. ບູຊາວິສາຂະນາດ : ບຸນວຽນ ທຽນເພັງເດືອນຫົກເປັນວັນກົງກັນກັບວັນເກີດ, ວັນຕັສຮູ້, ວັນຕາຍຂອງພຣະພຸທເຈົ້າ

ຄຳຖາມ.– ໑.– ໃຫ້ບອກປະຈຳເດືອນທັງຫົກມາເດືອນລະບຸນ ?

໒.– ບຸນໃນເດືອນທັງຫົກ ເຈົ້າເຫັນບຸນຫຍັງແດ່ທີ່ມ່ວນກວ່າຫມູ່ ຫລືມີຄົນໄປມ່ວນຊື່ນຫລາຍກວ່າຫມູ່ ?

໓.– ເພິ່ນທຳບຸນນັ້ນເພື່ອປໂຍດປາງໃດ ?

ໃຈຄວາມ.– ເດືອນຈຽງ ແມ່ນເຂດ ຣະດູຫນາວ ເປັນຍາມ ຊາວນາ ກ່ຽວເຂົ້າ, ເດືອນຍີ ຂົນເຂົ້າ ໂຮມລານ ຟາດຕີ ເອົາເມັດ ທຳບຸນຄູນລານ ຂົນເຂົ້າໃສ່ເລົ້າ, ເດືອນສາມ ເປັນ ຍາມ ທຳບຸນພຣະເວດ, ເດືອນສີ່ເປັນບຸນມະຫາຊາດເປັນຍາມສ້າງໄຮ່ສວນ, ເດືອນຫ້າເປັນປາງບຸນປີໃຫມ່ລາວມີຄວາມສນຸກ

ທຸກປາງ, ເດືອນຫົກເປັນປາງບຸນບັ້ງໄຟມີຄວາມຊື່ນມ່ວນ.

ສັບ.— ງານແລະບຸນລາວ.

ນາມ : ຊາວນາ, ຫມວດ, ລານ, ປະເພນີ, ແສງ, ສອນ.

ຄຸນນາມ : ຫນາວ, ເຫລືອງ, ມືດ, ຮ້ອນ, ມ່ວນ.

ກິຣິຍາ : ຫລຽວເຫັນ, ນຸງ, ກຽວ, ຟາດ, ສ່ອງ.

ໄວຍາກອນ.— ສຣະ ×ະ ມີວິທີໃຊ້ດັ່ງນີ້ :

ກ) ຖ້າເປັນຄຳຈຳພວກອັກສອນຈູງ ແລະຄຳທີ່ໃຊ້ຕົວສະກົດພິເສດຊຶ່ງຢູ່ໃນພຍາງຄຳບໍ່ໃຫ້ຂຽນຮູບ ×ະ ໄວ້ນຳ ແຕ່ໃຫ້ອ່ານອອກສຽງ ×ະ ດັ່ງນີ້ ;

ບຍາ ອ່ານວ່າ ບະຫຍາ ; ວິທຍາ ອ່ານວ່າ ວິດທະຍາ
ສນອນ " ສະຫນອນ ; ສຸຂພາບ " ສຸຂະພາບ
ສລາ " ສະລາ ; ອາຊກາບ " ອາຊະກາບ
ສນານ " ສະຫນານ ; ຈິດກຳ " ຈິດຕະກຳ
ພຍາບາດ " ພະຍາບາດ; ພິລເມືອງ " ພິລະເມືອງ

ຂ) ສຣະ ×ະ ທີ່ເປັນຮູບ ×ັ ຖ້າແມ່ນຕົວ ນ ສະກົດອອກສຽງຄືສຣະ ×ໍ ດັ່ງ ບຸນກັນ ອ່ານວ່າ ບຸນກຳ ຖ້າແມ່ນຕົວ ຍ ສະກົດອອກສຽງຄືສຣະ ໄ× ດັ່ງ ສມັຍ ອ່ານວ່າ ສະໄຫມ.



ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສັດພືດ, ນຸງພື້ນ, ໂຮມລານ, ສນຸກຫລິ້ນ, ສຸຣິໂຍ, ຄະອາວາດ, ບຸນບັ້ງໄຟ.

ບົດຂຶ້ນໃຈ.— ໃຫ້ນັກຮຽນທ່ອງຂຶ້ນໃຈຕາມບົດທີ ໑໙ ຫນ້າ ໕໕ – ໕໖

ຄຳເຄົ້າດຽວກັນ.— ຄຸງ : ຄາ, ຄ້າງ. ສຸຣິໂຍ : ສຸຣິເຍດ, ສຸຣິຍະ.

ແຕ່ງເຮືອງ.— ໃຫ້ເຈົ້າແຕ່ງເຮືອງ ບຸນພຣະເວດທີ່ເຈົ້າໄດ້ໄປເຫັນເພິ່ນທຳບຸນນັ້ນ ເຮັດແນວໃດ ? ແລະເພື່ອປໂຍດແນວໃດ ?

# ໒໐. ງານບຸນຕ່າງໆ
## ໃນສິບສອງເດືອນ



ເຖິງເມື່ອ ເດືອນເຈັດຟ້າ      ຝົນເຮັ່ງຮວາຍຮ່ຳ
ທຸກທົ່ວ ໃນນາຈັດ      ດາດໄຖນາຍກ້າ
ເປັນທີ່ບິນກິດ້ວຍ      ຝົນລົງກ້າແກ່
ທຸກທົ່ງລ້ວນ      ຫລົກແລ້ວເລົາດຳ
ຖັດນັ້ນ ເດືອນດ່ວນດັ້ນ      ເຖິງແປດເພັງໃສ
ຊາວຊົນເດົາດາທາ      ທູບທຽນທັ່ງບ້ານ
ໄປທອດ ຖວາຍສົງເຈົ້າ      ທັ້ງທຳທູບທົ່ວ
ແຮມຄ່ຳບົ່ງມາຮອດແລ້ວ      ສົງເຂົ້າພະວັດສາ
ພໍເຫັນ ເລື່ອນ ໆ ຟ້າ      ຟົດຟິດວາໃບພັ້ນເຍີ
ເດືອນເກົ້າ ຝົນລົນຊ້ຳ      ນາກຊຸ່ມນາບານເອື້ອນ
ເດືອນດັບນັ້ນ      ເຂົາທານເຂົ້າທ່
ປະດັບດິນທ່ຽງແທ້      ທານໃຫ້ເພື່ອຜູ້ຕາຍ
ດັ່ງວ່າ ກາຍເຂດເກົ້າ      ສິບເລົ່ານາແຖມ
ເປັນຣະດູດິບດຳ      ໄຮ່ນາດາຊຸແລ້ວ
ເດືອນສິບ ເພັງພຽງເທົ້າ      ທຳທານເຂົ້າສລາກ
ເປັນຮີດເບື້ອງ      ບູຮານສ້າງແຕ່ໃດ.
ເດືອນສິບເອັດລ່ວງໄດ້      ເຖິງທີ່ວັນເພັງ
ເປັນຣະດູບຸນສົງ      ອອກວັດສາເຮົາເອີ້ນ
ວັນນັ້ນ ມີກາບຫລີ້ນ      ນາ ໆ ຫລາຍປາງ
ທັ້ງທາງ ບົກແລະນ້ຳ      ສນຸກຫລີ້ນຊື່ນໃຈ
ກໍ່ຫາກ ເປັນຮີດໄວ້      ແລ່ນແຕ່ປາງປະຖົມ



ບູຮານເຮົາ      ທ່ອນໄລລາເວັ້ນ
ອີກກໍ່ ພາກັນສ້າງ      ກະຖິນທານການໃຫຍ່
ສິບສອງ ເພັງພໍໄດ້      ເຊົາຫັ້ນເຂດກະຖິນ.
ພໍວ່າ ສິ້ນເຂດນັ້ນ      ເລີບໄລ່ບຸນສເລີມ
ທາດຫລວງມີ      ຊູ່ປີປາງປີ້ນ
ເປັນທີ່ ບິນສນຸກແທ້      ເຫລືອງທາງເທດກ່າວ
ຝູງຫມູ່ຊາວ ປະເທດໄກ້      ໂຮມຫັ້ນເທົ່ງຖຽວເຈົ້າເອີຍ

ຄຳອະທິບາຍ.— ນາຍກ້າ : ດົກກ້າ, ວ່ານກ້າ. ເດົາດາ : ດົກແຕ່ງ. ຟົດຟິດວາໃບ : ລົມປົ່ນໄປ. ດາຊຸແລ້ວ : ໃກ້ຊຸແລ້ວ. ເປັນຮີດໄວ້ : ເປັນທັມນຽມມາ. ປາງປີ້ນ : ປາງນ່ວນຫລາຍ.

ຄຳຖາມ.— ໑.— ຊາວນາຕັ້ງຕົ້ນທຳນາເດືອນຫຍັງ ? ໒.— ເດືອນແປດເພັງ, ເພີ່ນເຮັດບຸນຫຍັງ ? ເດືອນເກົ້າດັບເດ ? ເດືອນສິບເພັງເດ ? ເດືອນສິບເອັດເພັງເດ ? ໓.— ບຸນກະຖິນເພີ່ນທອດເດືອນໃດ ? ໔.— ບຸນທາດຫລວງເດ, ເພີ່ນເຮັດເດືອນໃດ ?

ໃຈຄວາມ.— ເດືອນເຈັດເປັນຣະດູທຳນາ, ເດືອນແປດເພັງ ເປັນວັນທ້າງແຕ່ງເຂົ້າວັດສາ, ເດືອນເກົ້າດັບເພີ່ນທານເຂົ້າປະດັບດິນທານຫາຜູ້ຕາຍ, ເດືອນສິບເພັງເປັນວັນບຸນ

ເຂົ້າສລາກ, ເດືອນສິບເອັດເພັງເປັນວັນບຸນອອກວັດສາ.
ກາງເດືອນສິບສອງມີບຸນທອດກະຖິນ ແລະມື້ເພັງມີບຸນ
ສເລີມພຣະທາດຫລວງ.

<u>ໄວຍາກອນ</u>.— ສຣະ ໃ× ໃຊ້ໃນຄຳຕໍ່ໄປນີ້ : ໃກ້ ໃຄ ໃຄ່ ໃຈ ໃຈ້
ໃຊ່ ໃຊ້ ໃຫຍ່ ໃດ ໃນ ໃບ ໃບ້ ໃຕ ໃຕ້ ໃຝ່
ໃຝ ໃພ້ ໃສ ໃຫມ່ ໃຫ້ ໃຫລ ໃບ ໃຮ່

ຕົວຢ່າງ :

ບ້ານໃກ້ ຫົວສີໃຄ ຄົນໃຄ່ ຫົວໃຈ ປີໃຈ້ ເພິ່ນໃຊ້ ບໍ່ໃຊ່
ບ້ານໃຫຍ່ ຄົນໃດ ໃນເຮືອນ ໃບໄມ້ ຄົນໃບ້ ທິດໃຕ້ ຕັບໃຕ
ຂອງໃຝ ລູກໃພ້ ປູໃສ ເອົາໃສ່ ຜ້າໃຫມ່ ເອົາໃຫ້
ຫລັ່ງໃຫລ ໃບບົວ ໃຝ່ຝັນ ຂີ້ໃງ່ ປັບໃຫມ ນາໃຮ່ນຶ່ງ

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ບຸນເຂົ້າວັດສາ, ບຸນເຂົ້າສລາກ, ປະດັບດິນ, ອອກວັດສາ, ສເລີມພຣະທາດຫລວງ.

<u>ຄຳເຄົ້າດຽວກັນ</u>.— ໄປທອດ : ໄປທານ, ໄປຖວາຍ, ໄປເຄນ.

<u>ບົດຂຶ້ນໃຈ</u>.— ໃຫ້ຂຶ້ນໃຈເອົາຕາມບົດຮຽນທີ ໖໐ ໜ້າ ໕໙, ໖໐, ໖໑.

<u>ແຕ່ງເລື່ອງ</u>.— ຈົ່ງແຕ່ງເລື່ອງບຸນພຣະທາດຫລວງ ຫລືບຸນບ້ານເຈົ້າ.



# ໖໑. ວຽກການຂອງຊາວນາ

ທີ່ປະເທດລາວ, ໃນແຂວງນຶ່ງ, ວຽກການຂອງຊາວນາຕ່າງກັນຕາມບ້ານແລະຣະດູ. ຕາມທັມດາແທ້, ເດືອນຫົກແຮມຫລືເດືອນເຈັດອອກໃຫມ່, ຝົນຕົກນ້ຳຫຼັ່ງເຕັມທົ່ງນາດິນອ່ອນດີແລ້ວຊາວນາກໍລົງມືໄຖແລ້ວຄາດ, ລາງຄົນກໍຕົກກ້າພ້ອມ, ລາງຄົນສອງສາມມື້ລຸນຫລັງມາຈຶ່ງຕົກກໍມີ.

ກ້າໄດ້ເດືອນແລ້ວ ເຂົາເຈົ້າກໍພ້ອມກັນລົງມືດຳນາ, ການດຳນານັ້ນ ມັກມີແຕ່ແມ່ຍິງສ່ວນຫລາຍ, ພວກຜູ້ຊາຍເປັນຄົນໄຖແລະຄາດ. ເມື່ອນ້ຳນາບໍ່ມີ ເຂົາເຈົ້າກໍເອົາກະໂຊ້ສະນ້ຳໃສ່ທັງກອບຣະວັງປູສເມີເພື່ອບໍ່ໃຫ້ນ້ຳນານັ້ນແຫ້ງ.

ຄັນເຖິງເດືອນສິບສອງ ເຂົ້າເຫລືອງເຕັມນາແລ້ວ, ເຂົາເຈົ້າກໍພ້ອມກັນອອກໄປກ່ຽວທັງຍິງແລະຊາຍ, ປາຍຟ່ອນເຂົ້າໃຫ້ເປັນແຖວປູຕາມໃຮ່ນາ, ບາງທີເຂົາເຈົ້າກໍວານກັນມາຊ່ອຍຫລາຍ ໆ ຄົນກໍມີ ; ເວລາຟ່ອນເຂົ້າແຫ້ງແລ້ວກໍພ້ອມກັນມັດແລະຂົນມາກອງໄວ້ທີ່ລານ.

ຄັນແລ້ວ, ເຂົາເຈົ້າກໍພ້ອມກັນຟາດ ແລະວີເອົາແຕ່ເຂົ້າລ້ວນໆ ທັງເລືອກເອົາເຂົ້າທີ່ດີ ໆ ເກັບໄວ້ເຮັດເຂົ້າແນວຫລືເຂົ້າປູກສຳລັບໄວ້ປູກໃນປີຕໍ່ໄປອີກ. ເຂົ້າທີ່ຟາດແລ້ວກໍພາກັນຂົນມາໃສ່ເລົ້າໄວ້ເພື່ອກິນແລະຂາຍ.



ສ່ວນນາທີ່ເຂົາເຈົ້າກ່ຽວເຂົ້າອອກຫມົດແລ້ວນັ້ນ ເພື່ອບໍ່ໃຫ້ເສັຽປໂຍດ, ເຂົາເຈົ້າຍັງປູກຂອງກິນຕ່າງໆ ໃສ່ຄື: ຖົ່ວດິນ, ຖົ່ວຂຽວ, ຜັກບົ່ວ, ຜັກທຽມ, ຜັກກາດ, ຜັກຊີແລະຫມາກແຕງເປັນຕົ້ນ.

ຊາວນາເຮັດວຽກການດັ່ງນີ້ປູກັບນາບໍ່ໄດ້ຂາດ ນັບວ່າເຂົາເຈົ້າໄດ້ຄົ້ນເອົາຊັບໃນດິນ ສິນໃນນ້ຳ ຂຶ້ນມາເປັນປໂຍດແກ່ເຂົາເຈົ້າແທ້.

ຄຳອະທິບາຍ.– ອະດູ : ການ, ເວລາ. ທັນດາ : ຂອງເດີມ.

ຄວາມຈຳ.– ວານ : ຫານາຊ່ວຍໂດຍບໍ່ໃຫ້ຄ່າແຮງ.

ຄຳຖາມ.– ໑.– ໃນແຂວງນີ້ງວຽກການຂອງຊາວນາຄືກັນບໍ່? ໒.– ຕາມຄວາມຈິງແລ້ວ ເພິ່ນ ເຄີຍ ໄຖ່ນາ, ດຶກ ກ້າເດືອນໃດ? ໓.– ການດຳນາສ່ວນຫລາຍແມ່ນໃຜດຳ? ໔.– ເພິ່ນກ່ຽວເຂົ້າເດືອນໃດ ແລະເຮັດຢ່າງໃດແດ່? ໕.– ເມື່ອເຂົາເຈົ້າກ່ຽວເຂົ້າອອກຈາກໄຮ່ນາແລ້ວ ເຂົາເຈົ້າປູກຫຍັງໃສ່ດິນ?



ໃຈຄວາມ.– ຊາວນາລົງມືໄຖນາ, ແລະດຶກກ້າ ໃນເດືອນຫົກແຮມ ຫລືເດືອນເຈັດອອກໃຫມ່, ລາງຄົນໄຖນາແລ້ວດຶກກ້າພ້ອມ, ລາງຄົນໄຖນາແລ້ວ ສອງສາມວັນຈຶ່ງດຶກກ້າກໍມີ. ເມື່ອກ້າໄດ້ເດືອນແລ້ວ, ເຂົາເຈົ້າກໍພາກັນໄປດຳທັງຍິງແລະຊາຍ, ສ່ວນຫລາຍແມ່ຍິງເປັນຜູ້ດຳ, ຜູ້ຊາຍເປັນຜູ້ໄຖແລະຄາດ. ເມື່ອເດືອນສິບສອງເຂົ້າເຫລືອງດີແລ້ວ ກໍພ້ອມກັນກ່ຽວຂົນມາກອງໄວ້ທີ່ລານ ແລະຟາດຂົນນາໃສ່ເລົ້າ ເພື່ອກິນແລະຂາຍ. ສ່ວນນາທີ່ກ່ຽວເຂົ້າອອກຫມົດແລ້ວ, ເຂົາເຈົ້າກໍລົງເຄືອງປູກຕ່າງໆ ໃສ່ ເພື່ອບໍ່ໃຫ້ເສັຽປໂຍດຂອງດິນນາ.

ສັບ.– ວຽກການຂອງຊາວນາ.

ນາມ : ນາ, ໄຖ, ຄາດ, ກ້າ.

ຄຸນນາມ : ໃຫມ່, ເຫລືອງ.

ກິລິຍາ : ດຳ, ເກັບ, ປູກ, ກ່ຽວ.

ໄວຍາກອນ.– ສຣະ ໄ× ໃຊ້ຂຽນໃນຄຳລາວທັງຫມົດ ນອກຈາກຄຳສຣະ ໃ× ດັ່ງກ່າວໃນຂໍ້ ໕ ຄື: ໄປໄດ້, ຕົ້ນໄມ້, ງາໃຊ, ໄຖນາ ຯລຯ ນອກຈາກນັ້ນ ໃຊ້ຕາມຄຳທີ່ມາຈາກພາສາປາລີ ແລະສັນສະກລິດດັ່ງນີ້ :

ກ) ໃຊ້ໃນຄຳທີ່ມາຈາກສຣະ ×ິ ×ີ ເ× ໂ× ຄື :

| | | |
|---|---|---|
| ຕິຣະຕະນະ | ເປັນ | ໄຕຣັດນະ |
| ເດປິດະກະ | ,, | ໄຕປິດົກ |
| ອິສະວະຣະ | ,, | ໄອສວນ |
| ໄອສວັຣຄະ | ,, | ໄອສວັນ. |

ຂ) ຄຳທີ່ມາຈາກສຣະ ເ× ມີຕົວ ຍ ຢູ່ຫລັງຄື :

| | | |
|---|---|---|
| ອະສັງເຂຍຍະ | ເປັນ | ອະສົງໄຂ |
| ອະທິປະເຕຍຍະ | ,, | ອະທິປະໄຕ |

ຄ) ຄຳທີ່ມີສຣະ ×ະ ຕົວ ຍ ນຳຫລັງເພື່ອຢູ່ປາຍຄຳຄື

| | | |
|---|---|---|
| ວິນະຍະ | ເປັນ | ວິນັຍ |
| ສະນະຍະ | ,, | ສໄນ |

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຜົນດົກ, ບ້າຫົ່ງ

ເດັນທົ່ງນາ, ເຂົ້າຫລືອງ, ຝອນເຂົ້າ, ໂຮມລານ.

ຄຳເຄົ້າດຽວກັນ.– ແຖວ : ຖັນ, ຖ້ວນ, ຖີ່.

ແຕ່ງເຣື່ອງ.– ຈົ່ງແຕ່ງເຣື່ອງພໍ່ນາຜູ້ນຶ່ງ.

---

# ໒໒. ລູກຕ້ອງເປັນຄົນສອນງ່າຍ

ເດັກທຸກຄົນ ຜູ້ເປັນລູກຂອງພໍ່ແມ່ ຕ້ອງພຍາຍາມເຮັດໃຫ້ ເພິ່ນຍິນດີ, ດີໃຈນຳນ້ອມກິຣິຍາວາຈາອັນຈົບດີຂອງຄົນ ແລະ





ຫມັ່ນ ປີ້ນ ປົວ ນົວອະນັດ ເພິ່ນ ຕາມ ຄວາມ ສາມາດ ດ້ວຍ ຄວາມ ເອົາໃຈໃສ່.

ແຕ່ພໍ່ແມ່ແຮ່ງຈະມີຄວາມຍິນດີກວ່ານັ້ນອີກ, ຖ້າວ່າເດັກຜູ້ເປັນລູກຫາກເຮັດໄດ້ດັ່ງຄວາມປະສົງຂອງເພິ່ນ. ດັ່ງນີ້, ກໍໃຫ້ຊື່ວ່າລູກ ໄດ້ ຕອບບຸນ ແທນ ຄຸນ ທີ່ ເພິ່ນ ໄດ້ ລ້ຽງ ມາ ແຕ່ນ້ອຍ ແລ້ວ ສ່ວນນຶ່ງ, ເຖິງຈະເຮັດອັນໃດກໍດີ, ຖ້າພໍ່ແມ່ຫ້າມແລ້ວ ລູກກໍບໍ່ຄວນເຮັດເລີຍ. ຫາກມີການໃດອື່ນໃຈລູກບໍ່ປາກເຮັດນັ້ນ, ເມື່ອພໍ່ແມ່ບອກແລ້ວ, ລູກກໍຕ້ອງເຮັດນຳໃຫ້ໄດ້ດັ່ງໃຈເພິ່ນ. ເດັກທັງຫລາຍ ຕ້ອງເຂົ້າໃຈວ່າຖ້າພໍ່ແມ່ຫ້າມປາມໃນການອັນໃດອັນນຶ່ງ ກໍເພື່ອປາກໃຫ້ລູກບໍ່ຕົກໄປສູ່ທາງຊົ່ວ. ຖ້າເພິ່ນບອກສອນໃນການອັນໃດອັນນຶ່ງ ກໍເພື່ອປາກໃຫ້ລູກໄດ້ດີນັ້ນເອງ, ປຽບດັ່ງຫມໍປາເພິ່ນຫ້າມຄົນໄຂ້ບໍ່ໃຫ້ເຮັດ, ບໍ່ໃຫ້ກິນຕາມໃຈມັນ ກໍເພື່ອປາກໃຫ້ເຂົາພົ້ນຈາກຄວາມຕາຍນັ້ນແລ.

ເດັກຄົນໃດ ບໍ່ເຊື່ອຟັງຄວາມສັ່ງສອນຂອງພໍ່ແມ່ ພາຍລຸນນາ ເດັກຄົນນັ້ນກໍ່ຈະມີຄວາມກິນແໜງ ແລະສ່ວນຫລາຍກໍ່ມັກຈະຕົກຊົ່ວເປັນແທ້ ດັ່ງນັ້ນ ເຮົາຄວນຈື່ສຸພາສິດບົດນີ້ໄວ້ວ່າ "ລູກບໍ່ຟັງຄວາມພໍ່ແມ່ນີແກ່ເອົາຫນ້ານາຣົກ" ເດັກນ້ອຍກໍ່ດັ່ງດຽວກັນ, ຖ້າບໍ່ຟັງຄຳສອນຂອງພໍ່ແມ່ແລ້ວກໍ່ອາດຈະກາຍເປັນຄົນຊົ່ວໄດ້.

<u>ຄຳອະທິບາຍ</u>.— ວາຈາ : ຄຳເວົ້າ. ຄວາມປະສົງ : ຄວາມຕ້ອງການ, ການປາກໄດ້. ກິນແໜງ : ເສັຽໃຈ. ດານໃຈ : ດານຄວາມຄິດຂອງຄົນ.

<u>ຄຳຖາມ</u>.— ໑.– ລູກຄວນທຳປານໃດກັບພໍ່ແມ່ ເພິ່ນຈຶ່ງຈະຍິນດີນຳ ? ໒.– ລູກເຮັດປານໃດກັບພໍ່ແມ່ ຈຶ່ງໄດ້ຊື່ວ່າໄດ້ແທນບຸນຄຸນເພິ່ນ ? ໓.– ຄັນຖ້າພໍ່ແມ່ຫ້າມແລ້ວລູກຄວນເຮັດບໍ່ ? ໔.– ເປັນດ້ວຍເຫດໃດ ? ໕.– ພໍ່ແມ່ຫ້າມປາມແລະບອກສອນລູກນັ້ນກໍ່ເພື່ອປະໂຍດອັນໃດ ? ໖.– ຖ້າລູກບໍ່ຟັງຄວາມສັ່ງສອນຂອງພໍ່ແມ່ພາຍລຸນນາຈະເປັນປານໃດ ?

<u>ໃຈຄວາມ</u>.— ລູກທຸກຄົນ ຕ້ອງເຮັດໃຫ້ພໍ່ແມ່ດີໃຈນຳ, ຕ້ອງປົນປົວບົວຣະບັດເພິ່ນ. ຖ້າເພິ່ນຫ້າມໃນການສິ່ງໃດສິ່ງນຶ່ງ ລູກບໍ່ຄວນເຮັດ. ເມື່ອເພິ່ນມີການຕ້ອງເຮັດໃຫ້ໄດ້ດັ່ງໃຈເພິ່ນ. ການທີ່ເພິ່ນຫ້າມ ແລະບອກສອນນັ້ນ ກໍ່ເພາະປາກໃຫ້ລູກໄດ້ດີ. ຖ້າລູກຄົນໃດບໍ່ຟັງຄວາມສັ່ງສອນຂອງພໍ່ແມ່ກໍ່ຈະກາຍເປັນຄົນຊົ່ວໄດ້. ເພາະເຫດນີ້ ລູກຕ້ອງເປັນຄົນສອນງ່າຍ.



<u>ສັບ</u>.— ລູກຕ້ອງເປັນຄົນສອນງ່າຍ.

<u>ນາມ</u> : ຄວາມສາມາດ, ເດັກ, ຄວາມປະສົງ, ຄວາມຕາຍ, ຫມໍ່ປາ.

<u>ຄຸນນາມ</u> : ດີໃຈ, ງ່າຍ, ຈົບດີ, ຊົ່ວ.

<u>ກິລິຍາ</u> : ບົວຣະບັດ, ລ້ຽງ, ຫ້າມ, ບອກສອນ.

<u>ໄວຍາກອນ</u>.— ສະຣະ ×ຳ ໃຊ້ໃນຄຳລາວທັງຫມົດ ຄືວ່າງ, ກຳມື, ທຳງານ, ຫມໍ່ລຳ, ດຳເຂົ້າ, ດັກນ້ຳ, ປ່າໄມ້, ດຳຊ້ຳ. ເປັນຕົ້ນ. ນອກນັ້ນກໍ່ໃຊ້ແທນ ×ັມ ເມື່ອຢູ່ປາຍຄຳ.

ວັນນະຍຸດ ×່ ×້ ×໊ ×໋ ດັ່ງກ່າວມາແລ້ວໃນຫມວດທີ ໓ ແຫ່ງບົດທີ ໑ ນັ້ນ ໃຊ້ສຳລັບປ່ຽນສຽງໃນເນື້ອສຳນຽງຄຳເວົ້າ ຫາກຕ່າງຈາກສຽງຂອງສະຣະແລະພຍັນຊນະເດີມອັນນະຍຸດນັ້ນ ລາວດັ່ງກໍ່ໃຊ້ໄດ້ທົ່ວໄປ ໃນອັກສອນທຸກຫມວດ ລາວດິວໃຊ້ໄດ້ຈຳເພາະອັກສອນບາງຫມວດ.

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ພຍາຍາມ, ບົວຣະບັດ, ປະສົງ, ຂືນໃຈ, ຫ້າມປາມ, ກິນແໜງ, ຄວາມສັ່ງສອນ.

<u>ຄຳເກົ່າດຽວກັນ</u>.— ຂືນ : ຂັດ, ຂ້ອງ. ຄຸນ : ຄຸນໃນ, ຄຸນບັງ. ຫ້າມ : ຫວງ, ແໜນ,

ແຕ່ງເຣື່ອງ.– ໃຫ້ເຈົ້າແຕ່ງເຣື່ອງເດັກສອນງ່າຍຜູ້ນຶ່ງ. ມັນປະພຶ
ຢ່າງໃດຕໍ່ພໍ່ແມ່ຂອງມັນ ?

---

## ໒໓. ການຫລິ້ນການພະນັນເປັນການຊົ່



ການຫລິ້ນການພະນັນ ຄື ການຫລິ້ນເອົາສິ່ງຂອງ ຫລືເງິ
ຂອງກັນແລະກັນ, ມີການໂບນຫລຸມ, ເບັ້ຍໂບກ, ໄພ້ແລະຖົ່ວເປັນຕົ້
ການຫລິ້ນການພະນັນເປັນການຊົ່ວຊາມຫລາຍ, ມັນເຮັດໃຫ້ເຮົ
ເສັຍຊັບສິນເງິນຄຳ ທັງເສັຍຍົດສັກ ແລະເສັຍຊື່ສຽງສູ່ທາງ. ນັກເລ
ພະນັນມີນ້ອຍຄົນເຕັມທີທີ່ຈະພົ້ນຈາກຄວາມທຸກຍາກ. ຄົນໄປເອົ
ກໍອາດຈະເປັນຄົນບໍ່ມີຄວາມສັດແລະເຊື່ອຖືບໍ່ໄດ້. ການພະນັນເປັ
ທາງຈິບຫາບ, ກິນຫລິ້ນ, ລາງເທື່ອໄດ້ນ້ອຍເທື່ອຫລາຍ. ເວລ



ຫລິ້ນໄດ້ ເຂົາກໍມັກຈ່າຍເງິນທີ່ບໍ່ແມ່ນພົນຂອງເຫື່ອແຮງເຂົາເອງນັ້ນ ໄປທາງອັປໂຍດໂດຍມີຄວາມເສັຍດາຍແຕ່ຫນ້ອຍ. ແຕ່ສ່ວນຫລາຍນັ້ນເສັຍຫລາຍກວ່າໄດ້. ຖ້າຊວຍລົງໄປແລ້ວ ກໍເປັນກົກເຄົ້າໃຫ້ມີຫນີ້ດົກດື່ນ, ອາດເຮັດໃຫ້ຂາຍເຮືອນ, ໄຮ່ນາກໍໄດ້. ລາງເທື່ອອາດເປັນຄົນຂີ້ລັກ ນັກປຸ້ນ ເອົາເຂົ້າຂອງ ເງິນຄຳ ຂອງໄທບ້ານ ໄທເມືອງ ກໍມີ ນັກເລງພະນັນ, ເຖິງຈະເປັນຜູ້ມີຍົດສັກ ມີຫນ້າທີ່ການສູງ, ຖ້າເຂົ້າໄປໃນວົງການພະນັນແລ້ວກໍເສັຍຍົດສັກ ແລະຈະຫາຜູ້ນັບຫນ້າຖືຕາໄດ້ຍາກ.

ເດັກທັງຫລາຍເອີຍ ! ສູເຈົ້າຢ່າໄດ້ຄົບກັບນັກເລງພະນັນເລີຍ ເພາະສູເຈົ້າອາດຈະຕິດຄວາມຊົ່ວຂອງເຂົາໄດ້ງ່າຍ ໆ.

ຄຳອະທິບາຍ.– ນັກເລງພະນັນ : ຜູ້ຫາກິນໃນທາງຫລິ້ນແຂ່ງຂັນ. ອັປໂຍດ : ບໍ່ມີປໂຍດ. ຊວຍ : ຫລິ້ນບໍ່ໄດ້, ມີແຕ່ທາງເສັຍໄປ. ການພະນັນ : ການແຂ່ງ, ການເສັງກັນ ຄືກັນກັບຫລິ້ນເບັ້ຍ, ຫລິ້ນໄພ້. ຫມານ : ຫລິ້ນໄດ້.

ຄຳຖາມ.– ໑.– ການ ຫລິ້ນ ການ ພະນັນ ຄື ການ ຫລິ້ນ ແນວ ໃດ ? ໒.– ການຫລິ້ນນັ້ນໄດ້ຜົນຢ່າງໃດ ? ໓.– ນັກເລງພະນັນຖ້າຊວຍລົງໄປແລ້ວ ມັນຈະເປັນຢ່າງໃດ ? ໔.– ເປັນດ້ວຍເຫດໃດເຮົາຈຶ່ງບໍ່ຄວນຄົບກັບນັກເລງພະນັນ ?

ໃຈຄວາມ.– ການຫລິ້ນການພະນັນນີ້ເປັນການຊົ່ວນັກ ມັນພາໃຫ້ເຮົາເສັຍຊັບສິນເງິນຄຳເສັຍຍົດສັກ ແລະຊື່ສຽງພາໃຫ້ຕົກ

ຫາກໄດ້ຍາກເປັນຫນີ້ເປັນສິນເຂົາ ລາງເທື່ອກໍອາດເປ
ຄົນຂີ້ລັກບັກປຸ້ນດ້ວຍ ເພາະເຫດນີ້ເຮົາບໍ່ຄວນຫລິ້ນກາ
ພະນັນເລີຍ.

ສັບ.– ການຫລິ້ນການພະນັນເປັນການຊົ່ວ.

ນາມ : ການພະນັນ, ເງິນ, ເບັ້ຍໂປກ, ໄພ້, ຖົ່ວ.

ຄຸນນາມ : ສູງ, ຂີ້ລັກ.

ກິລິຍາ : ຈ່າຍ, ຫລິ້ນ, ຄົບ, ເຮັດ.

ໄວຍາກອນ.– ຄຳພຍາງເປັນໃນຫມວດອັກສອນກາງ ໃຊ້ວັນນະຍຸ
ປະກອບໄດ້ທຸກຮູບ ດັ່ງຢ່າງ

| | | | | |
|---|---|---|---|---|
| ກາ | ກ່າ | ກ້າ | ກ໊າ | ກ໋າ |
| ບາ | ບ່າ | ບ້າ | ບ໊າ | ບ໋າ |
| ດາ | ດ່າ | ດ້າ | ດ໊າ | ດ໋າ |
| ກາງ | ກ່າງ | ກ້າງ | ກ໊າງ | ກ໋າງ |
| ການ | ກ່ານ | ກ້ານ | ກ໊ານ | ກ໋ານ |
| ກາມ | ກ່າມ | ກ້າມ | ກ໊າມ | ກ໋າມ |
| ກາຍ | ກ່າຍ | ກ້າຍ | ກ໊າຍ | ກ໋າຍ |
| ກາວ | ກ່າວ | ກ້າວ | ກ໊າວ | ກ໋າວ |

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຫລຸນ, ຊົ່ວຊາ
ຄວາມສັດ, ຫນາກ, ອັປໂຍດ, ບັກປຸ້ນ, ບິດສັກ, ບັກເລ

ຄຳເຄົ້າດຽວກັນ.– ປໂຍດ : ອັປໂຍດ, ປະໂຍຊະນະ.



ແຕ່ງເລື່ອງ.– ຈົ່ງແຕ່ງເລື່ອງ ຄົນທຸກຍາກຜູ້ນຶ່ງຍ້ອນການຫລິ້ນ
ການພະນັນມາໃຫ້ຟັງ.

---

# ໖໔. ຄວາມໂງ່ຊ້າ



ຊາຍຜູ້ນຶ່ງ ຊຶ່ງບໍ່ໄດ້ສຶກສາຮ່ຳຮຽນຫຍັງເລີຍ ໄດ້ເຫັນຜູ້ເຖົ້າຜູ້ນຶ່ງເຮືອນໃກ້ກັນ ໃສ່ແວ່ນຕາອ່ານຫນັງສື, ກໍຄິດວ່າແວ່ນຕາ ພາໃຫ້ອ່ານຫນັງສືໄດ້. ຊາຍຜູ້ນັ້ນກໍເຂົ້າໄປໃນເມືອງ ເພື່ອຫາຊື້ແວ່ນຕາມາໄວ້ໃຊ້.

ຄັນໄປຮອດຕຶກພໍ່ຄ້າຂາຍແວ່ນຕາແລ້ວ, ຊາຍຜູ້ນັ້ນກໍເອົາແວ່ນຕາມາໃສ່, ເປີດປຶ້ມອອກ, ວ່າຈະອ່ານເລື່ອງທີ່ຂຽນໄວ້ໃນປຶ້ມນັ້ນ, ແຕ່ອ່ານບໍ່ອອກ, ກໍເລືອກໃສ່ຄູ່ໃຫມ່ຕໍ່ໄປ, ແຕ່ກໍຍັງອ່ານບໍ່ໄດ້ຢູ່ຄືເກົ່າ,

ຈຶ່ງເວົ້າກັບພໍ່ຄ້າວ່າ "ແວ່ນຕາຂອງເຈົ້າມີແຕ່ຢ່າງບໍ່ດີ, ເອົາໃສ່ແລ້ວອ່ານຫນັງສືບໍ່ອອກ" ພໍ່ຄ້າແວ່ນຕາມີຄວາມປລາດໃຈຈຶ່ງຖາມວ່າ : "ເຈົ້າເຄີຍອ່ານຫນັງສືອອກມາແຕ່ກ່ອນ ໆ ບໍ່ ?" ຊາຍຜູ້ນັ້ນຕອບວ່າ : "ຖ້າຂ້ອຍຮູ້ຈັກອ່ານແລ້ວ ຂ້ອຍບໍ່ຕ້ອງມາຊື້ແວ່ນຕາເຈົ້າແລ້ວ." ພໍ່ ຄ້າ ຫົວ ຂວັນ ແລະ ບອກ ວ່າ ໃຫ້ ເຈົ້າ ໄປ ຫັດ ອ່ານ ຫນັງສືໃຫ້ໄດ້ກ່ອນ, ຖ້າເຈົ້າອ່ານຫນັງສືໄດ້ແລ້ວ ຄັນຕາເຈົ້າບໍ່ຮຸ່ງຈຶ່ງກັບມາຊື້ແວ່ນຕານຳຂ້ອຍໄປໃຊ້.

<u>ຄຳອະທິບາຍ</u>.— ສຶກສາ : ຮ່ຳຮຽນ. ປລາດ : ແປກ ໆ, ແຕກຕ່າງ, ຜິດປົກຕິ. ຊ້າ : ໂງ່, ຈ້າ, ບໍ່ມີປັນຍາ.

<u>ຄຳຖາມ</u>.— ໑.— ຄົນຜູ້ນັ້ນໄປເຫັນຫຍັງ ? ໒.— ລາວຄິດຢ່າງໃດຈຶ່ງເຂົ້າໄປໃນເມືອງ ? ໓.— ລາວເຮັດຢ່າງໃດແດ່ກັບພໍ່ຄ້າ ? ໔.— ລາວເວົ້າກັບພໍ່ຄ້າແນວໃດ ? ໕.— ພໍ່ຄ້າວ່າຫຍັງກັບລາວ ? ລາວຕອບວ່າແນວໃດ ? ໖.— ເຈົ້າຄິດເຫັນຄົນຜູ້ນີ້ເປັນຄົນຢ່າງໃດ ?

<u>ໃຈຄວາມ</u>.— ຄັນຖ້າບຸກຄົນຜູ້ໃດບໍ່ໄດ້ສຶກສາຮ່ຳຮຽນຄືຊາຍຜູ້ນີ້ ກໍຈະເປັນຄົນໂງ່ຊ້າ, ບໍ່ແມ່ນວ່າແວ່ນຕາພາໃຫ້ອ່ານຫນັງສືໄດ້ ເມື່ອຈະອ່ານຫນັງສືໄດ້ ກໍຕ້ອງໄປສຶກສາທີ່ໂຮງຮຽນ ຄົນໃດບໍ່ມີຄວາມຮູ້ກໍເຫມືອນຄົນຕາບອດ.

<u>ສັບ</u>.— ຄວາມໂງ່ຊ້າ.

<u>ນາມ</u> : ແວ່ນຕາ, ຕຶກ, ເຮືອນ, ຫນັງສື.

<u>ຄຸນນາມ</u> : ເຖົ້າ, ໃຫມ່.



<u>ກິລິຍາ</u> : ຮຽນ, ໃສ່, ຮອດ.

<u>ໄວຍາກອນ</u>.— ຄຳພຍາງຕາຍ ໃນພວກອັກສອນກາງໃຊ້ວັນນະຍຸດ ປະກອບໄດ້ແຕ່ x໊ ຕົວຢ່າງ :

| | | | | |
|---|---|---|---|---|
| ກະ | ກ໊ະ | ; | ແກະ | ແກ໊ະ |
| ໂຕະ | ໂຕ໊ະ | ; | ເຕາະ | ເຕ໊າະ |
| ກັກ | ກັ໊ກ | ; | ກິກ | ກິ໊ກ |
| ກັດ | ກັ໊ດ | ; | ກັບ | ກັ໊ບ |

ທີ່ຄະສຣະ (ທີ່ມີຕົວສະກົດ) ໃຊ້ໄດ້ແຕ່ x້ ຕົວຢ່າງ :

ກາກ ກ້າກ. ກາບ ກ້າບ. ກາດ ກ້າດ.

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສຶກສາ, ເປີດປຶ້ມ, ຄວາມປລາດໃຈ, ຫົວຂວັນ, ຫນັງສື, ແວ່ນຕາ.

<u>ຄຳເຄົ້າດຽວກັນ</u>.— ໂງ່ຊ້າ : ໂງ່ງ່າວ, ໂງ່ເງົາ, ໂງ່ຈ້າ.

<u>ແຕ່ງເລື່ອງ</u>.— ຈົ່ງແຕ່ງເລື່ອງ ຄົນໂງ່ຜູ້ນຶ່ງທີ່ບໍ່ຮູ້ອ່ານຫນັງສື.

---

## ໒໕. ວິຊາກັບສົມບັດຜູ້ດີ

ທ້າວອຸດົດ, ນອກຈາກຈະຮຽນວິຊາອື່ນ ໆ ເປັນທັມດາແລ້ວ, ຍັງພໍໃຈຮຽນເອົາກິລິຍາຜູ້ດີສ່ວນຫລາຍອີກ. ມື້ນຶ່ງມີຄົນຜູ້ນຶ່ງມາເວົ້າກັບລາວວ່າ "ເອົາເຂົ້າໂຮງຮຽນເພື່ອໃຫ້ໄດ້ວິຊາຫລາຍ ໆ, ເພື່ອສອບເສັງໄດ້ແລ້ວ ຈະໄດ້ເຂົ້າເຮັດຣາຊການຊັ້ນສູງນຳຣັຖບານ ການ



ຮຽນທັມຈະຣິຍານັ້ນ ມີປໂຍດ
ຫນ້ອຍກວ່າວິຊາອື່ນ ໆ ຫລາຍ."
ທ້າວອຸຣິດຈຶ່ງຕອບວ່າ "ທີ່ເຈົ້າ
ວົ້າຜິດຫລາຍກວ່າຖືກ, ແມ່ນ
ແລ້ວ ເຂົ້າໃຈຮຽນກໍ່ເພື່ອຮຽນ
ວິຊາ, ວິຊາດີຈະເປັນທີ່ຮັກຫອມ
ແລະ ນັບ ຖື ຂອງ ຄົນ ທັງ ຫລາຍ
ໄດ້, ກໍ່ ແຕ່ ເມື່ອ ມີ ສົມບັດ ຜູ້ ດີ
ຊ່ວຍນຳທໍ່ນັ້ນ. ມີວິຊາດີ, ຖ້າ
ບໍ່ ມີ ສົມ ບັດ ຜູ້ ດີ ກໍ່ ຈະ ໃຊ້ ບໍ່ ໄດ້.
ກິລິຍາດີນັ້ນ ເປັນເຄື່ອງ ຄ້ຳຊູວິຊາ
ແລະບິດສັກໃຫ້ມີອາຍຸສູງ ແລະ
ຍັ່ງຍືນ.

ທຳອິດ ຫລາຍຄົນກໍ່ວ່າ
ທ້າວອຸຣິດເປັນຄົນປລາດ. ພາຍ
ລຸນມາ, ທ້າວອຸຣິດໄດ້ເປັນເຈົ້ານາຍຊັ້ນຜູ້ໃຫຍ່ແລ້ວເຂົາຈຶ່ງຮູ້ສຶກວ່າ
ທ້າວອຸຣິດຄິດຖືກ. ເດັກທັງຫລາຍຈົ່ງຈຳເອົາສຸພາສິດຕໍ່ໄປນີ້ :

ຄຳຄ່າລົ້ນ ອິດຂອດເປັນແຫວນ
ສີແສງສຸກ ເມື່ອມີຫົວແກ້ວ
ດີຄົນຮູ້ ວິຊາດີຫລາຍສິ່ງ
ກິລິຍາຊ່ວຍນຳ ຊູຂຶ້ນຈຶ່ງເຮືອງ ເຈົ້າເອີຍ.



ຄຳອະທິບາຍ.– ວິຊາ : ຄວາມ. ສົມບັດຜູ້ດີ : ມີຄວາມດີໃນຕົວ. ທັມຈະຣິຍາ : ຄວາມປະພຶດດີງາມ. ອັຖບານ : ຜູ້ຮັກສາປະເທດ.

ຄຳຖາມ.– ໑.– ນອກ ຈາກ ການ ຮຽນ ວິຊາ, ທ້າວ ອຸຣິດ ຮຽນ ເອົາ ຫຍັງອີກ ? ໒.– ຄົນຜູ້ນຶ່ງ ເວົ້າກັບລາວ ວ່າຢ່າງໃດ ? ໓.– ຄັນຖ້າເຮົາ ມີວິຊາດີ ຢາກໃຫ້ຄົນທັງຫລາຍ ຮັກຫອມ ແລະນັບຖື ຕ້ອງເຮັດຢ່າງໃດ ? ໔.– ຄັນຖ້າເຮົາບໍ່ມີສົມບັດຜູ້ດີຈະເປັນຢ່າງໃດ ?

ໃຈຄວາມ.– ບຸກຄົນຜູ້ໃດມີວິຊາດີ, ຖ້າບໍ່ມີສົມບັດຜູ້ດີກໍ່ຈະໃຊ້ບໍ່ໄດ້ ເພາະວ່າ ຄົນມີຄວາມຮູ້ເປັນທີ່ຮັກແລະນັບຖືຂອງຄົນທັງຫລາຍໄດ້ກໍ່ແຕ່ເມື່ອ ມີສົມບັດຜູ້ດີຊ່ອຍນຳທໍ່ນັ້ນ. ກິລິຍາດີນັ້ນ ເປັນເຄື່ອງຄ້ຳຊູ ວິຊາ ແລະ ບິດສັກ ໃຫ້ມີອາຍຸສູງແລະຍັ່ງຍືນ.

ສັບ.– ວິຊາກັບສົມບັດຜູ້ດີ.

ນາມ : ວິຊາ, ກິລິຍາ, ອັຖບານ, ທັມຈະຣິຍາ.

ຄຸນນາມ : ເປັນທີ່ຮັກຫອມ, ເປັນທີ່ນັບຖື.

ກິລິຍາ : ຊ່ອຍ, ໃຊ້, ຄ້ຳຊູ, ຮູ້ສຶກ.

ໄວຍາກອນ.– ຄຳ ພຍາງ ເປັນ ໃນ ຫມວດ ອັກສອນ ສູງ ແລະ ອັກສອນຕ່ຳ ປະກອບໄດ້ແຕ່ວັນນະຍຸດ ×່ ແລະ ×້ ດັ່ງນີ້ :

| | | | | | | |
|---|---|---|---|---|---|---|
| ອັກສອນສູງ : | ຂາ | ຂ່າ | ຂ້າ ; | ຂາມ | ຂ່າມ | ຂ້າມ |
| | ຂາງ | ຂ່າງ | ຂ້າງ ; | ຂາຍ | ຂ່າຍ | ຂ້າຍ |
| | ຂານ | ຂ່ານ | ຂ້ານ ; | ຂາວ | ຂ່າວ | ຂ້າວ |
| ອັກສອນຕ່ຳ : | ຄາ | ຄ່າ | ຄ້າ ; | ຄາມ | ຄ່າມ | ຄ້າມ |
| | ຄາງ | ຄ່າງ | ຄ້າງ ; | ຄາຍ | ຄ່າຍ | ຄ້າຍ |
| | ຄານ | ຄ່ານ | ຄ້ານ ; | ຄາວ | ຄ່າວ | ຄ້າວ |

ຄຳພຍາງຕາຍໃນໝວດອັກສອນຕ່ຳ ໃຊ້ວັນນະຍຸດປະກອບບໍ່ໄດ້.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສົມບັດ, ໝັ້ນຄາ, ອາຊຸການ, ປໄບດ, ພິດປລາດ, ແຫວນ.

ຄຳເຄົ້າດຽວກັນ.– ພາຍລຸ່ມ : ພາຍຫລັງ, ພາຍໜ້າ.

ແຕ່ງເຣື່ອງ.– ຈົ່ງແຕ່ງເຣື່ອງຄົນມີສົມບັດຜູ້ດີຜູ້ນຶ່ງ.

---

# ໒໖. ຕົວຢ່າງຄວາມຮັກບິດາມາດາ

ແຕ່ກ່ອນ, ທ້າວພຸອິທັດ, ເຈົ້າເມືອງຜູ້ນຶ່ງໃນປະເທດລາວ ເປັນຜູ້ຮັກບິດາມາດາຫລາຍ. ເຖິງເພິ່ນຈະມີຄົນຮັບໃຊ້ຢູ່ຫລາຍຄົນກໍ່ຕາມ, ແຕ່ເມື່ອຈະຮັບປະທານອາຫານເວລາໃດ, ເພິ່ນຍັງອຸດສາໄປບໍ່ພາເຂົ້າມາໃຫ້ມາດາຂອງເພິ່ນ ແລະຢູ່ຮັບໃຊ້ທຸກຢ່າງສເມີ.





ເວລາມາດາຂອງເພິ່ນປ່ວຍ, ເພິ່ນກໍ່ໄປຈັດແຈງຫາຢາມາໃຫ້ມາດາ, ຄອຍປົ້ນປົວບົວຣະບັດແລະນັ່ງເຝົ້າມາດາຢູ່ຈົນຮຸ່ງ.

ບໍ່ວ່າຍາມໃດ, ເພິ່ນກໍ່ປະຕິບັດມາດາຂອງເພິ່ນຢູ່ຢ່າງນີ້. ມາດາຂອງເພິ່ນມັກຕົກໃຈຢ້ານສຽງຟ້າຮ້ອງ. ເຂົາເລົ່າວ່າ ຖ້າທ້າວພຸອິທັດເຫັນວ່າ ຈະມີຟ້າຝົນລົມແຮງເມື່ອໃດ, ເພິ່ນກໍ່ມາຢູ່ຄຽງຂ້າງມາດາທຸກເມື່ອ, ເພື່ອໃຫ້ເປັນທີ່ອຸ່ນໃຈຂອງມາດາ. ເວລາເພິ່ນຈຳເປັນຕ້ອງຈາກມາດາໄປ, ເພິ່ນກໍ່ລາໄປໂດຍມີຄວາມເປັນຫ່ວງເຖິງມາດາຢູ່ເປັນນິດ. ກັບເວລາກັບຄືນຮອດເຮືອນແລ້ວ ເພິ່ນກໍ່ຟ້າວໄປຖາມຂ່າວຄວາມສຸກທຸກຂອງມາດາໃນທັນໃດ.

ຖ້າເຮົາອຸດສາບົວຣະບັດມາດາເຮົາ ດັ່ງທ້າວພຸອິທັດນີ້ກໍ່ຈະໄດ້ຊື່ວ່າ ເຮົາເປັນເດັກທີ່ຮັກແພງ ແລະນັບຖືບິດາມາດາຂອງເຮົາຢ່າງຍິ່ງ.

<u>ຄຳອະທິບາຍ</u>.– ຮັບປະທານ : ກິນ. ອົດສາ : ອົດທົນ. ປ່ວຍ : ໄຂ້, ເຈັບໄຂ້. ປະຕິບັດ : ບຳຣຸງ, ເບິ່ງແຍງ.

<u>ຄຳຖາມ</u>.– ໑.– ເປັນຫຍັງ ເພິ່ນຈຶ່ງສັ່ງສອນໃຫ້ເຮົາຮັກບິດາມາດາຂອງເຮົາ ? ເພາະເຫດໃດ ? ໒.– ເວລາບິດາມາດາຂອງເຮົາປ່ວຍໄຂ້, ເຮົາຕ້ອງເຮັດຢ່າງໃດ ? ໓.– ເວລາຈະມີຟ້າຝົນລົມແຮງ, ທ້າວພຸອິທັດເຮັດຢ່າງໃດ ? ໔.– ເຮົາຕ້ອງເຮັດຢ່າງໃດ ຈຶ່ງຈະໄດ້ຊື່ວ່າ ເຮົາເປັນເດັກທີ່ຮັກແລະນັບຖືບິດາມາດາ ?

<u>ໃຈຄວາມ</u> – ທ້າວພຸອິທັດນີ້ ເປັນຜູ້ຮັກແພງບິດາມາດາຫລາຍ ເພິ່ນຮັບໃຊ້ຄອຍປົນປົວ ບົວຣະບັດ ແລະ ປູຮັກສາບິດາມາດາປູສເມີ. ເວລາຈາກໄປ ເພິ່ນກໍລາຈາກໄປໂດຍຄວາມເປັນຫ່ວງ, ເວລາມາເຮືອນ ເພິ່ນກໍຖາມຂ່າວຄວາມສຸກທຸກຂອງບິດາມາດາ. ເຮົາທັງຫລາຍຄວນເອົາຕົວຢ່າງທ້າວພຸອິທັດ ຈຶ່ງຈະໄດ້ຊື່ວ່າ ເຮົາເປັນເດັກທີ່ຮັກແພງແລະນັບຖືບິດາມາດາຂອງເຮົາ.

<u>ສັບ</u>.– ຄວາມຮັກແພງບິດາມາດາ.

<u>ນາມ</u> : ບິດາມາດາ, ອາຫານ, ຝົນ, ລົມ.

<u>ຄຸນນາມ</u> : ຫລາຍ, ປ່ວຍ, ແຮງ.

<u>ກິຣິຍາ</u> : ໃຊ້, ຮ້ອງ, ຕົກ.



<u>ໄວຍາກອນ</u>.– ວິທີແປງອັກສອນ ແມ່ນການແປງສຣະ ແລະ ພຍັນຊນະໃຫ້ມີຮູບຕ່າງເກົ່າອອກໄປ ເພື່ອໃຫ້ຄວາມເວົ້າຄ່ອງແລະສະດວກໃນເວລາແຕ່ງຫນັງສື ມີລັກສນະດັ່ງນີ້ :

ສຣະ xະ ແລະສຣະທີ່ xະ ປຸບ່າຄື ເxະ, ແxະ, ເxາະ, ເxັຽະ, xົວະ (ເວັ້ນແຕ່ສຣະ ໂxະ) ເວລາມີຕົວສະກົດໃຫ້ແປງຮູບ xະ ເປັນ xັ ດັ່ງນີ້:

| | | | | |
|---|---|---|---|---|
| ກະ | + | ກ | ສະກົດເປັນ | ກັກ |
| ເກະ | + | ນ | ” | ເກັນ |
| ແກະ | + | ນ | ” | ແກັນ |
| ເກັຽະ | + | ນ | ” | ກັຽນ |
| ເກາະ | + | ກ | ” | ກັອກ |
| ກົວະ | + | ກ | ” | ກັວກ |

<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຮັບປະທານ, ເຝົ້າ, ປະຕິບັດ, ເປັນຫ່ວງ, ດ່ວວ, ປົບ, ຂ່າວ, ຄວາມສຸກ.

<u>ຄຳເກົ່າດຽວກັນ</u>.– ບິດາ : ບິດອນ, ປິດາ. ມາດາ : ມາດອນ, ມາຕາ. ແຕ່ກ່ອນ : ແຕ່ເກົ່າ, ແຕ່ກີ້.

<u>ແຕ່ງເຣື່ອງ</u>.– ໃຫ້ເຈົ້າແຕ່ງເຣື່ອງເດັກຜູ້ນຶ່ງ ທີ່ຮັກແພງບິດາມາດາຂອງມັນ.

# ໒໗. ຄົນເດີນທາງກັບຫມາ



ຊາຍຜູ້ນຶ່ງ, ຂີ່ມ້າເດີນທາງໄປທຸຣະເກືອບຈະຮອດບ້າ
ແຫ່ງນຶ່ງ ສຽງບາດຕີນມ້າເຮັດໃຫ້ຫມາຕົວນຶ່ງ ຊຶ່ງນອນປູ່ກາ
ທາງຕື່ນສະດຸ້ງຂຶ້ນ. ໃນທັນໃດນັ້ນ ຫມາກໍເຫົ່າແລະເຕັ້ນສວາບຂ
ມ້າ. ມ້າຕື່ນຕົກໃຈເລີຍຫອບໃຫຍ່ ! ຊາຍເດີນທາງເກີດໂທໂສຂ
ຈຶ່ງຮ້ອງໃສ່ຫມາວ່າ "ກູບໍ່ມີອາວຸດຈະຂ້າມຶງ, ແຕ່ອາວຸດໃນປາ
ຂອງກູມີຢູ່, ກູມີວິທີແກ້ແຄ້ນໄດ້ແນ່ນອນ."

ເມື່ອຮອດໃນບ້ານແລ້ວ, ຊາຍຄົນນັ້ນກໍຮ້ອງຂຶ້ນວ່າ "ຫມາວໍ້
ຫມາວໍ້ !" ພໍ່ເທບ້ານໄດ້ຍິນດັ່ງນັ້ນ ກໍພາກັນຖືຫລາວຖືກ້ອນແລ່
ມາຫລາຍຄົນ; ແລະທຸ້ມໃສ່ຫມາ ຂ້າມັນຈົນຕາຍ.

ຄຳປາກທີ່ເວົ້າອອກໄປເປັນຄວາມນິນທາສັບສໍ່ນັ້ນ ລາງເທື່
ອາດເປັນອາວຸດເຮັດໃຫ້ເສັຽຊີວິດໄດ້ຄັກກວ່າອາວຸດປືນເສັຽອີກ.



ຄຳອະທິບາຍ.— ທຸຣະ : ວຽກການ. ເກີດໂທໂສ : ເກີດໃຈຮ້າຍ.
ອາວຸດ : ເຄື່ອງປະຫານທີ່ໃຊ້ການປ້ອງກັນຫລືຕໍ່ສູ້.
ແກ້ແຄ້ນ : ແກ້ຄວາມທີ່ຂັດເຄືອງໃຈ. ນິນທາ : ເວົ້າຂວັນ
ສັບສໍ່ : ເວົ້າບົວະສອງຝ່າຍໃຫ້ຜິດກັນ.

ຄຳຖາມ.— ໑.— ເປັນຫຍັງຫມາຈຶ່ງເຫົ່າແລະໂດດໃສ່ມ້າ ? ໒.— ເປັນຫຍັງຄົນຂີ່ມ້າຈຶ່ງເກີດໂທໂສ ? ໓.— ລາວໃຊ້ອາວຸດຢ່າງໃດເພື່ອຈະແກ້ແຄ້ນຫມາ ? ໔.— ຄວາມນິນທາສັບສໍ່ອາດພາໃຫ້ເປັນຢ່າງໃດ ?

ໃຈຄວາມ.— ການທີ່ມ້າເຮັດໃຫ້ຫມາຕົວນັ້ນຕື່ນເຫົ່າ ເຕັ້ນສວາບຂາມ້າ ພາໃຫ້ຊາຍເດີນທາງເກີດໂທໂສ ຊອກວິທີແກ້ແຄ້ນຂ້າຫມາຈົນຕາຍດ້ວຍຄຳປາກ ອັນເປັນການບໍ່ດີ ເພາະວ່າຄວາມທີ່ເວົ້າອອກໄປນັ້ນເປັນຜິດ. ເພາະເຫດນີ້ເຮົາບໍ່ຄວນນິນທາແລະສັບສໍ່.

ສັບ.— ຄົນເດີນທາງກັບຫມາ.

ນາມ : ມ້າ, ບ້ານ, ທຸຣະ, ຫມາ, ອາວຸດ.

ຄຸນນາມ : ໃຫຍ່.

ກິຣິຍາ : ຫອບ, ແກ້ແຄ້ນ, ໄດ້ຍິນ, ແລ່ນ.

ໄວຍາກອນ.— ສຣະ ×ະ ໃນຄຳທີ່ມາຈາກພາສາປາລີຈະແປງເປັນສຣະຕ່າງໆກໍໄດ້ ຕົວຢ່າງດັ່ງນີ້ :

| | | | | | | |
|---|---|---|---|---|---|---|
| ×ະ | ເປັນ | ×າ | ດັ່ງ | ອະນາດ | ເປັນ | ອານາດ |
| ×ະ | „ | ×ິ | „ | ວະຊິອະ | „ | ວິຊຽນ |
| ×ະ | „ | ×ຸ | „ | ນັງຄະລະ | „ | ນຸງຄຸນ |
| ×ະ | „ | ×ົ | „ | ຊະນະ | „ | ຊົນ |
| ×ະ | „ | ເ×າະ | „ | ສັງຄະຫະ | „ | ສົງເຄາະ |
| ×ະ | „ | ×ອ | „ | ນະຄະອະ | „ | ນະຄອນ |
| ×ະ | „ | ×ໍາ | „ | ອະນາດ | „ | ອໍານາດ |
| ×ະ | „ | ເ×ົາ | „ | ສະວະນີ | „ | ເສົາວະນີ. |

ການສະກົດຄໍາ.– ໃຫ້ນັກຮຽນສະກົດຄໍາຕໍ່ໄປນີ້ : ເກືອບ, ສະເດັ
ອົ້ນ, ເຕັ້ນສວານ, ຫອບໄຫນ່, ອາວຸດ, ຫລາວ
ສັບສົ່, ຄັກກວ່າ.

ຄໍາເກົ້າກຽວກັນ.– ເທົ່າ, ຫອບ, ຮ້ອງ : ໃຮ, ຮິວ, ເຮີບ, ຮຽກ

ແຕ່ງເຣື່ອງ.– ໃຫ້ເຈົ້າແຕ່ງເຣື່ອງຮູປພັນຫມາຕົວນຶ່ງ.

# ໒໗. ບໍ່ຄວນຮ້າຍແລະຂົ່ມເຫງສັດ

ງົວຕົວນຶ່ງແກ່ກວຽນເຫລັ້ມນຶ່ງ. ມັນມີຄວາມອິດເມື່ອຍເຕັມ
ທີ. ອົ້ນເນີນກໍ່ຍາກເຫລືອທີ່ສຸດ, ເຖິງງົວຈະແກ່ກວຽນເຕັມກໍາລັງກ
ດີ, ກວຽນກໍ່ບໍ່ຍ້າຍໄປໄດ້, ເຫັນດັ່ງນັ້ນເຈົ້າຂອງກວຽນຈຶ່ງປູ່ງົວໄວ້
ລົງຈາກກວຽນມາລູບຄໍາອົ່ນອອຍງົວດ້ວຍຄໍາອ່ອນຫວານ. ເຫັນວ່າ





ງົວເຊົາເມື່ອຍແດ່ແລ້ວ, ລາວເອງກໍ່ມາຍູ້ກວຽນຊ່ອຍງົວ, ເມື່ອ
ກວຽນພົ້ນເນີນແລ້ວ, ກ່ອນຈະເດີນທາງຕໍ່ໄປ, ລາວກໍ່ປຸດພັກໃຫ້ງົວ
ເຊົາມີແຮງແລະລູບຄໍາມັນດື່ມອີກ.

ເຈົ້າຂອງກວຽນຜູ້ນີ້ ເປັນຄົນຮັກແພງສັດທີ່ເຮັດວຽກໃຫ້ຄົນ
ຫລາຍ, ນັບວ່າເປັນຜູ້ມີໃຈອີດູກຸນາຕໍ່ສັດ. ລາງຄົນ, ຖ້າຖືກຄືເຈົ້າ
ຂອງກວຽນຜູ້ນີ້ກໍ່ມີໃຈຮ້າຍຂາດຂັ້ນຕີສັດຂອງຕົນ ເປັນຄົນບໍ່ມີຄວາມ
ສົງສານຕໍ່ສັດຈັກຫນ້ອຍເລີຍ. ສັດກໍ່ຮູ້ຈັກອິດເມື່ອຍແລະເຈັບປວດເປັນ
ດືຄົນເຮົາ. ເຮົາໄດ້ເພິ່ງມັນໃຫ້ຊ່ອຍວຽກການອັນຫນັກ.

ດັ່ງນັ້ນ, ເຮົາຕ້ອງບົວຣະບັດເອົາໃຈມັນໃຫ້ດີ, ປາຂົ່ມເຫງໃຊ້
ວຽກເກີນກວ່າແຮງຂອງມັນຈົນເກີນໄປ.

ຄໍາອະທິບາຍ.– ອົ້ນເນີນ : ອົ້ນດອນ, ອົ້ນໃນນສູງ. ພົ້ນ : ພົ້ນໃນນ.
ກຸນາ : ອີດົນ. ຄວາມສົງສານ : ຄວາມອີດົນຊາດ.

ຄໍາຖາມ.– ໑.– ເປັນຫຍັງງົວຈຶ່ງອຶດເມື່ອຍ? ໒.– ເມື່ອງົວເມື່ອຍ ແລ້ວກວຽນເປັນຢ່າງໃດ? ໓.– ເຈົ້າຂອງກວຽນເຮັດຢ່າງ ໃດ ງົວຈຶ່ງຈະແກ່ກວຽນຂຶ້ນເນີນໄດ້? ໔.– ເປັນຫຍັງ ເຮົາຈຶ່ງບໍ່ຄວນຂ້າຕີຂົ່ມເຫັງສັດ ແລະ ເຮົາຄວນເຮັດແນວໃດ ຕໍ່ສັດ?

ໃຈຄວາມ.– ສັດພາຫນະກໍມີປໃຍດທຸກຄົວ ເພາະມັນຊ່ອຍເຫລືອ ເຮົາດ້ວຍເຫື່ອແຮງຂອງມັນ ໃນວຽກການຕ່າງໆ. ເພາະ ເຫດນີ້, ເຮົາບໍ່ຄວນຂ້າຕີຂົ່ມເຫັງມັນ. ເຮົາຕ້ອງຮັກແພງ ບົວຣະບັດມັນ, ໃຫ້ມັນກິນອີ່ມ, ຢູ່ບ່ອນສະອາດດີ.

ສັບ.– ບໍ່ຄວນບຽດບຽນສັດ.

ນາມ : ງົວ, ກວຽນ, ເນີນ, ວຽກ.

ຄຸນນາມ : ຫນັກ, ເຈັບປວດ.

ກິຣິຍາ : ລຸບຄໍາ, ອິ່ນອອຍ, ຢູ່, ຕີ, ບົວຣະບັດ.

ໄວຍາກອນ.– ສຣະຣູບ ×ັ ເມື່ອມີຕົວສະກົດແປງເປັນ ×າ ×ຸ ເ×ະ ×ໍາ ກໍໄດ້ຕົວຢ່າງດັ່ງນີ້:

| | | | | | | |
|---|---|---|---|---|---|---|
| ×ັ | ເປັນ | ×າ | ດັ່ງ | ສັດຕາ | ເປັນ | ສາດຕາ |
| ×ັ | „ | ×າ | „ | ຫົມວັນ | „ | ຫົມວານ |
| ×ັ | „ | ×ຸ | „ | ນັງຄະລາ | „ | ນຸງຄຸນ |
| ×ັ | „ | ເ×ະ | „ | ປັນຈາລະ | „ | ເປັງຈານ |



| | | | | | | |
|---|---|---|---|---|---|---|
| ×ັ | ເປັນ | ເ×ະ | ດັ່ງ | ມັນຈະ | ເປັນ | ເມັງ |
| ×ັ | „ | ເ×ະ | „ | ວັຊຣະ | „ | ເພັດ |

ການສະກົດຄໍາ.– ໃຫ້ນັກຮຽນສະກົດຄໍາຕໍ່ໄປນີ້: ລຸບຄໍາ, ອ່ອນຫວານ, ຊຸ້ມຕີ, ເຈັບປວດ, ເກີນກວ່າ.

ຄໍາເກົ້າກຽວກັນ.– ປຸດ : ບັ້ງ, ປູ່, ປອນ, ເປົາ, ປາ.

ແຕ່ງເຮືອງ.– ຈົ່ງແຕ່ງເຮືອງງົວຕົວນຶ່ງ.

---

# ໒໗. ບໍ່ຄວນບຽດບຽນລູກນົກ

ທ້າວສໍາລີໄປພໍ້ຮັງນົກຢູ່ງຮັງນຶ່ງຢູ່ເທິງປາຍໄມ້, ໃນຮັງນັ້ນມີນົກນ້ອຍ ທີ່ແຕກອອກຈາກໄຂ່ໃຫມ່ໆ. ທ້າວສໍາລີ ໄດ້ເຫັນກໍດີໃຈ ແລະຂຶ້ນກົກໄມ້ໄປເອົາຮັງນົກ. ພໍດີເອື້ອຍລາວມາພໍ້ ຈຶ່ງເວົ້າໃຫ້ລາວວ່າ ນ້ອງເອີຍ! ຢ່າເອົາມັນເລີຍ, ຢ່າໄປກວນມັນ, ມັນຢູ່ສະບາຍດີແລ້ວ. ນ້ອງລອງຄິດເບິ່ງດູ, ແມ່ມັນຈະມີຄວາມທຸກໃຈປານໃດ ເວລາມັນກັບມາຮັງແລ້ວບໍ່ເຫັນລູກຂອງມັນ? ເຖິງນ້ອງຈະເອົາມັນມາໃສ່ຕຸ້ມລ້ຽງດີປານໃດ, ມັນກໍຄົງບໍ່ມື້ນຕາຍ ຖ້າບໍ່ຕາຍ, ມັນກໍຄົງບໍ່ມ່ວນໃຈທໍ່ຢູ່ກັບແມ່ຂອງມັນ ຫລືຢູ່ເທິງກົກໄມ້ຕາມທັມດາຂອງມັນ, ມັນບໍ່ປາກພາກຈາກແມ່ຄືກັນກັບນ້ອງບໍ່ປາກຫນີຈາກ



ແມ່ເຮົາຫັ້ນແລ້ວ. ນ້ອງເອີຍ ! ເອື້ອຍຂໍນຳເພາະ, ເອົາມັນໄວ້ຮັງມັນສາ. ປາຫລີງສິ່ງທີ່ໃຫ້ຄວາມທຸກໃຈບໍ່ອື່ນເລີຍ, ເມື່ອພາບຸ ຫນ້າ ມັນໃຫຍ່ ຂຶ້ນ ມັນຈະໄດ້ຮ້ອງໃຫ້ເຮົາຟັງ, ບິນໃຫ້ເຮົາເບິ່ງ ແລະ ມັນຈະໄດ້ ຊ່ວຍ ກິນແມງບົ້ງ ຊຶ່ງຄອຍເຈາະກິນເຄື່ອງປູກຂອງປັງໃຫ້ເຮົາ.

ທ້າວ ສຳລີ ໄດ້ ຟັງ ຄວາມເອື້ອຍ ກໍ່ ເຊື່ອ ຖື ເລີຍ ເອົາ ລູກ ນົກໄປຄືນໄວ້ໃນຮັງມັນຄືເກົ່າ ແລະປະຕິຍານວ່າ ຈະບໍ່ບຽດບຽນລູກນົກອີກຈັກເທື່ອ.

<u>ຄຳອະທິບາຍ</u>.— ພໍ້ : ພົບ ຫລື ຈວບ. ບຽດບຽນ : ຮາວີຕີດ່ອຍ.
ປະຕິຍານ : ການໃຫ້ຄຳຫມັ້ນໂດຍສຸຈລິດໃຈ.

<u>ຄຳຖາມ</u>.— ໑.— ທ້າວສຳລີເອົາຫຍັງຢູ່ເທິງກົກໄມ້?
໒.— ເອື້ອຍລາວພໍ້ແລ້ວບອກນ້ອງວ່າຢ່າງໃດ?
໓.— ເອື້ອຍຊີ້ແຈ່ງສັ່ງສອນນ້ອງວ່າຢ່າງໃດ?
໔.— ເຮົາຄວນບຽດບຽນລູກນົກບໍ່?
໕.— ໃນເລື່ອງນີ້ເພິ່ນສອນໃຫ້ພວກເຮົາຢ່າງໃດ?



<u>ໃຈຄວາມ</u>.— ເຮົາທັງຫລາຍບໍ່ຄວນຮາວີ ຫລືເອົານົກນ້ອຍມາຫລິ້ນເຫມືອນດັ່ງທ້າວສຳລີຈັກເທື່ອ ເພາະເປັນການບຽດບຽນມັນ. ເຮົາຄວນປະປ່ອຍໃຫ້ມັນຢູ່ກັບແມ່ຂອງມັນ ເພື່ອໃຫຍ່ຂຶ້ນມາມັນຈະໄດ້ຮ້ອງລຳໃຫ້ເຮົາຟັງ, ບິນໃຫ້ເຮົາເບິ່ງ ແລະມັນຈະໄດ້ຊ່ວຍກິນແມງໄມ້ ແລະບົ້ງທີ່ເຈາະກິນເຄື່ອງປູກຂອງຝັງໃຫ້ເຮົາ.

<u>ສັບ</u>.— ບໍ່ຄວນບຽດບຽນລູກນົກ.

<u>ນາມ</u> : ກົກໄມ້, ຮັງນົກ, ລູກນົກ, ດຸ້ມ.

<u>ຄຸນນາມ</u> : ນ້ອຍ, ໃຫມ່, ດີ.

<u>ກິລິຍາ</u> : ຂຶ້ນ, ແດກ, ປະຕິຍານ, ບຽດບຽນ.

<u>ໄວຍາກອນ</u>.— ສຣະ ×ິ ×ີ ແປງເປັນ ເ× ×ຶ ເ×ັຽ ແລະ ໄ× ກໍໄດ້ ຕົວຢ່າງດັ່ງນີ້:

| | | | | | | |
|---|---|---|---|---|---|---|
| ×ິ | ເປັນ | ເ× | ດັ່ງ | ສີລາ | ເປັນ | ເສລາ |
| ×ິ | „ | ເ× | „ | ພິດານ | „ | ເພດານ |
| ×ິ | „ | ×ຶ | „ | ສິກສາ | „ | ສຶກສາ |
| ×ິ | „ | ×ຶ | „ | ທິງສາ | „ | ທຶງສາ |
| ×ິ | „ | ເ×ັຽ | „ | ສິຣະ | „ | ສຽນ |
| ×ິ | „ | ເ×ັຽ | „ | ທິຣະກາ | „ | ເທັຽຣະກາ |
| ×ິ | „ | ໄ× | „ | ພິປຸລະ | „ | ໄພບູນ |
| ×ິ | „ | ໄ× | „ | ພິທຸຣະ | „ | ໄພທູນ |
| ×ິ | „ | ×ຶ | „ | ພິຊະ | „ | ພືດ |

<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຕຸ້ມ, ນຶ່ມ, ຄວາມທຸກ, ເຄື່ອງປຸກ, ຮ້ອງໄຫ້, ຄຳເຮືອນ.

<u>ຄຳເຄົ້າດຽວກັນ</u>.– ຮັງ : ເຮືອນ, ຮ້ານ, ຮອກ, ຮູ. ເວົ້າ : ວ່າ, ວາຈາ.

<u>ແຕ່ງເລື່ອງ</u>.– ຈົ່ງແຕ່ງເລື່ອງນົກແກ້ວຕົວນຶ່ງ.

---

# ໓໐. ອ້າຍດີຜູ້ນຶ່ງ



ທ້າວສຳຣິດເປັນອ້າຍທີ່ດີຜູ້ນຶ່ງ. ລາວກັບນ້ອງນ້ອຍໆ ເປັນກຳພ້າມາແຕ່ນ້ອຍ, ລາວຈຶ່ງໄປເຮັດຊ່າງໄມ້ ເພື່ອລ້ຽງຊີວິດຕົນແລະນ້ອງທີ່ຍັງນ້ອຍຢູ່. ເວລານັ້ນ, ໃນພຣະອາຊວັງແຫ່ງພຣະມະຫານະຄອນ ມີເຈົ້າອາຊບຸດອົງນຶ່ງທີ່ມີອຳນາດເກັ່ງກ້າ. ມີຄົນຫລາຍຄົນມາຮັບໃຊ້ສອຍເພິ່ນ ໂດຍບໍ່ເອົາຄ່າຈ້າງອາງວັນອັນໃດ ເພື່ອປະສົງໃຫ້ເພິ່ນ ມີຄວາມກະຣຸນາໃນພາຍໜ້າ.



ໃນຄົນຈຳພວກນັ້ນ, ມີພີ່ນ້ອງທ້າວສຳຣິດຜູ້ນຶ່ງຊື່ຮວດ. ມື້ນຶ່ງທ້າວຮວດເວົ້າກັບທ້າວສຳຣິດວ່າ ມາເຂົ້າເຮັດການເພິ່ງເຈົ້າອາຊບຸດໃນພຣະມະຫານະຄອນກັບເຮົາເສັຽ, ເຈົ້າກໍຍັງຈະມີຄວາມສຸກກວ່າເປັນຊ່າງໄມ້. ທ້າວສຳຣິດຈຶ່ງຕອບວ່າ ຖ້າຂ້ອຍຟັງຄວາມເຈົ້າຂ້ອຍກໍຈະມີຄວາມສນຸກສຸກສະບາຍດີດອກ. ແຕ່ນ້ອງນຸ່ງຂ້ອຍກໍຈະອຶດເຂົ້າສາຕີ, ຂ້ອຍບໍ່ຂໍປະນ້ອງຂ້ອຍໄປ, ຂ້ອຍຂໍຢູ່ເຮືອນແລະເຮັດຊ່າງໄມ້ ທີ່ເປັນວິຊາຫາກິນເດີມຂອງຂ້ອຍນີ້ຕໍ່ໄປ.

<u>ຄຳອະທິບາຍ</u>.– ພຣະອາຊວັງ : ໂຮງເຈົ້າຊີວິດ. ພຣະມະຫານະຄອນ : ເມືອງໃຫຍ່, ເມືອງຫລວງ. ຄວາມກະຣຸນາ : ຄວາມອີດູ. ວິຊາ : ຄວາມຮູ້.

<u>ຄຳຖາມ</u>.– ໑.– ທ້າວສຳຣິດເປັນຄົນແນວໃດ? ໒.– ລາວເຮັດຫຍັງ? ໓.– ເປັນຫຍັງຈຶ່ງມີຫລາຍຄົນມາຮັບໃຊ້ເຈົ້າພຣະອາຊບຸດ? ໔.– ຮວດເວົ້າກັບສຳຣິດວ່າປາງໃດ? ໕.– ເປັນຫຍັງທ້າວສຳຣິດບໍ່ເຮັດຕາມຄຳຮວດບອກ?

<u>ໃຈຄວາມ</u>.– ທ້າວສຳຣິດເປັນອ້າຍດີຜູ້ນຶ່ງ ທີ່ຮູ້ຈັກຫາລ້ຽງຊີວິດຕົນແລະນ້ອງທີ່ຍັງນ້ອຍ. ລາວບໍ່ໄປເຂົ້າເຮັດການເພິ່ງເຈົ້າອາຊບຸດໃນພຣະມະຫານະຄອນ ຕາມຄວາມທ້າວຮວດບອກນັ້ນ ກໍເພາະລາວບໍ່ຢາກປະນ້ອງໄປ ລາວຢາກຢູ່ເຮືອນ ແລະເຮັດຊ່າງໄມ້ທີ່ເປັນວິຊາຫາກິນເດີມຂອງລາວ. ເຮົາຄວນເອົາແບບຢ່າງທ້າວສຳຣິດຈຶ່ງຈະດີ.

ສັບ : ພຣະອາຊວັງ, ພຣະມະຫານະຄອນ, ອາງວັນ, ອາຊບຸດ.

ຄຸນນາມ : ນ້ອຍ, ເກ່ງກ້າ.

ກິຣິຍາ : ເຮັດ, ລ້ຽງ, ເວົ້າ, ຟັງຄວາມ.

ໄວຍາກອນ.— ສຣະ xຸ xູ ແປງເປັນ ໄx ເxົາ xົວ ກໍໄດ້

ຕົວຢ່າງດັ່ງນີ້:

| | | | | | | |
|---|---|---|---|---|---|---|
| xຸ | ເປັນ | ໄx | ດັ່ງ | ສຸພາ | ເປັນ | ໄສພາ |
| xຸ | " | ໄx | " | ມຸຫະ | " | ໄມຫະ |
| xຸ | " | ໄx | " | ສຸພາບ | " | ໄສພາບ |
| xຸ | " | ເxົາ | " | ບຸວະຊົນ | " | ເບົາວະຊົນ |
| xຸ | " | ເxົາ | " | ສຸວະຄົນ | " | ເສົາວະຄົນ |
| xຸ | " | xົວ | " | ບຸວະບາດ | " | ບົວະບາດ |
| xູ | " | xົວ | " | ບໍຣິບູນ | " | ບໍຣິບວນ |
| xູ | " | xົວ | " | ບູຣະພາ | " | ບົວຣະພາ |

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້:

ພຣະອາຊວັງ, ເຈົ້າອາຊບຸດ, ຮັບໃຊ້ສອຍ, ອາງວັນ

ຄວາມກະຣຸນາ, ສນຸກ.

ຄຳກ່ຽວກັນ.— ອາຊບຸດ : ອາຊບຸດດາ, ອາຊບຸດດີ.

ແຕ່ງເຣື່ອງ.— ຈົ່ງແຕ່ງເຣື່ອງອ້າຍດີຂອງເຈົ້າຜູ້ນຶ່ງ.

# ໒໑. ປ່າຄິດແກ້ແຄ້ນ

ຄົນຮັ່ງມີຜູ້ນຶ່ງ ເກີດຜິດຖຽງກັນກັບຄົນທຸກຜູ້ນຶ່ງໃນເວລາໃ





ໃສ, ລາວໄດ້ແບ່ນຫີນໃສ່ຄົນທຸກ. ຄົນທຸກຜູ້ນັ້ນເລີຍເກັບເອົາຫີນກ້ອນນັ້ນບັດໃສ່ຖົງເສື້ອໄວ້, ລາວຄຶດວ່າ "ຄົງມີເວລານຶ່ງທີ່ກູຈະແບ່ນຄືນໃສ່ຫົວມັນໄດ້" ຕໍ່ມາຄົນຮັ່ງມີຜູ້ນັ້ນ, ເປັນຄົນຄ້ານ, ຈັບຈ່າຍເງິນຄຳຫມົດໄປໂດຍທາງບໍ່ເປັນປໂຍດ ເລີຍຕົກທຸກໄດ້ຍາກຈົນເຖິງໄດ້ຂໍທານກິນ.

ຢູ່ມາມື້ນຶ່ງ, ຄົນທຸກເຫັນຄົນຮັ່ງຕົກທຸກຜູ້ນັ້ນນຸ່ງເຄື່ອງອັນຂາດຫ້ອຍຍ່າງກາຍຕູບລາວໄປ, ລາວກໍແລ່ນເຂົ້າໄປຫາຊອກກ້ອນຫີນນັ້ນອອກມາ ເພື່ອຈະແບ່ນໃສ່ຫົວຄົນຮັ່ງຜູ້ຕົກທຸກນັ້ນຄືນ, ແຕ່ພໍແລ່ນໄປແລ້ວລາວກໍປຸດປົງຄຶດວ່າ "ຊ່າງເທາະກູຈະບໍ່ແກ້ແຄ້ນສັດຕູຂອງກູລະ! ເພາະວ່າມັນຕົກທຸກໄດ້ຍາກກວ່າກູແລ້ວ ຖ້າກູແກ້ແຄ້ນມັນ, ຄົນອື່ນກໍຈະວ່າກູເຮັດຄືຄົນບ້າ, ເພາະຫົວຊາຄົນທີ່ຊົ່ວກວ່າຕົນ. ທັງການແກ້ແຄ້ນນັ້ນບໍ່ແມ່ນການປະພຶດຂອງຄົນດີມີສິນທັມຢູ່ໃນໃຈເລີຍ" ຄຶດດັ່ງນີ້ແລ້ວເລີຍຖິ້ມກ້ອນຫີນເສັຽທັນທີ.

ສ່ວນຄົນທຸກຜູ້ນັ້ນກໍເລີຍໄປຫາຕຸບຂອງມັນ.

ຄຳອະທິບາຍ.— ແກ້ແຄ້ນ : ແກ້ຄວາມເຈັບໃຈ. ໃຫໄສ : ໃຈຮ້າຍ.
ປະພຶດ : ເຮັດ.

ຄຳຖາມ.— ໑.— ໃນເວລາໃຫໄສ ຄົນຮັ່ງມີເຮັດຫຍັງໃຫ້ຄົນທຸກ? ໒.—
ຜູ້ທຸກນັ້ນເຮັດປານໃດ? ໓.— ພາຍລຸນມາຄົນຮັ່ງມີກັບເປັ
ປານໃດ? ໔.— ເມື່ອເຫັນສັດຕູເກົ່າລາວ, ຜູ້ທຸກຄິດປານໃດ
໕.— ເປັນຫຍັງຜູ້ທຸກບໍ່ແກ້ແຄ້ນສັດຕູຂອງລາວ?

ໃຈຄວາມ.— ການທີ່ຄົນຮັ່ງມີ ຜິດກັບຄົນທຸກ ແລ້ວແບ່ນຫີນໃສ່ຄົ
ທຸກ. ຄົນທຸກຜູ້ນັ້ນຄືຈະແບ່ນຫີນໃສ່ຫົວມັນຄືນເວລານັ້
ເຮົາທັງຫລາຍ ບໍ່ຄວນຄິດແກ້ແຄ້ນຄົນອື່ນຈັກເທື່ອ.

ສັບ.— ການແກ້ແຄ້ນ.

ນາມ : ຕຸບ, ກ້ອນຫີນ, ຖົງເສື້ອ, ສັດຕູ.

ຄຸນນາມ : ຮັ່ງ, ທຸກ, ຄ້ານ.

ກິລິຍາ : ແບ່ນ, ຕົກທຸກ, ກາຍ, ແກ້ແຄ້ນ.

ໄວຍາກອນ.— ສະຣະ ເx ແປງເປັນ ໄx ກໍໄດ້ດັ່ງນີ້ :

ເວຍຍາກະອະນະ ເປັນ ໄວຍາກອນ
ອະທິປະເຕຍຍະ " ອະທິປະໄຕ

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ :
ຄົນທຸກ, ຄົນຮັ່ງມີ, ກ້ອນຫີນ, ແບ່ນ, ແກ້ແຄ້ນ.



ຄຳເຄົ້າດຽວກັນ.— ໃຫໄສ : ໃຫສາ. ເຄື່ອງນຸ່ງ : ເຄື່ອງຄຸ, ເຄື່ອງ
ທົງ, ເຄື່ອງເອ້. ແລ່ນ : ເລັ້ງ, ລີ່ວ, ລັດໄສ່.

ແຕ່ງເລື່ອງ.— ຈົ່ງແຕ່ງເລື່ອງການແກ້ແຄ້ນກັບເຮັດປານໃດ?

---

# ໓໒. ທາດຫລວງວຽງຈັນ



ຂ້າຂໍເວົ້າພາກພື້ນ ທາດໃຫຍ່ວຽງຈັນ
ດານທີ່ມີທາງໄຂ ຂ່າວມາເຮົາຮູ້
ບັງມີອາຊາເຈົ້າ ໃຈບຸນອົງປະເສີດ
ເຊັງຊີໄຊຍະເຊດຖາທີ່ອາດລ້າ ລືເຫົ້າທົ່ວແດນ

ພຣະສເດັດຈາກກ້າ ກຸງໃຫຍ່ຫລວງພຣະບາງ
ມາປຸນແປງວຽງຈັນ ກໍເປັນນະຄອນກວ້າງ
ພຣະທາກທະອີໂທເຫລື້ອມ ໃສໃນພຸດທະສາດ
ບໍ່ອາດນັບອ່ານອ້າງ ພຣະອົງສ້າງແຕ່ງທານ

● ແນວນາກົດເລີດລ້ຳ ເກີນກວ່າທັງຫລາຍ
ນັ້ນແມ່ນອົງເຈດີ ພຣະທາດຫລວງຊົງສ້າງ
ລວງສູງລ້ຳ ລອຍປາຍປົນເມກ
ສາມສິບທາດນ້ອຍ ລຽນລ້ອມປູສລອນ

● ຖັດນັ້ນພຣະເລົາສ້າງ ອົງເຂດກົນນະລຽນ
ມີປະຕູໂຂງ ສີ່ທາງຫຼຽວເຂົ້າ
ດາວັນດູດິກເບື້ອງ ປູນແປງເປັນເດີນ
ບາວໄຫຍ່ກວ້າງ ແປນກ້ຽງສະອາດຕາ

● ແຕ່ນັ້ນ, ພຣະຈິ່ງດຳແຕ່ງຕັ້ງ ບຸນແບບປະເພນີ
ທຸກປີເດືອນສິບສອງເພັງ ປ່າວເຕີນທັງດ້າຍ
ພາກັນໂຮມເມືອໄຫວ້ ບູຊາສເລີມທາດ
ແມ່ນວ່າເຈົ້າແຜ່ນຫລ້າ ກໍລົງພ້ອມໄພ່ພົນ ແຫ່ແລ້ວ.

ຄຳອະທິບາຍ.— ເຊັງຊີໄຊຍະເຊດ : ເຈົ້າໄຊຍະເຊດຖາທິຣາດມີຊື່ສຽ
ໂດ່ງດັງ. ພຸດທະສາດ : ຄືພຣະພຸທສາສນາ. ລວ



ສູງ : ສ່ວນສູງ. ປະເພນີ : ຮີດຄອງ. ເຈົ້າແຜ່ນຫລ້າ : ເຈົ້າແຜ່ນດິນ.

ຄຳຖາມ.— ໑.— ພຣະເຈົ້າໄຊຍະເຊດຖາທິຣາດ ສເວີຍຣາຊສົມບັດຢູ່ເມືອງໃດ? ໒.— ແມ່ນຜູ້ໃດມາສ້າງທາດຫລວງ? ໓.— ມີທາດນ້ອຍອ້ອມຢູ່ຈັກລູກ? ນອກຈາກທາດພຣະອົງໄດ້ສ້າງຫຍັງອີກແດ່? ໔.— ບຸນສລອງທາດຫລວງເພີ່ນເຮັດໃນເດືອນໃດ?

ໃຈຄວາມ.— ພຣະເຈົ້າໄຊຍະເຊດຖາ ເປັນຄົນໃຈບຸນ ມີຊື່ລືຊາທົ່ວດິນແດນ, ພຣະອົງໄດ້ຈາກຫລວງພຣະບາງມາສ້າງວຽງຈັນໃຫ້ເປັນນະຄອນກວ້າງ ທັງເອົາໃຈໃສ່ສາສນາພຣະພຸທ ແລະນັກທານ, ພຣະອົງໄດ້ສ້າງພຣະທາດຫລວງ ແລະໄດ້ຕັ້ງໃຫ້ມີບຸນສເລີມທາດທຸກປີ ໃນເດືອນ ໑໒ ເພັງ.

ສັບ.— ບຸນທາດຫລວງ

ນາມ : ທາດຫລວງ, ປະຕູ, ເດີນ.

ຄຸນນາມ : ໃຫຍ່, ກວ້າງ, ນ້ອຍ, ກ້ຽງ.

ກິລິຍາ : ສ້າງ, ແປງ, ໄຫວ້.

ໄວຍາກອນ.— ສຣະ ໄ×ະ.

ກ.— ຖ້າມີຕົວສະກົດແປງເປັນຮູບ ×ົ (ເວັ້ນແຕ່ ວ ແລະ ຍ ສະກົດ) ຕົວຢ່າງ:
ໄກະ + ກ ເປັນ ກົກ

ໃດະ + ນ ເປັນ ດິນ

ໃສະ + ງ „ ສິງ

໒.– ຖ້າມີຕົວ ວ ຫລື ບ ສະກົດໃຫ້ເອົາ ×

ເປັນ ×̆ ສ່ວນຮູບ ໃ× ເອົາໄວ້ດັ່ງນີ້:

ໃບະ + ວ ເປັນ ໃບັວ, ໃອະ + ບ ເປັນ ໃອັບ.

<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້: ໄຊຍະເຊດຖາ, ທະ

ໄທ, ພຸດທະສາດ, ບາກິດ, ກົມມະລຽນ, ສເລີນ.

<u>ຄຳເຄົ້າດຽວກັນ</u>.– ຍກ : ຍກາ, ຍໂກ, ຍກີ.

<u>ແຕ່ງເລື່ອງ</u>.– ຈົ່ງແຕ່ງເລື່ອງທາດຫລວງ ຫລື ທາດທີ່ມີຢູ່ບ້ານເຈົ້າ

---

# ໓໓. ທາດຫລວງວຽງຈັນ (ຕໍ່)

• ຈຽມແຕ່ນັ້ນ  ທຸກທົ່ວໄທລາວ
ພ້ອມພ່ຳຫວນເຖນຈິວ  ມຸ່ງເນື່ອປະນົມໄຫວ້
ເຊົ້າເມື່ອວັນເພັງນັ້ນ  ອາຊາສະເດັດອອກ
ທັງຕັກບາດແລະປາດນ້ຳ  ດອມຜູ້ໄພ່ເມືອງ
• ແລງລົງມີຊ່ວງນ້າ  ເຕົ້າຂ່ວງດີດີ
ດຽວນີ້ມີເຕະບານ  ດົ້ນແຜນເສັງສູ້
ພໍເມື່ອສຸຣິໂຍຄ້ອຍ  ຫານແທບຜາສາດ
ມີຫມູ່ຂ້າທັງບັ້ງ  ກອງຄ້ອງເສບອະງຶມ



• ຫນ້ອຍນຶ່ງແລ້ວ  ເລີຍຄ່ຳເສັຽສຸນ
ຫລຽວເຫັນເດືອນເພັງໃສ  ສ່ອງແສງສູງອື້ນ
ປຸງຫມູ່ດິນການໄດ້  ຫຽນພັນອ້ອມພຣະທາດ
ຫລິງເບິ່ງແສງຫລາກຫລື້ອນ  ບິນສອົ້ນອີ່ມໃຈ
• ຖັດນັ້ນ ໄພດອກໄມ້  ພຸ, ຈຸດບູຊາ
ທັງຕະໄລໄຟຫາງ  ພອງພຽງງາຊ້າງ
ຟັງບິນນັບເນື່ອງກ້ອງ  ກວມວົງເວົງພຣະທາດ
ຂໍແກ່ລາວພີ່ນ້ອງ  ໃຈແຈ້ງຈື່ຈຳ ແຕ່ເຖິ້ນ.

<u>ຄຳອະທິບາຍ</u>.– ຈຽມແຕ່ນັ້ນ : ນັບແຕ່ນັ້ນເປັນຕົ້ນມາ. ຫວນເຖນຈິວ : ຫມູ່ພຣະເນນ. ເຕົ້າຂ່ວງ : ລົງໂຮມເຖິນ, ສຸຣິໂຍຄ້ອຍ : ຕາວັນບ່າຍ. ເສັຽສຸນ : ຫມົດແສງຕາວັນ. ອາຊາ : ພຣະເຈົ້າແຜ່ນດິນ. ປະນົມ : ນົບ.

<u>ຄຳຖາມ</u>. ໑.– ມີໃດເປັນມື້ສຳຄັນໃນງານບຸນທາດຫລວງ ?

໒.– ເວລາເຊົ້າວັນເພັງເດືອນ ໑໒ ນັ້ນ ເພິ່ນເຮັດຫຍັງ ?

໓.– ເວລາແລງມີການຫລິ້ນແຂ່ງຂັນປ່າງໃດ ?

໔.– ເວລາຄ່ຳເດ ? ໕.– ເຈົ້າເຫັນການທຳບຸນສເລີມທາດນັ້ນເປັນປ່າງໃດ ?

<u>ໃຈຄວາມ</u>.– ດັ້ງແຕ່ທຳບຸນສເລີມທາດມາ ໄທລາວທັງພຣະແລະເນນກໍເນືອໄຫວ້ທາດ. ຕອນເຊົ້າວັນເພັງເດືອນ ໑໒ ນັ້ນ ພຣະເຈົ້າແຜ່ນດິນກໍທົງຕັກບາດປາດນ້ຳນຳອາສດອນ

ເວລາແລງ ກໍມີການຫລິ້ນແອ່ງຂັບຕ່າງ ໆ ແຫ່ແຫນ
ປາສາດ ເວລາຄ່ຳເພິ່ນກໍໄດ້ຫຼຸບອ້ອມທາດ ທັງຈູດບັ້ງ
ໄຟພຸກປ່າງເປັນສຽງບັ້ນກ້ອງ. ຫມົດຄືນແລ້ວ ກໍເສັດ
ການສເລີມທາດ.

ສັບ.— ທາດຫລວງວຽງຈັນ.

ນາມ : ຂ່ວງດີດີ, ສຸຣິໂຍ, ປາສາດ, ກອງ, ກ້ອງ.

ຄຸນນາມ : ໃສ.

ກິຣິຍາ : ໄຫວ້, ສເດັດ, ເສບ, ບູຊາ.

ໄວຍາກອນ.— ສຣະ ໄ× ປຸກັບຕົວ ຂ ແປງເປັນຕົວ ວ ຖ້າປຸກັບ
ຕົວອື່ນແປງເປັນສຣະ ເ×ົາ ຫລື ×ົວ ໄດ້ດັ່ງນີ້.

| | | | | | | |
|---|---|---|---|---|---|---|
| ໄ× | ເປັນ | ວ | ດັ່ງ | ໄຂສານ | ເປັນ | ອາວະສານ |
| ໄ× | ,, | ເ×ົາ | ,, | ໄນລີ | ,, | ເນົາລີ |
| ໄ× | ,, | ເ×ົາ | ,, | ໄພຊນະ | ,, | ເພົາຊນະ |
| ໄ× | ,, | ×ົວ | ,, | ໄດ | ,, | ຕົວ |

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສເດັດ, ຂ່ວງ
ສ່ອງແສງ, ຫລາກເຫລື້ອມ, ພ່ອງພຽງ, ຄວັນນຶກ
ກຸ້ມ, ສເລີມທາດ.

ຄຳເຄົ້າດຽວກັນ.— ເສື້ອ : ຜ້າ. ເສັດ : ສຳເຣັດ, ເສັດແລ້ວ. ຈ່ຳ : ຈື່
ໃສ່ໃຈ.

ແຕ່ງເຣື່ອງ.— ໃຫ້ແຕ່ງເຣື່ອງບຸນປາງນຶ່ງທີ່ມີຂຶ້ນໃນບ້ານຂອງເຈົ້າ.



# ໓໔. ຄວາມຊື່ສັດຕໍ່ສຫາຍ



ພຣະຍາສີເປັນຜູ້ມີບັນດາສັກຜູ້ນຶ່ງໃນພຣະຣາຊວັງ ໄດ້ກ່າວໂທດພຣະຍາອະນົງຜູ້ເປັນຂ້າຣາຊການໃຫຍ່ຜູ້ນຶ່ງ ໃນພຣະຣາຊວັງນຳກັນ ວ່າທຳການເກີນອຳນາດ ແຕ່ເມື່ອໄດ້ໄຕ່ສວນແລ້ວປາກົດວ່າ ພຣະຍາສີເປັນຜູ້ຜິດ ພຣະຍາສີຈຶ່ງຖືກຈຳຄຸກຕາມຂບັງຄັບຂອງ ພຣະຍາອະນົງ. ເມື່ອຕິດຄຸກ ປຸນັ້ນ ບໍ່ມີ ຂ້າຣາຊການ ຜູ້ໃດ ມີຄວາມ ສາມາດ ໄປປານ ເລີຍ. ມີແຕ່ ພຣະຍາ ຄຳປານ ຜູ້ດຽວ ທີ່ໄປປານເພິ່ນໃນຄຸກມື້ລະເທື່ອ ເພື່ອເອົາອາຫານໄປສົ່ງເພິ່ນ. ພຣະຍາສີ ຈຶ່ງ ເວົ້າ ວ່າ "ແຕ່ນີ້ໄປ ປ່າ ມາປານ ຂ້ານ້ອຍ ອີກເລີຍ, ປ້ານຄວາມຫຍຸ້ງຍາກ ລຳບາກໃຈ ຈະມີ ແກ່ຕົວ ອາດຍາ" ພຣະຍາຄຳປານຕອບວ່າ ເຮົາຈະເຫັນ ຫມູ່ເພື່ອນ ກໍມີແຕ່ຄວາມຄັບແຄ້ນ ທ່ານັ້ນບູຮານເພິ່ນຍັງວ່າ "ໃນຄາວວິບັດຈະເຫັນໃຈມິດ, ໃນຍາມເສິກ

ມາກໍຈະເຫັນໃຈທະຫານ, ໃນເວລາໄຮ້ຊັບສານຈະເຫັນໃຈຜູ້ຊື່ສັດ
ສະອາດ, ໃນຍາມສົມບັດວິບາດຈະເຫັນໃຈພະອິບາ, ໃນກາ
ອະນາຖາຈະເຫັນໃຈຍາດ. ດັ່ງນັ້ນ, ຈະໃຫ້ຂ້ານ້ອຍຖິ້ມປະອາດຍາ
ນັ້ນບໍ່ໄດ້ດອກ, ເຖິງຈະເກີດຄວາມຍາກລຳບາກແກ່ຂ້ານ້ອຍກໍຕາມ."

ພຣະຍາຄຳປານຜູ້ມີໃຈກ້າຫານບ່າອັນຕລາຍ ບໍ່ຍອມຖິ້ມ
ເພື່ອນ ຂອງຕົນ ສົມຄວນ ໄດ້ຮັບ ຄວາມນັບຖື ຈາກຄົນ ທັງຫລາຍ
ເພື່ອນເຜົ່ານີ້ຕ້ອງປຽບດັ່ງອ້າຍນ້ອງຮ່ວມໂລຫິດກັນ.

ຄຳອະທິບາຍ.— ບັນດາສັກ : ຖຽວຕິບິດ, ຊື່ສຽງທີ່ລືຊາ. ຄາວວິບັດ
ເວລາຖືກຄວາມເສັຽຫາຍ. ວິບາດ : ຈິບຫາຍ. ພະອິບາ
ຜຽ້ງ. ຄາວອະນາຖາ : ເວລາທຸກຍາກ, ເວລາຫາທີ່ເພິ່ງ
ບໍ່ໄດ້.

ຄຳຖາມ.— ໑.– ເປັນຫຍັງພຣະຍາສີຈຶ່ງຖືກຈຳຄຸກ ? ໒.– ເປັ
ຫຍັງ ພຣະຍາສີ ບໍ່ ໃຫ້ ພຣະຍາ ຄຳປານ ມາ ປາມ ເພິ່ນ
໓.– ພຣະຍາຄຳປານຕອບພຣະຍາສີວ່າຢ່າງໃດ ?
໔.– ພຣະຍາຄຳປານເປັນເພື່ອນແບບໃດ ?

ໃຈຄວາມ.— ເວລາ ພຣະຍາສີ ຖືກຈຳຄຸກ ຢູ່ນັ້ນ. ມີແຕ່ພຣະຍາຄຳ
ປານໄປປາມເພິ່ນໃນຄຸກນີ້ລະເທື່ອ ເພື່ອເອົາອາຫາ
ໄປສົ່ງໃຫ້ເພິ່ນ, ເຖິງ ພຣະຍາສີ ຫ້າມປາມ ບໍ່ໃຫ້ມາ
ຫລືຈະເກີດຄວາມຍາກລຳບາກແກ່ເພິ່ນກໍຕາມ, ເພິ່ນ



ກໍບໍ່ຖິ້ມປະ ເພື່ອນ ຂອງເພິ່ນນັ້ນ ນັບວ່າເປັນເພື່ອນທີ່ດີ
ແລະຊື່ສັດຕໍ່ສະຫາຍ.

ສັບ.— ຄວາມຊື່ສັດ.

ນາມ : ບັນດາສັກ, ໂທດ, ອຳນາດ, ຄຸກ, ຊັບ, ພະອິບາ.

ຄຸນນາມ : ສະອາດ, ວິບາດ.

ກິຣິຍາ : ທຳການ, ປ້ານ, ສົ່ງ, ເຫັນ, ຖິ້ມ.

ໄວຍາກອນ.— ສຣະ ເxາະ.

ກ.— ຖ້າມີຕົວສະກົດເອົາຮູບ ເxາະ ອອກເອົາ
ຕົວ ອ ແທນແລ້ວເອົາ xະ ເປັນ x ັ ດັ່ງນີ້ :

| | | | | |
|---|---|---|---|---|
| ເກາະ | + | ກ | ເປັນ | ກັອກ |
| ເຕາະ | + | ນ | „ | ຕັອນ |
| ເກາະ | + | ງ | „ | ກັອງ (ກັອງກ່ອນ) |

ຂ.— ຖ້າປະກອບກັບຕົວ ກ ໃສ່ວັນນະຍຸດ x້ ກໍ:
ເກົາະ ໃຫ້ລົບຮູບສຣະອອກຫມົດແລ້ວໃສ່ຮູບ x ໍ ແທນ
ດັ່ງນີ້ : ເກົາະ ເປັນ ກໍ້ ແລະມີຄຳດຽວເທົ່ານີ້.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ພຣະຣາຊວັງ,
ຂ້າຣາຊການ, ຖືກຈຳຄຸກ, ຄວາມຫຍຸ້ງຍາກ, ຖິ້ມ,
ໂລຫິດ, ສົມບັດ.

ຄຳເກົ້າດຽວກັນ.— ປາມ : ຢຽມ, ເປືອນ. ປ້ານ : ປ່າ, ແປງ.

ແຕ່ງເລື່ອງ.— ໃຫ້ເຈົ້າແຕ່ງເລື່ອງເພື່ອນດີຜູ້ນຶ່ງ.

# ໓໕. ຕົວຢ່າງຄວາມສັດຊື່



ຈານຄຳດີ ມີຊື່ສຽ
ວ່າເປັນຄົນດີ ແລະຊື່ສັ
ເທື່ອນຶ່ງ ລາວຊື້ເຮືອ
ຫລັງ ນຶ່ງ ແລ້ວ ຈ້າງ ເອົ
ແປງໃຫມ່ ເພື່ອ ຈະ ໄປ
ພອນ ແປງ ເຮືອນ ຢູ່ ນັ້ນ
ຫລານຂອງລາວໄປພົ້ ໄຫ
ເງິນໄຫນຶ່ງ ມີເງິນຢູ່ສິ
ຟັກ. ເວລາຫລານເອົ
ເງິນໄປໃຫ້ເບິ່ງ ຈານຄຳດີ
ເວົ້າວ່າ, ເງິນນີ້ບໍ່ແມ່ນ
ຂອງເຮົາ ຖ້າເຮົາເອົາກ
ຄືກັນກັບລັກ, ຕ້ອງເອົາໄປສົ່ງເຈົ້າຂອງເຂົາສາ ! ວ່າດັ່ງນັ້ນແລ້ວ ລາວກໍໃຫ້ຄົນໄປເອີ້ນ ເຈົ້າຂອງ ເຮືອນເກົ່າ ມາ ແລະເອົາເງິນ ສົ່ງໃຫ້ຄືນ ເຈົ້າຂອງເຮືອນເກົ່າເຫັນວ່າຈານຄຳດີເປັນຄົນສັດຊື່ຫລາຍ ຈຶ່ງປັ ເງິນໃຫ້ຈານຄຳດີເຄິ່ງນຶ່ງ, ແຕ່ຈານຄຳດີບໍ່ຍອມຮັບເອົາ.

ການທີ່ຈານຄຳດີບໍ່ຮັບເອົາເງິນນັ້ນ ພາໃຫ້ລາວມີຊື່ສຽງວ່າ ເປັນຄົນສັດຊື່ໄປຫລາຍກວ່າແຕ່ກ່ອນອີກ.



<u>ຄຳອະທິບາຍ</u>.— ສັດຊື່ : ຄວາມຈິງ. ສິບຟັກ : ໑໔໐ ກີບ. ແປງໃຫມ່ : ເຮັດໃຫມ່.

<u>ຄຳຖາມ</u>.— ໑.— ຈານຄຳດີເປັນຄົນແນວໃດ ? ໒.— ຫລານຂອງລາວໄປພົ້ຫຍັງ ? ໓.— ເວລາຫລານເອົາເງິນໄປໃຫ້ລາວເບິ່ງ, ລາວເວົ້າຢ່າງໃດກັບຫລານ ? ໔.— ເປັນຫຍັງລາວຈຶ່ງບໍ່ຍອມ ຮັບເອົາ ເງິນຄຳ ຈາກເຈົ້າຂອງເຮືອນເກົ່າ ? ໕.— ເປັນຫຍັງລາວມີຊື່ສຽງວ່າເປັນຄົນສັດຊື່ ?

<u>ໃຈຄວາມ</u>.— ການທີ່ ຈານຄຳດີ ບໍ່ຍອມຮັບເອົາເງິນ ທີ່ ຫລານ ຂອງ ລາວໄປພົ້ ມາ ເປັນ ຂອງຕົນ ແລະ ເອົາເງິນສົ່ງໃຫ້ເຈົ້າຂອງ ເຮືອນເກົ່າ ໂດຍ ບໍ່ ເອົາ ຫຍັງ ນຳ ນັ້ນ ພາ ໃຫ້ ລາວ ມີ ຊື່ສຽງ. ເພາະເຫດນີ້, ເຮົາຄວນປະພຶດເຫມືອນຈານຄຳດີຜູ້ນີ້ ເຮົາຈຶ່ງຈະມີຊື່ສຽງວ່າເປັນຄົນສັດຊື່.

<u>ສັບ</u>.— ຄວາມສັດຊື່.

<u>ນາມ</u> : ເຮືອນ, ຫລານ, ເຈົ້າຂອງ, ເງິນ.

<u>ຄຸນນາມ</u> : ຊື່ສັດ, ເກົ່າ, ໃຫມ່.

<u>ກິລິຍາ</u> : ຈ້າງ, ແປງ, ພົ້, ລັກ, ເອີ້ນ.

<u>ໄວຍາກອນ</u>.— ສອະ ×ໍ ຖ້າມີຕົວສະກົດເອົາ ×ໍ ອອກແລ້ວ ເອົາຕົວ ອ ແທນດັ່ງນີ້ :

ກໍ + ກ ເປັນ ກອກ
ກໍ + ງ ເປັນ ກອງ
ຂໍ + ນ ເປັນ ຂອນ

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຊື່ສັດ, ເຮືອນເກົ່າ, ພວມແປງ, ສົ່ງ, ເຄິ່ງນຶ່ງ, ຮັບເອົາ, ຫລາຍກວ່າ, ສິບຝັກ.

ຄຳເຄົ້າດຽວກັນ.– ຫລາຍ : ເຫລັນ, ຫລ້ອນ.

ແຕ່ງເລື່ອງ : ຈົ່ງແຕ່ງເລື່ອງຄົນສັດຊື່ຜູ້ນຶ່ງ ທີ່ບໍ່ສໍ້ໂກງຕໍ່ບ້ານເມືອງ ຈັກເທື່ອ.

# ໓໓. ນັກຮຽນສັດຊື່



ຮອດຫ້າຍປີມາ, ທ້າວທອງດີ ກໍ່ສອບເສັງ ຂຶ້ນ ຫ້ອງ ໄດ້ ດີ ລາວເປັນຄົນທຸກ. ແຕ່ຫາກປາກຮຽນຫນັງສືຕໍ່ໄປ ຈຶ່ງໄປຈ້າງຫ້ອງນ້ອຍຫ້ອງນຶ່ງພໍ່ເປັນທີ່ຮຽນໄດ້ຕາມໃຈນັກຂອງລາວ ມື້ນຶ່ງເຈົ້າຂອງເຮືອນນັ້ນ ເອົາເງິນມາຈ້າງທ້າວທອງດີໃຫ້ເປັນພຍານເທັດໃນການ



ຟ້ອງຄອບຄົວນຶ່ງ ທີ່ເປັນສັດຕູກັບເພິ່ນ, ທ້າວທອງດີເລີຍບໍ່ຮັບເອົາສິນຈ້າງນັ້ນ ແລະເວົ້າວ່າ "ຖ້າຂ້ອຍຈະເຮັດນຳ ຄວາມທີ່ເຈົ້າຂໍໃຫ້ເຮັດນັ້ນ. ກໍ່ປຽບດັ່ງຂ້ອຍບໍ່ໄດ້ຮຽນຄວາມສັ່ງສອນທີ່ໂຮງຮຽນເລີຍ" ແລ້ວລາວກໍ່ຫນີຈາກເຮືອນຫລັງນັ້ນ ເພາະຄິດເຫັນວ່າ ບໍ່ຄວນຢູ່ຮ່ວມເຮືອນກັບຄົນບໍ່ສັດຊື່ແລະຮ້າຍກາດເຖິງພຽງນີ້.

ເຮົາທັງຫລາຍຄວນເຮັດຄືທ້າວທອງດີ, ຢ່າໄດ້ປະໃຫ້ເງິນຄຳເປັນນາຍບັງຄັບເຮົາຈົນພາໃຫ້ເຮົາເຮັດໄປໃນທາງຊົ່ວ.

ຄຳອະທິບາຍ.– ພຍານເທັດ : ຄືພຍານຕັ້ງຂຶ້ນຕົວະ. ສິນຈ້າງ : ຄື ເຄື່ອງໃຫ້ເປັນເຄື່ອງລໍ້. ປຽບດັ່ງ : ເຫມືອນດັ່ງ. ສັດຕູ : ຜູ້ທຳຄວາມປອງຮ້າຍໃຫ້ແກ່ກັນ.

ຄຳຖາມ.– ໑.– ເມື່ອສອບເສັງຂຶ້ນຫ້ອງໄດ້ແລ້ວ, ທ້າວທອງດີມີຄວາມປະສົງຢ່າງໃດອີກ ? ໒.– ເປັນຫຍັງເຈົ້າຂອງເຮືອນເອົາເງິນມາຈ້າງທ້າວທອງດີ ? ໓.– ເປັນຫຍັງລາວຈຶ່ງບໍ່ຮັບເອົາສິນຈ້າງນັ້ນ ? ໔.– ເຮົາຄວນປະໃຫ້ເງິນຄຳເປັນນາຍບັງຄັບເຮົາບໍ່ ? ເປັນຫຍັງ ?

ໃຈຄວາມ.– ທ້າວທອງດີເປັນນັກຮຽນສັດຊື່ທີ່ສຸດ ດ້ວຍວ່າລາວບໍ່ຍອມຮັບເອົາເງິນສິນຈ້າງ ນຳເຈົ້າຂອງເຮືອນທີ່ນັບໃຫ້ລາວເປັນພຍານເທັດໃນການຟ້ອງຄອບຄົວນຶ່ງທີ່ເປັນສັດຕູກັນກັບເພິ່ນ. ເຮົາທັງຫລາຍຄວນສັດຊື່ຄືທ້າວທອງດີ ຢ່າໄດ້ປະໃຫ້ເງິນຄຳເປັນນາຍເຮົາຈົນພາໃຫ້ເຮົາເຮັດໄປໃນທາງຊົ່ວ.

ສັບ.— ນັກຮຽນສັດຊື່.

ນາມ : ຫ້ອງ, ເຮືອນ, ສັດຕູ, ສິນຈ້າງ.

ຄຸນນາມ : ຮ້າຍ, ບໍ່ສັດຊື່.

ກິລິຍາ : ຮຽນ, ຈ້າງ, ໜີ, ບໍ່ຍອມຮັບ.

ໄວຍາກອນ.— ສຣະ ເ×ັຽະ ເ×ັຽ ຖ້າມີຕົວສະກົດໃຫ້ໃສ່ແຕ່ຮູ

×ຽ ດັ່ງນີ້ :

ກ.— ເ×ັຽະ : ເຂັຽະ + ນ ເປັນ ຂຽນ

ເ×ັຽະ : ເກັຽະ + ງ „ ກຽງ

ຂ.— ເ×ັຽ : ເກັຽ + ນ „ ກຽນ

ເສັຽ + ງ „ ສຽງ

ການສະກົດຄໍາ.— ໃຫ້ນັກຮຽນສະກົດຄໍາຕໍ່ໄປນີ້ : ສອບເສັງ, ຄົນທຸກ

ຄອບຄົວ, ປຸ່ຮ່ວມ, ສິນຈ້າງ, ຮ້າຍຂາດ.

ຄໍາເກົ້າກ່ຽວກັນ.— ຊົວ : ຊົວຊານ, ຊົວຊ້າ.

ແຕ່ງເຣື່ອງ.— ໃຫ້ເລົ່າເຣື່ອງຄົນບໍ່ສັດຊື່ຜູ້ນຶ່ງ.

---

# ນົກ. ຫມາກມັງຄຸດ

ທ້າວແສນກັບທ້າວຕຸ່ນເກາະແອບກັບຍ່າງຫລິ້ນ. ພວມຍ່າງ
ໄປເຂົາເຈົ້າເຫັນຫມາກມັງຄຸດຫນ່ວຍນຶ່ງຢູ່ກາງຖນົນ ທ້າວແສນ
ວ່າ "ຫມາກໄມ້ນີ້ແມ່ນຂອງຂ້ອຍເພາະຂ້ອຍເຫັນກ່ອນ" ທ້າວຕຸ່





ຊ້າຕອບວ່າ "ຕ້ອງເປັນຂອງຂ້ອຍເພາະຂ້ອຍເປັນຜູ້ເກັບໄດ້" ເດັກທັງສອງ ກໍເລີຍຖຽງກັນ ສຽງດັງຂຶ້ນ ຈົນເກືອບຈະຕີກັນ ພໍດີທ້າວສາລີກາຍມາທາງນັ້ນ, ເຂົາທັງສອງຈຶ່ງເວົ້າໃຫ້ທ້າວສາລີຕັດສິນໃຫ້. ທ້າວສາລີເອົາປືນເຕົ່າງກາງເດັກທັງສອງຄົນ ແລະທໍາທ່າຕັ້ງຫົວຫນ້າສານ ເພື່ອຈະໄຕ່ສວນເອົາທັງສອງຄົນ. ແລ້ວລາວຈຶ່ງເອົາຫມາກມັງຄຸດມາ ແລະຈົກເອົາມີດງັບອອກມາຜ່າຫມາກມັງຄຸດເປັນສ່ອງສ່ຽງທ່ໍກັນ ແລ້ວເວົ້າວ່າ "ເປືອກທ່ອງນີ້ເປັນຂອງທ້າວແສນ ຜູ້ເຫັນກ່ອນ. ເປືອກທ່ອງນີ້ ເປັນຂອງ ທ້າວຕຸ່ນ ຜູ້ເກັບໄດ້ ສ່ວນເນື້ອນອນນັ້ນແມ່ນຂອງຂ້ອຍ ເພາະທັນດາເຮັດວຽກຕ້ອງມີຄ່າຈ້າງ" ວ່າແລ້ວ ທ້າວສາລີ ກໍໂນ່ມ ຫມາກ ມັງຄຸດ ເຂົ້າປາກ ແລ້ວ ແລະຍ່າງຫນີໄປພ້ອມກັບຫົວຂວັນ, ປະໃຫ້ທ້າວແສນແລະທ້າວຕຸ່ນຕົກຊະເງີຫລຽວນໍາຫລັງ.

ການໃຫ້ຜູ້ອື່ນຕັດສິນເຣື່ອງເລັກ ໆ ນ້ອຍ ໆ ດີແກ່ບໍ່ດີແກ່, ແຕ່ ກໍຍັງໄປແພ້ພ່າຍກັນໃນສານຫລວງ.

ຄຳອະທິບາຍ.– ຕັດສິນ : ຊຳຮະຄວາມ. ຫົວຫນ້າສານ : ຜູ້ພິພາກສາ, ຜູ້ຕັດສິນຄວາມ. ໄຕ່ສວນ : ສືບສວນ, ຊອກຫາເຣື່ອງ. ໂມ່ນ : ມ້ວນເຂົ້າປາກຫມົດ.

ຄຳຖາມ.– ໑.– ເວລາຍ່າງຫລິ້ນ, ທ້າວແສນກັບທ້າວດຸ່ນເຫັນຫຍັງ ? ໒.– ທ້າວແສນເວົ້າວ່າຢ່າງໃດ ? ໓.– ທ້າວດຸ່ນເດ ? ໔.– ແມ່ນໃຜເປັນຜູ້ຕັດສິນໃຫ້ ? ໕.– ທ້າວສາລີເປັນຜູ້ຕັດສິນໃຫ້ເຂົາຢ່າງໃດ ?

ໃຈຄວາມ.– ເຣື່ອງທີ່ທ້າວແສນ ກັບ ທ້າວດຸ່ນ ຜິດຖຽງກັນ ຍ້ອນຫມາກມ່ວງຄຸດຫນ່ວຍນັ້ນ ແລະພາໃຫ້ທ້າວສາລີຕັດສິນໃຫ້ ກໍພາໃຫ້ ທ້າວສາລີ ເອົາ ເນື້ອ ຫມາກມ່ວງຄຸດ ໄປ ກິນເສັຽ ເປົ່າ ໆ ເພາະເຫດນີ້ ເຮົາບໍ່ຄວນຜິດຖຽງກັນຈັກເທື່ອ. ການຜິດຖຽງກັນນີ້. ຫາປໂຍດບໍ່ໄດ້ ມີແຕ່ຄົນອື່ນເຂົາຈະໄດ້ປໂຍດນ້ອຍຫົວ.

ສັບ.– ຫມາກມ່ວງຄຸດ

ນາມ : ແສນ, ເປັກ, ຫົວຫນ້າສານ, ມີດງັບ.

ຄຸນນາມ : ລັກ, ນ້ອຍ.

ກິຣິຍາ : ຖຽງກັນ, ກາຍນາ, ຕັດສິນ, ໄຕ່ສວນ.

ໄວຍາກອນ.– ສຣະ ×ົວະ ×ົວ ຖ້າມີຕົວສະກົດເອົາຮູບ ×ົວ ອອກຈຶ່ງໄວ້ແຕ່ຕົວ ວ ດັ່ງນີ້



ກ.– ×ົວະ : ກົວະ + ງ ເປັນ ກວັງ
ຄົວະ + ນ „ ຄວັນ
ຂົວະ + ນ „ ຂວັນ

ຂ.– ×ົວ : ກົວ + ນ „ ກວນ
ສົວ + ນ „ ສວນ
ບົວ + ຍ „ ບວຍ

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຫມາກມ່ວງຄຸດ, ພວມ, ຖຸບິນ, ຖຽງກັນ, ມີດງັບ, ຢ່າ, ສອງສ່ຽງ, ຕົກຊະເງີ້.

ຄຳເຄົ້າດຽວກັນ.– ດີ : ຕົບ, ຕ່ອຍ. ເວົ້າ : ວ່າ, ວາຈາ.

ແຕ່ງເຣື່ອງ.– ໃຫ້ເຈົ້າແຕ່ງເຣື່ອງເດັກນ້ອຍຜູ້ນຶ່ງ ທີ່ນັກມີຄວາມວິວາດຜິດຖຽງກັນກັບຫມູ່ຄູ່ຂອງມັນ.

---

## ໓໗. ໂລບມາກມັກລາບຫາຍ

ແຕ່ກ່ອນ, ນາຍພານເຖົ້າຜູ້ນຶ່ງ ຫາລ້ຽງຊີວິດຕົນ ດ້ວຍການຂາຍຊີ້ນສັດປ່າ. ຕໍ່ມາລາວໄດ້ຕາຍໄປຍ້ອນໂຣກຊຣາແລະໄດ້ໄປເກີດເປັນນົກຫົງຄຳ ທັງຈື່ຊາດເກົ່າໄດ້ຢູ່ນສູ່ອັນ. ຫົງຄຳຕົວນັ້ນກໍຄິດປາຖນາຊ່ອຍຄອບຄົວຂອງຕົນທີ່ຕົກຢູ່ໃນຄວາມທຸກຍາກ, ມື້ນຶ່ງຈຶ່ງບິນມາຈອບປອງຢູ່ນເຮືອນເກົ່າຂອງຕົນ ແລະເວົ້າຕໍ່ເມັຽ ແລະ ລູກວ່າ



"ສູເຈົ້າພີ່ນ້ອງເຮີຍ ຂ້ອຍຢາກຊ່ອຍສູເຈົ້າ ສູເຈົ້າຕົກທຸກໄດ້ຍາກ ໃຫ້ສູເຈົ້າຫລົກ ເອົາຂົນ ຂອງຂ້ອຍຂົນນຶ່ງ ບ້ອນຄຳທີ່ມີປູ່ຂົນນີ້ ສູເຈົ້າ ຈະ ຈັບ ຈ່າຍ ຊື້ຂອງ ອັນໃດ ກໍ່ໄດ້ຕາມປາຖນາ ຖ້າຫມົດຄຳຂົນນີ້ແລ້ວ ໃຫ້ນຶກຫາຂ້ອຍ, ຂ້ອຍຈະມາຄ້ຳຈູນ ຫນູນສົ່ງສູເຈົ້າອີກ, ແຕ່ໃຫ້ສູເຈົ້າຈື່ໃສ່ວ່າຕ້ອງຫລົກເອົາເທື່ອລະຂົນທ່ານັ້ນ" ນາງເມັຽເຖົ້າ ກໍ່ ຫລົກ ເອົາ ຂົນ ທອງ ຂົນນຶ່ງ, ແລ້ວກໍ່ບິນຫນີໄປ.

ຄວາມອຸດົມຊົມຊື່ນກໍ່ກັບຄືນມາສູ່ຄອບຄົວນັ້ນອີກ. ທຸກຄົນກໍ່ມີຄວາມສນຸກສຸກສະບາຍ, ນານມາຄົນຜູ້ນຶ່ງໃນຄອບຄົວນັ້ນຢາກຮັ່ງມີເທື່ອດຽວໂລດຈຶ່ງຫລົກເອົາຂົນທອງຄຳເກືອບຫມົດ. ຂົນຄຳທີ່ຫລົກອອກມາກໍ່ກັບກາຍເປັນຂົນນົກທັມດາຫມົດ. ຕັ້ງແຕ່ນັ້ນມາທອງຄຳກໍ່ບໍ່ມາງອຍປອງປັ້ມເຮືອນນັ້ນອີກຈັກເທື່ອ.

ຄຳອະທິບາຍ.- ໂຣກຊຣາ : ພະຍາດເຖົ້າແກ່ທັມດາ. ພຸ້ນ : ຜ່ອງແຜ້ວຫມົດສຸ່ອນ. ປາຖນາ : ຄວາມມຸ່ງຫມາຍຢາກໄດ້ຕາມຄວາມປະສົງ. ທັມດາ : ຕາມເຄີຍ.

ຄຳຖາມ.- ໑.- ນາຍພານເຖົ້າຜູ້ນັ້ນຕາຍໄປເປັນຫຍັງ ?



໒.- ເປັນຫຍັງທອງຄຳຈຶ່ງມາອຸດຫນູນເຮືອນເກົ່ານັ້ນ ?

໓.- ຫົງຄຳເວົ້າຕໍ່ເມັຽແລະລູກວ່າຢ່າງໃດ ?

໔.- ເມື່ອ ຫລົກ ເອົາຫລາຍຂົນ, ຂົນຄຳນັ້ນກາຍເປັນອັນໃດ ? ດ້ວຍເຫດໃດ ?

ໃຈຄວາມ.- ນາຍພານເຖົ້າຜູ້ນັ້ນຕາຍໄປເປັນນົກຫົງຄຳ ແລ້ວບອກໃຫ້ເມັຽແລະລູກຫລົກເອົາຂົນຄຳຂົນນຶ່ງໄປຈັບຈ່າຍ ແຕ່ໃຫ້ຫລົກເອົາເທື່ອລະຂົນ ເມື່ອຫລົກເອົາຂົນທອງຄຳເກືອບຫມົດເທື່ອດຽວ, ຂົນຄຳນັ້ນກໍ່ກັບກາຍເປັນຂົນນົກທັມດາຫມົດ ເພາະເຫດນີ້ເຮົາບໍ່ຄວນໂລບມາກ ຄວາມໂລບມາກມັກພາໃຫ້ລາບຫາຍ.

ສັບ.- ໂລບມາກມັກລາບຫາຍ

ນາມ : ນາຍພານ, ຂົນ, ປອງປັ້ມ, ພີ່ນ້ອງ.

ຄຸນນາມ : ເຖົ້າ, ເກົ່າ, ຮັ່ງມີ.

ກິລິຍາ : ຫລົກ, ຕົກ, ນຶກ, ຈັບຈ່າຍ.

ໄວຍາກອນ.- ຕົວ ກ ແປງເປັນ ຂ ຫລື ຕ ດ ຕົວຢ່າງ

ເປັນ ຂ : ສົງການ ເປັນ ສັງຂານ

ຂ : ກາຍ ,, ຂາຍ

,, ຕດ : ພິຈິກ ,, ພິຈິຕ (ເດືອນພິຈິດ)

,, ຕ : ແກ ,, ແຕ (ແຕວົງ)

ຕົວ ດ ແລະ ຕ ແປງເປັນ ນ ໄດ້. ຕົວຢ່າງ :

ດົນຕີ ເປັນ ນັນດີ

ປະຕິທິນ ,, ປະນິທິນ

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຫງໍຄຳ, ປ່ອງຢ້ຽມ
ຕຶກຫຸກ, ຫລີກ, ຫນູນສິ່ງ, ຊຸມຊຸ່ນ, ຄວາມສຸກ
ບາບນຳກັນທັນ.

ຄຳເຄົ້າດຽວກັນ.– ຊີວິດ : ຊີວາ, ຊີວີ, ຊີວັງ.

ແຕ່ງເລື່ອງ.– ໃຫ້ເຈົ້າແຕ່ງເລື່ອງຄົນໂລບມາກຜູ້ນຶ່ງມາໃດບໍ່.

# ໓໙. ເຮົາຄວນເປັນຄົນສຸພາບ



ຄວາມສຸພາບ ຄື ຄວາ
ອ່ອນ ນ້ອມ ຖ່ອມ ຕົນ ທາງ ກາ
ທາງວາຈາ ແລະທາງນ້ຳໃຈ
ຄົນທົ່ວໄປ ການໃຫ້ມີການສຸພາ
ກໍເພື່ອ ປະສົງ ປາກໃຫ້ ຄົນ ອື່ນ
ຄວາມນິບດີ ໃນວາດວິງແລະວ
ຈາຂອງເຮົາ ຄວາມສຸພາບ
ຈະປາກົດໄດ້ນັ້ນ ກໍເນື່ອງມາຈາ
ຄວາມນັບຖື ຊຶ່ງເຮົາສະແດງ
ບຸກຄົນທັງຫລາຍ ນອກຈາກ
ນັ້ງຕ້ອງມີນ້ຳໃຈອ່ອນນ້ອມ ແລ
ຄວາມຮູ້ຈັກທັມນຽມ ຊຶ່ງເຮົາສ
ແດງດ້ວຍນິດໄສອັນດີຂອງເຮົານັ້



ອີກ. ທຸກ ໆ ຄົນຕ້ອງມີກິຣິຍາອັນດີ, ຕ້ອງທຳຄວາມເຄົາລົບໃນເວລາ ຄວນທຳ. ເມື່ອເຮົາພົບຜູ້ເຖົ້າຫລືຜູ້ໃຫຍ່ຕ້ອງເປີດຫມວກ, ກົ້ມຫົວ ຄຳນັບຫລືບໍ່ມີໄຫວ້. ຕ້ອງຕອບຄຳຖາມຜູ້ອື່ນໂດຍດີ, ໃຫ້ວ່າໂດຍຂ້າ ນ້ອຍຫລືເຈົ້າ, ໃຫ້ທຳທາງສຸພາບ ແລະປາໃຫ້ໃພດໃນຄວາມ ເວົ້າຂອງເຮົາ. ການສ່ວນນີ້ບໍ່ເປັນການຍາກສັງດອກ, ທັງບໍ່ເປືອງ ເຫື່ອແຮງແລະເງິນຄຳສັງເລີຍ.

ຄວາມສຸພາບທີ່ເຮົາບໍ່ເສັຽສັງນ້ອຍນັ້ນ, ມີແຕ່ເຮັດໃຫ້ຄົນອື່ນ ຮັກແພງເຮົາ. ເກີດມາຈຳເປັນຕ້ອງປຸກັບຄົນທັງຫລາຍ, ສະນັ້ນເຮົາ ຈຶ່ງມີຄວາມສຸພາບຕໍ່ຄົນທັງຫລາຍສເມີ, ເນື່ອຫນັງມີຊຶ່ງສິດໃສ ສະແດງໃຫ້ເຫັນຄວາມຫນຸ່ມນ້ອຍ ແລະເຫື່ອແຮງຂອງຄົນສັນໃດ, ຄວາມສຸພາບອ່ອນນ້ອມອັນແທ້, ກໍສະແດງໃຫ້ເຫັນນ້ຳໃຈອັນຈິບງາມ ແລະສັດຊື່ຂອງຄົນສັນນັ້ນ.

ຄຳອະທິບາຍ.– ສຸພາບ : ຄວາມລະມ່ອມລະໄມ, ຮຽບຮ້ອຍດີ. ວາຈາ : ຄວາມເວົ້າ. ທັມນຽມ : ສິ່ງທີ່ຄົນທັງຫລາຍນິຍົມກັນວ່າ ດີງາມ. ນິດໄສ : ນ້ຳໃຈທີ່ເຄີຍເຮັດມາຈົນເຄີຍ.

ຄຳຖາມ.– ໑.– ເປັນຫຍັງເຮົາຄວນເປັນຄົນສຸພາບ ? ໒.– ຫມົດ ທຸກຄົນຕ້ອງມີກິຣິຍາປ່າງໃດ ? ໓.– ກິຣິຍາສຸພາບນີ້

ໂດ້ນໍາຜົນມາໃຫ້ແກ່ເຮົາຢ່າງໃດ ? ໔.— ເວລາເຮົາພົບຜູ້ເຖົ້າຫລືຜູ້ໃຫຍ່ຕ້ອງເຮັດຢ່າງໃດ ?

ໃຈຄວາມ.— ຄວາມສຸພາບນັ້ນ ພາໃຫ້ຄົນອື່ນມີຄວາມຍິນດີໃນວາດວົງແລະວາຈາຂອງເຮົາ. ເມື່ອເຮົາມີຄວາມນັບຖື, ນໍ້າໃຈອ່ອນນ້ອມ, ຄວາມຮູ້ຈັກທັມນຽມແລະກິລິຍາອັນດີຕໍ່ບຸຄົນທັງຫລາຍແລ້ວ, ຄົນອື່ນກໍ່ຈະຮັກແພງເຮົາ. ສະນັ້ນ, ເຮົາຄວນມີຄວາມສຸພາບຕໍ່ຄົນທັງຫລາຍສເມີ.

ສັບ.— ຄວາມສຸພາບ.

ນາມ : ວາດວົງ, ນໍ້າໃຈ, ທັມນຽມ, ຜູ້ເຖົ້າ.

ຄຸນນາມ : ອ່ອນນ້ອມ, ສຸພາບ, ສັດຊື່

ກິລິຍາ : ປະສົງ, ສະແດງ, ພົບພໍ້, ຮັກແພງ.

ໄວຍາກອນ.— ຕົວ ຕ ແປງເປັນ ກ ແລະ ດ ຫລື ຖ ກໍໄດ້ ຕົວຢ່າງ:

| | | | | |
|---|---|---|---|---|
| ເປັນ | ກ | ນາຄຕາ | ເປັນ | ນາຄກາ |
| „ | ກ | ສາບຕາ | „ | ສາບກາ |
| „ | ກ | ຕຶກຄອງ | „ | ກຶກກອງ |
| „ | ດ | ປິຕາ | „ | ບິດາ |
| „ | ດ | ມາຕາ | „ | ມາດາ |
| „ | ດ | ມຸກຕາ | „ | ມຸກດາ |



| | | | | |
|---|---|---|---|---|
| ເປັນ | ດ | ຕາຣາ | ເປັນ | ດາຣາ |
| „ | ຖ | ບານແຕ | „ | ບານແຖ |

ຕົວ ທ ແປງເປັນ ຕ ໄດ້ ຕົວຢ່າງ:

ອິນທາ ເປັນ ອິນຕາ

ການສະກົດຄໍາ.— ໃຫ້ນັກຮຽນສະກົດຄໍາຕໍ່ໄປນີ້: ປາກົດ, ສະແດງ, ອ່ອນນ້ອມ, ທັມນຽມ, ຫນັງຊຸ່ມສົດ, ຫນຸ່ມນ້ອຍ.

ຄໍາເທົ່າດຽວກັນ.— ອ່ອນນ້ອມ : ອ່ອນລະອຽດ, ອ່ອນໂຍນ.

ແຕ່ງເລື່ອງ.— ໃຫ້ເຈົ້າແຕ່ງເລື່ອງຄົນສຸພາບຜູ້ນຶ່ງ.

# ໔໐. ຄຶດກ່ອນຈຶ່ງເວົ້າ



ເຈົ້າເມືອງຜູ້ນຶ່ງ ຂຽນຈົດຫມາຍເຖິງລູກຂອງເພິ່ນ, ຊຶ່ງໄປຮຽນຢູ່ໃນນະຄອນວຽງຈັນອາຊທານີຂອງປະເທດລາວ.

ລູກຮັກຂອງພໍ່!

ແລງວານນີ້, ຄົນປູ່ຂ້າງເຮືອນເຮົາ ເກີດຕີກັນຍ້ອນຄວາມເ
ສອງ—ສາມຄຳ. ເຫດນີ້ພໍ່ຈຶ່ງຂຽນຈົດຫມາຍມາຫາເຈົ້າ ເພື່ອເຕື
ສະຕິເຈົ້າກ່ຽວກັບການເວົ້າຈາສັກຫນ່ອຍນຶ່ງ; ລູກເອີຍ! ອັນຄວາ
ເວົ້ານີ້ຈະວ່າຫວານກໍ່ຫວານກວ່ານ້ຳອ້ອຍນ້ຳຕານ ຈະວ່າຂົມກໍ່
ກວ່າເກືອເຂົາຮໍ. ອ້ອຍຕານຫວານປູ່ລີ້ນບໍ່ພໍເມື່ອໃນຍາມຫນ່ອຍ
ເຫີຍຫາຍຈາງຈືດເລີຍລືມຈ້ອຍ, ສ່ວນວ່າຫວານຄວາມເວົ້າຫວານ
ບໍ່ຮູ້ເບື່ອ ຫວານຈອດໃຈບໍ່ແລ້ວພັນນີ້ເພື່ອນບໍ່ເປັນລູກເອີຍ. ອັນນຶ່ງ
ປາກລີ້ນຂົມຂື່ນ ເກືອເຂົາຮໍບໍ່ພໍວັນຄືນກໍ່ເຄືອດຄາຍເສ້ຽງສ້ຽງ, ສ່ວນວ
ຂົມຄວາມເວົ້າຈາຊາມຂົມບຶງຄາຂອດໃຈບໍ່ເມື່ອປານໄຂ້ປ່ວຍ ພໍ່ນາ
ດັ່ງນັ້ນລູກຈະເວົ້າກັບໃຜໃຫ້ຮູ້ຈັກຜູ້ນ້ອຍຜູ້ໃຫຍ່, ເວົ້າໃຫ້ຖືກກາລະ, ເວົ
ໃຫ້ພໍງາມ, ອັນນຶ່ງປາກເວົ້າຫົວະໃຫ້ຜູ້ອື່ນໄດ້ກິນໃຫ້ເວົ້າແຕ່ທາງຈະເ
ໃຫ້ຜູ້ອື່ນຮັກຫອມກັບລູກເຮີຍ! ຖ້າລູກເຮັດໄດ້ດັ່ງເວົ້າມານີ້, ຜູ້ໃຫ
ຈະອີດູກູນາລູກ, ຫມູ່ເພື່ອນກໍ່ຈະຮັກແພງລູກຕລອດໄປ.

<u>ຄຳອະທິບາຍ</u>.- ຊຸຫານີ : ເມືອງຫລວງຂອງປະເທດ. ເຕືອ
ສະຕິ : ເຕືອນໃຫ້ດັ່ງໃຈຫມັ້ນ. ເຄືອດຄາຍ : ບົກບາງ
ເບົາບາງ. ກາລະ : ເວລາ. ຈ້ອຍ : ມິດໄປ.

<u>ຄຳຖາມ</u>.— ໑.— ເມື່ອປາກເວົ້າຫຍັງເຮົາຕ້ອງເຮັດຢ່າງໃດ?
໒.— ເຮົາຄວນເວົ້າຢ່າງໃດເພິ່ນຈຶ່ງຈະຮັກແພງເຮົາ?



໓.— ຄວາມເວົ້າຢ່າງໃດຈຶ່ງຈະຮຽກວ່າຫວານ?
໔.— ຄວາມເວົ້າຢ່າງໃດຈຶ່ງຈະຮຽກວ່າຂົມ?

<u>ໃຈຄວາມ</u>.— ຄົນເຮົາເກີດບິດຖຽງຂ້າຕີຊັງກັນ ຫລືຮັກແພງກັນກໍ່ຍ້ອນຄວາມເວົ້າ. ເມື່ອຈະເວົ້າຫຍັງກັບໃຜໃຫ້ຮູ້ຈັກຜູ້ນ້ອຍຜູ້ໃຫຍ່, ເວົ້າໃຫ້ຖືກກາລະ, ເວົ້າໃຫ້ພໍງາມໃຫ້ບ່ອນຫລ ແລະຖືກໃຈເພິ່ນ, ເພິ່ນກໍ່ຈະອີດູກູນາເຮົາ. ເພາະເຫດນີ້, ເຮົາຕ້ອງຄິດກ່ອນຈຶ່ງເວົ້າ.

<u>ສັບ</u>.— ຄິດກ່ອນຈຶ່ງເວົ້າ.

<u>ນາມ</u> : ຈົດຫມາຍ, ລູກ, ເຮືອນ, ເກືອເຂົາ, ລີ້ນ, ນ້ຳຕານ.

<u>ຄຸນນາມ</u> : ຫວານ, ຂົມ, ຈາງ.

<u>ກິລິຍາ</u> : ຂຽນ, ເຕືອນ, ຮູ້, ຜິດກັນ, ຮັກຫອມກັນ.

<u>ໄວຍາກອນ</u>.— ຕົວ ນ ແປງເປັນ ງ ໄດ້ ຈຳເພາະຄຳທີ່ໃຊ້ຕົວ ນ ສະກົດແລະມີຕົວ ຈ, ຊ, ບ. ຕາມຫລັງໃນຄຳປາລີດັ່ງນີ້:

| | | |
|---|---|---|
| ປັນຈາລະ | ເປັນ | ເປັງຈານ |
| ປັນຊະລະ | „ | ເປັງຊອນ |
| ມັນຈະ | „ | ເມັງ |
| ປັນຈະ | „ | ເບັງ |
| ກັນບາ | „ | ເກັງບາ |
| ອັນໄບ | „ | ເອັງໄບ |

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ອາຊຸທານີ, ປະເທ
ຈົດໝາຍ, ຫວານ, ຈາງ, ຈືດ, ເສື່ອມ, ຂົມຂື່ນ, ເສັ້ງສ

ຄຳຄ້າຍຄືກັນ.– ເທີບ : ທາບ. ເສັ້ງສັ້ງ : ສົ້ງສັ້ງ, ຈາງຈື
ເວົ້າບົວະ : ເວົ້າໄບກ, ເວົ້າບອກ.

ແຕ່ງເອື້ອງ.– ໃຫ້ເຈົ້າຂຽນຈົດໝາຍສະບັບນຶ່ງໄປລາບາຍຄຣູອ
ເຈົ້າເພື່ອໄປສິ່ງສະການແມ່ຂອງເຈົ້າພາຍໃນ ໓ ວັນ.

# ໔໑. ຄວາມຈເຣີນຂອງການຄົມນາຄົ



ມື້ເຊົ້ານີ້, ພໍ່ຂອງຂ້ອຍໄດ້ຮັບຈົດໝາຍຈາກອ້າຍຂອງຂ້ອ
ສະບັບນຶ່ງ, ພໍ່ຂອງຂ້ອຍເລົ່າໃຫ້ຟັງວ່າ ແຕ່ເກົ່າກ່ອນເພີ່ນຮ້ອ
ຈົດໝາຍສະບັບນຶ່ງວ່າຈົດໝາຍກ້ານນຶ່ງ. ແຕ່ຖ້າເປັນຈົດໝາ



ຂອງຜູ້ບ່າວຜູ້ສາວຂຽນເຖິງກັນເພີ່ນບໍ່ຮ້ອງຈົດໝາຍ ເພີ່ນຮ້ອງວ່າ ສານ ການສົ່ງຂ່າວໃນແຕ່ກ່ອນໃນປະເທດລາວເຮົາບໍ່ສະດວກຄືແນ່ ດຽວນີ້ ຈົດໝາຍຈາກແຂວງນຶ່ງໄປຫາແຂວງນຶ່ງເສັຽເວລາເປັນເດືອນ, ແຕ່ດຽວນີ້ຣັຖບານໄດ້ຕັ້ງໂຮງການຂຶ້ນມີໜ້າທີ່ສົ່ງຂ່າວ, ສົ່ງຂອງສຳລັບຄົນທົ່ວໄປຮ້ອງວ່າ ກົມໄປສະນີ ໂທຣະເລກ ໂທຣະສັບ ແລະເພີ່ນຕັ້ງໂຮງການປ່າງດຽວກັນນີ້ໄວ້ທຸກເມືອງ ທຸກແຂວງ, ຖ້າເຮົາຢາກສົ່ງຂ່າວໄປຫາໃຜ ກໍ່ຂຽນຄວາມໃສ່ເຈັ້ຍພັບໃສ່ຊອງສລັກຫລັງຊອງເຖິງຜູ້ຮັບ ຊື້ສະແຕມຕິດ, ສົ່ງໃຫ້ເຈົ້າໜ້າທີ່ເພີ່ນ, ເພີ່ນກໍ່ສົ່ງໃຫ້ເອງເຖິງຜູ້ຮັບນັ້ນ ຈະປູ່ຕ່າງເມືອງຕ່າງແຂວງຫລືຕ່າງປະເທດກໍ່ຕາມ. ຖ້າເຮົາຟ້າວກວ່ານັ້ນກໍ່ສົ່ງຂ່າວທາງໂທຣະເລກ ຂ່າວນັ້ນຈະເຖິງໄວກວ່າທາງຈົດໝາຍ. ປູ່ຕາມໂຮງການຕ່າງໆ ໃນເມືອງໃຫຍ່ເພີ່ນມີໂທຣະສັບໄວ້ເວົ້າຕິດຕໍ່ກັນ ໄດ້ຍິນຄວາມເວົ້າກັນຄືເວົ້າຕໍ່ໜ້າກັນບໍ່ຕ້ອງຍ່າງໄປຫາກັນເລີຍ, ນັບວ່າການສົ່ງຂ່າວກັນສມັຍນີ້ສະດວກຮອດໄວ, ໄວ້ໃຈໄດ້ດີກວ່າແຕ່ກ່ອນຮ້ອຍເທື່ອ.

ຄຳອະທິບາຍ.– ການຄົມນາຄົມ : ການຕິດຕໍ່. ສານ : ຈົດໝາຍ ໝັ້ນ. ຣັຖບານ : ການປົກຄອງແຜ່ນດິນ, ອຳນາດແຜ່ນດິນ. ໂທຣະເລກ : ເຄື່ອງຂຽນແທນຄຳເວົ້າໄປໄກດ້ວຍກະແສໄຟຟ້າ. ໂທຣະສັບ : ເຄື່ອງລົມກັນໄປໄກດ້ວຍກະແສໄຟຟ້າ. ກົມໄປສະນີ : ພແນກສົ່ງຂ່າວ, ພແນກເດີນສານ. ສລັກຫລັງຊອງ : ຂຽນຊື່ຜູ້ຈະຮັບໜັງສືໃສ່ຫລັງຊອງ.

ຄຳຖາມ.— ໑.— ການສົ່ງຂ່າວກັນແຕ່ກ່ອນເປັນປາງໃດ?
໒.— ເປັນຫຍັງການສົ່ງຂ່າວກັນດຽວນີ້ໄດ້ຮອດເຮັວ?
໓.— ເພື່ອຢາກໃຫ້ຂ່າວນັ້ນຮອດໄວຕ້ອງສົ່ງທາງໃດ?
໔.— ເພື່ອຢາກເວົ້າຕິດຕໍ່ກັນໄດ້ໄວຕ້ອງເວົ້າທາງໃດ?

ໃຈຄວາມ.—ການສົ່ງຂ່າວກັນແຕ່ກ່ອນໃນປະເທດລາວເຮົາ,ບໍ່ສະດວກ ແລະຮອດເຮັວ. ຈົດໝາຍຈາກແຂວງນຶ່ງໄປຫາແຂວງ ນຶ່ງຕ້ອງເສັຽເວລາເປັນເດືອນ. ດຽວນີ້ການສົ່ງຂ່າວໄປຫາ ກັນກໍ່ໄດ້ໄວກວ່າແຕ່ກ່ອນຫລາຍສ່ວນ ກໍ່ຍ້ອນມີກົມໄປສະນີ, ໂທຣະເລກ, ໂທຣະສັບ. ສະນັ້ນການຄົມນາຄົມຈຶ່ງຈເຣີນ.

ສັບ.— ການຄົມນາຄົມ.

ນາມ : ຈົດໝາຍ, ໂທຣະເລກ, ໂທຣະສັບ, ຊອງ.

ຄຸນນາມ : ດີ.

ກິຣິຍາ : ຮັບ, ໄປ, ສົ່ງ, ຂຽນ.

ໄວຍາກອນ.— ຕົວ ປ ແປງເປັນ ບ ແລະ ຜ ໄດ້ດັ່ງນີ້:

| | | | | |
|---|---|---|---|---|
| ເປັນ ບ | ດັ່ງ | ປາຣະມີ | ເປັນ | ບາຣະມີ |
| | ,, | ປິດາ | ,, | ບິດາ |
| | ,, | ປະວະຣະ | ,, | ບໍວອນ |
| ເປັນ ຜ | ,, | ປາສາດ | ,, | ຜາສາດ |
| | ,, | ໄປດ | ,, | ໄຜດ |
| | ,, | ປຍາ | ,, | ຜຍາ |



| | | | |
|---|---|---|---|
| ດັ່ງ | ປຽນ | ເປັນ | ຜ່ຽນ |
| ,, | ປານກາງ | ,, | ຜ້ານກາງ |
| ,, | ປານ | ,, | ຜານ |

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ກົມໄປສະນີ, ແຂວງ, ຜູ້ຮັບ, ໂທຣະສັບ.

ຄຳເຄົ້າດຽວກັນ.— ຮ້ອງ : ຮຽກ. ໄຣ : ຣີ. ເຣ : ຣາ.

ແຕ່ງເຣື່ອງ.— ຈົ່ງແຕ່ງເຣື່ອງການຂຽນຈົດໝາຍສະບັບນຶ່ງ ທີ່ເຈົ້າ ສົ່ງໄປຖາມຂ່າວຂອງໝູ່ເຈົ້າຜູ້ນຶ່ງ.

---

# ໔໒. ບຸນຄຸນຂອງຄຣູ (ຄຳກາບ)



ມາ ຈັກເລົ່າ ການ ແຫ່ງ ຄຸນຄຣູເພິ່ນຊ່ວ້ານຊູ ປູງເຮົາບໍ່ ຄ່ອນຄຸນບໍ່ນ້ອຍ ຊ່າງສັ້ງ ຊ່າງສອນ ເພິ່ນບໍ່ທໍ່ອນຫວງສັງສັກສິ່ງ ໃຈ ຄ້ອຍ ກໍ່ງ ນຳ ໝູ່ ນັກ ຮຽນ ອິດ ສາ ພຽນຂຽນ ນຳເວົ້າ ນຳທັງ ຫລິງ ລ່າ ຫລຽວເຫລືອດ ໄປ ມາ ພິຈາຣະນາ ໃຜບໍ່ທັນໄດ້ ເພື່ອຢາກ ໃຫ້ຮູ້ທົ່ວທັນ ກັນແນວ ສຳຄັນ ເພິ່ນ ແຫ່ງຈື່ຈຳຮູ້ ພ້ອມພາກັນແລ້ວຈຶ່ງເຊົາ. ເຫັນ

ເຮົາເຫງົາເພິ່ນຊ່າງຫາອ້ ມາເວົ້າເລົ່າເປັນເຣື່ອງນິທານເພື່ອເປັນກອ
ແກ້ເຫງົາໃຫ້ຊື່ນ ໃຫ້ເຮົາຕື່ນຕົ້ງຕໍ່ການຮຽນ ຄັນເຮົາພຽນຮຽນດີເພິ
ບ້ອງສອບອຶ່ນຫ້ອງ ເຫັນຜູ້ໃດດີກໃນຫົວອົກຂອງຄຣູຮ້ອນວຸ່ ຄັນເຫັ
ຫນຸ່ລູກສິດຂອງຕົວ ບໍ່ເມົານົວເສັງດີສອບໄດ້ຫນ້າເພິ່ນໄຫນ່ຫົວບຸ
ບໍ່ເຊົາຜລບາ.

<u>ຄຳອະທິບາຍ</u>.– ອົດສາພຽນ : ຕັ້ງອົກຕັ້ງໃຈບໍ່ທໍ້ຖອຍໃນການອົ
ເນື່ອຍ. ພິຈາຣະນາ : ຄຶດໄຕ່ຕອງ. ສອດສ່ອງ : ມອງ
ບ້ອງ : ສັນຣະເສີນ.

<u>ຄຳຖາມ</u>.— ๑.— ຄຣູເພິ່ນຄຶດປ່າງໃດຕໍ່ນັກຮຽນ ? ๒.— ເມື່ອຄຣູເຫັ
ນັກຮຽນເຫງົາເຄເພິ່ນເວົ້າປ່າງໃດ ? ๓.— ເມື່ອນັກຮຽ
ສອບບໍ່ໄດ້ເພິ່ນເປັນປ່າງໃດ ? ๔. ເຮົາຄວນນັບຖືຄຣູບໍ
๕.— ເປັນຫຍັງຈຶ່ງຄວນນັບຖື ?

<u>ໃຈຄວາມ</u>.- ຄຸນຂອງຄຣູນັ້ນຫລາຍທີ່ສຸດ ເພາະເພິ່ນເປັນ ຊວ້ານຊູລູ
ສິດໂດຍສອນວິຊາບໍ່ ປົດບັງທັງເບິ່ງແຍງແນະນຳໃຫ້ຮູ້ທົ່ວ
ກັນ ເພິ່ນຊ່າງເວົ້າບໍ່ໃຫ້ເຫງົາໃຫ້ນັກຕໍ່ການຮຽນ ໃຜຮຽນໄດ້
ເກັ່ງເພິ່ນກໍດີໃຈ ໃຜບໍ່ເກັ່ງເພິ່ນຈະພຽນສອນໃຫ້ທັນກັນ
ຜົນທີ່ສຸດໃຜເສັງໄດ້ຄຣູດີໃຈບ້ອງບໍ່ສັນຣະເສີນ ໃຜເສັງຕົກ
ຄຣູຈະໂສກເສົ້າເສັຽໃຈ.

<u>ສັບ</u>.— ບຸນຄຸນຂອງຄຣູ.

<u>ນາມ</u> : ຄຣູ, ນັກຮຽນ, ຫ້ອງ, ນິທານ.



<u>ຄຸນນາມ</u> : ເຫງົາ, ຮ້ອນ, ດີ, ຊື່ນ.

<u>ກິຣິຍາ</u> : ສອນ, ຫລິ້ງ, ລໍ້, ພິຈາຣະນາ.

<u>ໄວຍາກອນ</u>.– ຕົວ ວ ແປງເປັນ ພ ດັ່ງນີ້:

ເທວີ ເປັນ ເທພີ

ວານິຊ „ ພານິດ

ແປງ ອະທິ ເປັນ ນີໄດ້ ຕົວປ່າງ ອະທິປາບະ ເປັນ ນິປາຍ

<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ທ່ອນທາວ,
ຫລຽວເຫລືອດ. ພ້ອມພໍ່າ, ຮ້ອນວຸ່, ຫົວບຸ້ນ.

<u>ຄຳເກົ່າຽວກັນ</u>.– ນິທານ : ນິທົມ, ນິເທດ. ເຫງົາ : ຫງ່ວມ
ຫງ້ວມ. ຮ້ອນວຸ່ : ຮ້ອນວານ.

<u>ແຕ່ງເຣື່ອງ</u>.— ໃຫ້ເຈົ້າແຕ່ງເຣື່ອງນາຍຄຣູຜູ້ນຶ່ງ ເພິ່ນເປັນປ່າງໃດ.

# ๔๓. ບຸນຄຸນຂອງຄຣູ (ຕໍ່) (ຄຳຮ່າຍ)



ບັດນີ້ບັງສຳເນົາຕອນສອງ　ເລົ່າຕາມຄອງກ່ຽວກໍ່
ເປັນຮ່າຍດ່ຄຸນຄຣູ　ເພິ່ນອິດຸສອນສັ່ງ
ໃຫ້ເຖິງປົ່ງວິຊາ　ມີປັນຍາຍວດຍິ່ງ.
ເກິບຊັບສິ່ງທັ້ງຫລາຍ　ຄືດັ່ງປາຍກ້ອນແກ້ວ
ກໍແຜ້ວຫົນທາງ　ໃຫ້ເບົາບາງຫນານຫນ່
ຫາຍເຫືອດບໍ່ຫລຸມດິນ　ໃຫ້ເຮົາສົນຄຶດໄດ່
ເດີນເຕົ້າໄດ່ໄປມາ　ໄດ້ຊອກຫາອາຊີບ
ພາຕົນຮີບເຮັ່ງເຮືອງ　ຄືພົລເມືອງທຸກຫມູ່
ມີບ່ອນຢູ່ສຳບາຍ　ເງິນຄຳຫລາຍບົດຍິ່ງ
ໄດ້ຖຽດກິ່ງສັກສູງ　ມີເພື່ອນປູງສາມາດ
ດັ່ງນັ້ນ,　ຢ່າປມາດຄຸນຄຣູ　ຜູ້ເຄີຍຊູຊ້ວ່ານສິງ
ໃຫ້ເຮົາຈິ່ງແປງຢ່າ　ເພິ່ງຫວນທຳນົບນອບ
ຢ່າລືມລອບລືມຄຸນ　ວອນເອົາບຸນເພິ່ນຊ່ວຍ
ຈັກໄດ້ສຸກຊື່ນຊ້ອຍ　ຍອງເທົ່າຊົ່ວຊີວາແທ້.

ຄຳອະທິບາຍ.— ສຳເນົາ : ຂໍ້ຄວາມ.　ຮ່າຍ : ຄຳກ່ຽວເນື່ອງກັບຄື
ໃດງ.　ອາຊີບ : ວິຊາຫາກິນ.　ຊີວາ : ຄວາມເປັນຢູ່.

ຄຳຖາມ.— ໑.— ຄຣູເພິ່ນມີຄວາມອິດຸນັກຮຽນບໍ່? ໒.— ເພິ່ນສອນ ນັກຮຽນໃຫ້ເປັນຄົນແນວໃດ? ເຮົາຄວນຢຳເກງຄຣູບໍ່? ໓.— ເພາະເຫດໃດຈິ່ງຄວນຢຳເກງຄຣູ? ໔.— ເຣື່ອງ ນີ້ເພິ່ນຫມາຍສອນເຮົາປາງໃດ?



ໃຈຄວາມ.— ຄຣູນັ້ນມີຄວາມອິດຸສັ່ງສອນນັກຮຽນ ໃຫ້ມີວິຊາຄວາມຮູ້, ໃຫ້ມີປັນຍາສລາດແຫລມຄົມ ໃຫ້ມີວິຊາຫາກິນມີບ່ອນຢູ່ສະບາຍ, ມີເງິນຄຳບົດສັກສູງ. ດັ່ງນັ້ນ, ເຮົາຢ່າໄດ້ປມາດລືມຄຸນຄຣູ, ເຮົາຄວນເຄົາຣົບຢຳເກງນັບຖືເພິ່ນຢູ່ສເມີ.

ສັບ.— ບຸນຄຸນຂອງຄຣູ (໓)

ນາມ : ຄຣູ, ກ້ອນແກ້ວ, ຫນານຫນ່, ປັນຍາ.

ຄຸນນາມ : ຍວດຍິ່ງ, ສູງ.

ກິຣິຍາ : ສອນສັ່ງ, ແຜ້ວ, ບໍ່, ຊອກ, ປມາດ.

ໄວຍາກອນ.— ສົນທິ ແມ່ນ ວິທີ ເອົາ ຄຳສອງ ຄຳຕໍ່ ກັບໃຫ້ ເປັນຄຳນຶ່ງ ເພື່ອຕັດອັກສອນໃຫ້ສັ້ນເຂົ້າ ແລະໃຫ້ຄຳເວົ້າຄ່ອງກັບດ້ວຍ ຄຳທີ່ຈະຕໍ່ກັບໄດ້ນັ້ນແມ່ນຄຳຫນ້າທີ່ມີພຍາງທ້າຍເປັນສຣະ ແລະຄຳຫລັງທີ່ມີພຍາງຫນ້າກໍເປັນສຣະ (ສຣະທ້າຍຂອງຄຳຫນ້າເອີ້ນວ່າ ສຣະຫນ້າ ສຣະຫນ້າຂອງຄຳຫລັງເອີ້ນວ່າສຣະຫລັງ) ມີຫລັກດັ່ງນີ້:

ກ.— ສຣະຫນ້າແມ່ນ ×ະ ຫລື ×າ ຕໍ່ກັບສຣະຫລັງທີ່ເປັນ ×ະ ຫລື ×າ ກໍເປັນ ×າ ຕົວຢ່າງດັ່ງນີ້:

ສຸຂະ + ອະພິບານ ເປັນ ສຸຂາພິບານ
ມະຫາ + ອານິສົງ ,, ມະຫານິສົງ

ຖ້າສຣະຫລັງແມ່ນ ×ັ ແລະມີຕົວສະກົດໂຮມເຂົ້າກັບ ເປັນຕົວຢ່າງດັ່ງນີ້:

ນະຕາ + ອັສຈັນ ເປັນ ນະຕັສຈັນ
ນະຕາ + ອັບຕະ ເປັນ ນະຕັບຕະ

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້: ຄ່ອງກ້ຽວ, ບວດບຶງ, ເກີນຊັບ, ແຜ້ວ, ຫລຸບຕີນ, ແຮງເຮືອງ, ເພື່ອນຝູງ, ຊວ້ານສົງ.

ຄຳເຄົ້າດຽວກັນ.— ແປງປ່າ : ປ້ານປ່ຳ, ປ້ານປ່ອນ. ຊີວາ : ຊີວັງ, ຊີວັນ, ຊີວິດ.

ບົດຂຶ້ນໃຈ.— ໃຫ້ນັກຮຽນທ່ອງກອນໃນບົດນີ້.

ແຕ່ງເລື່ອງ.— ຈົ່ງແຕ່ງເລື່ອງບຸນຄຸນຂອງຄຣູທີ່ເຮົາຄວນນັບຖື.

## ໔໔. ການເກື້ອກູນຜູ້ອື່ນ



ແຕ່ກ່ອນຈານຄຣູຄຳເປັນຜູ້ມີກິລິຍາຜູ້ດີ, ມີສະຕິຖີ່ຖ້ວນແລະມີນ້ຳໃຈກວ້າງຂວາງ, ລາວບໍ່ເວົ້າຂວັນຜູ້ອື່ນຈັກເທື່ອ. ໃນທີ່ປະຊຸມ



ຊົນ, ຖ້າຜູ້ໃດຜູ້ນຶ່ງຫາກເວົ້າເຖິງເລື່ອງບໍ່ຈົບບໍ່ງາມ ຂອງຜູ້ທີ່ຢູ່ໃນປະຊຸມ, ລາວກໍ່ຕໍ່ສູ້ຕາງຜູ້ນັ້ນສເນີ, ຫລືເວລາຜູ້ເວົ້ານັ້ນເຊົາປາກ, ລາວກໍ່ບໍ່ລືມຕື່ມໃສ່ວ່າ "ອັນນີ້ກໍ່ເປັນແຕ່ເຂົາເລົ່າລືທໍ່ນັ້ນດອກ, ບໍ່ເປັນການຄັກແນ່ເລີຍວ່າສຽງຂອງເຂົາເລົ່າລືນັ້ນ ຈະແນ່ນແທ້ຫລືບໍ່" ແລ້ວລາວຊ້ຳເລົ່າແຕ່ຄວາມດີຂອງຜູ້ຖືກເວົ້າຂວັນນັ້ນ ໃຫ້ໝູ່ທັງຫລາຍຟັງອີກ.

ແຕ່ລາວຕ້ອງປ້ອງກັນກຽດຕິຍົດຂອງລາວໄວ້ດີກວ່າສິ່ງອື່ນໆ ກີລາວບໍ່ສະແດງກິລິຍາວາຈາອັນຮ້າຍຊາດ ແລະບໍ່ສະແດງຄວາມເສັຽໃຈໄວ້ພຍາບາດກັບໃຜຈັກເທື່ອ. ໃນເວລາຊຸມໃດະຖ້າຜູ້ໃດເວົ້າປມາດລາວ, ລາວກໍ່ເວົ້າວ່າ "ຄົນຜູ້ນີ້ດື່ມເຫລົ້າໃພດ ລາວເມົາຈົນບໍ່ຮູ້ເນື້ອຄິງ ຂ້ອຍບໍ່ຈຳເປັນຈະຕ້ອງຖຽງກັບລາວເລີຍ."

ຄວາມມີນ້ຳໃຈມຸທຸອ່ອນຫວານ ແລະກວ້າງຂວາງເກື້ອກູນຜູ້ອື່ນຂອງຈານຄຣູຄຳນີ້, ພາໃຫ້ເພື່ອນຝູງຂອງລາວມີໃຈຮັກຫອມແລະນັບຖືລາວຫມົດທຸກຄົນ.

ຄຳອະທິບາຍ.— ເກື້ອກູນ : ເພື່ອແຜ່. ເວົ້າຂວັນ : ເວົ້າເລື່ອງບໍ່ດີຂອງຜູ້ອື່ນສູ່ຫມູ່ຟັງ. ພຍາບາດ : ຈອງເວນ. ອິດສາ : ບຽດບຽນ. ມຸທຸ : ອ່ອນຫວານ.

ຄຳຖາມ.— ໑.— ຈານຄຣູຄຳເປັນຄົນຮູ້ຢ່າງໃດແລະມີສະຕິຢ່າງໃດ?
໒.— ໃນເວລາຊຸມໃດະລາວທຳກິລິຍາຢ່າງໃດ?
໓.— ເພື່ອນຂອງລາວມີໃຈເອື້ອເຟື້ອຢ່າງໃດ?
໔.— ກິລິຍາວາຈາຂອງລາວເປັນຢ່າງໃດ?

ໃຈກວາງ.– ການທຳເກື້ອກູນຜູ້ອື່ນ ຈາບຄອຸຄຳລາວເປັນຄົນຖືກືອື
ດີ ບໍ່ເວົ້າຂວັນແລະດູຫມິ່ນປມາດບຸກຄົນໃດ ໆ ຈັກເທື
ລາວຮັກສາກຽດຂອງ ບຸກຄົນອື່ນທຸກ ຖ້ວນຫນ້າບໍ່ໃຫ້ຮູ້ໄ
ຊັງລາວຈັກຄົນເລີຍ. ເພື່ອນຝູງຂອງລາວກໍມີໃຈຮັ
ຫອມແລະນັບຖືລາວຫມົດທຸກຄົນ.

ສັບ.– ການເກື້ອກູນຜູ້ອື່ນ.

ນາມ : ນ້ຳໃຈ, ສຽງ, ເພື່ອນ.

ຄຸນນາມ : ດີ, ຮ້າຍ, ກວ້າງຂວາງ.

ກິຣິຍາ : ຟັງ, ເວົ້າຂວັນ, ປ້ອງກັນ, ຄຽງກັນ.

ໄວຍາກອນ.– ປະເພດຂອງຄຳ.

ຄຳເວົ້າມີປະເພດຕ່າງ ໆ ກັນຄືຄຳນາມ, ຄຳສັພນາມ
ຄຳຄຸນນາມ, ຄຳກິຣິຍາ, ຄຳອຸທານ, ຄຳສັນທານ
ເປັນຕົ້ນ ເພື່ອສະແດງຄວາມໃຫ້ຖືກຕ້ອງຕາມຫລັກ
ໄວຍາກອນແລະຕາມຄວາມຄິດ ຕ້ອງຮູ້ຈັກປະເພດແລະ
ຄຳຫມາຍຂອງແຕ່ລະຄຳ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ການເກື້ອກູນ, ຈາ
ຄອຸຄຳ, ສະຕິ, ປະຊຸມຊົນ, ການຄັກແນ່, ຄວາມດີ, ກຽ
ຕືບິດ, ພຍາບາດ, ຊຸມໂຕະ, ຄວາມອ່ອນຫວານ
ເພື່ອນຝູງ.



ຄຳເກົ່າຽວກັບ.– ຖີ່ : ຖ້ວນ. ງານ : ງົດງາມ. ດີ່ມ : ດູດ.
ແຕ່ງເອື້ອງ.– ໃຫ້ເຈົ້າແຕ່ງເອື້ອງຄົນມີໃຈອ່ອນຫວານ.

# ໔໕. ເມືອງແລະບ້ານນອກ



ທ້າວເດືອນຢູ່ໃນຄອບຄົວທີ່ນະຄອນວຽງຈັນ, ທ້າວປູ່ບ້ານພໍ່ຂອງທ້າວເດືອນເປັນຂ້າຣາຊການ, ແຕ່ພໍ່ແມ່ຂອງທ້າວດາວເປັນຊາວນາ, ພໍ່ແມ່ຂອງເຂົາເຈົ້າທັງສອງນັ້ນເປັນພີ່ນ້ອງກັນ.

ເທື່ອນຶ່ງທ້າວເດືອນຂຽນຈົດຫມາຍ ເຖິງທ້າວດາວວ່າ: "ເວລາໃດໃດໄປປານເຮົາຢູ່ທີ່ວຽງຈັນ, ເຮົາຈະພາໃດໄປເບິ່ງວັດຕ່າງ ໆ ອັນມີສີມໃຫຍ່, ພຣະພຸທຮູບໃຫຍ່ອັນຈົບງາມ, ໄປເບິ່ງທາດຫລວງຊຶ່ງໃຫຍ່ແລະສູງຫນ້າງຶດງ້ ແລະໄປເບິ່ງໂຮງ

ການຂອງອັຖບານຫລືບ່ອນເຮັດການຫລວງອື່ນ ໆ ອັນກວ້າງ, ໃຫ
ບາວ, ສູງ, ສອາດແລະຫນ້າສວາດແກ່ຕາແກ່ໃຈ, ຄັນເວລາ
ເຮົາຈະພາໄດໄປທ່ຽວນ່າທາງອັນປູຍາງ, ສອາດແລະຊື່, ຂ
ທາງ ມີເຮືອນ ຮ້ານ ຂາຍຂອງ ອັນຫນ້າ ເຂົ້າຊອກ ຊື້ຂອງ ແລະ ທຸກ ສ
ທາງກໍ່ມີແສງໄຟຟ້າສ່ອງແຈ້ງຕລອດຄືກາງວັນ."

ທ້າວດາວຂຽນຈົດຫມາຍຕອບທ້າວເດືອນວ່າ; "ຫາກຍ
ໄດໄດພັກໂຮງຮຽນກໍ່ໃຫ້ໄປປາມເຮົາ, ຖ້າໄປຍາມຝົນຕົກຈະເຫັນ
ນາກເຕັມທົ່ງ, ຈະຮູ້ວ່າຊາວນາໄຖຄາດແລະດຳນາປາງໃດ, ເວ
ກາງຄືນຈະຍິນສຽງກົບ, ຂຽດ, ອຶ່ງແລະຈິຫລໍ່ຈີນາຍເປັນຕົ້ນ ຮ
ຮົມຫູດາງສຽງປີ່ສຽງແຄນ, ຄັນໄປຍາມແລ້ງເຮົາຈະພາໄດໄປ
ຜັດຫລືດຶກປາໃນຫ້ວຍໃກ້ບ້ານ, ຫລືບໍ່ດັ່ງນັ້ນ ຈະພາໄດໄປທ່
ໂຄກອັນຫນ້າອອນຊອນໃຈດ້ວຍກິ່ນດອກຈິກດອກຮັງ ດອກກະບ
ແລະສຽງນົກ, ສຽງຈັກຈັ່ນ, ແມງອີແລະແມງງ້ວງ. ທຸກມື້ເ
ນີ້ແລງ ຈະພາໄດໄປຍ່າງດາກແດດອ່ອນເລາະຕົນທົ່ງບ້ານຊື່ງ
ອາກາດບໍຣິສຸດດີ ປ້ານແຕ່ໄດລືມວຽງຈັນຫັ້ນແລ້ວ."

ຄຳອະທິບາຍ.– ນະຄອນ : ເມືອງ. ບ້ານນອກ : ບ້ານທີ່
ເມືອງ. ຂ້າຣາຊການ : ຜູ້ທຳການຫລວງ.

ຄຳຖາມ.– ໑.– ພໍ່ແມ່ຂອງທ້າວເດືອນ ແລະ ທ້າວດາວນັ້ນ ເປ
ຫຍັງ ? ແລະເຂົາທັງສອງທຳການຫຍັງ ? ໒.– ທ້າ
ເດືອນຂຽນຈົດຫມາຍໄປຫາທ້າວດາວວ່າປາງໃດ ?



໓.– ທ້າວດາວຕອບຈົດຫມາຍ ຂອງທ້າວເດືອນວ່າ ປາງໃດ ?

ໃຈຄວາມ.– ທ້າວເດືອນແລະທ້າວດາວເປັນພີ່ນ້ອງກັນ, ພໍ່ທ້າວເດືອນເປັນຂ້າຣາຊການ ແລະພໍ່ແມ່ຂອງທ້າວດາວເປັນຊາວນາ, ທ້າວເດືອນປູ່ໃນວຽງຈັນ, ທ້າວດາວປູ່ບ້ານນອກ, ທ້າວເດືອນຂຽນຈົດຫມາຍໃຫ້ທ້າວດາວມາປາມໃນເມືອງ ທ້າວດາວມີຈົດຫມາຍຕອບທ້າວເດືອນໃຫ້ມາປາມບ້ານນອກ.

ສັບ.– ເມືອງແລະບ້ານນອກ.

ນາມ : ຄອບຄົວ, ຈົດຫມາຍ, ພຣະພຸທຮູບ.

ຄຸນນາມ : ໃກ້, ອ່ອນ.

ກິຣິຍາ : ໄປ, ຍິນ, ລືມ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ເມືອງ, ບ້ານນອກ, ນະຄອນ, ຂ້າຣາຊການ, ພຣະພຸທຮູບ, ທາດຫລວງ, ໄຟຟ້າ, ຈິຫລໍ່, ແມງງ້ວງ.

ຄຳເກົ້າຄຽງກັນ.– ດອນ : ເດືອນ, ເດີນ. ປູຍາງ : ເປີຍາງ, ປະຍາງ.

ແຕ່ງເອື່ອງ.– ໃຫ້ເຈົ້າແຕ່ງເອື່ອງສອງສະຫາຍຂຽນຈົດຫມາຍໄປຫາກັນ, ຜູ້ນຶ່ງປູ່ໃນເມືອງ, ຜູ້ນຶ່ງປູ່ບ້ານນອກ.

# ໔໓. ຢ່າປມາດການຫັດຖະກັມ



ທ້າວຄໍາບຸ່ໄດ້ໄປຮຽນຫນັງສືປຸ່ວຽງຈັນ ກັບ ມາ ປາມ ບ້ານ ຕົນ ໃນເວລາພັກໂຮງຮຽນ, ອະຫວ່າງ ຕຸດສົງການ ໄດ້ເຫັນ ອ້າຍພວມ ຕໍາ ເຂົ້າ, ຈຶ່ງຄຶດວ່າອ້າຍຕົນທຸກຍາກ ກໍນຶກເວທນາອ້າຍ ເລີຍເວົ້າຕໍ່ແມ່ ວ່າ "ເຫັນອ້າຍເຮັດການດັ່ງນີ້ ເຮົາອິດູລາວຫລາຍ, ສ່ວນເຮົານີ້ ຈະ ຕັ້ງໃຈ ຮຽນ ຈົນ ໃຫ້ ໄດ້ເປັນ ເຈົ້າ ເມືອງ ເພື່ອຈະມີຄວາມສຸກໃນ ພາຍຫນ້າ" ແມ່ຂອງລາວຈຶ່ງ ຕອບວ່າ : "ຖ້າລູກຈະຕັ້ງໃຈຮຽນ ຈົນເຖິງໄດ້ເປັນເຈົ້າເມືອງ, ແມ່ກໍມີຄວາມຍິນດີຫລາຍ. ແຕ່ລູກຢ່າ ໄດ້ປມາດວິຊາຫາກິນທາງຫັດຖະກັມ ຫລືກະສິກັມ ຂອງອ້າຍເຈົ້າ ເລີຍ. ຖ້າບໍ່ມີພໍ່ນາ, ເຈົ້າຄົງຈະບໍ່ມີເຂົ້າກິນ. ບໍ່ວ່າແຕ່ນານໄປ, ໃນມື້ນີ້ ຫລືມື້ອື່ນກໍຄືກັນ. ການເຮັດນາທີ່ພໍ່ແມ່ແລະອ້າຍເຈົ້າໄດ້ ເຮັດມານີ້ ກໍມີຫນ້າມີຕາຄືກັນກັບ ການຊ່າງຕໍ່າຍ້າ, ຕີເຫລັກແລະ ວຽກກຸລີເປັນຕົ້ນ ເພາະວິຊາອັນໃດກໍມີປໂຍດສົມຄວນທຸກອັນ ໃຫ້



ນັບຖືການ ຫັດຖະກັມ ແລະ ກະສິກັມ ວ່າເປັນ ວຽກການ ທີ່ ມີ ຄຸນ ຄ່າ ສູງ ເຫມືອນກັນກັບວຽກການອື່ນ ໆ ແລະໃຫ້ລູກເຂົ້າໃຈວ່າ "ບໍ່ມີວຽກ ອັນໃດເລີຍທີ່ຈະຕໍ່າຊ້າກວ່າຫມູ່ ໃນເມື່ອຄົນເຮົາປະກອບໃຫ້ເປັນອັນ ບໍຣິສຸດແລ້ວ ເວັ້ນໄວ້ແຕ່ຜູ້ບໍ່ປະກອບ ຫລືປະກອບການງານຜິດ ເທົ່ານັ້ນ."

<u>ຄໍາອະທິບາຍ.</u>— ປມາດ : ເລີນເລີ້. ຫັດຖະກັມ : ວຽກທີ່ທໍາ ດ້ວຍມື. ນຶກເວທນາ : ນຶກສົງສານ. ຕຸດສົງການ : ວັນຂຶ້ນປີໃຫມ່. ບໍຣິສຸດ : ຄວາມສະອາດ.

<u>ຄໍາຖາມ.</u>— ໑.— ທ້າວຄໍາບຸ່ມາປາມບ້ານເວລາໃດ ? ໒.— ເມື່ອ ອ້າຍລາວພວມຕໍາເຂົ້າປຸ່ທ້າວບຸ່ຄຶດຢ່າງໃດ ? ແລະ ລາວເວົ້າຕໍ່ແມ່ວ່າຢ່າງໃດ ? ໓.— ແມ່ລາວຕອບວ່າ ຢ່າງໃດ ? ເຮົາຄວນປມາດຫັດຖະກັມຫລືບໍ່ ?

<u>ໃຈຄວາມ.</u>— ທ້າວຄໍາບຸ່ຮຽນຫນັງສືປຸ່ວຽງຈັນ, ເວລາພັກຕຸດສົງການ ລາວມາປາມບ້ານລາວ, ໄດ້ເຫັນອ້າຍຕໍາເຂົ້າ ຈຶ່ງເວົ້າ ວ່າຂ້ອຍຈະຕັ້ງໃຈຮຽນໃຫ້ໄດ້ເປັນເຈົ້າເມືອງ ແມ່ຈຶ່ງ ຕອບວ່າດີໃຈນໍາລູກຫລາຍແລ້ວ, ແຕ່ວ່າລູກຢ່າ ໄດ້ ປມາດ ວິຊາ ຫັດຖະກັມ ແລະ ກະສິກັມ ຂອງ ອ້າຍ ເຈົ້າ ເລີຍ.

<u>ສັບ.</u>– ການຫັດຖະກັມ.

<u>ນາມ</u> : ບ້ານ, ໂຮງຮຽນ, ແມ່, ລູກ.

<u>គຸນນາມ</u> : ທຸກຍາກ, ປໂຍດ, ສູງ.

<u>ກິລິຍາ</u> : ປານ, ເວົ້າ, ຮຽນ, ຕັ້ງໃຈ, ນັບຖື.

<u>ໄວຍາກອນ.</u>– ຄຳນາມ.

ທຸກ ໆ ສິ່ງ ຈະ ມີ ຮູບ ຮ່າງ ຕົນ ຕົວ ຫລືບໍ່ ກໍຕາມ ຕ້ອງ ມີຊື່. ຄຳນາມ ແມ່ນຄຳ ທີ່ບອກຊື່ ຂອງຄົນ, ສັດ, ສິ່ງຂອງ ຕົວຢ່າງ : ຄົນ, ນົກ, ມ້າ, ບ້ານ, ເມືອງ, ວຽກການ ເປັນຕົ້ນ.

<u>ການສະກົດຄຳ.</u>– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ປນາດ, ຫັດຖະກັມ, ຫນັງສື, ໂຮງຮຽນ, ເຈົ້າເມືອງ, ຄວາມສຸກ, ວິຊາ, ການເຮັດນາ, ຊ່າງຕ່ຳຜ້າ, ຊ່າງຕີເຫລັກ, ກຸລີ.

<u>ຄຳເຄົ້າດຽວກັນ.</u>– ປນາດ : ປນາທະ, ປະນາໂທ. ຫັດຖະກັມ : ຫັດຖະການ, ຫັດຖະກິດ. ກະສິກັມ : ກະສິກະ, ກະສິໂກ, ກະສິກອນ.

<u>ແຕ່ງເອື່ອງ.</u>– ໃຫ້ແຕ່ງ ເອື່ອງ ທີ່ເຈົ້າ ໄດ້ ໄປ ຮຽນ ຫນັງສື ຢູ່ ໃນ ເມືອງ ອອກມາພົບອ້າຍໄຖນາຢູ່.



# ໔໗. ການຂຽນຈົດຫມາຍ

ການຂຽນຫນັງສືໄປຫາຜູ້ໃດຜູ້ນຶ່ງ ເພື່ອສະແດງຄວາມຄິດ ແລະນ້ຳໃຈຂອງເຮົາໃຫ້ເຂົາຮູ້ວ່າ ເຮົາຕ້ອງການຫຍັງ ມີເອື່ອງຫຍັງກ່ຽວຂ້ອງກັນ



ການຂຽນຫນັງສືປ່າງນີ້ເພິ່ນຮ້ອງວ່າ "ຈົດຫມາຍ" ດັ່ງນັ້ນ ເຮົາຕ້ອງຂຽນຄືດັ່ງເຮົາເວົ້າ ແຕ່ໃຫ້ຄວາມເວົ້ານັ້ນ ຖືກແບບຢ່າງ ແລະສຸພາບຮຽບຮ້ອຍ. ເມື່ອຂຽນ, ເຮົາຕ້ອງເວົ້າຕາມທັມດາ ໃຊ້ຄຳຖືກ ແລະ ໃຫ້ ຄົກ ແນ່ ຕາມ ຄວາມຫມາຍ ປາໃຫ້ເອົາສິ່ງໃສໃນຄວາມເວົ້າຂອງເຮົາ ປາໃຊ້ຄວາມເລິກໂພດ. ຈົດຫມາຍໃນຣະຫວ່າງຄົນຄອບຄົວ ແລະເພື່ອນຝູງ ໃຫ້ຄວາມ ຫມາຍແຫ່ງຄວາມຮັກ, ຈົດຫມາຍທີ່ຂຽນເຖິງຜູ້ໃຫຍ່ຕ້ອງໃຫ້ມີຄວາມຫມາຍແຫ່ງຄວາມນັບຖື. ຖ້າຂຽນເຖິງຜູ້ນ້ອຍກວ່າເຮົາ, ຕ້ອງໃຫ້ຄວາມຫມາຍແຫ່ງຄວາມອາຣີອາອອນແລະຄວາມກວ້າງຂວາງຕໍ່ເຂົາ. ຖ້າຫາກແມ່ນຈົດຫມາຍທາງຣາຊການ ຕ້ອງໃຫ້ສັ້ນແລະແຈ່ມແຈ້ງຈຶ່ງຈະດີ.

ຄຳອະທິບາຍ.— ຈົດໝາຍ : ໜັງສືໃຫ້ຂ່າວກັນ. ສຸພາບ ຮຽບຮ້ອຍ, ຄວາມງາມ. ຄວາມເລີກໂພດ : ຄວາມສູ ຫລືໜັກໂພດ. ອາລີອາລອບ : ຖຸນອມຕົວ. ບົ່ມບວນ ຄວາມອ່ອນລະອຽດ.

ຄຳຖາມ.— ໑.– ການຂຽນໜັງສືເພື່ອປາກຮູ້ຄວາມປະສົງ, ຂອ ເຮົາຕ້ອງເຮັດປ່າງໃດ ? ໒.– ຂຽນໄປຫາຄອບຄົວ ໝູ່ເພື່ອນ ຜູ້ໃຫຍ່ ຜູ້ນ້ອຍ ແລະທາງການມີຄວາມ ໝາຍຕ່າງກັນປ່າງໃດ ?

ໃຈຄວາມ.— ການຂຽນ ໜັງສື ໄປຫາ ຜູ້ໃດ ຜູ້ນຶ່ງ ປ່າໄດ້ ໃຊ້ຄວາມ ເລີ ໂພດ. ເມື່ອຂຽນໜັງສືເຖິງຜູ້ໃຫຍ່ຕ້ອງໃຫ້ມີຄວາມ ໝາຍແຫ່ງຄວາມນັບຖື. ຖ້າຂຽນເຖິງຜູ້ນ້ອຍກວ່າເຮົາ ຕ້ອງ ໃຫ້ມີ ຄວາມໝາຍ ແຫ່ງ ຄວາມ ອາລີອາລອບ ແລະ ຄວາມກວ້າງຂວາງຕໍ່ເຂົາ ຖ້າຫາກແມ່ນຈົດໝາຍ ທາງການຕ້ອງໃຫ້ສັ້ນແລະແຈ່ມແຈ້ງຈຶ່ງຈະດີ.

ສັບ.— ຈົດໝາຍ.

ນາມ : ນ້ຳໃຈ, ໜັງສື, ຈົດໝາຍ.

ຄຸນນາມ : ໃຫຍ່, ນ້ອຍ.

ກິລິຍາ : ຄິດ, ຂຽນ, ເຖິງ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສຸພາບ, ຮຽບ



ຮ້ອຍ, ຄວາມຄິດ, ນ້ຳໃຈ, ເໝັດາ, ຄວາມຮັກ, ຜູ້ໃຫຍ່, ທາງການ.

ຄຳເຄົ້າຄຽງກັນ.— ສຸພາບ : ໄສພາບ, ເສົາວະພາບ.

ແຕ່ງເລື່ອງ.— ໃຫ້ເຈົ້າແຕ່ງເລື່ອງທີ່ພວກເຈົ້າຈະຂຽນຈົດໝາຍ ໄປຫາຄອບຄົວໝູ່ເຈົ້າທີ່ຢູ່ຫ່າງໄກກັນ.

---

# ໔໗. ນິທານຄອບຄົວຊຳພອນ



ແຕ່ກ່ອນ, ໃນຄອບຄົວຊຳພອນມີອ້າຍນ້ອງສາມຄົນເປັນກຳພ້າມາແຕ່ນ້ອຍ ເພາະເຂົາຢູ່ຮ່ວມເຮືອນດຽວກັນທັງສາມຄົນ. ຕໍ່ມາອ້າຍນ້ອງໄດ້ເມັຽໝົດທຸກຄົນ : ແຕ່ເຂົາເຈົ້າບໍ່ປາກພາກຈາກກັນ. ເມັຽຂອງນ້ອງຫລ້ານັ້ນເປັນຄົນໃຈແຄບແລະກິລິຍາບໍ່ດີ, ຈຶ່ງບົວະຜົວໃຫ້ອອກເຮືອນ. ຜູ້ຜົວເຫັນເມັຽອ້ອນວອນດັ່ງນັ້ນກໍຂືນບໍ່ໄດ້.

ຈຶ່ງຂໍແບ່ງເອົາເຄື່ອງຂອງຈາກອ້າຍທັງສອງ. ຫົວທີອ້າຍທັງສອງກໍຫ້າມບໍ່ໃຫ້ນ້ອງອອກເຮືອນ. ແຕ່ພາຍລຸນມາກໍຈຳຕ້ອງແບ່ງສິ່ງຂອງໃຫ້ນ້ອງ.

ຢູ່ເດີນບ້ານເຂົາເຈົ້າ, ມີຕົ້ນໄມ້ຕົ້ນນຶ່ງທີ່ປູກມາຕັ້ງແຕ່ປູ່ແຕ່ຍ່າ, ແຕກກ່ານ້ອຍໃຫຍ່ໃບໜາຂຽວງາມດີ. ເຂົາເຈົ້າຕົກລົງກັນວ່າຈະປ້ຳຕົ້ນໄມ້ຕົ້ນນັ້ນ. ປັນເປັນສາມພູດທໍ່ກັນ (ຍັງມີຕໍ່)

ຄຳອະທິບາຍ.– ນິທານ : ເລື່ອງ. ກິລິຍາ : ຄວາມປະພຶດ.
ບົວະ : ເບົາ, ລໍ້ລວງ. ໃບດົກ : ມີໃບຫລາຍ.

ຄຳຖາມ.– ໑.– ຄອບຄົວຊຳພອນມີນ້ອງອ້າຍບ່າກັນຈັກຄົນ.
໒.– ເຂົາຢູ່ຢ່າງໃດ? ໓.– ເນັ່ງນ້ອງຫລ້າມີໃຈຢ່າງໃດ?
໔.– ເຂົາຕົກລົງຈະແບ່ງຫຍັງກັນ? ໃນເລື່ອງນີ້ຫມາຍໃຫ້ເຮົາຮູ້ຢ່າງໃດ?

ໃຈຄວາມ.– ໃນຄອບຄົວຊຳພອນ ມີນ້ອງອ້າຍບ່າກັນສາມຄົນເປັນກຳພ້າແຕ່ນ້ອຍມາ ເຂົາທັງສາມມີເນັ່ງຫມົດທຸກຄົນຢູ່ເຮືອນດຽວກັນ ແຕ່ເນັ່ງນ້ອງຫລ້ານັ້ນເປັນຄົນໃຈນ້ອຍປາກ ຈະພາບົວຂອງຕົນ ອອກເຮືອນໄປຢູ່ ສ່ວນຕົວຜູ້ດຽວ ຈຶ່ງຂໍແບ່ງເອົາສິ່ງຂອງນ້ອງອ້າຍທັງສອງ ຢູ່ເດີນບ້ານນັ້ນມີຕົ້ນໄມ້ຕົ້ນນຶ່ງ ເຂົາຄິດຈະປ້ຳຕົ້ນໄມ້ນັ້ນແບ່ງປັນໃຫ້ເປັນສາມພູດທໍ່ກັນ.

ສັບ.– ຄອບຄົວ.
ນາມ : ກຳພ້າ, ຄົນໃຈແຄບ, ເດີນ, ກິລິຍາ, ໜາ.



ຄຸນນາມ : ດົກ, ຂຽວ.
ກິລິຍາ : ອ້ອນວອນ, ແບ່ງ, ບົວະ, ປ້ຳ.

ໄວຍາກອນ.– ສາມັນຍະນາມ.
ສາມັນຍະນາມແມ່ນຄຳທີ່ເປັນຂອງຄົນ, ສັດແລະສິ່ງຂອງ : ນັກຮຽນ, ຊ້າງ, ເມືອງ, ພູ, ເປັນສາມັນຍະນາມ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຄອບຄົວ, ກຳພ້າ, ຢູ່ຮ່ວມ, ພາກຈາກກັນ, ໃຈແຄບ, ອ້ອນວອນ, ເຄື່ອງຂອງ, ພາຍລຸນ.

ຄຳເຄົ້າດຽວກັນ.– ເຮືອນ : ໂຮງ, ຮັງ, ຮອກ, ຮ້ານ.

ແຕ່ງເລື່ອງ.– ໃຫ້ເຈົ້າແຕ່ງເລື່ອງຄົນໃຈນ້ອຍຫລືໃຈຄັບແຄບຜູ້ນຶ່ງ.

## ໔໙. ນິທານຄອບຄົວຊຳພອນ (໓)



ມື້ລຸນມາ, ມື້ທີ່ອ້າຍນ້ອງທັງສາມຄົນ ຈະໄປ ຟັນຕົ້ນໄມ້
ເຂົາເຈົ້າກໍ່ເຫັນຕົ້ນໄມ້ນັ້ນຕາຍປູ່ແລ້ວ. ອ້າຍກົກເຫັນດັ່ງນັ້ນ ກໍ
ຄວາມໂສກເສົ້າຫລາຍຈົນນ້ຳຕາຕົກ. ພວກນ້ອງຈຶ່ງເວົ້າວ່າ "ຕົ້
ໄມ້ຕົ້ນນີ້ກໍ່ບໍ່ມີຄ່າທໍ່ໃດ ເປັນຫຍັງອ້າຍຈຶ່ງເສັຽດາຍມັນແທ້?" ອ້າ
ກົກຕອບວ່າ "ບໍ່ແມ່ນວ່າອ້າຍໄຫ້ນຳຕົ້ນໄມ້, ອ້າຍໄຫ້ນຳຄວາມ
ສາມັກຄີຂອງພວກເຮົາທີ່ຈະຕາຍໄປດັ່ງຕົ້ນໄມ້ນີ້ ພວກເຮົາອ້າ
ນ້ອງອອກມາແຕ່ເຫງົ້າດຽວກັນ, ຄືຈະປ້ອນວ່າເຮົາໄດ້ຕົກລົງກັ
ວ່າຈະປ່າມັນນັ້ນລະດີ, ມັນຈຶ່ງໄດ້ຕາຍໄປໃນຄືນດຽວ. ຖ້າເຮົາຈາ
ກັນໄປ, ເຮົາກໍ່ຈະເປັນດັ່ງຕົ້ນໄມ້ນີ້, ປ້ອນອ້າຍຄິດເຫັນດັ່ງນີ້ແລ້
ນ້ຳຕາອ້າຍຈຶ່ງອອກ. ນ້ອງຫລ້າໄດ້ຍິນດັ່ງນັ້ນ, ກໍ່ຮູ້ສຶກວ່າຕົນກໍ
ຜິດ, ກໍ່ເລີຍຮ້ອງໄຫ້ຂຶ້ນແລ້ວຈຶ່ງສັນຍາກັບພວກອ້າຍວ່າຈະປຸ່ນ
ກັນດັ່ງແຕ່ກ່ອນ.

ແຕ່ນັ້ນມາຫລາຍເຊັ່ນຄົນ, ຄອບຄົວຊ່າພຣະກໍ່ມີຊື່ສຽງວ່າ
ເປັນຄອບຄົວນຶ່ງທີ່ມີຄວາມສາມັກຄີກັນດີ.

<u>ຄຳອະທິບາຍ.</u>— ສາມັກຄີ : ຄວາມພ້ອມພຽງ. ເຫງົ້າ : ເຄົ້າ
ມູນເດີມ. ສັນຍາ : ຄວາມຕົກລົງໄວ້. ລ້າດຽວ : ຕົ້ນ
ດຽວ.

<u>ຄຳຖາມ.</u>— ໑.— ເມື່ອເຫັນຕົ້ນໄມ້ນັ້ນຕາຍ, ອ້າຍກົກມີຄວາມປ່າງ
ໃດ ? ໒.— ພວກນ້ອງເວົ້າປ່າງໃດຕໍ່ອ້າຍ ? ໓.— ອ້າຍ
ກົກຕອບປ່າງໃດກັບພວກນ້ອງ ? ໔.— ເມື່ອເປັນດັ່ງນັ້ນ



ນ້ອງຫລ້າຮູ້ຕົວແລ້ວສັນຍາປ່າງໃດ ? ໕.— ເຮົາຄວນຖື
ເອົາເລື່ອງນີ້ເປັນຕົວປ່າງບໍ່ ?

<u>ໃຈຄວາມ.</u>— ມື້ລຸນມາຕົ້ນໄມ້ນັ້ນກໍ່ຕາຍໄປໃນຄືນດຽວ, ອ້າຍກົກກໍ່ມີ
ຄວາມເສົ້າໂສກຈົນນ້ຳຕາຕົກ ເຂົາຈຶ່ງຖາມວ່າເປັນຫຍັງ
ອ້າຍຈຶ່ງເສັຽດາຍມັນແທ້ ອ້າຍຕອບວ່າບໍ່ແມ່ນອ້າຍເສັຽ
ດາຍມັນ. ອ້າຍເສັຽດາຍຄວາມສາມັກຄີພວກເຈົ້າຕ່າງ
ຫາກ ຈະໄດ້ພັດພາກຈາກກັນໄປ. ເມື່ອນ້ອງຮູ້ສຶກ
ຂຶ້ນແລ້ວກໍ່ຮ້ອງໄຫ້ຂຶ້ນວ່າຂໍສັນຍາຈະປຸ່ນຳກັນຕໍ່ໄປ.

<u>ສັບ.</u>— ຄອບຄົວ.

<u>ນາມ</u> : ຕົ້ນໄມ້, ອ້າຍກົກ, ນ້ຳຕາ, ເຫງົ້າ.

<u>ຄຸນນາມ</u> : ກົກ (ອ້າຍກົກ), ຫລ້າ.

<u>ກິຣິຍາ</u> : ຟັນ, ໄຫ້, ເສັຽດາຍ, ຕົກລົງກັນ, ສັນຍາ.

<u>ການສະກົດຄຳ.</u>— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ອ້າຍກົກ, ນ້ອງ
ຫລ້າ, ຄວາມໂສກເສົ້າ, ຄວາມສາມັກຄີ; ເຫງົ້າດຽວ,
ງ່າໄມ້, ລຳດຽວ, ຊື່ສຽງ, ນ້ຳຕາ.

<u>ຄຳເຄົ້າດຽວກັນ.</u>— ຄອບຄົວ : ຄອບຄອງ, ຄອບງຳ.

<u>ແຕ່ງເລື່ອງ.</u>— ໃຫ້ເຈົ້າແຕ່ງເລື່ອງອ້າຍນ້ອງສອງຄົນທີ່ມີຄວາມຮັກ
ແພງກັນດີ.

# ໕໐. ການເດີນທາງແຕ່ກ່ອນກັບດຽວນີ້



ແຕ່ກ່ອນ ໃນປະເທດລາວ ເພິ່ນ ເດີນທາງ ດ້ວຍກວຽນງົວ ຫ
ກວຽນຄວາຍ, ຊ້າງຫລືມ້າ ເປັນການລຳບາກຫລາຍ ໃນຣະດູ
ເພິ່ນເດີນທາງບົກບໍ່ໄດ້, ເພິ່ນກໍ່ເດີນທາງເຮືອໄປນຳລຳນ້ຳນ້ອຍ
ໃຫຍ່ແລະນ້ຳແກ່ງ; ການໄປມາ ກໍ່ນານຮອດແລະບໍ່ສະດວກເລີຍ.

ດຽວນີ້, ຍ້ອນການສ້າງສາຂອງຣັຖບານລາວເຮົາ ຫົນທາງ
ຈຶ່ງໃຫຍ່ກວ້າງຍາວ ທັງປູຫີນປູຍາງສະອາດດາ ແລະຫຼຽ
ສະດວກ ບໍ່ວ່າແຕ່ຄົນແລະກວຽນ ເດີນໄດ້ສະດວກດີທັງນັ້ນ, ຣົ
ຖີບ, ຣົຖຍົນກໍ່ແລ່ນ ສະດວກໄດ້ທຸກຣະດູ ຫົນທາງແຕ່ກ່ອນຕ້ອງໃ
ສອງສາມອາທິດ, ດຽວນີ້, ໄປແຕ່ສອງສາມຊົ່ວໂມງເທົ່ານັ້ນ ກ
ຮອດໄດ້.



ໃນຕ່າງປະເທດ, ນອກຈາກທາງຣົຖຍົນແລ້ວ, ເພິ່ນຍັງໄດ້ສ້າງຣົຖໄຟອີກ : ຄືທາງທີ່ເພິ່ນເອົາທ່ອນເຫລັກວາງຕໍ່ ໆ ກັນເທິງທ່ອນໄມ້ສີ່ຫລ່ຽມ ທ່ອນເຫລັກນີ້ເພິ່ນເອີ້ນວ່າຮາງຣົຖໄຟ. ຣົຖໄຟມີຕູ້ຫລາຍ ໆ ຕູ້ເກາະກັນ ແລ້ວມີຫົວຣົຖໄຟທີ່ມີຈັກເກາະແກ່ກັນແລ່ນໄປເທິງຮາງນັ້ນ ເຫມືອນກັນກັບແລ່ນຢູ່ເທິງທາງຮາບດີແລະໄວກວ່າຣົຖຍົນອີກດ້ວຍ. ດັ່ງນັ້ນຈຶ່ງນັບວ່າການເດີນທາງດຽວນີ້ຈເຣີນກວ່າແຕ່ກ່ອນຫລາຍສ່ວນ.

ຄຳອະທິບາຍ.— ສະດວກ : ງ່າຍ, ບໍ່ຕິດຂັດ. ຣົຖຖີບ : ຣົຖຍົນ
ໄປດ້ວຍຕີນ. ຣົຖຍົນ : ຣົຖທີ່ໄປດ້ວຍເຄື່ອງຈັກ.

ຄຳຖາມ.— ໑.— ແຕ່ກ່ອນຢູ່ປະເທດລາວ ເພິ່ນເດີນທາງດ້ວຍຫຍັງ? ໒ — ຫົນທາງເດີນແຕ່ກ່ອນນັ້ນເປັນແນວໃດ? ໓.— ຫົນທາງເດີນດຽວນີ້ເປັນແນວໃດ?

ໃຈຄວາມ.— ແຕ່ກ່ອນຢູ່ປະເທດລາວ ເພິ່ນເດີນທາງດ້ວຍກວຽນງົວຫລືກວຽນຄວາຍ ຊ້າງຫລືມ້າ ໄປນຳທາງບໍ່ດີທີ່ຄົດລ້ຽວ ດຽວນີ້, ຣັຖບານລາວເຮົາ ເພິ່ນສ້າງທາງຣົຖຍົນ ຣົຖໄຟອີກ ດຽວນີ້, ນັບວ່າການເດີນທາງສະດວກແລະຈເຣີນກວ່າແຕ່ກ່ອນຫລາຍສ່ວນ.

ສັບ.— ການເດີນທາງ.

ນາມ : ກວຽນ, ຊ້າງ, ຣັຖບານ, ຫົນທາງ, ຣົຖຍົນ.

ຄຸນນາມ : ກວ້າງ, ຍາວ, ກ້ຽງ, ຮຽບ.

ກິຣິຍາ : ເດີນທາງ, ສ້າງ, ວາງ, ເກາະກັນ, ແກ່.

ໄວຍາກອນ.— ວິສາມັນຍະນາມ

ວິສາມັນຍະນາມ ແມ່ນຊື່ສະເພາະຂອງ ຄົນ, ສັດ, ແລະສິ່ງຂອງ ຕົວຢ່າງ : ບຸນຈັນ (ຄົນ). ງົວ, ຄວາຍ (ສັດ). ຣົຖຖີບ, ຣົຖໄຟ, ກວຽນ (ວັດຖຸ) ເປັນຕົ້ນ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຣົຖບານ, ປະເທດ, ລາວ, ຄົດລ້ຽວ, ອະດຸຜົນ, ກວຽນຄວາຍ, ຫີນທາງປູ ບາງ, ສ້າງສາ.

ຄຳເກົ່າຽວກັນ.— ປະເທດ : ປະເທໃສ, ປະເທສາ. ກ່ອນ : ເກົ່າແກ່.

ແຕ່ງເຣື່ອງ.— ຈົ່ງແຕ່ງເຣື່ອງຄົນເດີນທາງບຸ້ນຶ່ງ.

# ໕໑. ການສ້າງຖນົນແລະທາງຣົຖໄຟ

ຈະສ້າງຖນົນສາຍນຶ່ງ ຕ້ອງທຳການຫລາຍຢ່າງ ; ຕ້ອງ ກວດເບິ່ງພື້ນທີ່ເສັຽກ່ອນ ເພື່ອໃຫ້ຮູ້ຈັກບ່ອນທາງຈະໄປໄດ້, ແລ້ວ ຖາງດຸບໄປ. ແປງທາງໃຫ້ຮາບ ຄື ຖົມບ່ອນຂຸມໃຫ້ພຽງແລະ ຂຸດບ່ອນໂນນໃຫ້ຮາບ ແລ້ວປູຫີນເພື່ອບໍ່ໃຫ້ທາງຫລຸບແລະເພື່ອ ເມື່ອຣົຖແລະກວຽນອັນຫນັກຫຽວຫລືຖືກນ້ຳເຊາະ. ບ່ອນໃດເປັນ ຫ້ວຍລຳນ້ຳ, ເພິ່ນຕ້ອງເຮັດແພ, ຂົວຟູ, ຂົວໄມ້, ຂົວເຫລັກ ຫລື ຂົວຊີມັງ ເພື່ອໃຫ້ຣົຖ, ກວຽນ ແລະຄົນ ຂ້າມໄປມາ. ການສ້າງ ຖນົນແລະຂົວເຫລົ່ານີ້ຕ້ອງມີຄົນງານຫລາຍພັນຄົນ.



ເມື່ອສ້າງຖນົນເສັດແລ້ວ ຕ້ອງບົວຣະບັດມັນຄື : ຖົມບ່ອນ ຫລຸບຕື້ນ, ແປງຂົວທີ່ເພແລະສາມປີໃດກໍຕ້ອງປູຫີນໃສ່ໃຫມ່ອີກ.

ແຕ່ການສ້າງຣົຖໄຟນັ້ນ ຍັງຕ້ອງມີການທຳແລະຕ້ອງຈ່າຍເງິນ ຫລາຍກວ່ານີ້ອີກ ເພາະວ່າເມື່ອສ້າງຈະຜ່ານພູ, ເຫວ ຫລືໂນນດິນສູງ ກໍດີ, ທາງຣົຖໄຟກໍຕ້ອງຄ່ອຍຄ້ອຍລົງຫລືເນີນຂຶ້ນສເມີ ດັ່ງນັ້ນຕ້ອງຂຸດ ບ່ອນສູງໃຫ້ຕ່ຳແລະຖົມບ່ອນຕ່ຳໃຫ້ສູງ, ຂົວກໍຕ້ອງໃຫ້ແຫນ້ນຫນາ, ລາງບ່ອນຊ້ຳໄດ້ເຈາະພູເປັນອຸໂມງໃຫ້ຣົຖໄຟລອດໄປຫລາຍກິໂລແມດ ກໍມີ.

ຄຳອະທິບາຍ.— ທາງຣົຖໄຟ : ທາງຣົຖໄຕ່ໄປດ້ວຍເຫລັກ. ຖາງ ທາງດຸບໄປ : ຖາງເປັນຮູບຮ່າງໄປກ່ອນ. ອຸໂມງ : ທາງຣົຖໄຟເຈາະລອດພູ.

ຄຳຖາມ.— ໑.— ການສ້າງຖນົນ ສາຍນຶ່ງ ຕ້ອງທຳ ຢ່າງໃດ ຈຶ່ງຈະດີ ? ໒.— ເມື່ອສ້າງຖນົນເສັດແລ້ວ ຕ້ອງບົວຣະບັດມັນຢ່າງ ໃດ ? ໓.— ແຕ່ການສ້າງຣົຖໄຟນັ້ນ ຍັງຕ້ອງມີການ ທຳຢ່າງໃດ ? ເພາະເຫດໃດ ?

ໃຈຄວາມ.— ການສ້າງຖນົນສາຍນຶ່ງ ໆ ຕ້ອງກວດເບິ່ງພື້ນທີ່ເສັຽກ່ອນ ແລ້ວຖາງທາງດຸບໄປ, ແປງທາງໃຫ້ຮາບ ກໍຕ້ອງຂຸດ ບ່ອນສູງໃຫ້ຕ່ຳແລະຖົມບ່ອນຕ່ຳໃຫ້ສູງ, ຂົວກໍຕ້ອງໃຫ້ ແຫນ້ນຫນາ, ລາງບ່ອນຊ້ຳໄດ້ເຈາະພູເປັນອຸໂມງໃຫ້ຣົຖ ໄຟລອດໄປຫລາຍກິໂລແມດກໍມີ.

ສັບ.— ການສ້າງທາງ.

<u>ນາມ</u> : ພື້ນທີ່, ຖຸບທາງ, ກວຽນ, ລຳນ້ຳ, ຄົນງານ.

<u>ຄຸນນາມ</u> : ຮາບ, ຫນັກ, ສູງ, ດຳ, ແຫນ້ນຫນາ.

<u>ກິລິຍາ</u> : ກວດເບິ່ງ, ຖາງ, ແປງ, ຖົມ, ຫຼຽວ, ບົວອະບັດ.

<u>ການສະກົດຄຳ</u>.– ໃນນັກຮຽນສະກົດຄຳຕໍ່ໄປນີ້ : ຖນົນ, ຣົຖໄຟ, ຕື
ກວຽນ, ນ້ຳຫ້ວຍ, ແຫ, ຝູ, ຂົວ, ຊີມັງ.

<u>ຄຳເຄົ້າດຽວກັນ</u>.– ຫລຸບ : ຫລິ່ມ, ແຫລວ. ເພ : ພັງ. ຟູ : ຟອງ, ຟີ

<u>ແຕ່ງເອື້ອງ</u>.– ໃຫ້ເຈົ້າແຕ່ງເອື້ອງການສ້າງຖນົນສາຍນຶ່ງ.

---

# ໕໒. ຄົນບໍ່ທ່ຽງທັມ



ຄົນໃດຖຸຫມັ້ນພ້ອມ  ໃຈທ່ຽງທາງທັມ
ນັບເນື່ອງແນວຄົນດີ  ຜູ້ໃດກໍ່ບໍ່ບ້ອງ



ແມ່ນບໍ່ໃສພານຶ່ງ  ຊິງບໍ່ງາມຮູບບໍ່ກ່ອງກໍ່ດານຖ້ອນ
ເພິ່ນວ່າດ່ານອກເນື້ອ  ໃນແຈ້ງບ່ອນດີ
ຄົນໃດຫນ້າບຸດນຶ່ງ  ລັກລອບຂອງເຂົາ
ໃຈບໍ່ທ່ຽງທັມສິນ  ຜູ້ໃດກໍ່ຊັງຊ້າ
ແມ່ນຈັກກາຍາກຽ້ງ  ເກີນຄົນແສນສງ່າກໍດີ
ມັນຈັກທຸກເນື້ອຫນ້າ  ບອງເທົ່າຊີວຊີວາ
ໃຜບໍ່ຫລີບຫລີກລີ້  ຫນີຈາກຄອງທັມ
ນີທໍ່, ໃນໃຫແຮງ  ຄຽດເຄັນຄຳປ້ອຍ
ທັງເຫລົ້າກອບໃຈດ້ານ  ງານວ່າງວຽກປ່ອຍ
ຄອບແຕ່ຫາຜ່ຽວຫລິ້ນ  ເບີເບຶ້ງບໍ່ປ່ອນໃນ
ຫາແຕ່ຄວາມຈັງໃຮ  ໃສ່ຕົວດົງສຽງ
ໃຜບໍ່ຢືນດີດ້ວຍ  ດອມມັນຈັກຫນ່ອຍ
ຊຸມຫມູ່ຍາດພີ່ນ້ອງ  ກໍ່ແຫນງຫນ້າຫນ່າຍມັນ
ແມ່ນຈັກມີເພື່ອນພ້ອງ  ກໍລ້ວນແຕ່ຄົນຊາມ
ປຸງທີ່ເປັນນັກເລງ  ຈ່ອງຈູງຫາຮ້າຍ
ຄົນຜູ້ເປັນດີນັ້ນ  ເຖິງຈັກມາເປັນເພື່ອນ
ພໍ່ເຂົ້າເຫັນຕ່ອນຮ້າຍ  ກໍເລີຍເວັ້ນເວີນໄກ
ພໍ່ເມື່ອທຸກຍາກໃຫມ້  ສຸນຈີໃນອົກ
ເລີຍເກີດເປັນໃຈໃຂ  ໃຫຍ່ຫລວງຫາປຸ້ນ
ບຽດບຽນຊຸມຊາວເຊື້ອ  ປະຊາຊົນທຸກທີ່
ຫນີກົດຫມາຍບໍ່ມີ້ນ  ກໍນອນຫ້ອງແຫ່ງຕອາງ ຫັ້ນແລ້ວ.

ຄຳອະທິບາຍ.– ໂສພາ : ງາມ. ທົ່ງຫັນສິນ : ການຊົງຄວາ
ດີໄວ້ໃນໃຈສເມີ. ໂນໂທ : ຄວາມຫລົງ. ອຸບາດ
ເຫດຮ້າຍ.

ຄຳຖາມ.– ໑.– ຄົນມີໃຈທ່ຽງທັມນີ້ຄືຄົນຊນິດໃດ ? ໒.– ຄຳວ
ທ່ຽງທັມຫມາຍຄວາມວ່າປານໃດ ? ໓.– ເຮັດປາ
ໃດຈຶ່ງໄດ້ຄວາມຈິບຫາຍເຂົ້າໃສ່ຕົວ ? ໔.– ເປັນຫຍັ
ຄົນຜູ້ດີບໍ່ປາກເອົາຄົນຊົວຊາມເຂົ້າເປັນເພື່ອນ ?

ໃຈຄວາມ.– ຄົນໃດບໍ່ກຽດຄ້ານງານວຽກທຳສເມີ ໃຈທ່ຽງທັມທັງຜູ້ໃ
ກໍບໍ່ບ້ອງ ຄົນໃດຫນ້າບຸດບົ້ງລັກລອບຂອງເຂົາໃຈບໍ່ອ
ເນົານົວ ລັກລອບ ລວງເລິງ ເລື້ອບ ທັງ ເລົ່າ ໃນໂທຮ້າຍ ໃ
ໃຈນ ຂະໂນບ ໃຫຍ່ ບິດ ກົດຫມາຍ ເພິ່ນ ບໍ່ ໄວ້ ອົບ ເຂົ້າ ໄ
ດອາງ.

ສັບ.– ຄົນບໍ່ທ່ຽງທັມ.

ນາມ : ຫນ້າ, ໃຈ, ເນີ.

ຄຸນນາມ : ຊາມ, ຮ້າຍ.

ກິຣິຍາ : ຈູງ, ເວັ້ນ, ຍິນດີ.

ໄວຍາກອນ.– ຄຳສັພນາມ.

ຄຳສັພນາມແມ່ນຄຳນາມປະເພດນຶ່ງ. ສຳລັບແທນຄຳ
ນາມຕົວຈິງ ເພື່ອໃຫ້ພົ້ນຈາກການຊ້ຳຄວາມເກົ່າ
ຄຳສັພນາມທີ່ຫມັ່ນໃຊ້ປຸ່ມກວັນນີ້ມີ : ຂ້ອຍ, ຂ້ານ້ອຍ



ມຶງ, ເຈົ້າ, ມັນ, ລາວ, ພວກຂ້ອຍ, ພວກເຈົ້າ,
ພວກມັນ, ພວກເຮົາ, ເປັນຕົ້ນ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ໂສພາ, ບໍ່ຄ່ອງ,
ບຸດບົ້ງ, ລັກລອບ, ຄອງທັມ, ຄຽດແຄ້ນ.

ຄຳເຄົ້າດຽວກັນ.– ໂສພາ : ໂສພາບ, ໂສພົນ. ກາໂຍ : ກາຍ.
ຊີວາ : ຊີວັງ, ຊີວິດ. ໃຈໂຮ : ໃຈຮາ, ໃຈຮັງ, ໃຈນ.

ບົດທ່ອງຂຶ້ນໃຈ.– ໃຫ້ເບິ່ງຫົວຂໍ້ ໔໖ ຄົນບໍ່ທ່ຽງທັມ ຫນ້າ ໑໔໓.

ແຕ່ງເຣື່ອງ.– ໃຫ້ເຈົ້າແຕ່ງເຣື່ອງ ຄົນຂີ້ລັກບຸ່ນບົ້ງມາໂດຍຫຍໍ້.

# ໔໓. ປໂຍດຂອງຖນົນ ແລະ ທາງຣົຖໄຟ



ທາງຣົຖໄຟສາຍໃຫຍ່ກວ່າຫມູ່ໃນປະເທດອິນດູຈີນ ແມ່ນ
ສາຍຈາກໄຮຟອງໄປຫາປຸນານຟູຊີງບາວໄດ້ ໓໕໐ ກິໂລແມດ ແລະ

ສາຍຈາກຮາໂນຍໄປຫາຕຸຮານຊຶ່ງຍາວໄດ້ ໓໐໐ ກິໂລແມດ. ແຕ່ຕຸຮາ
ໄປຫາປຸນານພຸ ເພິ່ນໄປຣົຖໄຟໄດ້ກວ່າ ໑.໕໐໐ ກິໂລແມດຄືປານກ
ກັບທາງແຕ່ປາກເຊໄປຕາມນ້ຳຂອງເຖິງຫ້ວຍຊາຍ. ແຕ່ຕຸຮານໄປຫ
ປຸນານພຸ ຣົຖໄຟໄປສີ່ມື້ກັບຄືນນຶ່ງ ຍາວກວ່າແຕ່ປາກເຊເຖິງຫ້ວຍຊາ
ແຕ່ກ່ອນຍ່າງທາງດິນຕ້ອງໃຊ້ເວລາ ໔໕ ມື້ຈຶ່ງຮອດ.

ປຸ່ປະເທດລາວ ຍັງມີທາງຣົຖໄຟສາຍນຶ່ງສັ້ນ ໆ ສຳລັບ
ເຄື່ອງແລະຄົນຈ້າງກຳປັ່ນແຕ່ທາງຄອນມາຫາດອນເດດ ນອກຈາກ
ເພິ່ນຍັງໄດ້ລົງມືສ້າງທາງຣົຖໄຟສາຍນຶ່ງ ຍາວໄດ້ ໖໐໐ ກິໂລແມດ ແ
ທ່າແຂກໄປຫາຕຸຮານ, ຮາໂນຍ.

ຖນົນແລະທາງຣົຖໄຟ ເຮັດໃຫ້ເຮົາເດີນໄປມາໂດຍສະດວກແລ
ໄວ ຈະສົ່ງສິນຄ້າຕ່າງ ໆ ໄປຂາຍນອກປະເທດກໍໄດ້ຫລາຍ ທັງໄ
ມາບໍ່ຫາອະດຸເລີນ.

ຖນົນແລະທາງຣົຖໄຟພາໃຫ້ບ້ານເມືອງບໍຣິບູນດີ.

ຄຳອະທິບາຍ.– ບໍຣິບູນ : ເຕັມປ່ຽມດີ. ສະດວກ : ບໍ່ມີຄວາມຂັດຂ້ອງ
ສິນຄ້າ : ເຄື່ອງຊື້ແລະເຄື່ອງຂາຍ, ສິ່ງຂອງຂອງພໍ່ຄ້າ.

ຄຳຖາມ.– ໑.– ທາງຣົຖໄຟ ສາຍໃຫຍ່ກວ່າໝູ່ໃນປະເທດອິນດູຈີນ
ແມ່ນສາຍໃດແດ່ ແລະຍາວໄດ້ຈັກກິໂລແມດ ? ໒.– ປ
ປະເທດລາວຍັງມີທາງຣົຖໄຟສາຍໃດອີກ ? ແລະສຳລັ
ຂົນຫຍັງ ? ຕັ້ງແຕ່ໃສໄປຫາໃສ ? ໓.– ຖນົນແລະທາ
ຣົຖໄຟເຮັດໃຫ້ເຮົາເດີນໄປມາໄດ້ຢ່າງໃດ ?



ໃຈຄວາມ.– ທາງຣົຖໄຟ ສາຍໃຫຍ່ກວ່າໝູ່ໃນປະເທດອິນດູຈີນ ຍາວໄດ້ ໓໐໐ ກິໂລແມດ, ຈາກຮາໂນຍໄປຫາຕຸຮານຍາວໄດ້ ໓໐໐ ກິໂລແມດ, ແຕ່ຕຸຮານໄປຫາປຸນານພຸເພິ່ນໄປຣົຖໄຟໄດ້ກວ່າ ໑.໕໐໐ ກິໂລແມດ; ແຕ່ກ່ອນນັ້ນຍ່າງທາງດິນ ໔໕ ວັນຈຶ່ງຮອດ ແຕ່ທ່າແຂກໄປຫາຕຸຮານ, ຮາໂນຍຍາວໄດ້ ໖໐໐ ກິໂລແມດ.

ສັບ.– ຖນົນແລະທາງຣົຖໄຟ.

ນາມ : ທາງຣົຖໄຟ, ປະເທດ, ຄົນຈ້າງ.

ຄຸນນາມ : ໃຫຍ່, ສັ້ນ.

ກິຣິຍາ : ເດີນ, ຂົນ, ສົ່ງ, ຂາຍ.

ໄວຍາກອນ.– ຄຳສັພນາມ (ຕໍ່) ບຸຣຸດສັພນາມ.

ບຸຣຸດສັພນາມແມ່ນຄຳນາມສຳລັບແທນຕົວສະເພາະຜູ້ໃດຜູ້ນຶ່ງທີ່ເວົ້າຮອດ ຕົວຢ່າງ : ພຣະບາຟ້າງຸ້ມເປັນພຣະເຈົ້າແຜ່ນດິນທີ່ມີເດຊານຸພາບມາກ. ພຣະອົງທ້ອນໂຮມແຜ່ນດິນລາວໃຫ້ເປັນອັນນຶ່ງອັນດຽວກັນ. ດັ່ງນັ້ນ, ພຣະອົງເປັນບຸຣຸດສັພນາມ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ປໂຍດ, ຖນົນ, ອິນດູຈີນ, ໄຮຟອງ, ປຸນານພຸ, ກິໂລແມດ, ຮາໂນຍ, ຕຸຮານ, ຫ້ວຍຊາຍ, ປາກເຊ.

ຄຳເຄົ້າດຽວກັນ.– ຍ່າງ : ບົວຣະບາດ, ບ້າຍ.

ແຕ່ງເຣື່ອງ.– ຈົ່ງແຕ່ງເຣື່ອງທາງຣົຖໄຟສາຍນຶ່ງ.

# ໕໔. ເສືອແລະໜູ



ມື້ນຶ່ງ ມີໜູນ້ອຍຕົວນຶ່ງກາຍໄປໃກ້ ໆ ເສືອໃຫ່ຍຕົວນຶ່ງໃນໄ
ວ່າປາກປອກ, ເສືອໃຫ່ຍຈຶ່ງເອົາຕີນຕົບໜູແລະເວົ້າວ່າ "ກູສັງມ
ປາກກິນມຶງແທ້" ໜູນ້ອຍມີຄວາມປ້ານ ຈຶ່ງຂໍຊີວິດນຳເສືອວ່
"ໂອ ! ເຈົ້າພະຍາເສືອເອີຍ, ຂ້ານ້ອຍກໍເປັນສັດນ້ອຍນັກ, ຂໍພະຍາ
ຈົ່ງສົມເພດຂ້ານ້ອຍແລະປ່ອຍຂ້ານ້ອຍທ້ອນ !" ເສືອ, ເມື່ອຄຶດ
ຕາວນຶ່ງແລ້ວກໍປ່ອຍໃຫ້ໜູນັ້ນໄປ ແລະເວົ້າໃຫ້ມັນວ່າ "ເພ່
ຄວາມມຶງແລ້ວຕົວມຶງກໍນ້ອຍຫລາຍເຖີງຈະກິນກໍບໍ່ພໍອີ່ມ. ກູປ່ອຍ
ມຶງ, ໃຫ້ມຶງໄປດີເທີ້ !" ໜູຕອບເສືອວ່າ "ຂອບໃຈພັນເທື່ອແລ້ວ
ພະຍາເສືອເອີຍ ! ຂ້ານ້ອຍຈະບໍ່ລືມບຸນຄຸນຂອງພະຍາຈັກເທື່ອ.
ຂໍໃຫ້ພະຍາຈົ່ງມີຄວາມສຸຂເສີມທ້ອນ !" ແລ້ວມັນກໍໜີໄປ.



ພາຍລຸນມາ, ເສືອຕົວນັ້ນເລີຍໄປຖືກແຮ້ວທີ່ເຂົາຕັ້ງໄວ້ ຈະດິ້ນດັ້ນຮົດໄປມາສັກເທົ່າໃດແຮ້ວກໍບໍ່ຂາດໄດ້, ເປັນແຕ່ບຸນໜູນ້ອຍຕົວນັ້ນເລີຍກາຍໄປຫັ້ນເຫັນເສືອຕິດແຮ້ວເຂົາຢູ່, ຈຶ່ງຟ້າວໄປບອກພວກໝູ່ພ້ອມກັນຫລາຍຄົວ, ໜູຕົວນັ້ນກໍກັບມາຫາເສືອ. ເຂົາພາກັນຕັ້ງໃຈກັດເຊືອກແຮ້ວໃຫ້ຂາດ, ແລ້ວເສືອຈຶ່ງພົ້ນອັນຕລາຍ.

ນິທານເລື່ອງນີ້ສະແດງໃຫ້ເຮົາເຫັນວ່າ ຄວາມດີຊຶ່ງເຮົາໄດ້ກະທຳມານັ້ນ ບໍ່ສູນຫາຍເປັນຈັກເທື່ອແລະຜູ້ໃຫຍ່ມັກໄດ້ເພິ່ງຜູ້ນ້ອຍຢູ່ສເມີ.

ຄຳອະທິບາຍ.— ອັນຕລາຍ : ເຫດຮ້າຍແຮງ. ຊີວິດ : ຄວາມເປັນຢູ່, ບໍ່ຕາຍ. ຄວາມສົມເພດ : ຄວາມສົງສານ, ຄວາມອີດູ. ຕາວນຶ່ງ : ບຶດນຶ່ງ, ຂນະນຶ່ງ.

ຄຳຖາມ.— ໑.— ເປັນຫຍັງເສືອໃຫ່ຍຈຶ່ງບໍ່ກິນໜູນ້ອຍ ? ໒.— ໜູນ້ອຍຂໍຊີວິດນຳເສືອວ່າຢ່າງໃດ ? ໓.— ເສືອຕອບວ່າຢ່າງໃດ ? ໔.— ໜູຕອບເສືອວ່າຢ່າງໃດ ? ພາຍລຸນມາ, ເສືອຕົວນັ້ນໄປຖືກຫຍັງ ?

ໃຈຄວາມ.— ໜູນ້ອຍຕົວນຶ່ງໄປຈົບເສືອໃຫ່ຍຕົວນຶ່ງ, ເສືອເວົ້າວ່າກູສັງມາປາກກິນມຶງແທ້, ໜູນ້ອຍອ້ອນວອນນຳເສືອ ໆ ກໍປ່ອຍໜູນັ້ນໄປ. ພາຍລຸນມາເສືອໄປຖືກແຮ້ວ ໜູຕົວນັ້ນກໍເອີ້ນເອົາໝູ່ມາກັດເຊືອກໃຫ້ຂາດ, ເສືອຈຶ່ງພົ້ນຄວາມຕາຍ. ເຫັນດາຜູ້ໃຫຍ່ມັກໄດ້ເພິ່ງຜູ້ນ້ອຍສເມີ.

ສັບ.— ເສືອແລະໜູ.

ນາມ : ໝູ, ເສືອໂຄ່ງ, ບຸບຄຸບ, ແຮ້ວ, ເຊືອກ.
ຄຸນນາມ : ນ້ອຍ, ດີ, ໃຫຍ່.
ກິຣິຍາ : ປອກ, ປ່ອຍ, ຊອບໃຈ, ແລ່ນ, ຕັ້ງໃຈ.
ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ມື້ນຶ່ງ, ໝູນ້ອຍ, ເສືອໂຄ່ງ, ປ້ານ, ຊີວິດ, ສົນເພດ, ສຸຂເສີມ, ເຊືອກ, ອັນຕຣາຍ.
ຄຳເຄົ້າດຽວກັນ — ກິນ : ກິນ. ຕອບ : ໂຕ້. ເສືອ : ສາງ ໃຈ : ຈິດ, ຈິຕວິທຍາ.
ແຕ່ງເຣື່ອງ.— ໃຫ້ແຕ່ງນິທານເຣື່ອງໃຫມ່ທີ່ມີເນື້ອຄວາມວ່າ : ຄວາມ ດີຊຶ່ງເຮົາໄດ້ກະທຳໄວ້ນັ້ນບໍ່ເສັຽຫາຍຈັກເທື່ອ.

# ໕໕. ມ້າສລາດຕົວນຶ່ງ





ແມ້ວຄົນນຶ່ງ ເຄີຍຂີ່ມ້າໄປຂາຍ ເຄື່ອງປູກຝັງຂອງລາວ ທີ່ຕລາດ ເດືອນລະສອງເທື່ອ. ມ້າຕົວນັ້ນຕ່າງຖົງສອງຫນ່ວຍທີ່ເຕັມດ້ວຍເຄື່ອງຂາຍ. ຢູ່ຄໍມ້າມີກະຊ້ານ້ອຍຫນ່ວຍນຶ່ງສຳລັບໄວ້ໃສ່ເງິນທີ່ຂາຍຂອງໄດ້.

ມື້ນຶ່ງ, ແມ້ວຜູ້ນັ້ນໄດ້ຂາຍເຫັດໃຫ້ຄົນເຮືອນຫລັງນຶ່ງທີ່ຢູ່ແຄມທາງແລ້ວກໍ່ຂີ່ມ້າ ວ່າຈະເດີນຕໍ່ໄປ, ມ້າເລີຍບໍ່ໄປເປັນອັນຂາດ. ແມ້ວຜູ້ນັ້ນ ຈຶ່ງໂດດລົງມ້າ ເພື່ອຢາກຮູ້ວ່າ ເປັນດ້ວຍເຫດໃດ ມ້າຂອງຕົນຈຶ່ງບໍ່ຍ້າຍຈາກທີ່. ລາວເຫັນວ່າແສງຕາມ້າສັກໃສ່ກະຊ້ານ້ອຍທີ່ຫ້ອຍຢູ່ຄໍມັນ, ລາວຈຶ່ງຮູ້ເນື້ອວ່າເຂົາຍັງບໍ່ທັນໃຊ້ເງິນຄ່າເຫັດ, ການທີ່ມ້າບໍ່ໄປ ກໍ່ເພາະວ່າມັນບໍ່ໄດ້ຍິນສຽງເງິນຕົກໃສ່ກະຊ້ານັ້ນເຫມືອນດັ່ງເຄີຍໄດ້ຍິນມາ. ເມື່ອໄດ້ຍິນສຽງເງິນຕົກໃສ່ກະຊ້າແລ້ວມ້າສລາດຕົວນັ້ນກໍ່ຍ່າງຕໍ່ໄປ.

ຄຳອະທິບາຍ.— ມ້າສລາດ : ມ້າຮູ້ຈັກຄວາມ. ທີ່ຕລາດ : ບ່ອນຊື້ແລະຂາຍ.

ຄຳຖາມ.— ໑.— ແມ້ວຜູ້ນັ້ນໄປໃສ ? ໒.— ຖົງທີ່ມ້າຕ່າງໄປນັ້ນສຳລັບໄວ້ໃສ່ຫຍັງ ? ໓.— ເປັນຫຍັງມ້າຈຶ່ງບໍ່ຢາກຍ່າງໄປ ?

ໃຈຄວາມ.— ແມ້ວຄົນນຶ່ງເຄີຍເອົາເຄື່ອງປູກຂອງຝັງຕ່າງໃສ່ມ້າສອງຖົງໄປຂາຍ ທີ່ຕລາດ ເດືອນລະ ສອງເທື່ອ ຢູ່ຄໍມ້າມີ ກະຊ້ານ້ອຍ ສຳລັບໄວ້ໃສ່ເງິນ. ມື້ນຶ່ງມັນໄດ້ຂາຍເຫັດໃຫ້ເຂົາ ໆ ຍັງບໍ່ທັນໃຊ້ເງິນໃຫ້. ມ້າຕົວນັ້ນເລີຍບໍ່ຍ່າງໄປ ແມ້ວຄົນນັ້ນເລີຍໂດດລົງມ້າ ເມື່ອມ້າໄດ້ຍິນສຽງເງິນຕົກໃສ່ກະຊ້າແລ້ວເລີຍຍ່າງຕໍ່ໄປ.

ສັບ.— ມ້າສລາດຕົວນຶ່ງ.

ນາມ : ເຄື່ອງປຸກ, ຕລາດ, ຖົງ, ກະຊ້າ.

ຄຸນນາມ : ນ້ອຍ, ສລາດ.

ກິຣິຍາ : ຊື້, ຂາຍ, ເກັບ, ໄດ້ຍິນ, ໂດດລົງ.

ໄວຍາກອນ.— ຄຳຄຸນນາມ.

ຄຳຄຸນນາມ ແມ່ນຄຳທີ່ບອກລັກສນະຂອງຄຳນາມ ຫລືຄຳ ສັພນາມເປັນຕົ້ນ ມ້າສລາດ, ກະຊ້ານ້ອຍ, ດັ່ງນັ້ນ ສລາດ, ນ້ອຍ ເປັນຄຳຄຸນນາມ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ມ້າ, ແມ້ວ, ເຄື່ອງ ປຸກ, ຖົງ, ຄ່ນ້າ, ກະຊ້ານ້ອຍ, ເຫັດ,/ ໄຫເຮືອນ ແຄມທາງ, ແສງດາ.

ຄຳເຄົ້າດຽວກັນ.— ແຄມ : ຄີມ. ກະຊ້າ : ກະເຊົາ, ກະແຊະ.

ແຕ່ງເອື່ອງ.— ໃຫ້ແຕ່ງເອື່ອງມ້າຕົວນຶ່ງທີ່ມັນຮູ້ກວ່າມ້າຕົວອື່ນ.

---

# ໕໙. ເມື່ອສົມອິກກັບເມືອບ້ານເກົ່າ

ສົມອິກໄດ້ໜີຈາກພໍ່ໄປທຳງານລ້ຽງຊີວິດຢູ່ໃນເມືອງ. ເມື່ອ ລາວໄດ້ເປັນສມຽນ, ແລ້ວເປັນສມຸບານຊີຢູ່ໃນເຮືອນຫລັງນຶ່ງແລ້ວ, ຈຶ່ງວ່າເງິນທີ່ໄດ້ທຳການນານັ້ນ, ຈະລ້ຽງຄອບຄົວກໍ່ບໍ່ປາກກຸ້ມ ລາວ ຈຶ່ງຕົກລົງໃຈກັບຄືນເມືອເຮັດນາກິນຢູ່ບ້ານເກົ່າ.





ມື້ເຊົ້າແຕ່ເດິກລາວ ກໍ່ແບກສຽມໄປ ເສັຽຫຍ້າໃນ ນາ, ຮັກສາບໍ່ໃຫ້ງົວຄວາຍ ເຂົ້າມາໃນນາ.

ຖ້າບໍ່ມີນ້ຳ, ລາວກໍ່ ເອົາກະໂຊ້ມາສະເຂົ້າໃສ່ ດັ່ງນີ້, ຮອດທ້າຍປີມາເຂົ້າ ທີ່ລາວໄດ້ເປັນຈຳນວນ ມາກນັ້ນ ກໍ່ເປັນອາງວັນ ອັນງາມຂອງເຫື່ອແຮງ ຂອງລາວ.

ຄຳອະທິບາຍ.— ເປັນສມຸບານຊີ : ເປັນນາຍກຳກັບຮັກສາພານຊີເງິນ.
ເປັນອາງວັນ : ເປັນອາຍໄດ້ດ້ວຍເຫື່ອແຮງອັນພິເສດ.

ຄຳຖາມ.— ໑.— ເປັນຫຍັງສົມອິກບໍ່ປາກເປັນສມຸບານຊີຢູ່ໃນເຮືອນຄ້າ ຂາຍຫລັງນຶ່ງນັ້ນຕໍ່ໄປ ? ໒.— ມື້ເຊົ້າແຕ່ເດິກລາວເຮັດ ຫຍັງ ? ໓.— ຮອດທ້າຍປີມາລາວໄດ້ຫຍັງແດ່ ?

ໃຈຄວາມ.— ສົມອິກໄດ້ໄປທຳການຢູ່ໃນເມືອງ, ໄດ້ເປັນສມຽນແລ້ວ ເລື່ອນຂຶ້ນເປັນສມຸບານຊີຢູ່ໃນເຮືອນຄ້າຂາຍຫລັງນຶ່ງ ຈຶ່ງ ເຫັນວ່າເງິນເດືອນບໍ່ກຸ້ມຄອບຄົວ ຈຶ່ງກັບຄືນເມືອເຮັດນາ

ກິນຢູ່ບ້ານເກົ່າ. ຮອດທ້າຍປີມາລາວກໍໄດ້ເຂົ້າກິນເປັນ
ຈຳນວນມາກກໍເປັນອາງວັນອັນງາມເທື່ອແຮງຂອງລາວ.

<u>ສັບ</u>.— ບ້ານເກົ່າ.

<u>ບ່ານ</u> : ເມືອງ, ຄອບຄົວ, ສຽນ, ກະໄຊ້, ອາງວັນ.

<u>ຄຸນນາມ</u> : ເກົ່າ, ງາມ.

<u>ກິລິຍາ</u> : ຫນີ, ລ້ຽງ, ຕົກລົງ, ກັບຄືນ.

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສົມອົກ, ເມືອ
ບ້ານເກົ່າ, ລ້ຽງຊີວິດ, ສງົບ, ສມຸບານຊີ, ເຮືອນຄ້າຂາຍ,
ນໍ້າເຊົ້າ, ກະໄຊ້, ສຽນ.

<u>ຄຳເຄົ້າດຽວກັນ</u>.— ສມຸບານຊີ : ສມຸອົງກະອັກ, ສມຸພະອາຊພິທີ
ເກົ່າ : ກ່ອນ, ແກ່.

<u>ແຕ່ງເອື່ອງ</u>.— ໃຫ້ຫມູ່ເຈົ້າແຕ່ງເອື່ອງຂຽນຈົດຫມາຍສບັບນຶ່ງຊຶ່ງເຈົ້າ
ຈະມີໄປຫາເພື່ອນຂອງເຈົ້າຜູ້ນຶ່ງໄປຫາກິນຢູ່ໃນເມືອງໃດຍ
ບໍ່ບໍລິບູນນັ້ນ, ໃຫ້ເຈົ້າແນະນຳໃຫ້ມາຢູ່ບ້ານເກົ່າຂອງລາວ
ເພື່ອເຮັດໄຮ່ເຮັດນາກິນເສັຽ.

---

## ໕ກ. ດ້ວຍຄວາມອົດທົນ, ຈະທຳອັນໃດກໍສຳເຣັດຫມົດ

ທ້າວຫນອກ ເປັນນັກຮຽນສລາດ ແລະຫນັ້ນເນື່ອງ ອາຍຸໄດ້ສິບສອງປີ, ລາວໄດ້ເປັນທີນຶ່ງ ໃນຫ້ອງຮຽນແລະຫມູ່





ຄູ່ທັງຫລາຍ ກໍນັອງບໍ່ລາວຫມົດ. ດ້ວຍວ່າບໍ່ມີເຮືອນຢູ່, ລາວຈຶ່ງໄປອາສັຍຢູ່ວັດ ນຳເຈົ້າຫົວຫາເງິນຈະຊື້ໂຄມໄຟໄດ້ກໍບໍ່ມີ ຈຳເປັນລາວຕ້ອງທົນທຸກທົນຍາກ, ຊອກຫລືຊອກຟືນແຕ່ບ້ງເວັນ ມາໄວ້ດັງກາງຄືນ ເພື່ອຈະໃຫ້ເຫັນຮຸ່ງຮຽນຫນັງສື. ການຮຽນຂອງລາວກໍໄວດີ. ຮອດທ້າຍປີມາ, ລາວສອບໄລ່ສັນຍາບັດປະຖົມສຶກສາວິຊາຢ່າງ ແລະພື້ນເມືອງກໍໄດ້ທີນຶ່ງຫມູ່.

ແລ້ວລາວໄດ້ຮັບເບັ້ຽລ້ຽງເຂົ້າໂຮງຮຽນມັທຍົມຕໍ່ໄປ. ເມື່ອອາຍຸໄດ້ສິບເຈັດປີ. ລາວກໍສອບໄລ່ສັນຍາບັດມັທຍົມສຶກສາວິຊາຝຣັ່ງແລະພື້ນເມືອງໄດ້.

ໃນຈະຄືດວ່ານັກຮຽນຜູ້ທຸກຈົນເຖິງໄດ້ອາສັຍຢູ່ວັດນັ້ນ ຈະໄດ້ມີຄວາມສລາດເຖິງພຽງນີ້. ໃນໂລກນີ້ບໍ່ມີອັນໃດເລີຍທີ່ຄົນເຮົາຈະເຮັດບໍ່ໄດ້ ສິ່ງທັງປວງໃຫ້ຖືວ່າບໍ່ເຫລືອວິໄສຂອງຄົນຜູ້ເອົາໃຈໃສ່ຕ້ອງເຮັດໄດ້ຫມົດ.

ເດັກທັງຫລາຍເອີຍ, ໃຫ້ຫມູ່ເຈົ້າເອົາທ້າວຫນອກເປັນຕົວຢ່າງ. ໃຫ້ມີໃຈພາກພຽນອົດທົນຮ່ຳຮຽນ, ຖ້າເຈົ້າຢາກເປັນຄົນຮູ້ຜູ້ດີໃນພາຍຫນ້າ.

ຄຳອະທິບາຍ.– ສລາດ : ຫົວຄິດວ່ອງໄວ. ອົດທົນ : ຕັ້ງໃຈເຮັດບໍ່ເຫັນແກ່ຄວາມຮັງກຽດໃນວຽກການ. ຍ້ອງຍໍ : ເວົ້າແຕ່ຄວາມດີໃຫ້. ເບັ້ຍລ້ຽງ : ເງິນອຸດຫນູນ.

ຄຳຖາມ.– ການຮຽນທ້າວຫນອກເປັນແນວໃດ ? ໒.– ລາວສອບໄລ່ໄດ້ຊັ້ນໃດແດ່ ? ໓.– ຄວນເອົາລາວເປັນແບບຢ່າງບໍ່ ? ເປັນຫຍັງ ?

ໃຈຄວາມ.– ທ້າວຫນອກເປັນນັກຮຽນດີ, ອາຍຸໄດ້ສິບສອງປີໄດ້ເປັນທີ່ນຶ່ງຢູ່ໃນຫ້ອງຮຽນ, ລາວເປັນຄົນທຸກ ອາສັຍຮຽນຢູ່ທີ່ວັດ, ຮອດທ້າຍປີມາສອບໄລ່ໄດ້ສັນຍາບັດວິຊາຝຣັ່ງແລະພື້ນເມືອງ, ເມື່ອອາຍຸໄດ້ສິບເຈັດປີສອບໄລ່ໄດ້ສັນຍາບັດມັທຍົມສຶກສາວິຊາຝຣັ່ງ ແລະພື້ນເມືອງໄດ້.

ສັບ.– ຄວາມອົດທົນ.

ນາມ : ນັກຮຽນ, ຫ້ອງຮຽນ, ຫມູ່ກູ່, ກາງຄືນ, ເບັ້ຍລ້ຽງ.

ຄຸນນາມ : ສລາດ, ຫມັ່ນ.

ກິລິຍາ : ຍ້ອງຍໍ, ອາສັຍ, ຊື້, ຊອກ.

ໄວຍາກອນ.– ສັງຂຍາຄຸນນາມ.

ສັງຂຍາຄຸນນາມ ແມ່ນຄຳສຳລັບບອກຈຳນວນຂອງຄຳນາມແລະສັພນາມ.



ກ/ ປົກຕິສັງຂຍາ – ແມ່ນຄຳສຳລັບບອກຈຳນວນຕາມປົກຕິ ຄື ນຶ່ງ, ສອງ, ສາມ, ສີ່ ຕໍ່ໆ ໄປ.

ຂ/ ປູຣະນະສັງຂຍາ – ແມ່ນຄຳສຳລັບບອກຈຳນວນເປັນລຳດັບຄື ທີ່ນຶ່ງ, ທີ່ສອງ, ທີ່ສາມ ຕໍ່ໆ ໄປ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ອົດທົນ, ນັກຮຽນ ສລາດ, ຫມັ່ນ, ຫມູ່ກູ່, ວຽງຈັນ, ທົນຍາກ, ຫລິ້ວ, ຝືນ, ປະຖົມສຶກສາ.

ຄຳເຄົ້າດຽວກັນ.– ຮຸ່ງ : ເຮືອງ, ເຮືອ. ຮຽນ : ຮ່ຳ. ພິເສດ : ວິເສດ, ວິເສໃສ.

ແຕ່ງເລື່ອງ.– ໃຫ້ແຕ່ງເລື່ອງນັກຮຽນດູຫມັ່ນຄົນນຶ່ງ.

## ໕໗. ເຈົ້ານາຍທ່ຽງທັມຄົນນຶ່ງ



ອົກຍາທົນເປີເດ ເຊີງຈະເທົາ ແຕ່ກ່ອນ ເປັນເຈົ້າຄອງແຂວງກົມປົງທົມ ປະເທດຂເມນ, ມີຄວາມທ່ຽງທັມ ເປັນຢ່າງຍິ່ງ ຈົນຖືກເຂົາເລົ່າລືທົ່ວກັນໄປ.

ມື້ນຶ່ງຄົນຜູ້ນຶ່ງ ໄດ້ມາຂໍຄວາມກະຣຸນາຕໍ່ເພິ່ນ. ລາວເອົາກັບຊາກັບນຶ່ງມາຖວາຍເພິ່ນ. ຄົນຜູ້ນັ້ນ ອ້ອນວອນຫລາຍເທື່ອຫລາຍທີ ທ່ານເຊີງຈະເທົາ ຈຶ່ງບໍ່ໄດ້ກໍເລີຍຮັບເອົາ ເພາະເຫັນວ່າຂອງທີ່ເຂົາເອົາມານັ້ນ ບໍ່ມີຣາຄາ

ພໍປານໃດ. ແຕ່ປູ່ມາບໍ່ນານ, ເພິ່ນຈຶ່ງເຫັນວ່າໃນກັບຊານັ້ນມີແຕ່
ເຄື່ອງຄໍາ, ບໍ່ແມ່ນຊາເລີຍ. ເພິ່ນບໍ່ເວົ້າຫຍັງ, ອັດກັບໄວ້, ແລ້ວ
ໃຊ້ຄົນໄປເອີ້ນຄົນຜູ້ນັ້ນມາແລະເວົ້າວ່າ: "ເມື່ອກີ້ນີ້ຂ້ອຍຄິດວ່າຊາຢູ່ໃນ
ເຮືອນຂ້ອຍຫມົດຂ້ອຍຈຶ່ງໄດ້ຂໍເອົາຂອງກໍານັນເຈົ້າ. ດຽວນີ້ຂ້ອຍ
ເຫັນວ່າໃນເຮືອນຂ້ອຍຍັງມີຊາຢູ່. ສນັ້ນໃຫ້ເຈົ້າເອົາກັບຊາເຈົ້າຄືນ
ເສັຽ." ແລ້ວເພິ່ນກໍ່ເອົາກັບຊາສົ່ງຄືນໃຫ້ຜູ້ນັ້ນ ໃນເຣື່ອງນີ້ເພິ່ນກໍ່
ປົກປິດໄວ້ບໍ່ໃຫ້ຜູ້ໃດຊາບເຣື່ອງນໍາເລີຍ.

<u>ຄໍາອະທິບາຍ</u>.– ຂອງກໍານັນ : ຂອງທີ່ເອົາມາໃຫ້ເພື່ອ ປາກໃຫ້
ຜູ້ອັບຊ່ວຍເຫລືອໃນການອັນໃດອັນນຶ່ງ. ຄວາມກະຣຸນາ :
ຄວາມອີຕົນ.

<u>ຄໍາຖາມ</u>.– ໑.– ເປັນຫຍັງອັກຍາທົບເປເດ ເຊີງຈະເຫົາ ຈຶ່ງສົ່ງກັບ
ຊາຄືນໃຫ້ຜູ້ນັ້ນ ? ໒.– ມີຫຍັງຢູ່ໃນກັບຊານັ້ນ ? ໓.– ຄົນ
ຜູ້ນັ້ນມາເວົ້າວ່າຢ່າງໃດ ?

<u>ໃຈຄວາມ</u>.– ເຈົ້ານາຍຜູ້ທ່ຽງທັມບໍ່ຄວນຮັບສິນບົນຈາກບຸກຄົນໃດບຸກ
ຄົນນຶ່ງເປັນອັນຂາດ ເພາະວ່າການຮັບສິນບົນນັ້ນ ເປັນ
ເຫດໃຫ້ໄດ້ຊ່ວຍເຫລືອເອົາໃນທາງຜິດສິນທັມ.

ກັບຊານັ້ນ ມີແຕ່ເຄື່ອງສິນຈ້າງ ອາງວັນ ທັງຫມົດ

<u>ສັບ</u>.– ເຈົ້ານາຍທ່ຽງທັມຄົນນຶ່ງ.
<u>ນາມ</u> : ກັບຊາ, ເຄື່ອງຄໍາ, ຂອງກໍານັນ.
<u>ຄຸນນາມ</u> : ຫລາຍ.



<u>ກິຣິຍາ</u> : ຖວາຍ, ເວົ້າ, ສົ່ງ, ອ້ອນວອນ.
<u>ການສະກົດຄໍາ</u>.– ໃຫ້ນັກຮຽນສະກົດຄໍາຕໍ່ໄປນີ້ : ຄວາມທ່ຽງທັມ,
ເຄື່ອງຄໍາ, ກັບຊາ, ຂອງກໍານັນ, ສົ່ງຄືນ, ປົກປິດ.
<u>ຄໍາເຄົ້າດຽວກັນ</u>.– ເພິ່ນ : ເພື່ອນ. ພັກ : ພວກ.
<u>ແຕ່ງເຣື່ອງ</u>.– ຈົ່ງແຕ່ງເຣື່ອງເຈົ້ານາຍຜູ້ທ່ຽງທັມຜູ້ນຶ່ງ.

---

# ໕໗. ແມວ



ຂ້ອຍມີເລັບ ແລະ ແຂ້ວ ແຫລມ ເຫມືອນກັບ ສັດ ຈໍາພວກດຽວ
ກັນກັບຂ້ອຍ ຂ້ອຍບໍ່ເສັຽປຽບໃຫ້ແກ່ສັດກິນຊີ້ນທັງຫລາຍຢ່າງດີເລີຍ.

ຂ້ອຍມີຄວາມວ່ອງໄວເທົ່າກັນກັບເສືອ ທີ່ຄົນທັງຫລາຍຖືວ່າ
ເປັນເຈົ້າປ່າ. ຄັນຂ້ອຍໄດ້ຮ້ອງຂຶ້ນແລ້ວ, ຈໍາພວກຫນູກໍ່ຢ້ານຂ້ອຍ
ເຫມືອນກັບຄົນຢ້ານຫມີຫລືເສືອຢູ່ໃນປ່າ.

ການຂຶ້ນຕົ້ນໄມ້ຂອງຂ້ອຍກໍ່ໄດ້ໄວເຕັມທີ ບາງທີຂ້ອຍໄດ້ຂຶ້ນ
ຕົ້ນໄມ້ເພື່ອຈັບໜູ. ເວລາໄດ້ໜູແລ້ວ ຂ້ອຍກໍ່ຂຶ້ນໄປກິນຢູ່ເທິງແປ
ເຮືອນ.

ຄຳອະທິບາຍ.– ວ່ອງໄວ : ລວດເລວ. ເຈົ້າປ່າ : ຜູ້ປົກຄອງປ່າ
ເຫຍື່ອ : ອາຫານ. ເທິງແປເຮືອນ : ຢູ່ບົນຫລັງຄາ.

ຄຳຖາມ.– ໑.– ສັດປ່າງໃດຈຶ່ງນັບວ່າແມ່ນສັດກິນຊີ້ນ ? ໒.– ຈົ່ງ
ໄລ່ສັດທີ່ຢູ່ໃນຈຳພວກດຽວກັນກັບແມວມາໃຫ້ເບິ່ງ ?

ໃຈຄວາມ.– ແມວອວດວ່າຂ້ອຍເປັນສັດວ່ອງໄວ ທັງມີເລັບແລະແຂ້ວ
ແຫລມເທົ່າກັນກັບເສືອ ທີ່ຄົນນັບຖືວ່າເປັນເຈົ້າປ່າ ໜູ
ກໍ່ຢ້ານຂ້ອຍ ເໝືອນກັນກັບຄົນຢ້ານເສືອ, ເວລາເຫຍື່ອ
ຢູ່ໃນເລັບຂ້ອຍແລ້ວ ຂ້ອຍກໍ່ຂຶ້ນໄປກິນມັນຢູ່ເທິງແປເຮືອນ

ສັບ.– ແມວ.

ນາມ : ເລັບ, ແຂ້ວແຫລມ, ເສືອ, ໜູ, ແປເຮືອນ.

ຄຸນນາມ : ຫລາຍ.

ກິລິຍາ : ເສັງປຽບ, ຮ້ອງ, ຢ້ານ, ຈັບ.

ໄວຍາກອນ.– ຄຳກິລິຍາ.

ຄຳກິລິຍາ ແມ່ນຄຳໃຊ້ສະແດງອາການຂອງຄຳນາມ
ຫລືຄຳສັພນາມ ດັ່ງປາງ : ຂ້ອຍມີເລັບ, ຂ້ອຍຮ້ອງ, ຂ້ອຍ
ຊອກຈັບໜູ ດັ່ງນັ້ນ ມີ ຮ້ອງ ຊອກຈັບ ແມ່ນຄຳກິລິຍາ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ແມວ, ເລັບ,



ແຂ້ວແຫລມ, ສັດກິນຊີ້ນ, ຄວາມວ່ອງໄວ, ຢ້ານ,
ຕົ້ນໄມ້, ເຫຍື່ອ, ແປເຮືອນ.

ຄຳຄ້າຍຄຽງກັນ.– ແຫລມ : ຫລາວ, ຫລິ້ມ. ຮ້ອງ : ຮຽກ, ໂຮ,
ຮິວ, ເຮ, ຮາ. ຢ້ານ : ຢຳແຢງ, ຢົດຢ່ອນ.

ແຕ່ງເລື່ອງ.– ຈົ່ງແຕ່ງຮູບພັນຂອງແມວຕົວໜຶ່ງທີ່ເຈົ້າໄດ້ເຫັນ, ມັນ
ເປັນປໂຍດຢ່າງໃດແດ່ ?

---

# ໕໐. ໝາແລະຕ່ອນຊີ້ນ

ມື້ໜຶ່ງ, ໝາຕົວໜຶ່ງເຂົ້າໄປລັກເອົາຊີ້ນຕ່ອນໜຶ່ງ, ຢູ່ໃນໂຮງຂາຍຊີ້ນ ຖືກເດັກໃນໂຮງຂາຍຊີ້ນໄລ່, ມັນກໍ່ເປີດເຕັມຕີນຂອງມັນ.



ເມື່ອເຖິງຂົວແຫ່ງໜຶ່ງແລ້ວ. ມັນກໍ່ຢຸດເຊົາ ເບິ່ງໄປໃນນ້ຳ ມັນເລີຍເຫັນຕ່ອນຊີ້ນຕ່ອນໜຶ່ງ ໃຫຍ່ກວ່າຕ່ອນທີ່ມັນຄາບຢູ່ ມັນປະຕ່ອນທີ່ຢູ່ໃນປາກມັນນີ້ແລ້ວໂດດລົງນ້ຳ ເພື່ອຈະເອົາຕ່ອນຊີ້ນໃຫຍ່ນັ້ນ ມັນໂດດລົງໄປກໍ່ເສັຽແຮງເປົ່າໆ ດ້ວຍວ່າຕ່ອນຊີ້ນ ທີ່ມັນຈະເອົານັ້ນແມ່ນແຕ່ເງົາເທົ່ານັ້ນ. ເມື່ອເວລາມັນໂງ່ມາຫາຊີ້ນຕ່ອນເກົ່າທີ່

ນັ້ນປະຖິ້ມນັ້ນ ນ້ຳກໍເລີຍພັດໄປໄກແລ້ວ, ມັນຈະບິນໃສ່ປາກໃດກ໌
ບໍ່ເຖິງຕ່ອນຊີ້ນ.

ການທີ່ຫມາໄດ້ລັກຕ່ອນຊີ້ນມານັ້ນ, ກໍນັບວ່າມັນໄດ້ກະທຳ
ຄວາມຜິດປ່າງນຶ່ງ ການທີ່ມັນປະຕ່ອນຊີ້ນແທ້ເພື່ອຈະເອົາຕ່ອນ
ຊີ້ນນັ້ນກໍນັບວ່າມັນໂງ່ຫລາຍ, ປະເຫຍື່ອເພື່ອເອົາເງົາກໍແມ່ນທຳ
ຄວາມກືນແຫນງ ໃຫ້ແກ່ຕົນເອງເປົ່າ ໆ ດ້ວຍວ່າເຫຍື່ອກໍເສັ
ແລະເງົານັ້ນກໍຫາກແມ່ນຂອງຈັບເອົາບໍ່ໄດ້ແຕ່ໃດມາແລ້ວ ປ່າໄດ້
ບິນເອົາຂອງທີ່ໂລກບໍ່ອາດຈະໃຫ້ເຮົາໄດ້ ປ່າໄດ້ຖິ້ມຂອງທີ່ເຮົາມີ
ແລ້ວເພື່ອນຳຄວາມຫລົງໄຫລດານຂອງບໍ່ມີນັ້ນເລີຍ.

ສິບກິບປູ່ຝາກນ້ຳ, ປ່າໄດ້ອ່າວຄນຶ່ງຫາ; ສອງອັດແລ່ນມາ
ມື, ໃຫ້ເຈົ້າກຳເອົາໄວ້.

<u>ຄຳອະທິບາຍ.</u>— ເຫຍື່ອ : ອາຫານສັດ, ເຄື່ອງລໍ້. ກືນແຫນງ
ເສັຽໃຈໃນພາຍຫລັງ.

<u>ຄຳຖາມ.</u>— ໑.— ຫມາໂຕນັ້ນລັກເອົາຕ່ອນຊີ້ນມາແຕ່ໃສ ? ໒.— ມັນ
ເຫັນຫຍັງຢູ່ໃນນ້ຳ ? ໓.— ເພັນຫຍັງມັນຈຶ່ງປະຕ່ອນ
ຊີ້ນ ? ໔.— ພາຍລຸນມາເປັນປ່າງໃດ ? ໕.— ບົດອ່ານນີ້ພາ
ໃຫ້ເຈົ້າຄິດປ່າງໃດ ?

<u>ໃຈຄວາມ.</u>— ມື້ນຶ່ງ, ຫມາໂຕນຶ່ງລັກເອົາຕ່ອນຊີ້ນຢູ່ໂຮງຂາຍ
ຊີ້ນ ຖືກເດັກໄລ່ອອກຈາກໂຮງຂາຍຊີ້ນ ແລ່ນໄປເຖິງ
ຂົວແຫ່ງນຶ່ງ ຫລຽວເຫັນເງົາຊີ້ນຢູ່ໃນນ້ຳສຳຄັນວ່າ
ແມ່ນຕ່ອນຊີ້ນ ຈຶ່ງວາງຕ່ອນເກົ່າໂດດລົງເອົາເງົາຊີ້ນ



ເລີຍຖືກນ້ຳພັດໄປເປົ່າ ໆ ຕ່ອນເກົ່າກໍຫາຍ ຕ່ອນໃຫມ່
ກໍບໍ່ໄດ້.

<u>ສັບ.</u>— ຫມາແລະຕ່ອນຊີ້ນ.

<u>ນາມ</u> : ຫມາ, ຕ່ອນຊີ້ນ, ເງົາ.

<u>ຄຸນນາມ</u> : ໃຫມ່, ເກົ່າ.

<u>ກິລິຍາ</u> : ໂດດ, ລັກ.

<u>ການສະກົດຄຳ.</u>— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຄວາມຄິດ, ເຫຍື່ອ,
ໂລກ, ຄວາມຫລົງໄຫລ, ສິບ, ກິບ.

<u>ຄຳເຄົ້າຄຽງ</u>ກັບ.— ຈັກເທື່ອ : ຈັກທີ.

<u>ແຕ່ງເລື່ອງ.</u>— ໃຫ້ເຈົ້າແຕ່ງເລື່ອງລູກສິດຂີ້ລັກຜູ້ນຶ່ງ.

---

# ໕໑. ການຫມາບັກເຫລ່ວຂອງຂ້ອຍ

ບັດນີ້, ຂ້າຈັກເວົ້າ ເລື່ອງການສຸນັກ
ບັກເຫລ່ວຄັກ ເພັນຊື່ຂອງມັນ
ຮູບພັນ ສູງກົມອອດຫລອດ
ຫາງບໍ່ຂອດ ກັງຂຶ້ນພໍດີ
ສີມັນແດງ ດ່າງຫລັງກັບທ້ອງ
ຫູມັນຊ້ອງ ໄປຫນ້າຊອງລອງ
ສິບມັນຫມອງ ດຳປາຍຈັກຫນ່ອຍ



ກຽງລ້ອຍຊ້ອຍ　ອ່ອນແຈບອິງມັ
ຫນາສ່ວຄັງ　ເປັນຫນ້າຮັກໃຄ່
ຂ້ອຍລ້ຽງໄວ້　ເອົາເຂົ້າໃຫ້ກິນ
ສຸດຖວິນ　ຫມາດີຫາຍາກ
ຄົນອື່ນປາກ　ມາໃກ້ເຮືອນຊານ
ມັນທະຍານ　ຫອນດັງໂດດໃສ່
ເຂົ້າໄປໃກ້　ທຳທ່າຈະກັດ
ຄັນເຫັນສັດ　ຫລືຄົນໃນບ້ານ
ມັນບໍ່ຕ້ານ　ຫອນເຫົ່າແນວໃ
ນອນຕາໃສ　ເບິ່ງປູ່ເບົາ ໆ
ຍາມກິນເຂົ້າ　ມັນບໍ່ໄປກວນ
ທ່ວກະບວນ　ກືຄົນຜູ້ຮູ້
ນອນຫມູບຄູ້　ຫລຽວເບິ່ງດູດາຍ
ຄັນເຮົາກາຍ　ເອົາເຂົ້າຖິ້ມໃຫ້
ມັນຈຶ່ງໄດ້　ຄາບອອກໄປກິນ
ດີນແລະຫູ　ຫາງເຫນັງຫລິກຫລັກ
ຄືດັ່ງມັນ　ຮູ້ຈັກຂອບໃຈນຳຂ້ອຍ ແລນາ.

ຄຳອະທິບາຍ.- ຮູບພັນ : ຮູບຮ່າງ.　　ສຸດຖວິນ : ຮັກຫລາຍ
ທະຍານ : ໂດດທັ້ວຟ້າວ.　　ຫລິກຫລັກ : ວັບລິງວິ
ຂຶ້ນ.



ຄຳຖາມ.- ໑.- ຫມາຂອງເຈົ້າຊື່ບັກຫຍັງ ?　໒.- ຮູບພັນຫມາຂອງເຈົ້າເປັນປາງໃດ ? ຫູຫາງມັນເດ ?　໓.- ຄົນອື່ນມາມັນເຮັດປາງໃດ ? ຖ້າຄົນສັດໃນບ້ານເດ ? ໔.- ເວລາກິນເຂົ້າມັນເຮັດປາງໃດ ? ໕.- ມັນເຮັດຫຍັງໃສ່ເຈົ້າເມື່ອເຈົ້າເອົາເຂົ້າຖິ້ມໃຫ້ ?

ໃຈຄວາມ.- ຂ້ອຍມີຫມາຕົວນຶ່ງຊື່ວ່າບັກເຫລ່ວ ຮູບພັນນ້ອຍສູງກົມຫາງກົງພ່ງາມ ຫູ້ຂົນກໍອ່ອນແຈບດີ ເມື່ອເຫັນຄົນອື່ນເຂົ້າບ້ານມັນມັກຫອນແຮງ ແລະໂດດໃສ່ຄືຈະກັດ ແຕ່ເຫັນຄົນຫລືສັດຢູ່ໃນບ້ານມັນບໍ່ເຫົ່າຫອນເລີຍ ເວລາເຮົາກິນເຂົ້າມັນກໍເສີຍຢູ່ ຖ້າເຮົາເອົາເຂົ້າໃຫ້ກິນມັນແກວ່ງຫົວ ແລະຫາງຄ່ອຍ ໆ ຄືມັນຮູ້ຈັກຂອບໃຈນຳຂ້ອຍ ສະນັ້ນຂ້ອຍຈຶ່ງຮັກແລະອີດູມັນຫລາຍ.

ສັບ.- ຫມາບັກເຫລ່ວ

ນາມ : ຫມາ, ຫາງ, ຫູ, ຂົນ.

ຄຸນນາມ : ສູງ, ກົມ, ດ່າງ, ດຳ.

ກິລິຍາ : ຂອດ, ຮັກ, ເບິ່ງ, ໂດດ.

ການສະກົດຄຳ.- ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ບັກເຫລ່ວ, ກົງຂົ້ນ, ຍາມກິນເຂົ້າ, ຄືຄົນຜູ້ຮູ້.

ຄຳເຄົ້າດຽວກັນ.- ຊ້ອງ : ຊໍ່, ຊີ້, ຊັບ.

ບົດທ່ອງຂຶ້ນໃຈ.– ໃຫ້ນັກຮຽນ ທ່ອງຂຶ້ນໃຈ ເອົາການ ບົດຮຽນ ທີ ໖

(ເລື່ອງໝາບັກເຫລ່ວໜ້າ ໑໖໗)

ແຕ່ງເລື່ອງ.– ຈົ່ງແຕ່ງເລື່ອງໝາທີ່ດີບົ່ງປູ່ເຮືອນຂອງເຈົ້າ.

# ໖໒. ໝາບັກເຫລ່ວຂອງຂ້ອຍ (ຕໍ່)



ຕໍ່ແຕ່ນີ້ ເວົ້າເລື່ອງຄຸນໝາ ຟັງຄຳອາລ້ຽງຄຸນບອກໄວ້
ຜໍ່ໃຫ້ໄດ້ ເປັນຂໍ້ວິຈານ ໃຫ້ລູກຫລານຈື່ຈຳໄປໜ້າ
ໝາບູ້ຂ້າ ບັກເຫລ່ວມັນດີ ມັນຫາກມີບຸນຄຸນຕ່າງ ໆ
ປາງທີ່ນຶ່ງ ມັນຮັກເຈົ້າຂອງ ບໍ່ຈອງຫອງເຫົ່າຫອນຜູ້ເຈົ້າ
ປາງສອງເວົ້າ ມັນຮັກສາເຮືອນ ມັນດັກເຕືອນຍາມໂຈນເຂົ້າ
ບ້ານ ບໍ່ພຽດຄ້ານ ປານທະຫານຍາມ
ປາງທີ່ສາມ ຍາມພະຄຸນບາດ ມັນສລາດຫອນໃສ່ວົງ ໆ



ຄືຊິ່ງຄົນ ໃຈບຸນປາວຮ້ອງ ໃຫ້ພີ່ນ້ອງເຮືອນໃກ້ແລະໄກ
ໄດ້ດັ່ງໃຈ ກິນທານຍາຍແປ່ ຂ້ອຍໄດ້ແທ້ບຸນນັ້ນຍອນມັນ
ສິ່ງສຳຄັນ ຍາມໄປທ່ຽວປ່າ ມັນທຳທ່າຄືເປັນນາຍພານ
ເຫັນກວ່າງຟານ ໄລ່ເອົາກໍ່ໄດ້
ເຫງັນແລະໄກ່ ແລນເຕົ່າເຕັ່ນຫາມ
ບັກເຫລ່ວງາມ ຈັບດີຈັ່ງຊີ້
ຕັ້ງແຕ່ນີ້ ຟັງຂ້ຮັກສາ ຂ້ອຍລ້ຽງໝາປາງຄືຊຽນຂ້ອຍ
ຄືວ່າຂ້ອຍ ບໍ່ຂ້າຕີມັນ ອາຫານປັນໃຫ້ກິນຈົນອີ່ມ
ອາບນ້ຳໃຫ້ ມັນກ້ຽງປູ່ສເມີ ແລນາ

ຄຳອະທິບາຍ.– ຕຳລາ : ແບບແຜນທີ່ວ່າດ້ວຍວິຊາຕ່າງ ໆ.
ວິຈານ : ພິຈາລະນາ.

ຄຳຖາມ.– ໑.– ໝາບັກເຫລ່ວຂອງເຈົ້າມັນເປັນຢ່າງໃດ ? ໒.– ຄຸນໝາບັກເຫລ່ວຂອງເຈົ້າປາງທີ່ນຶ່ງວ່າຢ່າງໃດ ? ປາງທີ່ສອງເດ ? ໓.– ຄຸນປາງທີ່ສາມມັນເຮັດຢ່າງໃດໃຫ້ເຈົ້າ ? ປາງທີ່ສີ່ມັນເຮັດຫຍັງ ? ໔.– ເຈົ້າລ້ຽງດູມັນເຮັດແນວໃດແດ່ ?

ໃຈຄວາມ.– ໝາບັກເຫລ່ວຂອງຂ້ອຍມີຄຸນຫລາຍຢ່າງ ຄື ມັນຮັກຂ້ອຍແລະເຝົ້າເຮືອນດີ, ມີໂຈນຜູ້ຮ້າຍເຂົ້າບ້ານມັນເຫົ່າຫອນຂຶ້ນດັງ ໆ ໂລດ ຖ້າມັນເຫັນເຈົ້າຫົວນາຄຸນບາດມັນກໍ່ຫອນເໝືອນກັນ ເພື່ອໃຫ້ຂ້ອຍໄດ້ກິນທານ ທັງ

ເວລາຂ້ອຍພາມັນໄປປ່າ ມັນກໍໄລ່ເອົາສັດປ່າໃຫ້ຂ້ອຍ
ຂ້ອຍຮັກມັນຫລາຍ ຂ້ອຍຈຶ່ງລ້ຽງມັນໃຫ້ດີ ຄືຂ້ອຍບໍ່ຂ້າ
ຕີມັນທັງອາບນ້ຳໃຫ້ມັນປຸເລື້ອຍ ໆ.

__ສັບ.__— ໝີ່ນາບັກເຫລ່ວ (໔)

__ນາມ__ : ຕຳຮາ, ລູກ, ຫລານ, ເຮືອນ.

__ຄຸນນາມ__ : ງາມ, ຈົບ, ດີ.

__ກິລິຍາ__ : ລ້ຽງ, ເກືອ, ອາບ.

__ການສະກົດຄຳ.__— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ວິຈານ, ລູກຫລານ
ຕັກເຕືອນ, ຫອນໄສ່ວົງ ໆ, ກິນທານພາຍແຜ່.

__ຄຳເກົ່າຄ່ຽວກັນ.__— ສລາດ : ສລຽວ. ພາຍແປ່ : ພາຍເພື່ອ.

__ບົດທ່ອງຈື່ນໃຈ.__— ໃຫ້ນັກຮຽນທ່ອງຈື່ນໃຈ ເອົາຕາມບົດຮຽນທີ ໓
(ເລື່ອງໝາບັກເຫລ່ວ ໔) ໜ້າ ໑໗໐.

__ແຕ່ງເລື່ອງ.__— ຈົ່ງແຕ່ງເລື່ອງ ການໄປທ່ຽວປ່າທີ່ພວກເຈົ້າເຄີຍໄປ
ແຕ່ກ່ອນມາໃຫ້ຟັງແດ່.

---

## ໓໓. ເຕົ່າແລະໜູ

ໜູຕົວນຶ່ງໄປທ່ຽວຊອກຫາກິນຫລິ້ນ, ເອົາແຕ່ໃຊກຈະມີ
ມັນ ເລີຍ ໄປ ພົບ ເຕົ່າ ຕົວ ນຶ່ງ ທີ່ ເຈັ້ຍອງ ອັນໜັກ ລືເລືອ ໄປດ້ວຍ
ຄວາມລຳບາກ ໜູເຂົ້າໄປທຽມໃດຍສຽດສວຍ ແລະຕິດາງຈົ້ນສົງ
ສານເຕົ່າວ່າ ໄດປຸໃນອອງຂອງໃດ, ກໍພົບວ່າ ຄືປຸໃນຄຸກແທ້ແລ້ວ





ເປັນເຊັ່ນນີ້ໃດບັງທົນໄດ້ຫນໍ !· ສ່ວນກັບນີ້, ກັບສະຖິດປຸຫໍປາສາດທີ່
ມີເຄື່ອງປະດັບອັນງົດງາມ ແລະກັບຈະໄປທ່ຽວທາງໃດກໍໄດ້ຕາມໃຈ.

ເຕົ່າຕອບວ່າ : "ກັບປຸເຮືອນນ້ອຍ ໆ ກໍຈິງແລ້ວ, ແຕ່ຫາກ
ແມ່ນເຮືອນຂອງກັບແທ້. ປຸຕູບນ້ອຍທີ່ເປັນຂອງຕົນເອງ ດີກວ່າ
ປຸຫໍປາສາດຂອງຜູ້ອື່ນ" ໃນເວລານັ້ນ, ແມວຕົວນຶ່ງອອກມາ. ອ້າຍ
ໜູກໍແລ່ນເຂົ້າໄປລີ້ປຸໃນໂກນອັນມືດ. ສ່ວນເຕົ່າທີ່ປຸສະບາຍໃນອອງ
ຂອງມັນນັ້ນ ກໍນຸທ່າງເບິ່ງແມວເສີຍປຸ.

__ຄຳອະທິບາຍ.__— ສະຖິດ : ຕັ້ງປຸ່. ປະດັບ : ເອ້. ປາສາດ : ເຮືອນນີ
ຍອດ. ຄວາມສະຫາວ : ຄວາມຂວດຕົນອວດໃດ.

__ຄຳຖາມ.__— ໑.— ໜູຕົວນັ້ນໄປໃສ ? ໒.— ໜູຈົ່ມສົງສານເຕົ່າ
ວ່າປ່າງໃດ ? ໓.— ເຕົ່າຕອບໜູວ່າປ່າງໃດ ?

__ໃຈຄວາມ.__— ຄົນເຮົາບໍ່ຄວນເອົາຂອງຜູ້ອື່ນມາອ້າງ ວ່າດີ ວ່າມີ ວ່າ
ຮັ້ງຈັກເທື່ອ, ປຸຫໍປາສາດຂອງຜູ້ອື່ນ ເຖິງວ່າຈະສນຸກ
ປານໃດກໍຕາມ, ບໍ່ທໍ່ປຸຕູບນ້ອຍຂອງເຮົາເອງເລີຍ.

ສັບ.— ເຕົ່າແລະຫນູ.

ນາມ : ຫນູ, ເຕົ່າ, ແມວ.

ຄຸນນາມ : ຫນັກ, ງາມ.

ກິຣິຍາ : ຊອກ, ຫ່ຽວ, ສະດຸດ.

ໄວຍາກອນ.– ວິກັດຕິກິຣິຍາ.

ວິກັດຕິກິຣິຍາແມ່ນກິຣິຍາທີ່ມີໃຈຄວາມບໍ່ຖ້ວນຖີ່ ຕ້ອງ
ອາໄສຄໍາອື່ນຫລືແອບແຝງຄໍາອື່ນສເມີ ເປັນຕົ້ນ ມີ ໄດ້
ເປັນ ຕົວຢ່າງ : ຂ້ອຍມີເວລາ, ລາວໄດ້ຂອງດີ, ລູງເຮົາ
ເປັນພໍ່ນາ.

ການສະກົດຄໍາ.— ໃຫ້ນັກຮຽນສະກົດຄໍາຕໍ່ໄປນີ້ : ຄວາມລໍາບາກ, ອອງ
ເຕົ່າ, ຄຸກ, ປາສາດ, ເຄື່ອງປະດັບ, ດູນນ້ອຍ, ແມວ
ຕົວນຶ່ງ, ຄວາມສະຫາວ.

ຄໍາເຄົ້າກຽວກັນ.— ຄຸກ : ຄອກ. ປາສາດ : ຜາສາດ. ພົບ : ພໍ້, ພອມ

ແຕ່ງເຣື່ອງ.— ຈົ່ງແຕ່ງເຣື່ອງເຕົ່າຕົວນຶ່ງ.

---

# ໒໔. ຄວາມຣະວັງແມ່ນຕົ້ນ ຂອງຄວາມແນ່ນອນ

ຫນູຕົວນຶ່ງປລໍ່ຫົວອອກຣູມາ, ກໍ່ເຫັນແມວຕົວນຶ່ງກາຍໄປ
ໃກ້ ໆ ນັ້ນ ເຫັນວ່າຕົວປຸ່ພົ້ນເລັບຂອງແມວແລ້ວ, ອ້າຍຫນູຈຶ່ງ





ຮ້ອງຕໍ່ຖຽງແມວດ້ວຍຄວາມເຂັ້ມແຂງວ່າ : "ເຈົ້າເກີນວ່າບໍ່ດີຊະພໍ່ແມ່ອ້າຍນ້ອງຂອງຂ້ອຍ ແລະຂ້ອຍບໍ່ໄດ້ກະທໍາຮ້າຍໃຫ້ເຈົ້າຈັກເທື່ອ, ເຈົ້າກໍ່ບົກຂ້າຫມູ່ຂ້ອຍທັງວັນທັງຄືນ. ໃຫ້ຮູ້ຈັກໄວ້ວ່າຄວາມຮ້າຍຂາດນີ້ຕ້ອງໄດ້ຮັບໂທດສເມີ, ເພື່ອຢາກຢູ່ສະບາຍໃຈຕ້ອງໃຫ້ມີນໍ້າໃຈດີ" ແມວຈຶ່ງຕອບຫນູວ່າ "ໂອເກີນວ່າມຶງສລາດເພາະອີນ້ອຍເຮີຍ ! ນ້ອນມຶງນີ້ແລ້ວ.

ຽວນີ້ກູຈຶ່ງເຂົ້າໃຈວ່າ ຕ້ອງມີນໍ້າໃຈດີເພື່ອຈະຢູ່ສະບາຍໃນໂລກ ກູຂໍສາບານໃຫ້ວ່າແຕ່ນີ້ໄປກູຈະບໍ່ກະທໍາຮ້າຍໃຫ້ມຶງແລະພໍ່ແມ່ພີ່ນ້ອງຂອງມຶງຈັກເທື່ອ ອອກມາຫາກູເບິ່ງດູ ! ຢ່າຢ້ານຫຍັງຽວນີ້, ກູຄິດຮັກມຶງຫລາຍແລ້ວ"

ຫນູໄດ້ຍິນແມວເວົ້າດັ່ງນັ້ນ, ກໍດີໃຈ, ຟ້າວແລ່ນອອກມາຫລີກກັບນັ້ນ, ນຶກວ່າແຕ່ນີ້ໄປມັນເປັນເພື່ອນອັນສນິດຂອງຕົນແລ້ວ, ນ້ອຍວ່າຫນູອອກມັ້ນຣູມາ, ແມວກໍໂດດຄຸບແລະໃສ່ປາກໂລດ.

ປາໄດ້ເຊື່ອຄົນຕາມຄວາມເວົ້າ, ຕ້ອງໃຫ້ເບິ່ງຕາມຄວາມ
ປະພຶດຂອງເຂົາ.

ຄຳອະທິບາຍ.– ຄວາມເຂັ້ມແຂງ : ຄວາມຮ້າຍກາດ. ບ້ອຍວ່າ :
ພໍ່ວ່າ, ພໍ່ເມື່ອ, ທັນໃດນັ້ນ.

ຄຳຖາມ.– ໑.– ເຈົ້າຮູ້ຈັກວ່າ ແມວກັບຫນູ ເປັນຂອງ ສັດຕູ ກັນມາ
ແຕ່ໃດບໍ່ ? ໒.– ເປັນຫຍັງຫນູຈຶ່ງເຊື່ອຄວາມເວົ້າຂອງ
ແມວ ?

ໃຈຄວາມ.– ເຮົາບໍ່ຄວນໄວ້ໃຈກັບຄົນທີ່ເປັນສັດຕູຂອງເຮົາຈັກເທື່
ເຖິງວ່າເຂົາຈະເວົ້າອ່ອນຫວານປານໃດກໍ່ຕາມ, ເຮົ
ຕ້ອງຣະວັງປຸສເມີ.

ສັບ.– ຄວາມຣະວັງແມ່ນຕົ້ນຂອງຄວາມແນ່ນອນ.

ນາມ : ຫນູ, ແມວ, ໂກນໄມ້.

ຄຸນນາມ : ຮ້າຍ, ສະບາຍ.

ກິຣິຍາ : ໂດດ, ໃນ່ມ, ສະບາຍ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ແມວຕົວນຶ່ງ, ເລັ
ຄວາມເຂັ້ມແຂງ, ອ້າຍ, ນ້ອງ, ຄວາມປະພຶດ, ໂດ
ຄຸນ, ອອກມັ້ນຣ.

ຄຳເຄົ້າດຽວກັນ.– ຄວາມເຂັ້ມແຂງ : ຄວາມອົນອົບ, ຄວາມອັບແຂງ
ໂທດ : ໂທໄສ, ໂທສາ.

ແຕ່ງເຣື່ອງ.– ຈົ່ງແຕ່ງເຣື່ອງແມວຕົວນຶ່ງ.



# ໖໕. ການຕຶກເບັດ



ໃນວັນເສົາໂຮງຮຽນພັກ, ທ້າວກິ່ງ ກັບ ທ້າວສິນ ເພື່ອນໂຮງຮຽນດຽວກັນ, ໄດ້ຕຶກເບັດທີ່ແຄມນ້ຳງື່ມຊຶ່ງເປັນແມ່ນ້ຳທີ່ຄ່ອຍໄຫລຊ້າ ໆ ກາຍບ້ານເຂົາໄປ. ເວລາເຊົ້າມື້ນຶ່ງເມື່ອໄດ້ເສື້ອເກົ່າ ແລະຫມວກໃບໃຫຍ່ຄົນລະໃບ ເພື່ອປ້ອງກັນແສງແດດກ້າແລ້ວ ເຂົາກໍ່ພາກັນໄປ ທ້າວກິ່ງຖືເບັດຊຶດ ອັນມີຄັນຍາວ ແລະກະປ໋ອງເຫຍື່ອ. ທ້າວສິນຖືກະຕ່າເຄື່ອງກິນ. ເຂົາພາກັນໄປຫາບ່ອນທີ່ມີຮົ່ມດີ ແລະ ບ່ອນນ້ຳເລິກ. ສັກຄາວນຶ່ງ, ເຂົາກໍ່ຖິ້ມເບັດລົງນ້ຳ, ແຕ່ຫົວທີ, ບໍ່ມີຫຍັງເຫບເລີຍ ກິ່ງແລະສິນບໍ່ທານດຶງຈັກເມັດ ເພາະປ້ານປາທີ່ຂຶ້ນມາບ້ອນຫາຍໃຈນັ້ນຕື່ນ ແຕ່ວ່າຄວາມອົດຂອງເຂົານັ້ນກໍ່ນຳຜົນມາໃຫ້ເຂົາດີປຸ. ເຂົາແບກເບັດເລື້ອຍ ໆ ເທື່ອໃດກໍ່ໄດ້ປາຕົວໃຫຍ່ ໆ ສເມີ. ບໍ່ນານກະຕ່າກໍ່ເຕັມ. ເມື່ອເຂົາໄດ້ປັ້ນເຂົ້າງາຍອີ່ມພໍແລ້ວ, ເຂົາກໍ່ກັບເມືອບ້ານດ້ວຍຄວາມຊື່ນໃຈ ແລະແມ່ເຂົາກໍ່ມີຄວາມຍິນດີເຮັດອາຫານອັນແຊບໃຫ້ເຂົາກິນແລງ.

ຄຳອະທິບາຍ.– ແຍກເບັດ : ຊຶດເບັດ. ຊື່ນໃຈ : ດີໃຈ.

ຄຳຖາມ.– ໑.– ທ້າວກິງກັບທ້າວສິນໄປຕຶກເບັດຢູ່ໃສ ? ໒.– ເຂົ
ໄປຕຶກເບັດພໍເວລາປານໃດ ? ໓.– ຜູ້ຕຶກເບັດຕ້ອງ
ຫຍັງແດ່ ? ໔.– ໃຫ້ໄລ່ເຄື່ອງຫາປາຊນິດອື່ນອີກສາ
ເອົາປານີຫຍັງແດ່ ?

ໃຈຄວາມ.– ໂຮງຮຽນພັກ ທ້າວກິງ ແລະ ທ້າວສິນ ສອງສ່ຽວ ພາກ
ຕຶກເບັດຢູ່ແຄມນ້ຳງື່ມ, ບ່ອນຫ້ວຍມີນ້ຳໄຫລຊ້າ ໆ.
ຢູ່ບ່ອນທີ່ມີຣົ່ມດີແລະນ້ຳເລິກ, ເຂົາຊຶດເບັດເລື້ອຍ ໆ
ນານກະຕ່າກໍເຕັມ, ເມື່ອກິນເຂົ້າງາຍອີ່ມແລ້ວ, ເຂົ
ກັບບ້ານດ້ວຍຄວາມຊື່ນໃຈ ແລະແມ່ຂອງເຂົາກໍມີຄວ
ຍິນດີເຮັດອາຫານແຊບໃຫ້ເຂົາກິນແລງ.

ສັບ.– ການຕຶກເບັດ.

ນາມ : ເພື່ອນ, ຫ້ວຍ, ເສື່ອ, ຫນວກ, ປາ.

ຄຸນນາມ : ເກົ່າ, ເລິກ.

ກິຣິຍາ : ປ້ອງກັນ, ຖີ້ມ, ດຶງ, ຫາຍໃຈ.

ໄວຍາກອນ.– ຄຳບຸພບົດ

ຄຳ ບຸພບົດ ແມ່ນ ຄຳ ປະເພດ ທີ່ໃຊ້ ນຳ ຫນ້າ ຄຳ ນາມ
ສັພນາມຫລືຄຳກິຣິຍາ ເພື່ອບອກຕຳແຫນ່ງຂອງ



ເຫລົ່ານັ້ນ ຕົວຢ່າງ : ນັກຮຽນຢູ່ໃນຫ້ອງຮຽນ, ຕູ້ຫນັງສື ຂອງຂ້ອຍ, ຄຣູຄອຍຖ້າເພື່ອຊີ້ແຈງບົດຮຽນ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ການຕຶກເບັດ, ແຄມ ນ້ຳ, ຫ້ວຍ, ເສື່ອ, ຫນວກ, ແສງແດດ, ເບັດຊຶດກັບເບັດ, ກະປອງ, ຄວາມອິດ, ຄວາມຊື່ນໃຈ.

ຄຳເຄົ້າດຽວກັນ.– ຄາວ : ຄັ້ງ. ຕື່ນ : ຕື່ນຂ່າວ, ຕື່ນຕົວ, ຕື່ນຕາຍ, ຕື່ນເຕັ້ນ.

ແຕ່ງເລື່ອງ.– ໃຫ້ເລົ່າເລື່ອງການທີ່ເຈົ້າໄດ້ໄປຕຶກເບັດກັບເພື່ອນຂອງ ເຈົ້າດັ່ງນີ້.

## ໒໒. ການຫາປາໃນທະເລສາບ ປະເທດຂເມນ



ມີພວກເຈັກແລະມະລາປູເທົ່ານັ້ນ ທີ່ຫາປາຢູ່ໃນທະເລສາບ
ປະເທດຂເມນ. ຄົນຂເມນເອງກໍ່ມີແຕ່ເລັກນ້ອຍ. ຄັນຮອດເດືອນຫົກ
ມາແລ້ວພວກກຳກັບການຫາປາກໍ່ພາກັນໄປ ຕັ້ງບ້ານເຮືອນຢູ່ທີ່ຕາ
ຝັ່ງທະເລສາບຫລືບາງທີ, ຖ້າເຂົາຢູ່ຕາຝັ່ງບໍ່ໄດ້, ເຂົາກໍ່ປຸກເຮືອນສູງ
ຢູ່ກາງນ້ຳໃລດ. ປຸກ້າງເຮືອນນັ້ນ, ເຂົາກໍ່ເອົາໄມ້ໄຜ່ປຸກຮ້ານໄວ້ປາງ
ກວ້າງຂວາງ ເພື່ອຕາກມອງແລະເຄື່ອງຫາປາຕ່າງ ໆ ພໍແຈ້ງສວ່າງ
ເຂົາກໍ່ພາລູກຈ້າງຂອງເຂົາຂີ່ເຮືອນ້ອຍອອກໄປຫາປາ.

ວິທີຫາປາຂອງເຂົານັ້ນ ກໍ່ຍັງແມ່ນວິທີທີ່ເຂົາເຄີຍໃຊ້ມາແຕ່
ບຮານປູ ເພື່ອໃຫ້ປາມາຕອນ ເຂົາສັກຫລັກລຽນກັນໄປໃຫ້ເປັນທີ່
ຕ້ານໄວ້ຊຶ່ງຂີ້ເຫຍື່ອແລະເຄື່ອງຂອງທີ່ນ້ຳພັດມາ.

ປູອ້ອມນັ້ນ, ເຂົາທຳເຝືອກແຂວນໄວ້. ພໍຄະເນວ່າປາເຂົ້າໄປ
ຫລາຍແລ້ວ, ເຂົາກໍ່ຄ່ອຍຫຍັບເຂົ້າໄປ, ແລ້ວແກ້ເຝືອກທຸກອັນພ້ອມ
ກັນ ໃຫ້ມັນລົງອ້ອມປາໄວ້. ບາດນີ້ກໍ່ຍັງແຕ່ຈະເອົາສວີງມາຕັກເອົາ
ປາທີ່ຖືກຂັງຢູ່ໃນວົງເຝືອກເທົ່ານັ້ນ.

ລາງຄົນກໍ່ເອົາຫລັກໄມ້ໄຜ່ຕຶງມອງໄວ້. ໃນນີ້ບຶງເຂົາປາມເທື່ອ
ບຶງ, ແຕ່ກ່ອນຈະປາມ, ເຂົາເອົາໄມ້ຕີນ້ຳໄລ່ປາມາຫາມອງເສັຽກ່ອນ.

<u>ຄຳອະທິບາຍ</u>.— ທີ່ລ້ານໄວ້ : ທີ່ປ້ານໄວ້ ພໍຄະເນ : ພໍຕວງເຫັນວ່າ
ທະເລສາບ : ຫນອງໃຫຍ່ກວ່າບຶງ.

<u>ຄຳຖາມ</u>.— ໑.— ມີພວກໃດແດ່ທີ່ຫາປາໃນທະເລສາບປະເທດຂເມນ
໒.— ພວກ ກຳກັບ ການ ຫາປາ ນັ້ນ ເຮັດຫຍັງແດ່ ? ໓.—
ເຂົາຫາປາໃນວິທີໃດ ?



<u>ໃຈຄວາມ</u>.— ການຫາປາຢູ່ໃນທະເລສາບປະເທດຂເມນນັ້ນ, ພວກຂເມນມີນ້ອຍກວ່າພວກເຈັກແລະມະລາປູ. ວິທີຫາປາຂອງເຂົານັ້ນ ກໍ່ຍັງແມ່ນວິທີເຂົາເຄີຍໃຊ້ມາແຕ່ບູຮານປູ: ລາງຄົນກໍ່ເອົາຫລັກໄມ້ໄຜ່ຕຶງມອງໄວ້ ໃນນີ້ບຶງເຂົາມາປາມເທື່ອບຶງ.

<u>ສັບ</u>.— ການຫາປາ.

<u>ນາມ</u> : ເຈັກ, ມະລາປູ, ເຝືອກ, ໄມ້ໄຜ່.

<u>ຄຸນນາມ</u> : ນ້ອຍ, ກວ້າງ.

<u>ກິຣິຍາ</u> : ຕັ້ງ, ປຸກ, ຕອນ.

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ເຈັກ, ມະລາປູ, ເດືອນຫົກ, ໄມ້ໄຜ່, ມອງ, ເຮືອ, ຫລັກ, ຂີ້ເຫຍື່ອ, ເຝືອກ, ສວີງ.

<u>ຄຳເຄົ້າດຽວກັນ</u>.— ຂເມນ : ເຂມະຣະ, ຂອມ. ປະເທດ : ປະເທໂສ, ປະເທສາ. ເຈັກ : ຈີນ. ສູງ : ສວດຂຶ້ນ.

<u>ແຕ່ງເອື່ອງ</u>.— ໃຫ້ແຕ່ງເຣື່ອງທີ່ເຈົ້າໄດ້ໄປຫາປາກັບ ຫມູ່ເພື່ອນຂອງເຈົ້ານີ້ໃດນີ້ບຶງມາໃຫ້ຟັງ.

---

## ຝຶກ. ການຫາປາໃນທະເລສາບ ປະເທດຂເມນ (໓)

ຄັນພວກຫາປາມາແລ້ວ, ພວກທີ່ບໍ່ມີວຽກຄືພວກແມ່ບຶງ



ກໍພາກັນຜ່າວສາ ຂໍຮັບຈ້າງຄົວປາ. ເຂົາແຜ່ປາ, ເອົາໄສ້ອອກ, ເອົາເກືອເຂືອນ, ແລ້ວເບີຍໃສ່ຮ້ານດາກແດດໄວ້ຫລາຍອັນ. ຄ່າຈ້າງພວກຄົວປານີ້, ກໍບໍ່ຫລາຍດອກ.

ກາງຄືນມາ, ເຂົາກໍເອົາສາດແກ່ມາປົກປາ ເພື່ອບໍ່ໃຫ້ຖືກ ຫມອກຫລືຝົນ. ເຂົາບັງເຮັດນ້ຳປາ ອີກ, ຄືເຂົາເອົາປາມາຕຳແຊ່ໃສ່ ເກືອໄວ້. ພຸງປາເຂົາກໍພຽນເກັບໄວ້ ເຫມືອນກັນ ເພາະວ່າມັນເປັນຂອງສິນຄ້າອັນມີຄ່າ, ເພີ່ນຊື້ໄປເຮັດນ້ຳ ກາວ. ເພື່ອປາກໄດ້ປາປ້າງ, ເຂົາກໍເອົາປາມາວາງປາຍໃສ່ຕົ້ງ ແລ້ວດັງໄຟໃຫ້ມີຄວັນຫລາຍ ໆ ໃສ່ກ້ອງນັ້ນ. ການຫາປາໃນຫນອງ ນີ້ເປັນອັນໃຫຍ່ຫລວງເຕັມທີ. ປາແຫ້ງທີ່ເຂົາໄດ້ທຸກປີບໍ່ແມ່ນຂາຍ ແຕ່ໃນປະເທດແກວໄດ້ແລະຂະເມນເທົ່ານັ້ນ ຍັງສົ່ງໄປຂາຍຮອດສິງກະ ໂປແລະປະເທດຈີນອີກ.

ຄ່າພາສີຫາປາໃນຫນອງນີ້ ກໍນັບວ່າເປັນຣາຍຮັບອັນສຳຄັນ ຣາຍບົ້ງຂອງງົບປະມານປະເທດຂະເມນ, ແຕ່ສ່ວນປາທີ່ຫາໄດ້ນັ້ນ ຖ້າ ຈະປຽບໃສ່ປາທີ່ມີຢູ່ໃນຫນອງ, ກໍແມ່ນວ່າໄດ້ນ້ອຍທີ່ສຸດ ເພື່ອຈະ



ໃຫ້ອຸດສາຫະກັມຝ່າຍນີ້ໄດ້ຜົນຫລາຍຂຶ້ນ, ກໍຈະຕ້ອງໃຊ້ວິທີຫາປາທີ່ດີກວ່ານີ້ອີກ ຈຶ່ງຈະໄດ້.

ຄຳອະທິບາຍ.— ວິທີ : ໂຄງການຫລືຊອກທາງທີ່ຈະທຳ. ອຸດສາຫະກັມ : ການສ້າງສາໃຫ້ເປັນສິນຄ້າເຂົ້າອອກ. ຄ່າພາສີ : ເກັບຄ່າຣາຍໄດ້ເຂົ້າຄັງຫລວງ.

ຄຳຖາມ.— ໑.— ພວກແມ່ຍິງແລະເດັກນ້ອຍຄົວປາເຮັດຢ່າງໃດ? ໒.— ເພື່ອຈະເຮັດນ້ຳປາເຂົາເຮັດຢ່າງໃດ? ໓.— ເຂົາປ້າງປາເຂົາເຮັດແນວໃດ? ໔.— ເຂົາເອົາປາໄປຂາຍປະເທດໃດແດ່?

ໃຈຄວາມ.— ດັ່ງພວກຫາປາມາແລ້ວ, ຍັງມີຄົນມາຂໍຮັບຈ້າງຄົວປາອີກຄືແມ່ຍິງແລະເດັກນ້ອຍ, ແຕ່ຄ່າຈ້າງພວກຄົວປານີ້ກໍບໍ່ຫລາຍດອກ. ການຫາປາໃນຫນອງນີ້ເປັນການອັນໃຫຍ່ຫລວງເຕັມທີ, ເພື່ອຈະໃຫ້ອຸດສາຫະກັມຝ່າຍນີ້ໄດ້ຜົນຫລາຍຂຶ້ນ, ກໍຈະຕ້ອງໃຊ້ວິທີຫາປາດີກວ່ານີ້ອີກຈຶ່ງຈະດີ.

ເລື່ອງ.— ການຫາປາ.

ນາມ : ຫນອງ, ສາດ, ເກືອ.

ຄຸນນາມ : ຫລາຍ, ແຫ້ງ, ໃຫຍ່.

ກິຣິຍາ : ປ້າງ, ເຂືອນ, ຄົວ.

ໄວຍາກອນ.— ຄຳສັນທານ.

ຄຳສັນທານ ແມ່ນຄຳປະເພດທີ່ໃຊ້ສຳລັບຕໍ່ຄຳກັບຄຳ ປໂຍກກັບປໂຍກ ຫລືຂໍ້ຄວາມກັບຂໍ້ຄວາມໃຫ້ເນື່ອງ

ກັບ ຕົວຢ່າງ: ພໍ່ແລະລູກ, ອ້າຍລໍາແດ່ນ້ອງຫລືນ, ນັ
ຮຽນດີຮຽນຫນັງສືຈົບແລ້ວໄດ້ ເປັນຄົນ

ການສະກົດຄໍາ.— ໃຫ້ນັກຮຽນສະກົດຄໍາຕໍ່ໄປນີ້: ແມ່ບົງ, ເດັກນ້ອຍ, ນ້ອ
ຮ້ານ, ກາງຄືນ, ສາກ, ຫມອກ, ຜົນ, ພຸງປາ, ນ້ຳກາວ, ນ້ຳປ

ຄໍາເກົ່າດຽວກັນ.— ຜົນ : ເຜື່ອ, ຝ້າ. ຫລວງ : ຫລາຍ.

ແຕ່ງເລື່ອງ.— ຈົ່ງແຕ່ງເລື່ອງຄົນຫາປາຜູ້ນຶ່ງທີ່ເຈົ້າໄດ້ເຫັນມາໃຫ້ຟັ

# ໘໗. ສິລປະສາດ



ສິລປະສາດພາໃຫ້ ມີຄ
ແຫ່ງຄວາມຈເຣີນ, ວິຊາຣະບາ
ສີ, ວິຊາຄວັດ, ວິຊາກໍ່ສ້າງ,
ໄທສີ, ວິຊາຟ້ອນ, ວິຊາແຕ່ງໂ
ເຫລົ່ານີ້ແມ່ນສິລປະສາດທັງສິ້ນ.

ຖ້າຈະປະສົງຫາແຕ່ການ
ກິນແດ່ ນຸ່ງຫົ່ມ ເທົ່ານັ້ນ ຄົນເຮົາ ກໍ
ລໍາຄານໃຈເຕັມທີ, ເຮົາຕ້ອງ
ແລະນຸ່ງຫົ່ມກໍຈິງແລ້ວ, ແຕ່
ຕ້ອງ ຊອກ ຫາ ມາ ບັງ ຄວາມ
ບານໃຈອັນສງ່າ ແລະບໍຣິສຸດ
ການ ຊົມ ເຊີຍ ຝ່າຍ ສິລປະ ສາເ
ຖ້າ ເຮົາ ກິນ ເຂົ້າ ໃນ ຖ້ວຍ ຊຸ ບ



ເບື້ອງແລະຖ້ວຍບ່ວງສ້ອມອັນສະອາດ, ເຄື່ອງກິນນັ້ນກໍປາກົດວ່າມີອົດ
ອົບກວ່າທັມດາອີກ ບຶງໃດນຸ່ງເຄື່ອງອັນງົດງາມ ຖືແຫວນ, ຖືສາຍ
ສ້ອຍ, ຖືຫມາກຕຸ້ມແລະໃສ່ຫມາກຕຸ້ມຫູ, ບຶງນັ້ນກໍປາກົດວ່າງາມບຶງ
ຂຶ້ນ ເລືອນທັມດາກໍດາມ, ຖ້າເຈົ້າຫາກຮູ້ຈັກເອົາກໍຄືງາມ.

ນະໂຫສີ ແລະ ການຂັບລໍາພາໃຫ້ເຮົາມີຄວາມຍອບຊອບຫູ ຮູບ
ຫລໍ່ຫລືຄວາມຄວັດ ແລະແຜ່ນຮູບຕ່າງ ໆ ພາໃຫ້ຊື່ນຕາ ການກອບ
ທັງຫລາຍພາໃຫ້ນ້ຳໃຈຂອງເຮົາເບີກບານຂຶ້ນ, ຂອງສິ່ງໃດທີ່ທໍາໃຫ້
ຂັບທັງຫ້າ ແລະດວງຈິດຂອງເຮົາຍອບຊອບກໍນັບຢູ່ໃນຈໍາພວກສິລປະ
ສາດທັງສິ້ນ. ສນັ້ນ ສິລປະສາດກໍມີປໂຍດແກ່ເຮົາ ມັນທໍາໃຫ້ຊີວິດ
ຂອງເຮົາສົດຊື່ນ ແລະເຮົາກໍມີຄວາມສຸກທັງກາຍແລະໃຈດ້ວຍ.

ຄໍາອະທິບາຍ.— ບໍຣິສຸດ : ຄວາມບ່ອງໃສ. ເບີກບານ : ຫນ້າຕາ
ແຊ່ມຊື່ນ. ລໍາຄານໃຈ : ຫນັ່ງໃຈ. ຂັບທັງຫ້າ : ກອງ
ແຫ່ງຮູບ, ເວທນາ, ສັນຍາ, ສັງຂານ, ແລະວິນຍານ.

ຄໍາຖາມ.— ໑.— ສິລປະສາດຄືວິຊາອັນໃດແດ່ ຈົ່ງອະທິບາຍມາເປັນ
ຕົວຢ່າງເບິ່ງດູ ? ໒.— ຖ້າມີແຕ່ການຢູ່ກິນແລະນຸ່ງຫົ່ມ
ເທົ່ານັ້ນ ຄົນເຮົາຈະເປັນຢ່າງໃດ ? ໓.— ເພື່ອຢາກມີ
ຄວາມເບີກບານໃຈອັນສງ່າເຄົາ ເຮົາຕ້ອງເຮັດຢ່າງໃດ ?
໔.— ສິລປະສາດມີປໂຍດແກ່ເຮົາຢ່າງໃດ ?

ໃຈຄວາມ.— ສິລປະສາດ ຄື ວິຊາຣະບາຍສີ, ຄວັດ, ກໍ່ສ້າງ
ນະໂຫສີ, ຟ້ອນ, ແຕ່ງໂຄງ, ວິຊາເຫລົ່ານີ້ພາໃຫ້ຂັບ

ທັງຫ້າ ແລະດວງຈິດ ຂອງເຮົາ ອອນຊອນຂຶ້ນ, ສນັ້ນ ສິລປະສາດກໍມີປໂຍດແກ່ເຮົາ ມັນທຳໃຫ້ຊີວິດຂອງ ເຮົາສົດຊື່ນແລ້ວເຮົາກໍມີຄວາມສຸກທັງກາຍແລະໃຈດ້ວຍ.

<u>ສັບ</u>.- ສິລປະສາດ.

<u>ນາມ</u> : ນິດສັບ, ມະໂຫຣີ, ແຫວນ, ສາຍສ້ອຍ, ດຸ້ມຫູ.

<u>ຄຸນນາມ</u> : ສງ່າ, ບໍຣິສຸດ, ເບີກບານ, ສົດຊື່ນ.

<u>ກິຣິຍາ</u> : ປະສົງ, ຊອກຫາ, ປະກວດ, ເອ້.

<u>ການສະກົດຄຳ</u>.- ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສິລປະສາດ, ວິຊາ ການລະບາຍສີ, ການຄວັດ, ການກໍ່ສ້າງ, ມະໂຫຣີ, ການແຕ່ງໂຄງ, ລຳຄານໃຈ, ການຟ້ອນ, ການຊົມເຊີຍ, ດຸ້ມຫູ.

<u>ຄຳເທົ່າດຽວກັນ</u>.- ເອ້ : ອວດ, ອົງ, ອ້າງ.

<u>ແຕ່ງເຣື່ອງ</u>.- ໃນຈຳພວກສິລປະສາດທີ່ໄດ້ກ່າວມາແລ້ວນີ້, ເຈົ້າ ຊອບອັນໃດກວ່າກັນ ຈົ່ງຊີ້ແຈງມາໃຫ້ຟັງ.

---

## ໙໔. ມະໂຫຣີ

ມະໂຫຣີ ແມ່ນ ການປະສົມສຽງ ດ້ວຍເຄື່ອງເສບ ຕ່າງ ໆ ເຂົ້າ ກັນ ເພື່ອໃຫ້ອອນຊອນຫູແກ່ຜູ້ຟັງ ເຄື່ອງເສບບໍ່ຄືກັນທຸກປະເທດ.

ທີ່ປະເທດລາວ, ເຄື່ອງພິນພາດທັມດາ, ມີຫລາຍຢ່າງຄື : ລະນາດເອກ, ລະນາດທຸ້ມ, ຄ້ອງວົງ, ປີ່, ກອງຕະໂພນແລະ ກອງທັດ.





ລະນາດເອກແລະລະນາດທຸ້ມ ເຮັດດ້ວຍກົບໄມ້ຫລືກົບ ເຫລັກ. ຄ້ອນຕີລະນາດແມ່ນຕົວກົມສອງອັນທີ່ມີໄມ້ແກ່ນມົນ ໆ ຕິດ ຫົວສີບ້າປຸ່ມປາຍ. ຄ້ອງວົງກໍມີຮູບຊົງຄືກັນກັບຄ້ອນລະນາດ ແຕ່ ຫົວໃຫຍ່ແລະກັ່ນສັ້ນກວ່າໜ່ອຍນຶ່ງ. ກອງທັດແມ່ນກອງໃຫຍ່ ສອງໜ້າເຄັ່ງດ້ວຍຕະປູ ໄມ້ຕີດ້ວຍຄ້ອນ. ກອງຕະໂພນແມ່ນ ກອງສອງໜ້າເຄັ່ງດ້ວຍສາຍໜັງ, ມີຕີນແລະຕີດ້ວຍມື.

ແຕ່ເຄື່ອງເສບທີ່ຄົນລາວໃຊ້ຫລາຍນັ້ນແມ່ນແຄນ. ແຄນນີ້ ເຮັດດ້ວຍໄມ້ເຮັ້ຍນ້ອຍຫລາຍລຳເປັນຄູ່ຫລຸດ ໆ ກັນລົງໄປ. ໄທລາວ ເກືອບໝົດທຸກຄົນຮູ້ຈັກເປົ່າແຄນ. ເຄື່ອງເສບອັນນີ້ອອນຊອນດີ ຖ້າມາແລ້ວໃນປະເທດລາວ, ບໍ່ວ່າບ້ານໃດ, ກໍໄດ້ຍິນສຽງແຄນທຸກ ບ້ານ.

ນອກຈາກເຄື່ອງເສບທີ່ໄລ່ມານີ້, ທີ່ປະເທດລາວ ຍັງມີ ກະຈັບປີ່, ຊຸ່ນແລະຊໍອີ.

ຄຳອະທິບາຍ.– ຕະປຸໄມ້ : ໄມ້ແຫລມສຳຫລັບຕອກຕາງຕະປູ.
ມະໂຫຣີ : ການຫລິ້ນດ້ວຍເຄື່ອງເສບຕ່າງ ໆ ເຂົ້າກັນ.

ຄຳຖາມ.– ໑.– ມະໂຫຣີແມ່ນຫຍັງ ? ໒.– ເຄື່ອງພິນພາດຂອງໄທລາວມີອັນໃດແດ່ ? ໓.– ນອກນັ້ນມີເຄື່ອງເສບອັນໃດອີກ ? ໔.– ເຄື່ອງເສບທີ່ໄທລາວມັກຫລາຍກວ່າໝູ່ແມ່ນຫຍັງ ?

ໃຈຄວາມ.– ມະໂຫຣີ ແມ່ນການປະສົມສຽງດ້ວຍເຄື່ອງເສບຕ່າງ ໆ ເຂົ້າກັນຄືລະນາດເອກ, ລະນາດທຸ້ມ, ຄ້ອງວົງ, ປີ່, ກອງທັດແລະກອງຕະໂພນ. ຄຳມາແລ້ວໃນປະເທດລາວບ່ອນບ້ານໃດກໍ່ໄດ້ຍິນສຽງແຄນປຸກບ້ານ. ນອກຈາກເຄື່ອງເສບທີ່ວ່າມານີ້, ທີ່ປະເທດລາວ, ຍັງມີກະຈັບປີ່, ຊໍແລະຊໍອີກ.

ສັບ.– ມະໂຫຣີ.

ນາມ : ເຄື່ອງເສບ, ລະນາດເອກ, ລະນາດທຸ້ມ, ຄ້ອງວົງ, ປີ່, ກອງທັດ, ກອງຕະໂພນ, ແຄນ.

ຄຸນນາມ : ສົ້ນ, ອອນຊອນ, ນ້ອຍ.

ກິຣິຍາ : ຮູ້ຈັກ, ໄດ້ຍິນ.

ໄວຍາກອນ.– ການະ (ເວລາ) ແຫ່ງຄຳກິຣິຍາ.
ວິທີໃຊ້ຄຳກິຣິຍາຕາມເວລາໃນຊັ້ນຕົ້ນ ມີປຸສາມປະເພດ ຄື ໑.– ໃນປັດຈຸບັນນະການະ. ໒.– ອາດີດການະ



໓.– ອານາຄົດການະ ຄື : ໃນເວລາພວມເຮັດ, ໃນເວລາລ່ວງໄປແລ້ວ, ໃນເວລາຈະມາເຖິງ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ມະໂຫຣີ, ເຄື່ອງເສບ, ລະນາດທຸ້ມ, ຄ້ອງວົງ, ກອງຕະໂພນ, ກົບເຫລັກ, ຄ້ອນ, ແຄນ, ກະຈັບປີ່, ຊໍ.

ຄຳເຄົ້າດຽວກັນ.– ເອກ : ເອກະ, ເອກຈິດ, ເອກສັນ, ເອກຊົນ, ເອກເທດ, ເອກບຸກຄົນ, ເອກບຸດ, ເອກພະຈົນາ.

ແຕ່ງເຣື່ອງ.– ໃຫ້ເຈົ້າແຕ່ງເຣື່ອງເຄື່ອງເສບຊນິດນຶ່ງທີ່ເຈົ້າໄດ້ເຫັນ. ກ່າວເຖິງຮູບພັນຂອງມັນ, ປໂຍດຂອງມັນມີແນວໃດແດ່ ?

## ໗໐. ຄວາມສັດຊື່ໃນການຄ້າຂາຍ



ຄວາມ ສັດຊື່ ແມ່ນ ຄວາມ ນັບຖື ຊັບ ຂອງ ຜູ້ອື່ນ ປານ ເຄົ້າຄັດ ເພື່ອ ປາກ ສັດຊື່ ປູສະນີ ກໍຕ້ອງເວັ້ນ ຈາກ ຄວາມ ລັກເລັກ ລັກນ້ອຍ ທີ່ພາ

ໃຫ້ນ້ຳໃຈອັນດີຂອງເຮົາເສື່ອມເສັຽຈົນລົງເຖິງໃນການຊົ່ວ. ຄົນສັດຊື່ນັບຖືອຳນາດ ແລະຊັບສິນຂອງມະນຸດທີ່ມີປູ່ສຳລັບທຸກຄົນຈະເປັນລູກຈ້າງຝັ່ງນາຍເອົາຫລືເປັນຂ້າຣາຊການກໍ່ຕ້ອງສັດຊື່ປູ່ເລື້ອຍ ໆ.

ໃນການຄ້າຂາຍ ຕ້ອງໃຫ້ມີຄວາມໄວ້ໃຈຊຶ່ງກັນແລະກັນ ພໍ່ຄ້າຕ້ອງສັດຊື່ປູ່ສເມີ. ເຖິງຈະມີກຳໄຣຫລືຈະຂາດທຶນປ່າງໃດກໍດີ ບໍ່ຕ້ອງໃຊ້ເຄື່ອງເຫກ, ເຄື່ອງບອງ, ໂຕ໊ນຊົ່ງແລະຊົ່ງທີ່ບໍ່ຖືກຕາມແບບ, ບໍ່ຕ້ອງຕົວະບູ້ຊື້ໃນຊນິດຂອງສິນຄ້າ ແລະບໍ່ຕ້ອງປອນແປງຂອງຂາຍຂອງຕົນ ເພື່ອຈະໃຫ້ຮັ່ງມີໃນໄວ ໆ ນັ້ນສັກເທື່ອ ຂອງຊຶ່ງເຮົາໄດ້ມາໃນທາງບໍ່ຊອບທັມນັ້ນບໍ່ພາໃຫ້ເຮົາຮັ່ງມີດອກ, ມີແຕ່ຊັບສິນບັດທີ່ເຮົາໄດ້ມາໂດຍທາງທ່ຽງທັມເທົ່ານັ້ນທີ່ຈະຫມັ້ນຄົງໄດ້.

<u>ຄຳອະທິບາຍ</u> — ຊັບ : ວັດຖຸມີຮູບຮ່າງຄືເຂົ້າຂອງເງິນທອງ. ບໍ່ຊອບທັມ : ບໍ່ຖືກຕ້ອງຕາມກົດຫມາຍ, ບໍ່ຊື່ຕົງຕາມຄວາມເປັນຈິງ. ຂອງປອມ : ຂອງດີແປງເປັນຂອງບໍ່ດີ.

<u>ຄຳຖາມ.</u>— ໑ — ຄວາມສັດຊື່ແມ່ນຫຍັງ ? ໒.— ເພື່ອປາກສັດຊື່ປູ່ສເມີເຮົາຕ້ອງເຮັດແນວໃດ ? ໓.— ຄົນສັດຊື່ນັ້ນເປັນຄົນນັບຖືຫຍັງ ? ພໍ່ຄ້າບໍ່ສັດຊື່ນັ້ນເອົາເຮັດປ່າງໃດ ?

<u>ໃຈຄວາມ.</u>— ຄວາມສັດຊື່ ແມ່ນ ຄວາມ ນັບຖື ຊັບ ຂອງ ຜູ້ອື່ນ ປ່າງ ເຄັ່ງຄັດ ຈະເປັນລູກຈ້າງ, ເປັນນາຍເອົາ, ເປັນຂ້າຣາຊການ ຫລືພໍ່ຄ້າກໍ່ຕ້ອງສັດຊື່ເລື້ອຍ ໆ ເປັນພໍ່ຄ້າບໍ່ຕ້ອງໃຊ້



ເຄື່ອງເຫກ, ເຄື່ອງບອງ, ໂຕ໊ນຊົ່ງແລະຄັນຊົ່ງທີ່ບໍ່ຖືກຕາມແບບ. ຂອງທີ່ໄດ້ມາໂດຍທາງທີ່ບໍ່ຊອບທັມນັ້ນບໍ່ພາໃຫ້ເຮົາຮັ່ງມີດອກ, ມີແຕ່ທາງຊອບທັມເທົ່ານັ້ນທີ່ຈະຫມັ້ນຄົງໄດ້.

<u>ສັບ.</u>— ຄວາມສັດຊື່ໃນການຄ້າ.

<u>ນາມ</u> : ຊັບ, ໂຕ໊ນຊົ່ງ, ກຳໄຣ, ສິນຄ້າ.

<u>ຄຸນນາມ</u> : ຮັ່ງ, ຖືກ, ໄວ ໆ, ມີ.

<u>ກິຣິຍາ</u> : ເວັ້ນ, ຈ້າງ, ໃຊ້.

<u>ການສະກົດຄຳ.</u>— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຊົ່ວ, ລູກຈ້າງ, ຣາຊການ, ເຄື່ອງເຫກ, ເຄື່ອງບອງ, ໂຕ໊ນຊົ່ງ.

<u>ຄຳເຄົ້າດຽວກັນ.</u>— ມະນຸດ : ມະນຸສຍະຊາດ, ມະນຸສຍະເທບ. ມະນຸສຍະທັມ, ມະນຸສຍະໂລກ.

<u>ແຕ່ງເລື່ອງ.</u>— ໃຫ້ເຈົ້າແຕ່ງເລື່ອງພໍ່ຄ້າສັດຊື່ຜູ້ນຶ່ງ.

---

# ໗໑. ອ້າຍນ້ອງສອງຄົນ

ໃນຄອບຄົວຂຜນຄອບຄົວນຶ່ງ, ມີອ້າຍນ້ອງສອງຄົນທີ່ບໍ່ມີຄວາມຄິດຄືກັນ. ຜູ້ນ້ອງພໍໃຈປູ່ກັບຕາມທັມດາ, ສ່ວນຜູ້ອ້າຍຝັນຫາແຕ່ຊັບສິນບັດແລະບົດສັກ.

ບໍ່ນານ, ເມື່ອພໍ່ເຂົາຕາຍແລ້ວ, ຜູ້ອ້າຍກໍ່ຫລອນເອົາເງິນທັງຫມົດ ທີ່ດິນທ້ອນໂຮມມາໄດ້ ໄປໃນເມືອງເພື່ອກະໄປຊື້ເອົາບົດຖາ ບັນດາສັກຂອງຂຸນນາງ, ລາວຕ້ອງຄອຍຢູ່ນານເຕີບ, ແຕ່ລາວກໍ່ເລີຍໄດ້ດັ່ງໃຈປະສົງ, ບ້ອນວ່າລາວໄດ້ພຍາຍາມ ຫາຜູ້ ຊິດ ຊ່ວຍ ເຕັມກຳລັງ. ແລ້ວລາວກໍ່ຄືນເມືອບ້ານເກົ່າຂອງລາວ. ທັງເນົາມີວຕໍ່ບົດອັນນີ້ເຕັມ ລາວນຸ່ງເສືອໃຫຍ່. ຄືຫມວກງອນເງິນອັນງົດງາມເຫມືອນດັ່ງຜູ້ດີແທ້.



ລາວຄິດຈະທຳບຸນໃຫຍ່ອັນນຶ່ງແລ້ວຈະເຊີນຄົນຫມົດບ້ານມາງັນ.

ລາວເຫັນນ້ອງຂອງລາວພວມອິບເຂົ້າອື່ນເລົ້າ, ເປືອນຄີງປຸ່, ລາວຈຶ່ງເວົ້າກັບນ້ອງວ່າ "ກູເຫັນວ່າມຶງຄິດຜິດແລ້ວ, ໃນການທີ່ມຶງຊຶ່ນຢູ່ບ້ານເພື່ອເຮັດການອັນຫນັກຫນາ ແລະ ຫຍາບຊ້າເຖິງພຽງນີ້ເປັນຫຍັງມຶງບໍ່ເອົາຢຽງຢ່າງກູ?" ຜູ້ນ້ອງຈຶ່ງຕອບວ່າ: "ຂ້ອຍກໍ່ຮູ້ວ່າແມ່ນກຽດຕິບົດອັນສູງແລ້ວໃນການທີ່ໄດ້ເປັນເຈົ້າເປັນນາຍນີ້, ແຕ່ຂ້ອຍຮູ້ອີກວ່າ, ເພື່ອຈະໄດ້ບົດອັນນີ້, ກໍ່ຕ້ອງເສັຽເວລາ, ຕ້ອງອົດ



ທຸກອົດຍາກແລະຕ້ອງເສັຽເງິນຫລາຍ. ສະນັ້ນຂ້ອຍຈຶ່ງດີໃຈໃນວິຊາຫາກິນຂອງຂ້ອຍນີ້, ວຽກຂອງຂ້ອຍຫນັກຫນາກໍ່ຈິງດອກ. ແຕ່ມັນພາໃຫ້ເນື້ອກາຍຂອງຂ້ອຍບໍ່ອີບຸນດີສເມີ. ຂ້ອຍຢູ່ກິນ, ກໍ່ສະບາຍດີຕາມໃຈຂອງຂ້ອຍ, ປາສຈາກຄວາມຫຍຸ້ງໃຈທຸກສິ່ງ ແລະຂ້ອຍບໍ່ນ້ອມຫນ້າຫາຜູ້ໃດຈັກຄົນ.

<u>ຄຳອະທິບາຍ.</u>— ຕາມທັມດາ : ຕາມເຄີຍທີ່ໄດ້ເຫັນມາແຕ່ເກົ່າກ່ອນ. ບົດ : ຊື່ສຽງໄດ້ຈາກຜູ້ໃຫຍ່ໃຫ້. ໃຈປະສົງ : ຕາມໃຈມັກ. ພຍາຍາມ : ພິປອງເຮັດ. ຫຍາບຊ້າ : ທືກຫນາເກີນສ່ວນ. ຢຽງຢ່າງ : ແບບຢ່າງ. ປາສຈາກ : ຈາກໄປ, ພົ້ນໄປ.

<u>ຄຳຖາມ.</u>— ໑.— ຜູ້ນ້ອງນັ້ນພໍ່ກິນຢ່າງໃດ? ໒.— ຜູ້ອ້າຍເດ? ໓.— ເມື່ອພໍ່ຕາຍແລ້ວ, ຜູ້ອ້າຍນັ້ນຄິດຢ່າງໃດ? ໔.— ລາວນຸ່ງເຄື່ອງແນວໃດ? ໕.— ລາວເວົ້າກັບນ້ອງຂອງລາວວ່າຢ່າງໃດ? ໖.— ນ້ອງຂອງລາວຕອບວ່າຢ່າງໃດ?

<u>ໃຈຄວາມ.</u>— ໃນຄອບຄົວຂເມນ, ມີອ້າຍນ້ອງ ຄວາມຄິດບໍ່ຄືກັນ ຜູ້ນ້ອງຢາກຢູ່ກິນຕາມທັມດາ. ຜູ້ອ້າຍນັ້ນຢາກເປັນເຈົ້ານາຍຜູ້ໃຫຍ່, ຊ້າບໍ່ນານກໍ່ເລີຍໄດ້ດັ່ງໃຈປະສົງ ລາວເຫັນນ້ອງຂອງລາວເຮັດວຽກຫນັກ ຈຶ່ງເວົ້າວ່າມຶງເປັນຫຍັງບໍ່ເອົາຢຽງຢ່າງດັ່ງກູ, ນ້ອງຕອບວ່າວຽກຂອງຂ້ອຍ

ຫນັກຫນາກໍຈິງດອກ,      ແຕ່ຂ້ອຍກໍສະບາຍດີຕາມໃ

ຂອງຂ້ອຍ

ສັບ.— ອ້າຍແລະນ້ອງ.

ນາມ : ຄວາມຄິດ, ຊັບສິນບັດ, ປຽງປ່າງ, ກຽດຕິຍົດ.

ຄຸນນາມ : ງົດງາມ, ຫນັກຫນາ, ຫຍາບຊ້າ.

ກິລິຍາ : ຝັງ, ພະຍາຍາມ, ເນົານິວ, ເຊີນ, ປາສຈາກ.

ໄວຍາກອນ.— ກາລະກິຣິຍາ (໔)

ປັດຈຸບັນນະກາລະ   ເຮົາສະແດງຄວາມຕາມລັກສນ
ກິຣິຍາໃນເວລາຕ່າງ ໆ. ປັດຈຸບັນນະກາລະເປັນລັກສນ
ຂອງຄຳກິຣິຍາ ທີ່ຫມາຍ ອາການ ໃນເວລາເຮັດ ຫລືເວົ້າ
ນັ້ນເອງ ຕົວຢ່າງ : ຂ້ອຍກ່າຍບົດຮຽນ, ພວກເຮົາມີຄວາ
ດີໃຈ, ຊາວນາເປັນຜູ້ມີຄຸນແກ່ປະຊາຊົນ ດັ່ງນັ້ນກ່າ
ມີ ເປັນ ແມ່ນຄຳກິຣິຍາທີ່ໃຊ້ໃນເວລາປັດຈຸບັນ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ອ້າຍ, ນ້ອງ, ຄອ
ຄິວ, ຊັບສິນບັດ, ບົດສັກ, ພະຍາຍາມ, ຊົດຊ່ວ
ຫຍາບຊ້າ, ກຽດຕິຍົດ, ບໍຣິບູນດີ. ຫນຸ່ງໃຈ.

ຄຳເຄົ້າດຽວກັນ.— ຊ່ວຍ : ຊົດ, ເຊີຍ, ໃຊ້.

ແຕ່ງເຣື່ອງ.— ຈົ່ງແຕ່ງເຣື່ອງອ້າຍດີຜູ້ນຶ່ງ ລາວເຮັດປ່າງໃດຕໍ່ນ້ອງ.



# ໗໖. ຄຳເວົ້າດີມີຄ່າກວ່າຂອງທີ່ໃຫ້



ຍັງມີເດັກນຶ່ງນ້ອຍ
ຫຽວທ່ອງທາງຖນົນ
ໄປພົບຢາຍຊະລາ
ຕາບອດມືນບໍ່ມີແຈ້ງ
ນັ່ງຂາຍຂໍທານນ້ອມ
ແຄມທາງຫີນຍາກ
ເດັກນັ້ນມີຈິດເຫລື້ອມ
ເຫລືອລົ້ນເລີດປູນາງ
ຈຶ່ງກ່າວຕ້ານ
ຈາຕໍ່ຍາຍຂໍ
ແມ່ເຖົ້າຄືຈະຫິວໂຮຍອິດ
ເວທນາບໍ່ເຈົ້າ

ຂ້ອຍບໍ່ມີອັດນ້ອຍ
ເພື່ອໃຫ້ເຈົ້າ
ມີແຕ່ລະມຸດນ້ອຍ
ເຊີນ ເຖົ້າກິນເກີນຫວານ
ແມ່ເຖົ້າຈຶ່ງຕອບຕ້ານ
ແມ່ຫາກພໍໃຈ
ລະມຸດມີໃນຫ້ອງ
ບໍ່ຫ່ອນຫວານລົ້ນລ້ຳຄຳເວົ້າປາກ

ພໍ່ຕາຕ້າງປຸ
ຈອນຊີ້ເດືອງກິນ
ຫນ່ວຍນຶ່ງໃນກະເປົານີ້ແລ້ວ
ແຊບຫອມດີດ້ວຍ,
ຂໍຂອບຄຸນຫລາຍ
ຄຳປາກຈາຈອມເຈົ້າ
ປະດຸຈພີ້ພົ້ນໂລກເຮົານີ້
ຫລານແມ່ແລ້ວ.

ຄຳອະທິບາຍ.– ວາດເວົ້າມີຄ່າກວ່າຂອງທີ່ໃຫ້ : ໃຫ້ດ້ວຍຄວາມເວົ້າອັນອ່ອນຫວານ ມີຄ່າ ກວ່າຂອງ ສິ່ງຂອງ ທີ່ເຮົາ ໃຫ້ອີກຊ້ຳ. ເວທນາ : ຄວາມສົງສານປາກໃຫ້ພົ້ນທຸກ. ຈອນ : ທ່ຽວໄປ. ປະຖະພີ : ແຜ່ນດິນ.

ຄຳຖາມ.– ໑.– ເດັກນ້ອຍນັ້ນເປັນຜູ້ມີຈິດໃຈປາງໃດ ? ໒.– ມັນໄປພົບຜູ້ໃດ ? ໓.– ມັນເວົ້າກັບແມ່ເຖົ້າວ່າປາງໃດ ? ໔.– ແມ່ເຖົ້າຂໍຫຍັງກັບເດັກນ້ອຍ ?

ໃຈຄວາມ.– ຍັງມີເດັກນຶ່ງນ້ອຍຕ້ານຕອບຍາຍຊຣາເຈົ້າແມ່ຄືຈະຫິວໂຮຍອິດເວທນານໍ່ເຈົ້າ ຂ້ອຍບໍ່ມີອັດນ້ອຍພໍຄາຄ້າງປູ່ ເພື່ອໃຫ້ເຈົ້າຈ່າຍຊື້ເຄື່ອງກິນ ເຊີນແມ່ເອົາລະມຸດນ້ອຍໜ່ວຍນຶ່ງໃນກະເປົານີ້ທ້ອນ ແມ່ເຖົ້າຈຶ່ງຕອບຕ້ານຈາຄຸນຫລາຍ ແມ່ຫາກພໍໃຈຄຳປາກຈາຈອມເຈົ້າລູກເອີຍ.

ສັບ.– ຄຳເວົ້າດີ.

ນາມ : ຍາຍຊຣາ, ຫລານ, ລະມຸດ, ປະຖະພີ.

ຄຸນນາມ : ເຫລື້ອມ, ຫວານ, ຫອມ, ແຊບ.

ກິຣິຍາ : ພົບ, ທ່ອງທ່ຽວ, ຂໍທານ, ກ່າວຕ້ານ, ເວທນາ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ເດັກ, ຄຸນ, ຍາຍ, ຕາບອດ, ແມ່ເຖົ້າ, ເວທນາ, ເຄື່ອງກິນ, ລະມຸດ, ກະເປົາ, ຫລານ, ປະຖະພີ.



ຄຳເກົ້າດຽວກັນ.– ລື້ນລື່ນ : ລື້ນລ້ຳ, ລື້ນຫລາຍ, ລື້ນເຫລືອ.

ບົດທ່ອງຂຶ້ນໃຈ.– ໃຫ້ເບິ່ງຫົວຂໍ້ ກຸ໖ ເລື່ອງຄຳເວົ້າດີມີຄ່າກວ່າຂອງທີ່ໃຫ້.

ແຕ່ງເລື່ອງ.– ຈົ່ງແຕ່ງເລື່ອງຄົນຂໍທານຜູ້ນຶ່ງຊຶ່ງເຈົ້າໄດ້ເຫັນລາວໄປຂອກຫາຂໍທານປູ່ຕາມບ້ານຂອງເຈົ້າ.

# ກຸ໗. ຄວາມພຍາຍາມພາກພຽນບໍ່ຂາດພາໃຫ້ສຳເຣັດສເມີ



ເຮົາຕ້ອງຕົກລົງຕັ້ງໃຈທຳໃຫ້ມີຄວາມຈະເຣີນຍິ່ງໆ ຂຶ້ນໄປ, ເຖິງວ່າຄວາມປາຖນາຂອງເຮົາຈະນານໄດ້ກໍຕາມ ຖ້າເຮົາມີຄວາມອຸດສາຫະປຸສເພີ, ກໍຄົງຈະໄດ້ດັ່ງຄວາມ ປາຖນາ ທຸກປະການ, ເຮົາຕ້ອງຊ່ວຍເຮົາເອງໃຫ້ເຕັມກຳລັງ ເທວະດາຫາກຈະເມດຕາເຮົາດອກ, ການງານຂອງເຮົາຫລາຍປານໃດ, ຄົນທັງ ຫລາຍ ກໍ ຈະ ເຫັນ ຄວາມ

ສລາດປານນັ້ນ. ເຮົາກໍຈະຮູ້ຈັກຊື່ສຽງຂອງເຮົາເທື່ອລະເລັກເທື່ອລະນ້ອຍໃນເມື່ອເຮົາທຳການສຳເຣັດ, ນັບແຕ່ດຽວນີ້ໄປ, ເຮົາຕ້ອງຕັ້ງໃຈຫາຊ່ອງທາງອັນດີ ເພື່ອໃຫ້ຕົວເຮົາມີຄວາມຈະເຣີນສເມີ, ສົມດັ່ງບູຮານກ່າວໄວ້ "ຝົນທັ່ງໃຫ້ເປັນເຂັມ."

ຄຳອະທິບາຍ.– ອຸດສາຫະ : ຕັ້ງໃຈເຮັດດ້ວຍຄວາມພຍາຍາມ.
ບູຮານ : ຂອງເກົ່າກ່ອນ. ຝົນທັ່ງໃຫ້ເປັນເຂັມ : ອຸປະສັກອັນໃດມາກີດຂວາງກໍຕາມ ເມື່ອເຮົາມີຄວາມພາກພຽນຍ່ອມຜ່ານພົ້ນໄປໄດ້.

ຄຳຖາມ.– ໑.– ຖ້າເຮົາມີຄວາມພຽນຈະທຳສິ່ງນຶ່ງສິ່ງໃດສຳເຣັດບໍ່ ?
໒.– ເປັນ ຫຍັງ ເຮົາ ຈຶ່ງ ຄວນ ເພິ່ງ ຕົວ ເຮົາເອງ ຢູ່ສເມີ ?
໓.– ເຮົາຄວນເຮັດແນວໃດ ເພື່ອຢາກໃຫ້ຄົນອື່ນຮູ້ຈັກຊື່ສຽງຂອງເຮົາ ? ໔.– ຄຳວ່າ "ຝົນທັ່ງໃຫ້ເປັນເຂັມ" ນັ້ນໝາຍຄວາມວ່າຢ່າງໃດ ?

ໃຈຄວາມ.– ຄວາມພຽນບໍ່ຂາດອາດໃຫ້ສຳເຣັດໄດ້, ເຮົາຕ້ອງຕັ້ງໃຈທຳ, ຈະນານປານໃດກໍຕາມ. ກໍຄົງຈະໄດ້ດັ່ງຄວາມປາຖນາທຸກປະການ ເທວະດາຫາກຈະເມດຕາເຮົາດອກ. ເຮົາຕ້ອງຕັ້ງໃຈໃຫ້ມີຄວາມຈະເຣີນຢູ່ສເມີ, ສົມດັ່ງບູຮານກ່າວໄວ້ວ່າ "ຝົນທັ່ງໃຫ້ເປັນເຂັມ"

ສັບ.– ຄວາມພຍາຍາມພາກພຽນ.
ນາມ : ການງານ, ຊ່ອງທາງ, ເທວະດາ, ທັ່ງ, ເຂັມ.



ຄຸນນາມ : ເລັກ, ນ້ອຍ, ອັນດີ.
ກິຣິຍາ : ຕັ້ງໃຈ, ຊ່ວຍ, ເມດຕາ, ຮູ້ຈັກ.

ໄວຍາກອນ.– ຄຳກິຣິຍາ (ຕໍ່) ອະດີດກາລະ.
ອະດີດການແມ່ນເວລາທີ່ລ່ວງກາຍມາແລ້ວ. ໃນຄວາມເວົ້າເພື່ອ ຢາກຊີ້ແຈງ ວ່າສິ່ງທີ່ກ່າວນັ້ນເປັນເວລາທີ່ກາຍມາແລ້ວເພິ່ນໃຊ້ຄຳໄດ້ຫລືແລ້ວ ຕົວຢ່າງ : ລາວບໍ່ໄດ້ເຮັດ, ເຈົ້າໄດ້ອັບແລ້ວ ເປັນຕົ້ນ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຄວາມພຍາຍາມ, ຄວາມຈະເຣີນ, ຄວາມປາຖນາ, ຄວາມອຸດສາຫະ, ເທວະດາ, ເມດຕາ, ຄວາມສລາດ, ບູຮານ.

ຄຳເຄົ້າດຽວກັນ.– ເທວະດາ : ເທວະຕາ, ເທວາ, ເທວະ, ເທພະ.

ແຕ່ງເຣື່ອງ.– ໃຫ້ເຈົ້າແຕ່ງເຣື່ອງນັກຮຽນມີຄວາມພຍາຍາມພາກພຽນຜູ້ນຶ່ງມາໃຫ້ຟັງ ແລະຊັກຕົວຢ່າງອອກມາປຽບທຽບດ້ວຍ.

## ໗໔. ການຊ່ວຍເຫລືອຊຶ່ງກັນແລະກັນ

ຄົນຜູ້ນຶ່ງເດີນທາງໄປຕາມພູເຂົາ, ລາວໄປຮອດບ່ອນນຶ່ງທີ່ມີຫີນໃຫຍ່ກ້ອນນຶ່ງຕົກລົງມາຕັນທາງຢູ່. ລາວຈະຫລີກໄປທາງຊ້າຍຫລືທາງຂວາກໍບໍ່ໄດ້.



ຄົນຜູ້ນັ້ນລອງຍູ້ໂງ່ນຫີນ
ອອກເພື່ອໃຫ້ມີທາງໄປ ລາວຍູ້
ຈົນອິດອ່ອນ, ແຕ່ຫີນຈະຕິງນ້ອຍ
ນຶ່ງກໍ່ບໍ່ມີ. ລາວເລີຍນັ່ງລົງແຄມ
ທາງເຫງົາເຕັມທີ່ ແລະຈົ່ມວ່າ
"ເວລາຕາວັນຕົກແລ້ວກູຈະເປັນ
ຢ່າງໃດຫນໍ ? ໃນທີ່ເປົ່າປ່ຽວເຊັ່ນນີ້
ຈະຫາອາຫານແລະບ່ອນອາໄສ
ກໍ່ບໍ່ມີ, ຊ້ຳແມ່ນບານເສືອອອກ
ທ່ຽວຫາກິນອີກ, ຈະທຳຢ່າງໃດແ

ເວລາຄິດຢູ່ນັ້ນ, ມີຄົນຜູ້ນຶ່ງເດີນທາງມາອີກ. ຜູ້ນີ້ ເມື່
ລອງຊຸກໂງ່ນຫີນໂດຍເສັຽແຮງເປົ່າໆແລ້ວ, ກໍ່ນັ່ງລົງເຮັດຄ່ຳເຕືອ
ຢູ່ຄືກັນ.

ຢູ່ມາກໍ່ມີຫລາຍຄົນເດີນທາງມາອີກ, ບໍ່ມີຜູ້ໃດຊຸກໂງ່ນຫີ
ນັ້ນຕິງສັກຄົນ ແລ້ວຜູ້ນຶ່ງຈຶ່ງເວົ້າຕໍ່ຫມູ່ວ່າ. "ອ້າຍນ້ອງທັງຫລາ
ເອີຍ ! ເຮົາມາຮວມແຮງກັນລອງຊຸກໂງ່ນຫີນໂງ່ນນີ້ອອກຈາກທາ
ເບິ່ງເທາະ" ວ່າແລ້ວ, ກໍ່ພາກັນຊຸກແລະພ້ອມກັນຊຸກໂງ່ນຫີນ, ໂງ່
ຫີນກໍ່ໄຫງ້ນອອກຈາກທາງທັນທີ, ເຂົາເຈົ້າກໍ່ເດີນທາງຕໍ່ໄປໄດ
ແລ້ວຈຶ່ງແຍກກັນໄປທາງໃຜທາງມັນ.

ຊີວິດເຮົາກໍ່ປຽບຄືເລື່ອງນີ້, ຊີວິດຂອງເຮົາແມ່ນການເດີນທາ



ນີ້, ເຮົາເອງແມ່ນຄົນເດີນທາງ, ສ່ວນໂງ່ນຫີນນັ້ນ ກໍ່ປຽບເຫມືອນ ຄວາມລຳບາກທີ່ເຮົາປະສົບຢູ່ໃນໂລກນີ້ທຸກບາດຍ່າງ.

ຄຳອະທິບາຍ.— ໄຫງ້ນອອກຈາກທາງ : ກິ້ງອອກຈາກທາງ. ໃນທີ່ເປົ່າປ່ຽວ : ໃນທີ່ສງັດຊຶ່ງບໍ່ມີເຮືອນຄົນ. ແຍກກັນໄປ : ແບ່ງກັນໄປ, ແຕກກັນໄປ.

ຄຳຖາມ.— ໑.— ຄົນຜູ້ນັ້ນລອງຍູ້ໂງ່ນຫີນອອກຈາກທາງນັ້ນ ລາວໄດ້ຜົນຢ່າງໃດແດ່ ? ເພາະເຫດໃດ ? ໒.— ສ່ວນໂງ່ນຫີນນັ້ນປຽບຄືກັບກັບຫຍັງທີ່ເຮົາປະສົບ ? ໓.— ເຮັດແນວໃດຫີນກ້ອນນັ້ນຈຶ່ງໄຫງ້ນອອກຈາກທາງໄດ້ ?

ໃຈຄວາມ.— ຄົນເຮົາຜູ້ດຽວເຮັດຫຍັງກໍ່ບໍ່ສຳເລັດໄດ້ໂດຍງ່າຍ ຖ້າຫລາຍຄົນໂຮມແຮງເຂົ້າກັນເຮັດວຽກຫຍັງກໍ່ສຳເລັດໄດ້ໂດຍງ່າຍດາຍ.

ສັບ.— ການຊ່ວຍເຫລືອກັນ.

ນາມ : ຄົນເດີນທາງ, ໂງ່ນຫີນ, ແຄມທາງ, ຫມູ່ຄູ່.

ຄຸນນາມ : ໃຫຍ່, ອິດອ່ອນ.

ກິລິຍາ : ຊຸກ, ກິ້ງ, ແຍກກັນ, ປະສົບ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຊີວິດ, ປະສົບ, ຄວາມລຳບາກ, ທີ່ເປົ່າປ່ຽວ, ໄຫງ້ນອອກ.

ຄຳເກົ່າດຽວກັນ.— ຊ່ວຍ : ຊ່ອຍ: ເຫງົາ : ຫງ່ວມ, ຫງ່ອມ.

ແຕ່ງເລື່ອງ.— ຈົ່ງແຕ່ງເລື່ອງການເດີນທາງສມັຍນີ້.

# ໗໕. ການສ້າງສາຂອງຣັດຖະບານ



ແຕ່ກ່ອນດົນແດນດ້າວ　ລາວເຮົາທັງປະເທດ
ບັງເກີດເປັນຣົກເຮື້ອ　ທາງກວ້າງກໍ່ບໍ່ມີເຈົ້າເຮີຍ
ມີແຕ່ທາງຮ່ອມນ້ອຍ　ພໍທ່ອງເຖິງກັນ
ຈັກໄປມາທາງໃດ　ກໍ່ເຖິກຄາວແຄວນຊ້າ
ເປັນຍ້ອນມີທຸນໜ້ອຍ　ປຸນແປງຍິນຍາກ
ຄັນວ່າເຄື່ອງຂອງສ້າງ　ກໍ່ແສນຫລ້າລ່ວງສໄມ
ບັດນີ້ລາວໄຊກລ້າ　ໄດ້ເອກຣາຊາ
ຣັດຖະບານລາວເອງ　ກໍ່ເມືອງແປງບ້ານ
ຫລິງເຫັນຖຸນທາງເຜົ້າ　ໃນໃຈແຈ້ງແຈບ
ເງິນຄ່າເຫຕຸອກໄຫ້　ແຖມສ້າງຕື່ມຖນົນ



ດຽວນີ້ແລລ່າເສັ້ນ　ສາຍທ່ອງທາງໃດ
ຊິສັດແສງຕາຫລິງ　ຮາບຮຽງພຽງພື້ນ
ອັນວ່າໃນນະຄອນແຜ້　ທາງໂອບທົບຕລອດ
ເອົາທັງອິດປຽນຊ້ຳ　ຊາຍລື້ວລາດຍາງ
ແມ່ນວ່າທາງປ່າຍຄ້ຳ　ພັກພອກບໍ່ອິສັດ
ຈັດແຈ່ງມີຣົດບິນ　ທ່ອງທວນຫຽວຈ້າງ
ໃຜຜູ້ມີປະສົງດ້ວຍ.　ໄປມາໄດ້ສະດວກ
ທາງເດີນຫຽວແປດມື້　ບໍ່ພໍ່ຄ້ອຍຄ່ຳເຖິງ
ຄັນຄິດໄກ່ດ້ວຍ　ເດີນດ່ວນທາງນາທີ
ກໍ່ຫ້າກມີເຮືອຈັກ　ທ່ອງຫຽວທວນຈ້າງ
ຕາມໃຈເຈົ້າ　ເງິນມີອົບຂີ້ໄປເພາລ້ວ
ໃຜບໍ່ຂວາງອຶດອັ້ນ　ຂບັບເບື້ອງບ່ອນເຖິງທ່ານເຮີຍ.

ຄຳອະທິບາຍ.– ແຄວນຊ້າ : ຊ້າຫລາຍ. ຫລ້າລ່ວງສໄມ : ກາຍເວລາ. ບໍ່ອິສັດ : ເອົ້າກັນຄ້າຂາຍ. ທ່ອງທວນຫຽວຈ້າງ : ອື້ນລ່ອງຫາອັບຈ້າງ.

ຄຳຖາມ.– ໑.– ທົນທາງຫຽວໃນປະເທດລາວແຕ່ກ່ອນເປັນປາງໃດ ? ດຽວນີ້ເດ ? ໒.– ດຽວນີ້ໃຜເປັນຜູ້ສ້າງທາງ ? ໓.– ທາງໃນເມືອງເພິ່ນສ້າງປາງໃດ ?

ໃຈຄວາມ.– ແຕ່ກ່ອນທັງແດນດ້າວ ລາວເຮົາທົ່ວປະເທດອັງເຂດ ລາວຣົກເຮື້ອທາງກວ້າງກໍ່ບໍ່ມີເຈົ້າເຮີຍ.

ດຽວນີ້ ລາວໃຊກລ້າໄດ້ເອກະຣາຊາແລ້ວທາງຣາບຽງ ພຽງພື້ນ ໃນນະຄອນແທ້ກໍປູຫີນຈົນຕລອດໄປຮອດໄວ ແລະຟ້າວກໍໂດຍໄດ້ດັ່ງປະສົງ.

ສັບ.— ການສ້າງສາຂອງຣັດຖະບານ.

ບານ : ດິນ, ຣິດ, ເງິນ, ທາງ.

ຖຸບບານ : ຫນ້ອຍ, ກວ້າງ.

ກິຣິບາ : ຈ້າງ, ເງິນ, ແປງ.

ໄວຍາກອນ.— ອະນາຄົດກາລະ.

ຄຳກິຣິຍາຄຳໃດທີ່ຫມາຍເຖິງຂໍ້ຄວາມຫລືສິ່ງໃດໆທີ່ຫັງເກີດມີແລະຍັງຈະເກີດມີປຸ່ນັ້ນ ເອີ້ນວ່າ ອະນາຄົດກາລະ

ຕົວຢ່າງ : ນີ້ແລງພວກເຮົາຈະເດີນທາງໄປຫລວງພຣະບາງ ດັ່ງນັ້ນຈະຫມາຍເຖິງອະນາຄົດກາລ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ການສ້າງສາ, ຣັດຖະບານ, ເອກອາຊາ, ເມືອງ, ຖນົນ, ນະຄອນ, ຣົດຍົນ, ບໍຣິສັດ, ເຮືອຈັກ, ຫີນ.

ຄຳເຄົ້າດຽວກັນ.— ປຽບ : ບ່ຳ. ໂຣບຫີນ : ຣວາບຫີນ.

ບົດທ່ອງຂຶ້ນໃຈ.—ໃຫ້ຂຶ້ນໃຈເອົາຕາມບົດຽນທີ ກ໕.

ແຕ່ງເອື້ອງ.— ໃຫ້ເຈົ້າແຕ່ງເອື້ອງຖນົນ.



# ກ໖. ການສ້າງສາຂອງຣັດຖະບານ (໓)



ຄົນຈັກຫລຽວເບິ່ງເບື້ອງ　ພຸມພາກພາຍພະໃນ
ກໍມີນົບເທາະເທີນ　ທ່ອງຫຽວທາງຟ້າ
ອາກາດລາວຫລວງຕັ້ງ　ບໍຣິສັດບິນສົ່ງ
ເດີນໃນອົງປະເທດແລ້ວ　ເລີຍລ້ຳຕ່າງກຸງ
ຖົດນັ້ນໂທຣະເລກສ້າງ　ພ້ອມພ່ຳໂທຣະສັບ
ວິທຍຸສາຍລົມ　ແລ່ນເຮັວພລັນຮູ້
ໃຜຜູ້ຈົ່ງໃຈດ້ວຍ　ຟັງສຽງຄອບຂ່າວ
ດ້ານດັ່ງດ້ານດໍ່ຫນ້າ　ດົນຊີໄສ່ກັນ
ອັນທີ່ນາວໃຫຍ່ກວ້າງ　ສຸງສະອາດເຮົາເຫັນ
ນັ້ນແມ່ນໂຮງການຫລວງ　ບ່ອນກະຊວງກົມຕັ້ງ

ໂຮງຮຽນສ້າງ　　ຫລາຍຫລັງດູອາດ
ທັງຕລາດໃຫຍ່ກວ້າງ　　ຫລວງສ້າງຊູ່ແນວ
ຄັນຄ່ຳຄ້ອຍ　　ສ້ອງສ່ວນແສງສຸບ
ໃນນະຄອນ, ແຂວງ　　ຖູ່ຖຸນີ, ເຮືອນຮ້ານ.
ກໍຫາກມີໄຟຟ້າ　　ຕາງກະບອງທຸກທົ່ວ
ເຮືອງເຮື່ອແຈ້ງ　　ຄືຟ້າເຟື່ອງເດືອນ
ຄັນຈັກຈາຣອດຫ້ອງ　　ວິຫານໂບດກຸດີສົງ
ເພີ່ນບໍ່ຍ່ອມໂລລະ　　ຊ່ອມຊູເສີມສ້າງ !
ອັນນີ້ບຸນຄຸນແທ້　　ຣັດຖະບານຕົກແຕ່ງ
ບ້ານເມືອງລາວຈິ່ງເຮືອງຈະເຣີນຂຶ້ນຍິ່ງກວ່າຫລັງທ່ານເອີຍ

ຄຳອະທິບາຍ.— ພຸມພາກພາຍພະໄບນ : ເທິງຫ້ອງຟ້າ. ໃນອົງ
ປະເທດ : ໃນປະເທດລາວເອງ. ເລີຍລ້ຳຕ່າງກຸງ
ເລີຍໄປສູ່ຕ່າງປະເທດ. ໂທຣະເລກ : ຂຽນຫນັງສືທາງ
ສາຍລົມ. ໂທຣະສັບ : ຟັງສຽງທາງສາຍທອງ
ວິທຍຸສາຍລົມ : ຟັງສຽງດ້ວຍເຄື່ອງໄຟຟ້າ. ແສງສຸບ
ແສງດາວັນ. ໃນນະຄອນແຂວງ : ຫມາຍເຖິງເມືອງ
ຫລວງແລະເມືອງຂອງແຂວງ. ຄືຟ້າເຟື່ອງເດືອນ
ຄືຟ້າແຈ້ງດ້ວຍແສງເດືອນ. ວິຫານ : ບ່ອນປຸພຣະ
ໂບດ : ສິມ. ກຸດີສົງ : ເຮືອນພຣະ.

ຄຳຖາມ.— ໑.– ອາກາດລາວເດີນໄປໃສແດ່ ? ໒.— ໂທຣະເລ



ກັບໂທຣະສັບຕ່າງກັນປານໃດ ? ໓.– ໄຟຟ້າມີປໂຍດ
ປານໃດ ? ໔.– ເພີ່ນໃຊ້ປຸບ່ອນໃດ ?

ໃຈຄວາມ.– ຄັນຈັກຫລຽວແລຂຶ້ນເມືອເທິງອາກາດ ເຫັນຫມູ່ບິນ
ເວີນຂຶ້ນເມືອຟ້າເມກພະໄບນ ເຫັນທັງໂທຣະເລກ, ໂທ
ຣະສັບແລະໂຮງຮຽນກໍສ້າງແຖຸນຊ້ານ່ຳທົ່ວ ມີທັງເຮືອງ
ເຮື່ອແຈ້ງ ແສງສວ່າງ ທັງເມືອງ ກໍບໍ່ເຄືອງແຄນ ສັງໂບດ
ອາຣາມກໍມີດ້ວຍ.

ສັບ.– : ການສ້າງສາຂອງຣັດຖະບານ.
ບານ : ພະໄບນ, ບໍຣິສັດ, ຖຸນີ.
ຖຸນບານ : ຍາວ, ໃຫຍ່, ກວ້າງ.
ກິຣິບາ : ແລ່ນ, ຮອດ, ແຕ່ງ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ໂທຣະເລກ, ໂທ
ຣະສັບ, ວິທຍຸ, ກະຊວງ, ຣັດຖະບານ, ນະຄອນ,
ວິຫານ, ໂບດ, ກຸດີ, ຈະເຣີນ, ເຮືອງເຮື່ອ.

ຄຳເຄົ້າດຽວກັນ.– ເທາະ : ເຫີນ. ທ່ອງ : ທຽວ. ຫວນ : ຄືນ,
ແຖວ, ແຖບ, ຖີ່ ໆ. ເຮືອງ : ເຮື່ອ.

ບົດທ່ອງຂຶ້ນໃຈ.– ໃຫ້ເບິ່ງຫົວຂໍ້ບໍາເບີ ກ໕ ເຣື່ອງການສ້າງສາຂອງ
ຣັດຖະບານ.

ແຕ່ງເຣື່ອງ.– ຈົ່ງແຕ່ງເຣື່ອງການສ້າງສາຂອງຣັດຖະບານ.

# ກກ. ປ່າໄດ້ດູຖູກຄົນໃຊ້ຂອງຕົນ



ບາງຄອບຄົວ, ມີເດັກນ້ອຍທີ່ຈອງຫອງດ່າພວກຄົນໃຊ້ ຫລືບາງທີກໍ່ຕີເຂົາ, ເຫມືອນດັ່ງວ່າ ການເກີດມາໃນຄອບຄົວຮັ່ງມີນີ້ ໃຫ້ອຳນາດກົດຂີ່ຂົ່ມເຫັງຄົນທຸກ. ດັ່ງນີ້, ກໍ່ແມ່ນທຳຕົນເປັນຄົນອະກະຕັນຍູ ແລະທຳຄວາມຮ້າຍຊາດ ຊຶ່ງພວກເຮົາຄວນລະຖິ້ມເສັຽ.

ເດັກເອີຍ ! ພວກເຈົ້າ ທີ່ພໍ່ແມ່ປົກປ້ອງຮັກສາໃຫ້ມີຄວາມສຸກ ປູ່ສເມີ ນັ້ນ, ໃຫ້ຄິດເຫັນ ພວກທີ່ມີຄວາມທຸກຍາກຖືກບັງຄັບໃຫ້ມາລ້ຽງຊີວິດໃນທາງເປັນຄົນໃຊ້ເພີ່ນແດ່ເນີ !

ເຂົາເປັນມະນຸດເຫມືອນກັນກັບເຈົ້າ. ເຖິງວ່າເຂົາມາທົນລຳບາກດັ່ງນີ້, ກໍ່ຍ້ອນຄວາມທຸກຍາກຂອງເຂົາເທົ່ານັ້ນເອງ. !

ສະນັ້ນ ໃຫ້ຫມູ່ເຈົ້າມີຄວາມເວທນາເຂົາ. ຖ້າຄົນໃຊ້ຂອງເຈົ້າຫາກແກ່ກວ່າເຈົ້າ, ເຈົ້າຕ້ອງເອີ້ນເຂົາວ່າອ້າຍ. ຖ້າເຂົາ



ຫາກອ່ອນກວ່າເຈົ້າ, ກໍ່ໃຫ້ເວົ້າແຕ່ຄວາມດີຄວາມງາມກັບເຂົາ. ປ່າໄດ້ເອົາປາງ ເດັກບໍ່ຮູ້ທີ່ຮ້າຍ ແລະ ແຜດໃສ່ເຂົາໂດຍ ບໍ່ຮູ້ເຫື່ອງຫຍັງພໍ່ຍຽງໃດ. ນັກປາດບູຮານໄດ້ກ່າວໄວ້ວ່າ "ຖ້າເຮົາຢາກໃຫ້ນາຍເຮົາປະພຶດຕໍ່ເຮົາປາງໃດ ເຮົາຕ້ອງປະພຶດຕໍ່ແຫລ້ງເຮົາປາງນັ້ນ" ກ່ອນຈະທຳປາງໃດໃຫ້ແກ່ຄົນໃຊ້ຂອງເຈົ້າ, ເຈົ້າຈົ່ງນຶກຫາຄວາມນີ້ສເມີ.

<u>ຄຳອະທິບາຍ</u>.— ຈອງຫອງ : ທຶງສາບຽດບຽນ. ອະກະຕັນຍູ : ບໍ່ຮູ້ບຸນຄຸນຂອງຜູ້ມີຄຸນ. ເວທນາ : ຄວາມໄດ້ຮັບສຸກແລະຮັບທຸກໄປນຳກັນ.

<u>ຄຳຖາມ</u>.— ໑.— ການດູຖືກຄົນໃຊ້ຂອງເຮົານີ້ ພາໃຫ້ມີຄວາມເສັຽຫາຍປາງໃດ ? ໒.— ເປັນຫຍັງເພີ່ນຈຶ່ງສອນໄວ້ ບໍ່ໃຫ້ດູຖືກຄົນໃຊ້ຂອງເຮົາ ? ໓.— ຄົນຜູ້ເປັນແນວໃດຈຶ່ງເອີ້ນວ່າຄົນໃຊ້ ? ໔.— ຖ້າຢາກໃຫ້ນາຍເຮົາປະພຶດຕໍ່ເຮົາ ໆ ຕ້ອງເຮັດແນວໃດ ?

<u>ໃຈຄວາມ</u>.— ປ່າໄດ້ດູຖືກຄົນໃຊ້ຂອງເຮົາ ມີລາງເຮືອນເດັກນ້ອຍຜູ້ຈອງຫອງມັກກົດຂີ່ຂົ່ມເຫງດ່າຕີພວກຄົນໃຊ້ ດັ່ງນີ້, ກໍ່ຄືບໍ່ຮູ້ບຸນຄຸນຂອງເຂົາ, ບໍ່ຄວນເອົາແບບປາງດັ່ງນີ້ ເຂົາກໍ່ເປັນມະນຸດເໝືອນກັນກັບເຈົ້າ, ເຂົາເປັນຄົນທຸກຍາກຈຶ່ງໄດ້ມາຮັບໃຊ້, ປ່າໄດ້ເວົ້າຄວາມບໍ່ສຸພາບໃຫ້ເຂົາຈັກເທື່ອເລີຍ.

ສັບ.— ຄົນໃຊ້.
ນາມ : ອ່ຳນາດ, ຄົນໃຊ້, ມະນຸດ, ນັກປາດ.
ຄຸນນາມ : ຮ້າຍ, ຮັ່ງມີ.
ກິລິຍາ : ເອີ້ນ, ກ່າວ, ໃຊ້, ຮັກສາ.
ໄວຍາກອນ.— ລິງຄະ.

ລິງຄະແມ່ນຄຳທີ່ໝາຍເຖິງເພດ ຄື ປຸງລິງ (ເພດ ຊາຍ) ແລະ ອິດຖີລິງ (ເພດຍິງ)

ຄຳທີ່ໝາຍເຖິງເພດຊາຍຫລືເພດຍິງນັ້ນ ຄື : ຊາຍຜູ້, ທ້າວ, ນັກ. ຫລືວ່າຍິງແມ່ນ ນາງ, ສາວ ເປັນຕົ້ນ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຄວາມຮ້າຍ ຄວາມສນຸກ, ຄວາມທຸກ, ຄວາມເວທນາ, ນັກປາດ ປະພຶດ.

ຄຳເຄົ້າດຽວກັນ.— ຄວາມສນຸກ : ຄວາມສບາຍ. ຄວາມກະເສີມ ຄວາມສຸກ.

ແຕ່ງເລື່ອງ.— ໃຫ້ແຕ່ງເລື່ອງຄົນໃຊ້ຂອງເຮົາຜູ້ນຶ່ງ, ທີ່ຮູ້ຈັກເອົາໃຈ ໃສ່ນາຍດີ.

---

## ກຊ. ສອງສະຫາຍ

ທ້າວອຸ່ນກັບທ້າວເປັ່ງເປັນສະຫາຍກັນມາແຕ່ນ້ອຍ ທ້າວ



ເປັ່ງໄດ້ຄວາມທຸກຍາກ, ນາອາສັບປະກົນກັບທ້າວອຸ່ນ. ທ້າວອຸ່ນຮັບລ້ຽງລາວໄວ້ເພື່ອເປັນເພື່ອນຮຽນຫນັງສື. ທ້າວເປັ່ງເອົາໃຈໃສ່ເລົ່າຮຽນດີ ເລີຍສອບໄລ່ເປັນສມຽນໄດ້ ແລະປຸ່ນາສອງສາມປີ. ກໍໄດ້ເປັນຜູ້ຊ່ວຍ ສ່ວນທ້າວອຸ່ນຄວາມຮັ່ງມີຂອງພໍ່ແມ່ ພາໃຫ້ເປັນຄົນກຽດຄ້ານ, ສອບໄລ່ກາວໃດ, ກໍຕົກກາວນັ້ນ ຊ້ຳບໍ່ຫນຳນຸ່ນຂອງລາວກໍຖືກຜູ້ຮ້າຍລັກໄປຫມົດ ລາວຕົກທຸກໄດ້ຍາກຈົນເຖິງແກ່ຈະເລົ່າຮຽນຕໍ່ໄປບໍ່ໄດ້.

ລາວຈຶ່ງມາຫາທ້າວເປັ່ງເພື່ອຂໍຄວາມຊ່ວຍເຫລືອ ທ້າວເປັ່ງທີ່ບໍ່ໄດ້ລືມສະຫາຍຂອງຕົນສັກເທື່ອ ເມື່ອໄດ້ຊາບວ່າ ທ້າວອຸ່ນຈະມາປານກໍດີໃຈ. ແຕ່ລາວນຶກໃນໃຈວ່າ "ສະຫາຍຂອງເຮົາທຸກຍາກ ກໍເພາະຄວາມກຽດຄ້ານ ຂອງມັນ ຖ້າ ຈະ ຊ່ວຍເຫລືອມັນ ໃຫ້ໄດ້ຢູ່ໃນຄວາມສະບາຍ, ມັນກໍຈະບໍ່ຢາກເຮັດວຽກການສັກເທື່ອ" ສະນັ້ນທ້າວເປັ່ງຈຶ່ງທຳທ່າບໍ່ຮູ້ຈັກທ້າວອຸ່ນ ແລະເວົ້າວ່າ "ຍາຜູ້ຊ່ວຍບໍ່ເຄີຍເປັນສະຫາຍກັບຄົນ ເຊັ່ນເຈົ້ານີ້ດອກ" ທ້າວອຸ່ນໄດ້ຖືກໄລ່ອອກໄປ, ກໍຈົ່ມດ່າສະຫາຍຂອງຕົນ. ແລ້ວທ້າວເປັ່ງຈຶ່ງບອກໃຫ້ທ້າວສຸນແປງຕົວເປັນພໍ່ຄ້າ ເພື່ອມາອຸດຫນູນທ້າວອຸ່ນແລະບົວະໃຫ້ຄືນເລົ່າຮຽນຕໍ່ໄປ. ເມື່ອໄດ້ສາມປີມາ ທ້າວອຸ່ນກໍສອບໄລ່ເປັນສມຽນໄດ້; ແລ້ວເລື່ອນຕຳແຫນ່ງເປັນຜູ້ຊ່ວຍຄືກັນ. ລາວຈຶ່ງໄປຫາສະຫາຍຂອງລາວຫມາຍໃຈຈະໄປເວົ້າໃຫ້ທ້າວເປັ່ງວ່າລາວບໍ່ມີກະຕັນຍູຕໍ່ຕົນ, ແຕ່ພໍໄປເຫັນທ້າວສຸນ ພໍ່ຄ້າປອມ ຢູ່ທີ່ເຮືອນ ທ້າວເປັ່ງ ລາວກໍເຂົ້າໃຈທັນທີວ່າລາວໄດ້ຄິດຜິດ.

ແຕ່ນັ້ນໄປສອງສະຫາຍກໍຮັກແພງກັນຍິ່ງກວ່າເກົ່າອີກ.

ຄຳອະທິບາຍ.— ສະຫາຍ : ເພື່ອນຮັກ. ມຸນ : ຂອງມີມາແຕ່ພໍ່ແຕ່ແມ່. ອາສັຍ : ເພິ່ງພາ, ປຸ່ນຳ. ຄົນກຽດຄ້ານ : ຄົນເບື່ອຫນ່າຍວຽກການ, ຄົນບໍ່ຢາກທຳການງານ.

ຄຳຖາມ.— ໑.— ທ້າວເປັງເປັນຄົນມີໃຈຢ່າງໃດ ? ໒.— ເປັນຫຍັງທ້າວອຸ່ນຈຶ່ງສອບໄລ່ບໍ່ໄດ້ ? ເພາະເຫດໃດ ? ໓.— ເມື່ອທີຫລັງເປັນຫຍັງລາວຈຶ່ງສອບໄລ່ໄດ້ ? ໔.— ພາຍຫລັງມາແມ່ນໃຜເປັນຜູ້ອຸດຫນູນທ້າວອຸ່ນ ?

ໃຈຄວາມ.— ທ້າວເປັງເປັນນັກຮຽນດີຈຶ່ງໄດ້ເປັນອາຈານຜູ້ຊ່ວຍ, ທ້າວອຸ່ນເປັນຄົນກຽດຄ້ານຈຶ່ງສອບໄລ່ບໍ່ໄດ້, ແຕ່ເຂົາເປັນສະຫາຍກັນມາແຕ່ນ້ອຍ, ຕໍ່ມາທີຫລັງທ້າວເປັງຈຶ່ງແນະນຳໃຫ້ທ້າວອຸ່ນຕັ້ງໃຈຮຽນຕໍ່ໄປອີກ ຈຶ່ງສອບໄລ່ໄດ້ເປັນສມຽນແລະອາຈານຜູ້ຊ່ວຍເຫມືອນກັນ. ແຕ່ນັ້ນໄປສອງສະຫາຍກໍ່ຮັກແພງກັນຍິ່ງກວ່າເກົ່າ.

ສັບ.— ສະຫາຍ.

ນາມ : ເພື່ອນ, ສມຽນ, ມຸນ, ວຽກການ, ຕຳແຫນ່ງ.

ຄຸນນາມ : ກຽດຄ້ານ, ທຸກຍາກ.

ກິຣິຍາ : ອາສັຍ, ເລົ່າຮຽນ, ສອບໄລ່, ຊ່ວຍເຫລືອ, ອຸດຫນູນ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສະຫາຍ, ຄວາມທຸກ, ຄວາມຮັ່ງມີ, ມຸນ, ຄວາມຊ່ວຍເຫລືອ, ວຽກການ, ສມຽນ, ຜູ້ຊ່ວຍ.



ຄຳເຄົ້າດຽວກັນ.— ນ້ອຍ : ຫນ່ອຍ, ນິດຫນ່ອຍ. ດົນ : ຕົວ, ໂດ.

ແຕ່ງເລື່ອງ.— ໃຫ້ແຕ່ງເລື່ອງສະຫາຍຂອງເຈົ້າຜູ້ນຶ່ງ ຊຶ່ງເປັນຄົນກຽດຄ້ານໃນການຮຽນ

# ໘໙. ເຮົາຕ້ອງພຍາຍາມ ໃຫ້ໄດ້ດີຂຶ້ນໄປສເມີ



ເວລາທ້າວສົມດີເຮັດການ ລາວໄດ້ເອົາແອ່ງສອງຫນ່ວຍມາໄວ້ຂອກຂ້າງລາວ. ເມື່ອໃດລາວຄິດເຖິງຄວາມດີ ລາວເອົາເມັດຫມາກຖົ່ວຂາວເມັດນຶ່ງ ຖິ້ມໃສ່ແອ່ງຫນ່ວຍທີນຶ່ງ, ເມື່ອໃດລາວຄິດເຖິງຄວາມຊົ່ວ ລາວເອົາເມັດຫມາກຖົ່ວດຳ ຖິ້ມໃສ່ແອ່ງຫນ່ວຍທີສອງ ທີແຣກລາວເຫັນວ່າໃນມື້ນຶ່ງ, ເມັດຫມາກຖົ່ວທີ່ລາວຖິ້ມໃສ່ແອ່ງນັ້ນ ມີເມັດດຳຫລາຍກວ່າເມັດຂາວ ພາຍລຸນມາ. ເມັດຂາວກໍ່ຫລາຍກວ່າເມັດດຳ. ຈຳນວນເມັດຫມາກຖົ່ວດຳນັ້ນນ້ອຍລົງທຸກມື້ ຈົນບໍ່ມີຊ້າ. ດົນມາ, ທ້າວສົມດີກໍ່ບໍ່ຕ້ອງເອົາເມັດຫມາກຖົ່ວຖິ້ມໃສ່ແອ່ງອີກ ດ້ວຍວ່າຄວາມ

ຄິດຂອງລາວແມ່ນແຕ່ຄວາມດີທັງນັ້ນ. ເມື່ອໄດ້ພຍາຍາມທຳໃຫ້ດີຂຶ້ນປູສເມີດັ່ງນີ້, ທ້າວສົມດີກໍເລີຍເປັນຜູ້ມີລັກຂນະຜູ້ດີແທ້.

ເຮົາຕ້ອງ ພຍາຍາມ ຫາຄວາມດີ ແລະ ພຍາຍາມເວັ້ນ ຄວາມຊົ່ວ ໃນຕຳຣາບູຮານ, ເພິ່ນກໍຍັງໄດ້ກ່າວໄວ້ວ່າ "ໜ້າທີ່ຂອງມະນຸດເຮົາ ນັບແຕ່ມະຫາກະສັດລົງມາຫາບ່າວໄພ່ອາສດອນກໍແມ່ນໃຫ້ພຍາຍາມທຳໃຫ້ດີຂຶ້ນໄປທຸກມື້"

<u>ຄຳອະທິບາຍ</u>.– ມີລັກຂນະຜູ້ດີ : ມີລັກສນະຜູ້ດີ. ຕຳຣາບູຮານ : ຕຳຣາແຕ່ເກົ່າກ່ອນ.

<u>ຄຳຖາມ</u>.– ໑.– ເປັນຫຍັງທ້າວສົມດີ ຈຶ່ງເອົາ ແອ່ງ ສອງໜ່ວຍ ມາໄວ້ຂອກຂ້າງລາວ ? ໒.– ລາວເຮັດຢ່າງນີ້ໝາຍຄວາມວ່າຢ່າງໃດ ? ໓.– ເປັນຫຍັງເຮົາຈຶ່ງຫາຄວາມດີ ?

<u>ໃຈຄວາມ</u>.– ພຍາຍາມໃຫ້ໄດ້ດີຂຶ້ນໄປສເມີ. ສົມດີທຳການເອົາແອ່ງສອງໜ່ວຍມາໄວ້ຂອກຂ້າງ. ເວລາລາວຄິດດີຈຶ່ງເອົາຖົ່ວຂາວໃສ່ແອ່ງໜ່ວຍທີ່ນຶ່ງ ເມື່ອລາວຄິດຊົ່ວເອົາຖົ່ວດຳຖິ້ມໃສ່ແອ່ງໜ່ວຍທີ່ສອງ ທີ່ແອກເມັດດຳຫລາຍກວ່າ ບານມາກໍຂາວທັງໝົດ ສົມດີກໍມີແຕ່ຄວາມດີທັງໝົດ.

<u>ສັບ</u>.– ການພຍາຍາມໃຫ້ໄດ້ດີ.

<u>ນາມ</u> : ແອ່ງ, ເມັດໝາກຖົ່ວ, ລັກຂນະ, ອາສດອນ.

<u>ຄຸນນາມ</u> : ຂາວ, ດຳ, ດີ.



<u>ກິລິຍາ</u> : ຄິດ, ຖິ້ມ, ເຫັນ, ພຍາຍາມ, ກ່າວ.

<u>ໄວຍາກອນ</u>.– ລຶງກະ (ຕໍ່)

ຄຳບາງຈຳພວກໝາຍລຶງຄະໃນມັນເອງ ດັ່ງ ພໍ່, ອ້າຍ, ອາວ, ລຸງ, ຫລືວ່າ ແມ່, ເອື້ອຍ, ນ້າ, ປ້າ ເປັນຕົ້ນ.

<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ແອ່ງ, ຄວາມດີ, ໝາກຖົ່ວ, ຄວາມຊົ່ວ, ຈຳນວນ, ຄວາມຄິດ, ລັກຂນະ, ຕຳຣາ, ມະຫາກະສັດ, ບ່າວໄພ່, ອາສດອນ.

<u>ຄຳເກົ່າດຽວກັນ</u>.– ບູຮານ : ບູຮານະຄະດີ, ບູຮານວັດຖຸ, ບູຮານສະຖານ.

<u>ແຕ່ງເລື່ອງ</u>.– ໃຫ້ເຈົ້າແຕ່ງເລື່ອງຄົນຜູ້ນຶ່ງທີ່ມີຄວາມ ພຍາຍາມ ຈົນໄດ້ດີ.

---

# ໗໐. ຕ້ອງລະວັງຕົວສເມີ

ເມື່ອເສັງເປັນສມຽນໄດ້ແລ້ວ, ຈານບານໄປປານອາດຍ່າຄຣູຈູມທີ່ອາເລົ່າລືວ່າ ເປັນຜູ້ມີລັກສນະຜູ້ດີ ອາດຍາດຣູຈູມເວົ້າກັບຈານໜຶ່ງວ່າ, ມື້ວານນີ້ເມື່ອຝົນຕົກເຊົ້າແລ້ວ, ເວລາຂ້ອຍໄປຕາມທາງຂ້ອຍເຫັນຄົນຜູ້ນຶ່ງຍ່າງລະວັງເຕັມທີ ເພາະລາວບໍ່ຢາກໃຫ້ເກີບໃໝ່ຂອງລາວເປື້ອນ ຕາວນຶ່ງ, ຄົນຜູ້ທີ່ຂ້ອຍເຫັນຢູ່ນັ້ນເລີຍຍ້ານບາດຕີນໄປຕົກໃສ່ຫນອງດິນຫນອງນຶ່ງ, ຕັ້ງແຕ່ນັ້ນໄປ, ລາວກໍບໍ່ລະວັງອີກເລີຍ, ແລະຍ່າງໄປໝົດທຸກຫນອງດິນ ການໄປຂອງ



ຄົນຜູ້ນີ້ສະແດງໃຫ້ເຮົາເຫັນວ່າ
ເຮົາຕ້ອງຣະວັງຮັກສາຄວາມ
ປະພຶດຂອງເຮົາສເມີ ຄວາມ
ຊົ່ວອັນນຶ່ງເກາະເອົາຫມູ່ມາ
ສເມີ, ແລະຜົນທີ່ສຸດກໍ່ພາ
ໃຫ້ເຮົາຊົ່ວເລີຍ.

ນັກຮຽນທັງຫລາຍ
ໃຫ້ຫມູ່ເຈົ້າຕຶກຕອງເບິ່ງ
ຄວາມນີ້ແລະໃຫ້ເຂົ້າໃຈໄດ້ວ່າ
ໃນທາງທີ່ດີ ຫລື ທາງຊົ່ວກໍດີ
ມີແຕ່ເທື່ອທີ່ແຣກເທົ່ານັ້ນ
ເອງເປັນທີ່ສຳຄັນ. ເພື່ອຈະ
ແກ້ຄວາມຜິດຂອງຫມູ່ເຈົ້າໆ
ປາໄດ້ເວົ້າສັກເທື່ອວ່າ "ເທື່ອດຽວດອກ" ເມື່ອເຮົາໄດ້ທຳຄວາມ
ຜິດອັນນຶ່ງແລ້ວ, ເຮົາກໍ່ອາດທຳຄວາມຜິດອັນອື່ນໆ ອີກໂດຍງ່າຍ
ບູຮານໄດ້ຖືວ່າ "ຣະວັງຄວາມປະພຶດຂອງຕົວສເມີເປັນຂໍ້ສຳຄັນໃນ
ຫນ້າທີ່ຂອງມະນຸດເຮົາທັງຫລາຍ."

ຄຳອະທິບາຍ.– ຫນອງດົມ : ບ່ອນຫລຸບຫລົ່ມມີຂີ້ດົມປູ. ຕຶກ
ຕອງເບິ່ງ : ພິນິດພິຈາຣະນາເບິ່ງ.

ຄຳຖາມ.– ໑.– ຈານບານເມື່ອໄດ້ເປັນສມຽນແລ້ວລາວໄປໃສ ?
໒.– ອາດຍາດຄຣູຈູມເວົ້າກັບຈານຫມື່ນວ່າຢ່າງໃດ ?



໓.– ເປັນຫຍັງຄົນຜູ້ນັ້ນຈຶ່ງບ່າງຣະວັງເຕັມທີ ?
໔.– ເມື່ອຄົນຜູ້ນັ້ນຍ້າຍບາດຕີນຕົກໃສ່ຫນອງດົມແລ້ວ
ລາວມີຄວາມຣະວັງອີກບໍ່ ?
໕.– ເຣື່ອງນີ້ສອນໃຫ້ເຮົາວ່າຢ່າງໃດ ?

ໃຈຄວາມ.– ຕ້ອງຣະວັງຕົວປຸສເມີ ເຫມືອນດັ່ງ ອາດຍາດຄຣູຈູມໄດ້ຊີ້
ແຈງໃຫ້ຈານຫມື່ນວ່າ : ປາໄດ້ທຳຄວາມຊົ່ວເປັນອັນຂາດ
ແມ່ນວ່າແຕ່ເທື່ອນຶ່ງເທື່ອດຽວກໍບໍ່ທຳ ຖ້າຫາກທຳລົງໄປ
ແຕ່ທີດຽວ ກໍ່ອາດເກາະເອົາຄວາມຊົ່ວ ໃຫ້ ເປັນຫມູ່ເປັນປູງ
ມາສູ່ເຮົາຢ່າງແນ່ນອນ.

ສັບ.– ຕ້ອງຣະວັງຕົວ.

ນາມ : ຍື່ນ, ທາງ, ເກີບ, ຫນອງ, ຫນ້າທີ່

ຄຸນນາມ : ໃຫມ່, ເປື້ອນ, ຊົ່ວ.

ກິຣິຍາ : ເລົ່າລື, ຍ້າຍ, ບ່າງ, ຮັກສາ, ຕຶກຕອງ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສມຽນ, ລັກຂນະ,
ຍົນ, ຄົນ, ຜູ້ນຶ່ງ, ເກີບ, ບາດຕີນ, ຫນອງດົມ, ຄວາມ
ຣະວັງ, ຄວາມປະພຶດ, ນັກຮຽນ.

ຄຳຄ້າຍຄືກັນ.– ເວົ້າ : ວ່າ, ວາຈາ, ວາຈົກ. ມະນຸດ : ມະນຸດ
ຊາດ, ມະນຸດເທບ, ມະນຸດທັນ, ມະນຸດໂລກ.

ແຕ່ງເຣື່ອງ.– ໃນຈົດຫມາຍສະບັບນຶ່ງ, ໃຫ້ເຈົ້າສັ່ງສອນເພື່ອນຜູ້
ນຶ່ງທີ່ບໍ່ມີຄວາມຣະວັງໃນຄວາມປະພຶດຂອງເຂົາ ແລະ

ອະທິບາຍໃຫ້ເຂົາຮູ້ວ່າ ເປັນຫຍັງຈຶ່ງຕ້ອງອະວັງຕົວສເນີ.

# ໕໑. ວຽງຈັນ



ເມືອງວຽງຈັນ, ຊື່ງແຕ່ກ່ອນ, ລືຊາໄປຮອດດົງແກງ, ພະນ້າ, ແລະປາວາ ຈ່າເປັນເມືອງໃຫຍ່ງາມ ແລະມັ່ງມີນັ້ນ, ເມື່ອສິບປີມານີ້, ກໍຍັງເຫລືອແຕ່ບູຮານວັດຖຸທີ່ເພພັງແລະຫຸ້ມຫໍ່ດ້ວຍເຄືອໄມ້.

ໃນປີ ໑໘໙໙ ທ່ານຜູ້ສໍາເລັດ ຣາຊການ ປະເທດລາວ ໄດ້ມາຕັ້ງຢູ່ທີ່ວຽງຈັນແລ້ວ, ແຕ່ນັ້ນມາ, ອັນໃດກໍປ່ຽນແປງຫມົດ. ໂຮງ



ການຂອງທ່ານຜູ້ສໍາເລັດຣາຊການໄດ້ກໍ່ຂຶ້ນບ່ອນທໍ່ຄ່າຢູ່ແຕ່ກີ້. ກໍາແພງເມືອງອັນເກົ່າແກ່ກໍປ່ຽນເປັນຖນົນອ້ອມເມືອງອັນໃຫຍ່ກວ້າງ. ແທນທີ່ຂອງທາງແຄບແຕ່ກ່ອນກໍມີຖນົນຫີນທາງອັນກວ້າງຊື່ ແລະປູດ້ວຍຫີນຫມົດ. ກວຽນ, ອົດລາກ, ອົວຖີບ, ແລະອົດບິນກໍເດີນໄປມາໄດ້ສະດວກດີ. ວັດວາອາຮາມທີ່ເພພັງນັ້ນກໍໄດ້ແຜ້ວຖາງ ແລະລາງວັດກໍໄດ້ສ້ອມແຊມຫລືສ້າງຂຶ້ນໃຫມ່ ຕຶກຮ້ານ, ຕລາດຂາຍຂອງແລະເຮືອນທີ່ມີສວນດອກໄມ້ ອ້ອມເຮືອນ ກໍໄດ້ສ້າງຂຶ້ນ. ແຕ່ສິບປີຫລັງນັ້ນຈະຜ່ານໄປບ່ອນທີ່ຮາບດີ ຄື ດຽວນີ້ແລະບ່ອນໂຮງຮຽນສາມຫລັງປຸກຢູ່ນັ້ນກໍບໍ່ໄດ້ດອກ ເພາະວ່າຢູ່ທີ່ນັ້ນມີຮ່ອງແລະທາມຮົກທຶບຫນາທັງມີຫນາມຫລາຍດ້ວຍ.

ແຕ່ກ່ອນຄໍ່າມາ, ຕ້ອງໄຕ້ກະບອງ. ດຽວນີ້ຢູ່ຕາມແຄມທາງ ແລະໃນເຮືອນທີ່ຢູ່ໃນເມືອງກໍໃຊ້ແຕ່ໄຟຟ້າແທນທັງນັ້ນ.

<u>ຄໍາອະທິບາຍ.</u>– ປາວາ : ແມ່ນດອນໃຫຍ່ດອນນຶ່ງທີ່ຢູ່ໄດ້ປະເທດອິນດູຈີນ. ກໍາແພງ : ຄູອ້ອມເມືອງ, ຫລືຄ້າຍອ້ອມເມືອງ. ທາມ : ປ່າຊຶ່ງມີນ້ໍາແກ່ງຖ້ວມທຸກປີ.

<u>ຄໍາຖາມ.</u>– ໑.– ແຕ່ກ່ອນວຽງຈັນມີຊື່ລືຊາໄປຮອດໃສ ? ໒.– ເມື່ອສີ່ສິບປີມານີ້ວຽງຈັນຍັງເຫລືອແຕ່ຫຍັງແດ່ ? ໓.– ດຽວນີ້ປະເທດລາວເຮົາມີການປ່ຽນແປງໄປຢ່າງໃດແດ່ ?

<u>ໃຈຄວາມ.</u>– ແຕ່ກ່ອນວຽງຈັນເປັນເມືອງໃຫຍ່ງາມ, ຮັ່ງມີ, ມີຊື່ສຽງລືຊາໄປຮອດດົງແກງ, ພະນ້າ, ປາວາ ໃນປີ ໑໘໙໙

ທ່ານຜູ້ສຳເລັດອາຊຍການໄດ້ມາຕັ້ງຢູ່ວຽງຈັນແລ້ວ, ຖນົນ
ກໍກວ້າງຊື່ ແລະປູທີນຫມົດ, ແຕ່ສິບປີຫລັງນັ້ນມີແຕ່
ປ່າແລະຫານຣົກຄືນຫນາ, ຖ້ານາຕ້ອງໄດ້ໄຕ້ກະບອງ
ດຽວນີ້ຢູ່ໃນເມືອງກໍໃຊ້ແຕ່ໄຟຟ້າແທນທັງນັ້ນ.

ສັບ.– ວຽງຈັນ.

ນາມ : ຖນົນ, ຫີນ, ວັດ.

ຄຸນນາມ : ກວ້າງ, ໃຫຍ່.

ກິຣິຍາ : ສ້າງ, ປູ, ຢູ່.

ໄວຍາກອນ.– ພົດຈະນາ.

ເອກະພົດ ພະຫຸພົດ.

ເອກະພົດ ແມ່ນຄຳທີ່ຫມາຍເຖິງຄົນຜູ້ດຽວ ສັດຕົວດຽວ
ແລະສິ່ງຂອງສິ່ງດຽວ.

ພະຫຸພົດຫມາຍເຖິງ ຄົນ ສັດ ແລະສິ່ງຂອງທີ່ມີຈຳນວນ
ແຕ່ສອງຂຶ້ນໄປ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ເຄືອໄມ້, ກວຽນ
ອິດລາກ, ອິດຖືບ, ອາຮາມ, ຕຶກຮ້ານ, ຕລາດ, ຮ້ອງຫານ

ຄຳເຄົ້າດຽວກັນ.– ແຕ່ກ່ອນ : ແຕ່ເກົ່າ. ຫຸ້ມ : ຫົ່ມ, ທໍ່. ຮຶງ
ຮັດ. ແຄບ : ຄັບ, ຄຸນ. ຖາງ : ຖາກ, ເຖືອ
ຮົກ : ເຮື້ອ. ຫນາ : ແຫນ້ນ.

ແຕ່ງເລື່ອງ.– ໃຫ້ເຈົ້າແຕ່ງເລື່ອງວັດທີ່ຢູ່ເມືອງຫລືບ້ານຢູ່ຂອງເຈົ້າ



# ໗໖. ທີ່ປະເທດຂະເມນ



ເພື່ອຈະໄປຫາທະເລສາບ. ຕ້ອງຂຶ້ນໄປຕາມນ້ຳຕົງທະເລສາບ ອອກຈາກທະເລສາບນັ້ນໄປ, ກໍແມ່ນອັງກໍວັດ, ເວລາຂຶ້ນໄປຕາມຕົງທະເລສາບນີ້, ພວກຄົນເດີນທາງ, ພົບບ່ອນອອນຊອນໃຈແນວໃຫມ່ໄປເລື້ອຍ, ເພິ່ນໄດ້ຊົມຄວາມງາມຂອງປ່ານາທີ່ເຕັມແຕ່ສອງຝ່າຍ, ສວນສາລີ (ເຂົ້າໂພດ) ສວນກ້ວຍແລະສວນຫມາກດລອດໄປ. ໃນຣະຫວ່າງສວນເຫລົ່ານີ້, ມີເຮືອນສູງພົ້ນຂຶ້ນເປັນຫຍ່ອມ ໆ.

ລາງເທື່ອ, ຢູ່ຕາມຫວ່າງຕົ້ນໄມ້ອັນດຽວທັງຫລາຍ ເພິ່ນຫລຽວເຫັນວັດທີ່ນຸ່ງດ້ວຍດິນຂໍ່ແດງເຮືອຢູ່ ຢູ່ຕໍ່ຫນ້າປະຕູວັດເຫລົ່ານັ້ນ ມີເຈົ້າຫົວຄຸມຜ້າເຫລືອງຄືຄຳນັ່ງພາວະນາຢູ່.

ບໍ່ວ່າໃນອະດູໃດ, ນ້ຳທະເລສາບແລະແຄມທະເລສາບຫາກເປັນຫນ້າອອນຊອນປູດັ່ງນີ້ສເມີ. ແຕ່ຍັງມີບາງບຶ່ງທີ່ນ້ຳທະເລສາບແລະທະເລສາບດ່າງປລາດ, ເປັນຫນ້າປາກເບິ່ງຫລາຍ, ແມ່ນຍາມທີ່ນ້ຳຂອງມາກ ບ້ອນທີ່ມະກ້ານ ທີ່ພຸດິເບບນັ້ນເສືອມແລະບ້ອນຝົນໃຫຍ່ເດືອນແປດເດືອນເກົ້ານັ້ນເອງ. ໃນເວລານັ້ນ, ນ້ຳຂອງທັ້ງເຂົ້າໄປໃນນ້ຳສາຂາຂອງມັນ.

<u>ຄຳອະທິບາຍ</u>.– ທີ່ມະ : ນ້ຳຫນອກ. ທີ່ມະກ້ານ : ນ້ຳຫນອກແຂ້ນເຂົ້າກັນເປັນກ້ອນ.

<u>ຄຳຖາມ</u>.– ໑.– ອັງກໍວັດປູ່ບ່ອນໃດ ? ໒.– ດິງທະເລສາບປູ່ໃສ ?
໓.– ນ້ຳດິງທະເລສາບມາກໃນເວລາໃດ ?

<u>ໃຈຄວາມ</u>.– ທີ່ປະເທດຂະເມນມີວັດຖຸປູ່ສອງປາງ ຂອງທີ່ສຳຄັນກວ່າຫມູ່ຄືນ້ຳດິງທະເລສາບແລະອັງກໍວັດ, ຈາກທະເລສາບນັ້ນໄປກໍແມ່ນອັງກໍວັດ, ນ້ຳດິງທະເລສາບເປັນຫນ້າປາກເບິ່ງຫລາຍແມ່ນຍາມນ້ຳຂອງມາກ, ໃນເດືອນແປດແລະເດືອນເກົ້ານັ້ນເອງ, ໃນເວລານັ້ນ, ນ້ຳຂອງທັ້ງເຂົ້າໄປໃນນ້ຳສາຂາຂອງມັນ.

<u>ສັບ</u>.– ປະເທດ.

<u>ນາມ</u> : ຄິນເດີນທາງ, ສວນ, ເຮືອນ, ວັດ, ທີ່ມະ, ນ້ຳສາຂາ.

<u>ຄຸນນາມ</u> : ອອນຊອນ, ເຕັມ, ແດງ, ເຫລືອງ.

<u>ກິຣິຍາ</u> : ຊອກ, ພົບ, ຊົມ, ຫລຽວເຫັນ, ເສືອມ.



<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳດັ່ງນີ້ : ອັງກໍວັດ, ຄວາມງາມ, ສວນຝ້າຍ, ພື້ນຂຶ້ນ, ເປັນຫຍ່ອມ ໆ, ດຸນຜ້າ, ທີ່ມະກ້ານ, ເສືອມ, ພຸດິເບ.

<u>ຄຳເດົາດຽວກັນ</u>.– ເສືອມ : ເສັ່ງ, ສື້ນ. ຊົມ : ຊື່ນຊົມ, ຊົມຊານ, ຊົມເຊີຍ, ຊົມໃຊ້.

<u>ແຕ່ງເອື່ອງ</u>.– ວັນພັກນີ້ນຶ່ງ ເຈົ້າໄດ້ໄປທ່ຽວຫລິ້ນຕາມແຄມແມ່ນ້ຳຂອງ ເຈົ້າໄດ້ຊົມຄວາມງາມຂອງປັ່ງແມ່ນ້ຳຂອງທີ່ເຕັມແຕ່ສວນສາລີ ສວນກ້ວຍແລະສວນຜັກດລອດໄປ. ຈົ່ງເລົ່າເອື່ອງການຊົມເຊີຍຂອງເຈົ້າມາໃຫ້ຟັງດ້ວຍ.

---

# ໕໓. ທີ່ປະເທດຂະເມນ (໓)



ເມື່ອຖຶກກຳລັງນ້ຳທັ້ງມາໂດຍແຮງ, ນ້ຳດິງທະເລສາບທີ່ບໍ່ໄດ້ກໍໄຫລຄືນເຂົ້າໄປຫາທະເລສາບບໍ່ພໍດາວ ˋທະເລສາບກໍລົ້ນ

ແລະດຳບົນທີ່ຢູ່ໃກ້ນັ້ນກໍຖ້ວມເປັນແກ່ງຫມົດ. ການທີ່ເປັນດັ່ງນີ້, ພາໃຫ້ມີງານໃຫຍ່ອັນນຶ່ງທີ່ປະເພດຂະເມນ ແມ່ນສົມເດັດພະເຈົ້າຂະເມນເອງ. ເປັນຫົວຫນ້າງານມີເຮືອຊ່ວງຫລາຍຮ້ອຍລຳແຫ່ເຮືອພະທີ່ນັ່ງໄປໃນເວລານ້ຳຈະດ່ວໄຫລຄືນ, ສົມເດັດພະເຈົ້າກໍເອົາພະຂັນຕັດເຊືອກທີ່ໄດ້ເບັ້ງຂ້າມນ້ຳໄວ້ນັ້ນໃຫ້ຂາດ.

ນ້ຳນີ້ຖ້ວມປ່າສູງຂຶ້ນໄປປະມານເຄິ່ງຕົ້ນໄມ້ໃຫຍ່. ນ້ຳຖ້ວມດັ່ງນີ້, ກໍມີປໂຍດໃຫ້ແກ່ຊາວຂະເມນ ເພາະວ່າມັນໄດ້ນຳເອົາປຸຍອັນດີມາໃສ່ດິນແລະໄດ້ນຳເອົາປາເຂົ້າດົງໂກດ. ໃນນ້ຳແກ່ງມີແຕ່ຍອດໄມ້ເທົ່ານັ້ນທີ່ພົ້ນນ້ຳ ຖ້າເຮົາໄປຫລິ້ນຕາມຫວ່າງປາຍໄມ້ນີ້, ກໍມີຄວາມອອນຊອນຫາອັນຈະປຽບບໍ່ໄດ້ເລີຍ ເພາະວ່າບ່ອນທີ່ໄປນັ້ນປາກົດວ່າປາທີ່ປົ່ງອອກຈາກນ້ຳ, ແມ່ນບາມທີ່ເພິ່ນເວົ້າວ່າ "ປາອອກຈາກບ່ອນນອນມັນເພື່ອເຂົ້າໄປໃນປ່າ."

ຄຳອະທິບາຍ.– ພະຂັນ : ດາບຫລືງ້າວເຈົ້າຊີວິດ. ເຮືອພະທີ່
ນັ້ງ : ເຮືອຂອງເຈົ້າຊີວິດທີ່ເພິ່ນຂີ່ໄປນັ້ນ. ດຳບົນ : ຂົງ
ເຂດ. ອອນຊອນ : ມ່ວນຊື່ນຫລາຍ.

ຄຳຖາມ.– ໑.– ນ້ຳແກ່ງແມ່ນນ້ຳແນວໃດ ? ໒.– ການທີ່ນ້ຳ
ແກ່ງຖ້ວມນີ້ມີຜົນ ປໂຍດ ໃຫ້ແກ່ ຊາວ ຂະເມນ ປານໃດແດ່ ?
໓.– ເຮົາເຫັນອັນໃດແດ່ ຈະພາໃຫ້ເຮົາມີຄວາມອອນ
ຊອນຫາອັນຈະປຽບບໍ່ໄດ້ ?



ໃຈຄວາມ.– ນ້ຳທະເລສາບລົ້ນດ້ວຍກຳລັງນ້ຳຂອງທັ່ງເອົາມາໂດຍແຮງ. ບ້ານທີ່ຢູ່ໃກ້ຽງທະເລສາບນັ້ນກໍຖ້ວມເປັນແກ່ງຫມົດ, ເວລານັ້ນເປັນງານໃຫຍ່ຂອງສົມເດັດພະເຈົ້າຢູ່ຫົວເມືອງຂະເມນເປັນຫົວຫນ້າ, ມີເຮືອຊ່ວງຫລາຍຮ້ອຍລຳແຫ່ພະທີ່ນັ່ງໄປທ່ຽວຊົມຫລິ້ນ ນ້ຳແກ່ງໃຫ້ມີຄວາມອອນຊອນພະໄທຂອງພະອົງ.

ສັບ.– ປະເພດຂະເມນ (໓)

ນາມ : ນ້ຳຂອງ, ປະເທດ, ພະຂັນ.

ຄຸນນາມ : ໃຫຍ່, ສູງ.

ກິລິຍາ : ຖ້ວມ, ໃສ່, ອອກຈາກ.

ໄວຍາກອນ.– ພົຈນາ (໓)

ເອກະວຈນະຄຳທີ່ໃຊ້ຊີ້ແຈ່ງ ເອກະວຈນະນັ້ນ ຄື : ຄົນຜູ້ນຶ່ງ, ນ້ຳຕົວນຶ່ງ, ຕົ້ນໄມ້ຕົ້ນນຶ່ງ, ດັ່ງນັ້ນ, ນຶ່ງແມ່ນເອກະວຈນະ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຫົວຫນ້າ, ເຮືອຊ່ວງ, ສົມເດັດພະເຈົ້າ, ພະຂັນ, ເຊືອກ, ປຸຍ.

ຄຳເຄົ້າຄຽງກັນ.– ຖ້ວມ : ຖົມ. ຫມົດ : ເຫມັດ, ເຫມິດ.

ແຕ່ງເຮືອງ.– ຈົ່ງແຕ່ງເຮືອງນ້ຳຂອງໃນລະດູນ້ຳມາກ.

# ໓໔. ເມືອງພະນົມເປັນ



ຫາເມືອງໃດ ຈະ ປ່ຽນແປງ ຕາມສມັຍ ໄດ້ ວອດເອັວດັ່ງເມືອ
ພະນົມເປັນ ທີ່ເປັນເມືອງເອກຂອງປະເທດຂເມນນັ້ນກໍມີນ້ອຍ
ນັບຮຸ່ງເຮືອງຂຶ້ນໄວດີດັ່ງນິຣະມິດ.

ແຕ່ກ່ອນ, ມີແຕ່ສະ, ແລະຫຍ້າສູງຕືບຈະຫາບ່ອນໄປຕາ
ທາງກໍບໍ່ໄດ້, ດຽວນີ້, ກໍເຫັນແຕ່ທໍ່ເຮືອນອັນງົດງາມ, ຖນົນຫົນທາ
ອັນກວ້າງຂວາງ, ຄອງອັນບຶ້ງທີ່ມີຂົວພ້ອມແລະບ່ອນຫລິ້ນຫລາ
ບ່ອນ. ການສ້າງສາທັງຫລາຍໄດ້ປ່ຽນແປງສຸຂາພິບານຂອງບ້າ
ເມືອງແລະໄດ້ຫມາຍຄວາມງົດງາມຢ່າງບຶ້ງໄວ້ໃນດິນນີ້.

ເພື່ອຈະຖົມບວກຫນອງ, ເພື່ອຈະສ້າງຖນົນຫົນທາງ, ຕ້ອ
ມີດິນແລະດິນຊາຍ. ຂອງຫມູ່ນີ້ມີຢູ່ກັບບ່ອນ ສະນັ້ນເພິ່ນຈຶ່ງ
ຄອງອັນນຶ່ງ, ເພື່ອຢາກໄດ້ດິນທີ່ຂຸດນັ້ນອອກໄປຖົມບວກຫນອງປູ



ເມືອງ, ເພື່ອຢາກຂ້າມຄອງໄປມາຫາກັນໄດ້ງ່າຍ ເພິ່ນໄດ້ສ້າງຂົວໃຫຍ່ນ້ອຍໄວ້, ບັງເປັນທີ່ຕື່ມຄວາມງາມແກ່ບ້ານເມືອງຂຶ້ນອີກ.

ໃນເວລາທີ່ຣັດຖະບານສ້າງຫໍໂຮງອັນແຫນ້ນຫນາ ແລະໃຫຍ່ໂຕນັ້ນ, ພວກພໍ່ຄ້າ, ຊາວເມືອງແລະພວກອຸດສາຫະກັມຕ່າງ ໆ ກໍພາກັນເປີບໃຈກໍ່ຕຶກ, ປຸກເຮືອນອັນກວ້າງຂວາງແລະງົດງາມຂຶ້ນ.

ພວກເຈັກທີ່ມີຫລັກຖານດີ ກໍຊອກດິນກໍ່ຕຶກໃຫມ່ແທນຕຶກເກົ່າທີ່ເອົາມ້າງອອກທຸກເມື່ອ.

ບໍ່ເທົ່າປານໃດ, ເມືອງກໍປ່ຽນແປງໄປຈົນຈຳບໍ່ໄດ້ແລະດຽວນີ້ກໍເປັນມະຫານະຄອນອັນກວ້າງຂວາງແລະງົດງາມບຶງບັກ.

<u>ຄຳອະທິບາຍ</u> – ເມືອງພະນົມເປັນ : ເມືອງຫລວງຂອງປະເທດຂເມນ. ນິຣະມິດ : ເຮັດຂຶ້ນທັນໃດດ້ວຍຜົນບຸນ. ເປີບໃຈ : ປື້ມໃຈ, ດີໃຈ, ດີໃຈຫລາຍ. ມະຫານະຄອນ : ເມືອງໃຫຍ່, ເມືອງເອກ.

<u>ຄຳຖາມ</u>.– ໑.– ພະນົມເປັນແມ່ນຫຍັງ ? ມັນຕັ້ງຢູ່ໃສ ? ໒.– ແຕ່ກ່ອນເມືອງນັ້ນເປັນຢ່າງໃດ ? ດຽວນີ້ເດ ?

<u>ໃຈຄວາມ</u>.– ເມືອງພະນົມເປັນແຕ່ກ່ອນມີແຕ່ສະ, ບວກ, ຫນອງ ແລະປ່າຫຍ້າອັນສູງຕືບ ດຽວນີ້ໄດ້ດັດແປງໃຫ້ທັນສມັຍ ຢ່າງວອດເອັວເຫມືອນດັ່ງນິມິດເອົາ ສົມກັບເປັນມະຫານະຄອນຂອງປະເທດຂເມນ.

<u>ສັບ</u>.– ເມືອງພະນົມເປັນ.

<u>ບານ</u> : ຂິວ, ບ້ານ, ເມືອງ.
<u>ຖຸບບານ</u> : ໃຫຍ່, ໃຫມ່.
<u>ກຶຣິບາ</u> : ກໍ່, ປຸກ, ຫລືນ.
<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ສນັບ, ເມືອງ ເອກ, ນິມິດ, ຫຍ້າ, ທົ່ງ, ຂິວ, ການສ້າງສາ, ສຸຂາພິບານ, ບວກ, ຫນອງ, ດຶບຊາບ, ຄອງ, ຊາວເມືອງ, ອຸດສາຫະກັມ.
<u>ຄຳເຄົ້າດຽວກັນ</u>.– ເປັນໃຈ : ປົ້ນໃຈ. ດິນ : ແດນ! ດ້າວ.
<u>ແຕ່ງເຣື່ອງ</u>.– ໃຫ້ເຈົ້າ ແຕ່ງເຣື່ອງ ຖືບຖາມບ້ານເກີດຂອງເຈົ້າປຸຫຸກ ວັນນີ້ ມາໃຫ້ຟັງດ້ວຍ.

---

# ໓໕. ເມືອງເວ້





ເມືອງເວ້ມີກຳແພງເມືອງແລະທາດສົບຂອງກະສັດເທົ່ານັ້ນເປັນທີ່ສຳຄັນ, ພາຍໃນກຳແພງສູງຊຶ່ງກໍ່ດ້ວຍດິນຈີ່ສີແດງອ່ຳແລະຊຶ່ງລຽບແຄມຫນອງປຸ່ນັ້ນ, ແມ່ນພະຣາຊວັງແລະຫໍໂຮງຂອງພວກເສນາບໍດີທັງຫລາຍ. ເພິ່ນເຂົ້າໄປຫາພະຣາຊວັງທາງປະຕູໂຂງອັນຄົນຮຽກວ່າ "ໂງມົນ" ແລ້ວເພິ່ນຜ່າເດີນໃຫຍ່ທີ່ປູດ້ວຍຫີນ. (ອ້ອມເດີນນີ້ມີຫໍໂຮງຕ່າງໆ) ແລ້ວກໍ່ແມ່ນທາງໃຫຍ່ອັນນຶ່ງມີສະນ້ຳລຽບຂ້າງປຸ່ແລະສວນດອກໄມ້ອັນສະອາດຕາ. ດາມທາງນີ້ມາ, ເພິ່ນກໍ່ຮອດເດີນໃຫຍ່ອັນນຶ່ງ, ແລະປູສື່ນເດີນເບື້ອງນັ້ນ, ກໍ່ແມ່ນຫ້ອງພະທີ່ນັ່ງ. ສ່ວນທາດສົບຂອງກະສັດນັ້ນ, ກໍ່ບໍ່ປຸ່ໃກເມືອງປານໃດ ປຸ່ເທິງພູນ້ອຍທີ່ມີກົກແປກທະເລ, ກົກໂຮໃຫຍ່ແລະກົກປາງດອກແດງປຸກເຕັມປຸ່, ມີທາດສົບສີທາດທີ່ງາມກວ່າຫມູ່ ແມ່ນທາດຂອງປາລອງ, ມິນມາງ, ຈຽວຕຣີ, ແລະຈືດຶກ. ເພື່ອຈະເຂົ້າໄປຫາທາດເຫລົ່ານັ້ນ, ເພິ່ນຕາມຖນົນໃຫຍ່, ຂຶ້ນຂັ້ນໄດຫີນອັນສູງ, ແລ້ວໄປຫາເດີນ ທີ່ເອ້ດ້ວຍໂຕທອງ ອັນໃຫຍ່ເຫລືອປະມານ ທີ່ຕັ້ງປຸ່ກາງອ່າງນ້ຳອັນຍາວ.

<u>ຄຳອະທິບາຍ</u>.– ທາດສົບ : ທາດກໍ່ກວມດູກຄົນ. ຫ້ອງພະທີ່ນັ່ງ : ຫ້ອງທີ່ເຈົ້າຊີວິດນັ່ງຮັບແຂກ.
<u>ຄຳຖາມ</u>.– ໑.– ປຸ່ເມືອງເວ້ມີຫຍັງງາມກວ່າເພິ່ນ ? ໒.– ກຳແພງອ້ອມດ້ວຍຫຍັງ ? ໓.– ເມື່ອອ້ານປະຕູໂຂງ "ໂງມົນ" ໄປແລ້ວເພິ່ນເຫັນຫຍັງ ? ໔.– ທາດສົບກະສັດນັ້ນປຸ່ໃສ ?

ໃຈຄວາມ.— ສິ່ງທີ່ສຳຄັນປູ່ເມືອງເວັ້ນັ້ນ ແມ່ນທາດສົບ ຂອງ ກະສັດ ເທົ່ານັ້ນ, ສ່ວນທາດສົບຂອງກະສັດນັ້ນກໍ່ປູ່ໃກ້ເມືອງ ປານໃດ, ປູ່ເທິງພູນ້ອຍທີ່ມີກົກແປກທະເລ, ກົກໄຮ ໃຫຍ່ແລະກົກຝາງດອກແດງປູກເຕັມປູ່, ມີທາດສົບສີ ທາດທີ່ປາກົດງາມກວ່າຫມູ່ ແມ່ນທາດຂອງປາລອງ, ນີນນາງ, ຈຽວຕຣີ, ແລະຈີຕົກ.

ສັບ.— ເມືອງເວົ້.

ນາມ : ເມືອງ, ທາດ, ກຳແພງ, ສວນ.

ຄຸນນາມ : ໃຫຍ່, ນ້ອຍ, ງາມ, ຍາວ, ສູງ.

ກິຣິຍາ : ປູກ, ກໍ່, ເຂົ້າໄປ, ເວົ້, ປູ.

ໄວຍາກອນ.— ພົຈນາ (ຕໍ່) ພະຫຸພົດ.

ພະຫຸພົດແມ່ນຄຳທີ່ຫມາຍເຖິງຈຳນວນຫລາຍແຕ່ສອງ ຂຶ້ນໄປ ຕົວປາງ : ເຮືອນຫ້າຫລັງ, ປູງຄົນ, ພວກ ນັກຮຽນ, ຄນະສົງ, ຊາວບ້ານ ເປັນຕົ້ນ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ດົນຈີ, ພະຣາຊວັງ, ປະຕູໂຂງ, ໂງມົນ, ກົກໄຮ, ກົກຝາງ, ນີນນາງ, ຈີຕົກ.

ຄຳເຄົ້າດຽວກັນ.— ໂຮງ : ເຮືອນ, ຮ້ານ, ຮອກ, ຮັງ. ບາວ : ບົດ, ບົນບົງ.



ແຕ່ງເອື້ອງ.— ໃຫ້ເຈົ້າແຕ່ງເອື້ອງການສົງສະການຄົນຕາຍມາ ໃຫ້ຟັງ.

# ໗໘. ເສດແຫ່ງຄວາມຈະເຣີນຂອງລາວ



ບູຮານວັດຖຸທີ່ງາມກວ່າຫມູ່ ຊຶ່ງເປັນເສດແຫ່ງຄວາມ ຈະເຣີນຂອງເຮົາ ແລະຊຶ່ງທຳໃຫ້ນັກທ່ອງທຸກຄົນດົກສະເງີປູ່ນັ້ນກ ແມ່ນວັດພູໃນແຂວງຈຳປາສັກ ຊຶ່ຂອງວັດພາໃຫ້ເຂົ້າໃຈປູ່ແລ້ວ ວັດນີ້ຕັ້ງປູ່ຈ້າຍພູນ້ອຍຫນ່ວຍນຶ່ງ, ພູຫນ່ວຍນີ້ຮຽກວ່າພູເກົ້າ. ເພື່ອ

ຈະໄປຫາວັດນັ້ນ, ເພິ່ນຕ້ອງຂຶ້ນຂັ້ນໄດຫີນບໍ່ຕ່ຳກວ່າສິບຂັ້ນ " ນຳ
ຂັ້ນໄດຕັ້ງແຕ່ຂັ້ນຕົ້ນໄປເຖິງກາງເຄິ່ງ, ບ່ອນທີ່ນ້ຳອອກບໍ່ໄສ້ດີລິນປູ
ບໍ່ຂາດນັ້ນ, ເຮົາກໍ່ເຫັນທາງຫຍ້ວອັນກວ້າງໃຫຍ່ແບບຂັ້ນໄດນີ້ໄປ
ທັງສອງຂ້າງ. ທາງຫຍ້ວອັນນີ້ມີຊື່ວ່າ "ໂຮງຊາວ" ກໍ່ດ້ວຍຫີນ
ໃຫຍ່. ປອງປັ້ນຂອງໂຮງຊາວນີ້ກວັດເປັນລວດລາຍແລະຮູບເອື້ອງ
ເປັນຫນ້າທີ່ອັສຈັນແຕ່ເກົ່າກ່ອນ ນັບວ່າງາມສົມກັບຄວາມຊົມ
ເຊີຍແທ້.

ພວກພຣະສົງຫົວເມືອງຕ່າງ ໆ ພາ ກັນ ມາ ນະມັສະກາ
ວັດພູນີ້ສເມີ, ເຫມືອນດັ່ງແຕ່ກ່ອນ, ຮອດເດືອນສາມອອກໃຫມ່
ໃດກໍ່ມີບຸນສເລີມມີຄົນມາມາກມາຍ, ບໍ່ວ່າແຕ່ຄົນໃນແຂວງຈຳປາສັ
ເທົ່ານັ້ນ, ຮອດແຂວງອຸບົນກໍ່ພາກັນມາບໍ່ໄຂ່ນ້ອຍທຸກ ໆ ປີ.

ຄຳອະທິບາຍ.– ບູຮານວັດຖຸ : ສິ່ງຂອງແຕ່ເກົ່າກ່ອນ. ພູເກົ້າ
ແມ່ນພູທີ່ມີຮູບດີເກົ້າພົມ. ນະມັດສະການ : ຂາບໄຫວ້
ນອບນ້ອມ. ບຸນສເລີມ : ບຸນສລອງສິ່ງເສີມ.

ຄຳຖາມ.– ໑.– ວັດພູຕັ້ງຢູ່ໃສ ? ໒.– ບານໄດນ້ຳບໍ່ວັດພູຈິ່ງເຫລ
໓.- ໃນປີນຶ່ງ, ເຂົາຕັ້ງບຸນວັດພູຈັກເທື່ອ ?

ໃຈຄວາມ.– ບູຮານວັດຖຸທີ່ງາມກວ່າຫມູ່ນັ້ນແມ່ນວັດພູແຂວງຈຳ
ປາສັກ, ຕັ້ງຢູ່ຈ້າຍພູນ້ອຍຫນ່ວຍນຶ່ງ ຮຽກວ່າພູເກົ້າ
ຮອດເດືອນສາມອອກໃຫມ່ປີໃດກໍ່ມີບຸນສເລີມ, ມີພຣ
ສົງຫົວເມືອງຕ່າງ ໆ ແລະຄົນມາກມາຍ ຕລອດຮອ
ແຂວງກໍ່ພາກັນມານະມັດສະການວັດພູນີ້ດ້ວຍ.



ສັບ.– ວັດພູ.
ນາມ : ວັດ, ຂັ້ນໄດ, ທາງ.
ຄຸນນາມ : ກວ້າງ, ໃຫຍ່, ເກົ່າ.
ກິລິຍາ : ຫຍ້ວ, ມາ, ນະມັດສະການ.

ການສະກົດຄຳ.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ນັກຫຍ້ວ, ວັດພູ,
ຈ້າຍພູ, ພູເກົ້າ, ນ້ຳອອກບໍ່, ໂຮງຊາວ, ປອງປັ້ນ,
ອັສຈັນ, ຄວາມຊົມເຊີຍ, ພຣະສົງ, ບຸນສເລີມ.

ຄຳເຄົ້າດຽວກັນ.– ແຂວງ : ຂອບ, ເຂດ. ບໍ່ຂາດ : ບໍ່ເຂີນ.

ແຕ່ງເອື້ອງ.– ຈົ່ງແຕ່ງເອື້ອງວັດບ້ານເຈົ້າ.

---

# ໘໗. ໄຊງ່ອນ



ໄຊງ່ອນເປັນເມືອງສຳຄັນເມືອງນຶ່ງໃນອິນດູຈີນ, ຈົນເອົາຕັ້ງຊື່ໃຫ້ວ່າ "ເພັດແຫ່ງບູຣະພາປະເທດ" ທ່າເຮືອລາງຫລັງງາມທີ່ສຸດ, ຫລັງໃດກໍ່ມີຮູບຊົງພິລຶກທັງນັ້ນ. ຕຶກຮ້ານທັງຫລາຍກໍ່ງາມເປັນຫນ້າຊົມຫມົດ. ຖນົນຫົນທາງກໍ່ຮົ່ມດີ ແລະຫມົດເມືອງນີ້ກໍ່ປູໄດ້ຮົ່ມໄມ້ເຫມືອນດັ່ງປ່າຊຸ່ມໄວ້. ຖ້າເບິ່ງມາແຕ່ບ່ອນສູງຈັກຫນ່ອຍ, ເຊັ່ນວ່າ ເບິ່ງມາແຕ່ເສົາກະໂດງກຳປັ່ນໃຫຍ່ ຫລືແຕ່ຫໍຣະຄັງໂບດຂອງຄຸນພໍ່ນັ້ນກໍ່ເຫັນວ່າ ໄຊງ່ອນເປັນເຫມືອນສວນອັນກວ້າງພິລຶກອັນນຶ່ງ, ເຫັນແຕ່ຫໍໄຮງໃຫຍ່ ໆ ຫລັງທີ່ສູງສຸດຈົນພົ້ນຕົ້ນໄມ້. ຄົງວ່າເຮືອນເຫລົ່ານີ້ຍືນໃຫ້ພົ້ນພຶກສາຊາດທັງຫລາຍ ທີ່ສູງແລະທີ່ແຜ່ກິ່ງກ້ານ ສາຂາ ອອກປົກຫຸ້ມ ເອົາຫມົດເມືອງນັ້ນສເມີ. ຕົ້ນໄມ້ເຫລົ່ານີ້ໃຫຍ່ຕົວຫລາຍກໍ່ເພາະວ່າດິນດີ.

ເມື່ອຝຣັ່ງມາຮອດທຳອິດ, ສ່ວນໃຫຍ່ຂອງເມືອງໄຊງ່ອນເປັນແຕ່ບວກຫນອງແລະຊຳ ທີ່ມີຮ່ອງສົນນ້ຳຜ່ານໄປມາຕາມເວລານ້ອຍທີ່ເພິ່ນໄດ້ໃຊ້ເພື່ອຖົມບວກຫນອງ ແລະຕຳດິນໃຫ້ແຫນ້ນຊຸດຮູນ້ຳໃສໂຄກກໍ່ສ້າງເຮືອນອັນງົດງາມແລະຫໍໄຮງອັນພິລຶກ. ຕັດຖນົນຫົນທາງແລະປູກຕົ້ນໄມ້ລຽນ, ສ້າງສວນໄວ້ເປັນບ່ອນ, ກໍ່ກັ້ນນ້ຳສຳລັບໃຫ້ນ້ຳໃສໄວ້ທຸກແຫ່ງ, ອວນຄວາມວ່າສ້າງຫມົດໄຊງ່ອນໃຫ້ເປັນເມືອງງາມເອົ້າທີ່ ແລະໃຫ້ປູສະບາຍດີພ້ອມດ້ວຍຄວາມອຸດົມດຶກດື່ນ. ມີອາສດອນປູຕັ້ງແປດສິບພັນຄົນ, ຕາມເວລານ້ອຍດັ່ງນີ້, ກໍ່ຕ້ອງມີຄວາມສລາດສລຽວແທ້ແລ້ວ, ຈຶ່ງຈະສຳເຣັດໄດ້. ການສ້າງແປງສິ່ງໃຫຍ່ໂຕ ປານ ນີ້, ກໍ່ເປັນເພາະ ເຫື່ອແຮງ ຂອງ ມະຫາ



ຈອມພົນເຮືອ ແລະທ່ານຜູ້ສຳເຣັດຣາຊການປະເທດແກວໄດ້ທັງຫລາຍ ສຖານທີ່ເຕັມແຕ່ບວກຫນອງ ແລະສົນນ້ຳອັນໃສໂຄກໄດ້ປ່ຽນແປງເປັນເມືອງງາມ ແລະສະອາດເມືອງນຶ່ງໃນບູຣະພາປະເທດກໍ່ເພາະທ່ານເຫລົ່ານີ້ເອງ.

<u>ຄຳອະທິບາຍ.</u>— ໄຊງ່ອນ : ເປັນເມືອງຂອງປະເທດແກວໃຕ້. ຊຳ : ບ່ອນມີນ້ຳອືນປູບ່ຂາດ. ສົນນ : ຕົມປົນຍາ. ບູຣະພາປະເທດ : ປະເທດກ້ຳຕາວັນອອກ.

<u>ຄຳຖາມ.</u>— ໑.— ແຕ່ຝຣັ່ງເສດ ຍັງບໍ່ທັນ ມາ ສ້າງ ເມືອງໄຊງ່ອນ ເປັນແນວໃດ ? ໒.— ດຽວນີ້ເມືອງໄຊງ່ອນເປັນຢ່າງໃດ ? ໓.— ຮູບຮ່າງຂອງເມືອງໄຊງ່ອນຄືກັນກັບຫຍັງ ? ໔.— ເພາະເຫື່ອແຮງຂອງຜູ້ໃດ ເປັນເຫດໃຫ້ເມືອງໄຊງ່ອນງາມຂຶ້ນທັນທີໄດ້ ?

<u>ໃຈຄວາມ.</u>— ໄຊງ່ອນເປັນເມືອງນຶ່ງໃນປະເທດນີ້, ເອົາຈົນຕັ້ງຊື່ໃຫ້ວ່າ "ເພັດແຫ່ງບູຣະພາປະເທດ" ແຕ່ກ່ອນເມືອງໄຊງ່ອນເປັນແຕ່ບວກຫນອງ ແລະຊຳທີ່ມີແຕ່ຮ່ອງສົນນ້ຳຜ່ານໄປມາ. ດຽວນີ້, ເມືອງໄຊງ່ອນເປັນເມືອງອັນງົດງາມ ແລະ ຫໍໄຮງອັນພິລຶກ ກໍ່ເພາະເຫື່ອແຮງ ຂອງ ມະຫາຈອມພົນເຮືອ ແລະທ່ານຜູ້ສຳເຣັດຣາຊການປະເທດແກວໃຕ້

<u>ສັບ.</u>— ເມືອງ.

<u>ນາມ</u> ຫໍໄຮງ, ຮົ່ມໄມ້, ເສົາກະໂດງ, ກຳປັ່ນ, ຫໍຣະຄັງ.

<u>ຄຸນນາມ</u> : ພິລຶກ, ຫນ້າຊົມ, ໃສໂດກ.
<u>ກິຣິຍາ</u> : ເບິ່ງ, ພົ້ນ, ຫຸ້ມ, ຖົມ.
<u>ໄວຍາກອນ</u>.— ກັດຕຸວາຈົກ.

ກັດຕຸວາຈົກ ແມ່ນຄຳນາມຫລືຄຳສັພນາມທີ່ເປັນຄຳຕົ້ນໃນຂໍ້ຄວາມ ແລະເປັນເຈົ້າຂອງແຫ່ງຄຳກິຣິຍາ ດັ່ງ ນັກຮຽນ ໄປໂຮງຮຽນທຸກວັນ ນ້ຳດົວນີ້ແລ່ນໄວ ເປັນຕົ້ນ ດັ່ງນັ້ນ ນັກຮຽນ ນ້ຳ ເປັນກັດຕຸວາຈົກ.

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ໂຊ່ງອນ, ເມືອງ, ປະເທດ, ບຸຣະພາ, ດຶກຮ້ານ, ທ່ຣະຄັງ, ພືກສາ, ຄວາມອຸດົມ, ຣາສດອນ, ຄວາມສລາດ.

<u>ຄຳເຄົ້າດຽວກັນ</u>.— ກິ່ງ : ກ້ານ. ສາຂາ : ສາຂີ.

<u>ແຕ່ງເຣື່ອງ</u>.— ໃຫ້ເຈົ້າ ແຕ່ງເຣື່ອງ ບ້ານຂອງເຈົ້າ ປຸ່ມາໃຫ້ຟັງປາງແຈ່ມແຈ້ງ.

---

# ໘໘. ໂຊລົງ "ເຈີເລີນ"

ທີ່ປະເທດໂກແຊງຊິນເປັນດິນຫລົ່ມ. ທຳມາດີ, ແຕ່ຈະສ້າງທາງຫລືທາງຣົດໄຟເປັນຕົ້ນ, ເພື່ອຂົນຂອງຫນັກກໍ່ເປັນການຍາກ ສະນັ້ນແຄມຄອງ ຊຶ່ງເປັນບ່ອນທີ່ຄົນມາອາສັຍ ປຸ່ຫລາຍ ດັ່ງນີ້, ກໍ່ເປັນທັມມະດາແລ້ວ. ປຸ່ໃກ້ໂຊ່ງອນກໍ່ແມ່ນຄອງເຈັກທີ່ເປັນບ່ອນຄົກ





ຄົນເຫລືອປະມານ. ຝັ່ງກົງເຫນືອໃຊ້ເປັນທ່າກຳປັ່ນທີ່ມາຈອດປຸເທື່ອລະຫລາຍຮ້ອຍລຳ, ປຸ່ທີ່ນັ້ນມີເດັ່ນແຕ່ສິນຄ້າ, ແຕ່ທີບ, ແຕ່ຖັງຕ່າງໆ ໄດ້ນັ້ນມາແມ່ນທ່າເຣືອທະເລແລະມີເຣືອນ້ອຍຈອດແປະງກັບປຸ່ບໍ່ຂາດສາຍປະມານບຶ່ງກິໂລແມດ. ແລ້ວຄອງກໍ່ເຂົ້າໄປຫາທົ່ງແລະຄ່ອຍໄຫລຊ້າ ໆ ຕາມມາ.

ນ້ອຍບໍ່ຊ້າ, ກໍ່ເຫັນບ້ານໃຫຍ່ຫລາຍບ້ານອີກຮອດຄົດທີ່ສຸດຂອງຄົດ, ເພິ່ນກໍ່ເຫັນໂຊລົງພ້ອມດ້ວຍຫລາຍພັນເຈັກບົວ ໆ ປຸ່ຄືຫນຸ່ມົດແລະພ້ອມດ້ວຍທ່າຈອດກຳປັ່ນອັນວົບປຸ.

<u>ຄຳອະທິບາຍ</u>.— ຄຶກຄື້ນ : ອຶກກະທຶກຫລືລືນເລີງ. ບົວ ໆ : ຈຳນວນຫລາຍຕໍ່ຫລາຍ.

<u>ຄຳຖາມ</u>.— ໑.- ດິນປະເທດແກວໄດ້ເປັນຢ່າງໃດ ? ໒.- ປຸ່ຝັ່ງກ້ຳເຫນືອຄອງເຈັກເພິ່ນເຮັດຫຍັງ ? ໓.- ແລະໄດ້ນັ້ນເດ ? ໔.- ປຸ່ເມືອງໂຊລົງເພິ່ນເຮັດຫຍັງແດ່ ?

ໃຈຄວາມ.— ທີ່ປະເທດໂກແຊງຊີນເປັນດິນຫລື້ມທ່ານາດີ, ຢູ່ໃກ້ໃຊ ງ່ອນ ມີຝັ່ງຄອງເຈັກທີ່ເປັນບ່ອນຄຶກຄື້ນເຫລືອປະມານ, ຝັ່ງກ້າເຫນືອໃຊ້ເປັນທ່າກຳປັ່ນ ໄດ້ມາແມ່ນທ່າເຮືອທະ ເລ, ນ້ອຍບໍ່ຊ້າກໍ່ເຫັນໃຊລ່ງພ້ອມດ້ວຍຫລາຍພັນເຈັກ ທີ່ບິວ ໆ ຄືຫມູ່ມົດແລະພ້ອມທ່າກຳປັ່ນອັງວິນ ໆ ຢູ່.

ສັບ.— ໃຊລ່ງ.

ນາມ : ດິນ, ຄອງ, ຫີບ, ຖັງ, ທົ່ງ.

ຄຸນນາມ : ຄຶກຄື້ນ, ນ້ອຍ, ໃຫຍ່, ຫນັກ.

ກິຣິຍາ : ເຫັນ, ອາສັຍ.

ໄວຍາກອນ.— ກັມກາອິກ.

ກັມກາອິກ ແມ່ນ ຄຳທີ່ ຫມາຍເຖິງ ຄົນສັດ ຫລືສິ່ງຂອງທີ່[illegible] ກ່ຽວ ຂ້ອງ ເພື່ອ ຄວາມ ເຂົ້າໃຈ ໄດ້ຖືກຖ້ວນ ຂອງ ລະ ປໂຍກ[illegible] ດັ່ງນີ້ : ເມື່ອນັ້ນແມງວັນທັງຫລາຍກໍ່ມາຕອມກິນ ນ້ຳ[illegible] ເຜິ້ງ ດັ່ງນັ້ນ ນ້ຳເຜິ້ງ ແມ່ນກັມກາອິກ.

ການສະກົດຄຳ.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ໃຊລ່ງ, ໂກແຊ[illegible] ຊີນ, ທາງຣົດໄຟ, ກຳປັ່ນ, ສິນຄ້າ, ຫີບ, ຖັງ[illegible] ເຮືອທະເລ, ເຮືອຫ້ວຍ, ເຈັກ.

ຄຳເຄົ້າຄຽງກັນ.— ວິນ : ວຽນ, ວິນ. ຫລີ້ນ : ແຫລວ, ເຫລວ, ໄຫລ[illegible]

ແຕ່ງເອື່ອງ.— ໃຫ້ເຈົ້າແຕ່ງເອື່ອງພໍ່ນາບູ່ນຶ່ງ.



# ໕໙. ບາງກອກ



ບາງກອກເປັນເມືອງເອກຂອງປະເທດໄທ, ເປັນເມືອງໃຫຍ່ ເມືອງນຶ່ງໃນອາຊີ. ນະຄອນຫລວງແຫ່ງນີ້ກວ້າງໃຫຍ່ແລະຈົບງາມ ຫລາຍ ຄືມີພຣະອາຊວັງຂອງເຈົ້າຊີວິດ, ສຳນັກອັຄຸບານ, ຫໍ ພຣະແກ້ວມໍຣະກົດ, ວັດວາອາຮາມຫລັງໃຫຍ່ ໆ ມີຫໍໂຮງ ໂຮງ ອຸດສາຫະກັມຫລາຍບ່ອນ.

ມີຕຶກຮ້ານ ຮ້ານຂາຍຂອງດຽຣະດາດ ຕຶກບາງຫລັງບັງ ສູງເຖິງ ໕, ໙ ຊັ້ນ. ມີຖນົນຫົນທາງຫລາຍພັນເສັ້ນ, ຖນົນເຫລົ່ານີ້ ນອກຈາກທາງຣົດໄຟ, ຣົດຣາງແລ້ວກໍ່ມີແຕ່ປູຢາງປ່າງຈົບງາມ ເພື່ອບໍ່ໃຫ້ມີຝຸ່ນແລະດິນ. ປູ່ແຄມຖນົນຫລາຍເສັ້ນມັກມີຄອງນ້ຳ ເພື່ອໃຫ້ເຮືອແພຂອງພໍ່ຄ້າ ຣາຊການຫຽວໄປມາຢູ່ບໍ່ຂາດເຫມືອນ ດັ່ງຫຽວຢູ່ຕາມທາງຖນົນ. ນອກຈາກສິ່ງທີ່ກ່າວແລ້ວຍັງມີພູເຂົາ

ທອງ, ສວນສັດອີກ, ທີ່ປະຊາຊົນພົລເມືອງພາກັນໄປນະມັດສະການ ແລະທ່ຽວຊົມດູທັ້ນຊາດ ອາກາດສົດຊື່ນຂອງປ່າໄມ້ ແລະສັດ ທຸກຊນິດດ້ວຍ.

ມີແມ່ນ້ຳໃຫຍ່ແມ່ນຶ່ງຊື່ວ່າແມ່ນ້ຳ "ເຈົ້າພຍາ" ໄຫລມາແຕ່ທິດເໜືອ ຜ່ານນະຄອນຫລວງ ແລະທົນບຸຣີ ໄປຕົກໃສ່ ນ້ຳທະເລແລະມີອ່ວໃຫຍ່ບ່ອນນຶ່ງຊື່ວ່າອ່ວ "ພຸທບອດຟ້າ" ອ້າມແມ່ນ້ຳນີ້, ແຕ່ປາກນ້ຳເຂົ້າໄປເຖິງອ່ວໃຫຍ່ ມີເຮືອຍົນ ແລະກຳປັ່ນໃຫຍ່ຈອດປູ່ ດຽ້ຍະດາດ, ບາງລຳກໍ່ກຳລັງບັນທຸກຂອງສິນຄ້າຕ່າງ ໆ ອອກໄປຂາຍເມືອງນອກ, ບາງລຳກໍ່ບັນທຸກຂອງຈາກເມືອງນອກ ເຂົ້າມາຈອດປູ່ທີ່ທ່າກຳປັ່ນໃຫຍ່ ເພາະບາງກອກເປັນເມືອງທ່າກຳປັ່ນບ່ອນນຶ່ງ. ບ້ອນບາງກອກມີຄວາມອຸດົມຊົມຊື່ນດັ່ງນີ້ ເພິ່ນຈຶ່ງເອີ້ນບາງກອກວ່າ "ກຸງເທບພຣະມະຫານະຄອນ" ອີກຊື່ນຶ່ງ ແປວ່າເມືອງໃຫຍ່ທີ່ອຸດົມສົມບູນດັ່ງເມືອງພຣະເຈົ້າເນົາສະຖິດ.

ບາງກອກ ຫລືກຸງເທບນີ້ ສົມກັບເປັນເມືອງເອກຂອງປະເທດໄທ ເພາະມີພົລເມືອງເກືອບເຖິງສອງລ້ານຄົນ ແລະເຂົາເຈົ້າພາກັນບັນຖືສາສນາພຸທ ເຄົາຣົບຕໍ່ເຈົ້າຊີວິດກັບທຸງໄຕຣົງ ປູ່ໃນຄວາມຊ່ວຍເຫລືອດູແລຂອງອັຖບານໄທ.

ຄຳອະທິບາຍ.- ພຣະແກ້ວມໍຣະກົດ : ພຣະພຸທຮູບເຮັດດ້ວຍແກ້ວມໍຣະກົດ. ອົດອາງ : ອົດແລ່ນໄປຕາມອາງເຫລັກ. ລຳຄອງ : ຄອງນ້ຳທີ່ຂຸດເອົາ. ເຮືອຍົນ : ເຮືອສຳລັບ



ຂີ່ໄປເຂວ. ນະມັສການ : ໄຫວ້, ນົບ. ດຽ້ຍະດາດ : ປາດປາຍເດັ່ນ. ທຸງໄຕຣົງ : ທຸງສາມສີຫລືມີອົງສາມ.

ຄຳຖາມ.– ໑.– ບາງກອກເປັນເມືອງເອກຂອງປະເທດໃດ? ໒.– ເມືອງນັ້ນມີອັນໃດທີ່ເພິ່ນວ່າຈົບງາມຫລາຍ? ໓.– ໃນບາງກອກ ນອກຈາກແມ່ນ້ຳ ລຳຄອງ ແລະຫໍໂຮງແລ້ວ ຍັງມີອັນໃດແດ່ທີ່ຄົນໄປນະມັສການ ແລະເບິ່ງເບງອີກ? ໔.– ແມ່ນ້ຳທີ່ໄຫລຜ່ານບາງກອກ ແມ່ນແມ່ນ້ຳຫຍັງ? ແລະມີອ່ວໃຫຍ່ຊື່ວ່າປາງໃດ? ໕.– ພົລເມືອງຂອງບາງກອກມີປະມານເທົ່າໃດ? ເຂົາເຈົ້ານັບຖືສາສນາໃດ ແລະເຄົາຣົບຕໍ່ຫຍັງ?

ໃຈຄວາມ.– ບາງກອກເປັນເມືອງເອກຂອງປະເທດໄທ ຕັ້ງໃກ້ທະເລ, ເປັນເມືອງໃຫຍ່ແລະຈົບງາມ ມີບ່ອນທ່ຽວເບິ່ງ ແລະນະມັສການຫລາຍ ເພິ່ນຍັງເອີ້ນບາງກອກວ່າ ກຸງເທບອີກ ເພາະມ່ວນຊື່ນ ແລະຈົບງາມຫລາຍຄືເມືອງເທວະດາ ພົລເມືອງເກືອບເຖິງສອງລ້ານຄົນ ເຂົາເຈົ້ານັບຖືສາສນາພຸທ ເຄົາຣົບບູຊາຕໍ່ເຈົ້າຊີວິດ ແລະທຸງໄຕຣົງຂອງອັຖບານໄທ.

ສັບ.– ບາງກອກ.

ນາມ : ຫໍໂຮງ, ພຣະແກ້ວມໍຣະກົດ, ອົດອາງ.

ຄຸນນາມ : ກວ້າງ, ໃຫຍ່.

ກິຣິຍາ : ອາສັຍ, ຈອດ, ບັນທຸກ, ທ່ຽວຫລິ້ນ.

# ໗໐ ການຄົມນາຄົມ



ເມື່ອການໄປມາຫລືສົ່ງຂ່າວຫາກັນສະດວກດີແລ້ວ. ການຄ້າຂາຍແລະການປູກົບກໍຈະເລີນຂຶ້ນ. ແຕ່ກ່ອນໃນປະເທດລາວເຮົາ ທາງບົກກໍມີແຕ່ຫົນທາງບໍ່ດີ ແລະທາງນ້ຳກໍມີແຕ່ເຮືອ ດຽວນີ້ຣັຖບານເຮົາ ໄດ້ທຳໃຫ້ຖະໜົນຫົນທາງຈະເລີນ. ເພິ່ນໄດ້ສ້າງທາງໃຫມ່ຂຶ້ນ. ແຕ່ໂດຍມາກ ເພິ່ນໄດ້ນຳວິທີເດີນທາງດ້ວຍຈັກອາຍ ຫລືຈັກໄຟຟ້າ ເຂົ້າມາໃນປະເທສລາວດີ : ກຳປັ່ນ, ອົດຍົນ ແລະຍົນເຫາະ ເພື່ອສົ່ງຂ່າວຫາກັນໂດຍເຮົ່ວ, ເພິ່ນກໍໄດ້ສ້າງໂທຣະເລກແລະໂທຣະສັບຂຶ້ນ ໃນຝ່າຍໂທຣະເລກນັ້ນ, ຕ້ອງເຂົ້າໃຈວ່າມີສາຍບົກແລະສາຍນ້ຳ.



ຍົນເຫາະກໍສົ່ງຄົນ ແລະຂ່າວຄາວໄດ້ຮວດເຮົ່ວດີກັນ. ປາງລຶມວ່າມໍ່ ໆ ມານີ້ ເພິ່ນໄດ້ປະດິດວິທຍຸໂທຣະເລກຂຶ້ນ. ຍ້ອນວິທຍຸໂທຣະເລກນີ້, ເພິ່ນຈຶ່ງສົ່ງຂ່າວຄາວໄປໄກໄດ້ ໂດຍບໍ່ຕ້ອງໃຊ້ສາຍ, ວິທຍຸໂທຣະເລກ ຍັງໃຊ້ຊ່ວຍເຫລືອຄົນ ໃນເວລາອັນຕລາຍຈະມາເຖິງໄດ້ທັນຄວນ, ເຊັ່ນວ່າໃນເວລາຍົນເຫາະຈະຕົກ ຫລືກຳປັ່ນຈະຫລົ້ມເມື່ອມີພາຍຸໃຫຍ່ໃນກາງທະເລເປັນຕົ້ນ.

<u>ຄຳອະທິບາຍ.</u>– ໂທຣະສັບ : ສຽງໃນທີ່ໄກ ຫລື ເຄື່ອງເວົ້າໄປໄກດ້ວຍກະແສໄຟຟ້າ. ໂທຣະເລກ : ຫນັງສືໃນທີ່ໄກຫລືເຄື່ອງຂຽນແທນຄຳເວົ້າ ໄປໄກດ້ວຍກະແສໄຟຟ້າ. ວິທຍຸໂທຣະເລກ : ໂທຣະເລກທີ່ບໍ່ຕ້ອງໃຊ້ສາຍ. ທັນຄວນ : ທັນໃນເວລາເກີດເຫດ (ທັນທີ).

<u>ຄຳຖາມ.</u>– ໑.– ເມື່ອການໄປມາສະດວກ ການຄ້າແລະການປູກົບ ເປັນຢ່າງໃດ ? ໒.– ແຕ່ກ່ອນການເດີນທາງປະເທດລາວ ເປັນຢ່າງໃດ ? ດຽວນີ້ເດ ? ໓.– ເພື່ອສົ່ງຂ່າວຫາກັນໃຫ້ໄດ້ຮວດເຮົ່ວ ເພິ່ນໃຊ້ຫຍັງ ? ໔.– ວິທຍຸໂທຣະເລກແມ່ນຫຍັງ ? ໕.– ວິທຍຸໂທຣະເລກມີປໂຍດຢ່າງໃດ ?

<u>ໃຈຄວາມ.</u>– ແຕ່ກ່ອນ ການຄົມນາຄົມ ຂອງ ປະເທດເຮົາ ບໍ່ ຈະເລີນ ປັດຈຸບັນຣັຖບານໄດ້ສ້າງທາງຂຶ້ນ ແລະນຳເອົາວິທີເດີນທາງດ້ວຍຈັກ ຫລື ໄຟຟ້າເຂົ້າມາໃຊ້ ຫລາຍ ການ ສົ່ງຂ່າວ

ກໍ່ສະດວກເຫມືອນກັນ ມີໄທອະເລກ ໄທອະສັບແລະ ວິທະບຸໄທອະເລກ.

<u>ສັບ</u>.— ການຄົມນາຄົມ.

<u>ນາມ</u> : ການຄ້າຂາຍ, ຫົນທາງ, ຣັດຖະບານ, ກຳປັ່ນ, ຣົດບິນ, ບິນເຫາະ, ໄທອະເລກ, ໄທອະສັບ.

<u>ຄຸນນາມ</u> : ສະດວກ, ໄຫມ່, ອັນຕຣາຍ.

<u>ກິຣິຍາ</u> : ສ້າງ, ສົ່ງ, ເດີນທາງ.

<u>ໄວຍາກອນ</u>.— ຕົວ ປ ແປງເປັນ ບ ແລະ ຜ ໄດ້ດັ່ງນີ້ :

| | | | | |
|---|---|---|---|---|
| ເປັນ ບ | ດັ່ງ | ປາຣະມີ | ເປັນ | ບາຣະມີ |
| | " | ປິດາ | " | ບິດາ |
| | " | ປະວະຣະ | " | ບໍວອນ |
| ເປັນ ຜ | " | ປາສາດ | " | ຜາສາດ |
| | " | ໄປດ | " | ໄຜດ |
| | " | ປຍາ | " | ຜຍາ |
| | " | ປຽນ | " | ຜ່ຽນ |
| | " | ປານກາງ | " | ຜານກາງ |
| | " | ປາບ | " | ຜາບ |

<u>ການສະກົດຄຳ</u>.— ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້: ກົມໄປສະນີ, ແຂວງ, ຜູ້ອັບ, ໄທອະສັບ

<u>ຄຳເຄົ້າດຽວກັນ</u>.— ຫລົ້ມ : ຫລຸມ. ພາຍຸ : ວາຍຸ, ພາຍ.

<u>ແຕ່ງເຣື່ອງ</u>.— ຈົ່ງແຕ່ງເຣື່ອງການສົ່ງຈົດຫມາຍສະບັບນຶ່ງ.



# ໗໑. ຍິງໃຈບຸນຜູ້ນຶ່ງ



ນາງຊີເຟີລີຊຽນທີ່ເປັນຜູ້ໃຫຍ່ ແຫ່ງນາງຊີທັງຫລາຍທີ່ເປັນນາງພຍາບານເມືອງສິກາດອັງ ໄດ້ມາຮອດປະເທດໂກແຊງຊີນໃນປີ ໑໘໘໘ ແລະໄດ້ເຖິງແກ່ກັມໄປໃນເດືອນອາອຸດ ໑໙໔໙

ໃນຣະຫວ່າງສາມສິບຫ້າປີມານີ້. ນາງຊີຜູ້ໃຈໃຫຍ່ ແລະ ກວ້າງຂວາງ ຫາຜູ້ຈະປຽບບໍ່ໄດ້ນີ້ ໄດ້ຊ່ວຍເຫລືອເກື້ອກູນຄົນທັງຫລາຍຢູ່ທຸກບ່ອນ. ຈະແມ່ນຄົນເຈັບນ້ອຍໃຫຍ່ຫລືທຸກຈົນ, ຈະແມ່ນຄົນພຍາດຕາຍທີ່ອຸກໃຈຢູ່ຄົນດຽວ, ຈະແມ່ນເດັກນ້ອຍເກີດໃຫມ່ທີ່ຈະຊູຊາດຕໍ່ໄປພາຍຫນ້າ, ຈະແມ່ນລູກກຳພ້າທີ່ບໍ່ມີບ່ອນອາສັຍ ຫລືເດັກຫນຸ່ມນ້ອຍທີ່ຄວນໄດ້ຮັບຄວາມສັ່ງສອນໃຫ້ພຽງພໍ, ປາງໃດກໍ່ຕາມ, ເພິ່ນກໍ່ເອົາໃຈໃສ່ຊ່ວຍເຫລືອເກື້ອກູນໂດຍເຕັມຕາມຫນ້າທີ່ຂອງນາງພຍາບານຜູ້ໃຈບຸນ ແລະທັ້ງມີຄວາມອ່ອນຫວານແລະນ້ຳໃຈອັນດີຕໍ່ທຸກ ໆ ຄົນສເມີ.

ເຫດທີ່ເພິ່ນມີວຽກຫລາຍໃນການປິ່ນປົວພຍາດ ຊຶ່ງຫາຍບໍ່ເປັນ, ເຊັ່ນຂີ້ທູດເປັນຕົ້ນ, ເພິ່ນຈຶ່ງໄດ້ເຖິງແກ່ກັມໄປ ເພາະເພິ່ນໄດ້ຕິດພຍາດນີ້ຈາກຄົນເຈັບດັ່ງນີ້, ເພິ່ນໄດ້ສລະຊີວິດຂອງເພິ່ນ ໂດຍບໍ່ນັບຄວາມລຳບາກຫຍັງສັກຢ່າງ ເພິ່ນຊ່ວຍເຫລືອຄົນພົ້ນເມືອງ ທີ່ເພິ່ນຖືວ່າເປັນກອບຄົວດຽວກັນກັບເພິ່ນ ຄວາມສລາດສລຽວມີເທົ່າໃດ, ເພິ່ນກໍ່ໄດ້ໃຊ້ສຳລັບຄົນພວກນີ້ຫມົດ.

ຄົນທັງຫລາຍມີຄວາມກະຕັນຍູຕໍ່ເພິ່ນ ເປັນຢ່າງຍິ່ງດ້ວຍວ່າເພິ່ນເປັນນາງຊີທີ່ມີໃຈບຸນແທ້. ສະນັ້ນຣັຖບານຝຣັ່ງຈຶ່ງບໍ່ຊ້າໃນການທີ່ຈະປະທານຕາເອຊຽງດອນເນີໃຫ້ແກ່ເພິ່ນເລີຍ. ຕາອັນນີ້ມີກຽດຕິຍົດສູງຫລາຍ ທ່ານຜູ້ສຳເຣັດອາຊະການປະເທດໂກແຊງຊີນ ຈຶ່ງໄດ້ນຳປະທານໃຫ້ເອງ

<u>ຄຳອະທິບາຍ</u>.– ນາງພຍາບານ : ນາງຮັກສາປົວຄົນເຈັບຢູ່ທີ່ໂຮງຫມໍ. ເຖິງແກ່ກັມໄປ : ຕາຍໄປ. ກະຕັນຍູ : ຮູ້ບຸນຄຸນຂອງທ່ານຜູ້ມີຄຸນແກ່ຕົນ.

<u>ຄຳຖາມ</u>.– ໑.– ຄົນແນວໃດຈຶ່ງຮຽກວ່າຄົນໃຈບຸນ ? ໒.– ໂຮງພຍາບານຕັ້ງໄວ້ສຳລັບເຮັດຫຍັງ ? ໓.– ຄົນກຳພ້ານັ້ນຄືຄົນແນວໃດ ?

<u>ໃຈຄວາມ</u>.– ຍິງໃຈບຸນຜູ້ນຶ່ງ ມີນາມວ່າ ນາງຊີ ເຟລີຊຽນ ທີ່ເປັນຜູ້ໃຫຍ່ແຫ່ງນາງຊີທັງຫລາຍ ທີ່ເປັນນາງພຍາບານເມືອງສັກດອັງ ໄດ້ມາຮອດປະເທດໂກແຊງຊີນໃນປີ ໑໘໘໘ ແລະ



ໄດ້ເຖິງແກ່ກັມໄປໃນເດືອນອາຊຸດ ໑໙໒໓ ນາງຊີຜູ້ນີ້ມີຄົນທັງຫລາຍນັບຖືເປັນອັນມາກ ເພາະເພິ່ນໄດ້ຊ່ວຍເຫລືອປົວຄົນເຈັບໂດຍເຕັມກຳລັງ

<u>ສັບ</u>.– ຍິງໃຈບຸນ.

<u>ນາມ</u> : ນາງພຍາບານ, ຄົນເຈັບ, ພຍາດ, ຄວາມກະຕັນຍູ.

<u>ຄຸນນາມ</u> : ກວ້າງຂວາງ, ຫນຸ່ມນ້ອຍ, ທຸກຈົນ.

<u>ກິຣິຍາ</u> : ມາຮອດ, ຊ່ວຍເຫລືອ, ເກີດ, ເຖິງແກ່ກັມ, ສລະ.

<u>ໄວຍາກອນ</u>.– ປະຕິຣູບພົດ.

ປະຕິຣູບພົດ ແມ່ນຄຳທີ່ມີສຽງສຳນຽງດຽວກັນ ແຕ່ຂຽນຕ່າງກັນ ແລະມີຄວາມຫມາຍຕ່າງກັນ ຕົວຢ່າງ ສັ່ງ (ບອກ) ແລະຊັ່ງ (ດີວນ້ຳຫນັກ) ທ່ານ (ຄົນຜູ້ໃດຜູ້ນຶ່ງ) ແລະຖ່ານ (ເຊື້ອໄຟ) ຫົ່ມ (ຕຸ້ມ) ຮົ່ມ (ເງົາ) ເປັນຕົ້ນ.

<u>ການສະກົດຄຳ</u>.– ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ນາງຊີ, ພຍາບານ, ເດັກນ້ອຍ, ຊາດ, ເດັກຫນຸ່ມ, ຄວາມສັ່ງສອນ, ຄວາມອ່ອນຫວານ, ການປິ່ນປົວ, ຂີ້ທູດ, ຄວາມສລາດ.

<u>ຄຳເຄົ້າດຽວກັນ</u>.– ກຳພ້າ : ກຳພອຍ. ຊີວິດ : ຊີວາ.

<u>ແຕ່ງເຣື່ອງ</u>.– ໃຫ້ເຈົ້າແຕ່ງເຣື່ອງຄົນໃຈບຸນຜູ້ນຶ່ງ.

---

## ໙໒. ຍິງໃຈບຸນຜູ້ນຶ່ງ ( ຕໍ່ )

ການສົ່ງສະການ ຂອງນາງຊີເຟລີຊຽນ ຜູ້ນັ້ນໄດ້ທຳຢູ່ທີ່ ສັກດອັງ ໃນວັນທີ ໒໓ ເດືອນອາຊຸດ ໑໙໒໓ ເວລາເຊົ້າ.



ປອ້ງທຸກຄົນທີ່ເປັນຂ້າຣາຊການຜູ້ໃຫຍ່, ຄົນພື້ນເມືອງທຸກຊັ້ນທຸກຄນະໃນແຂວງເມືອງສິກດອັງ ແລະພວກຕ່າງໜ້າທຸກ ໆ ແຂວງໃນປະເທດໂກແຊງຊີນ ກໍພ້ອມກັນໄປສົ່ງສະການນາງຊີຜູ້ນີ້ທຸກຖ້ວນໜ້າ. ສົບອັນນີ້ກໍໄດ້ເຮັດການທັ້ມດາ, ແຕ່ຫາກເປັນພິທີກຸ່ມເອງ. ພວກຊາວເມືອງທີ່ມານັ້ນກໍມາກມາຍເຫລືອປະມານ.

ມີຄອບຄົວຂອງພວກເຈັບທັງຫລາຍຊຶ່ງນາງຊີໄດ້ ປິ່ນປົວ ແລະ ເບິ່ງແຍງມາໄດ້ຫລາຍເຟົ້າຫລາຍປີແລ້ວນັ້ນເອງ.

ທະຫານແກວ ຫມວດນຶ່ງ ຂອງ ການທະຫານ ເມືອງ ສິກດອັງ ໄດ້ມາໃຫ້ກຽດຕິຍົດໃນການນີ້. ຕາມສົມຄວນ, ຜູ້ທີ່ຄົນກອງຟອນ, ກໍຕ້ອງມີຂ້າຣາຊການຜູ້ໃຫຍ່ຜູ້ນຶ່ງ ກ່າວສຸນທອນພົດເຖິງຄຸນຄວາມດີຂອງນາງຊີຜູ້ນີ້ຊຶ່ງຫາອັນຈະປຽບບໍ່ໄດ້ ແລະຄວນກ່າວໃຫ້ປະຊາຊົນຊາບວ່າ ນາງປຸໃນພວກຂ້າຣາຊການຝ່າຍພຍາບານຄົນພື້ນເມືອງພ້ອມດ້ວຍຫມາຍເຫດນີ້ : "ເຖິງແກ່ກັມໃນການຊ່ວຍເຫລືອປະເທດໂກແຊງຊີນ" ແຕ່ຂ້າຣາຊການຜູ້ໃຫຍ່ຜູ້ນັ້ນກໍຈໍາເປັນຕ້ອງມິດເສັຽບໍ່ເວົ້າໃຫ້ມັນຍຶດຍາວຕໍ່ໄປອີກ ເພາະນາງຊີເຟລີຊຽນທີ່ເປັນຄົນບໍ່ອວດອົ່ງໄດ້ສັ່ງໄວ້ເປັນເດັດຂາດ. ໃນເມື່ອຈະສິ້ນໃຈ, ວ່າປ່າໄດ້ທໍາການສົ່ງສະການໃຫ້ຄຶກຄື້ນ ແລະຢ່າໃຫ້ມີການກ່າວສຸນທອນພົດຢ່າງໃດເລີຍ



ຄວາມບໍ່ ຄຶກຄື້ນ ຂອງ ການສົ່ງສະການ ກັບ ຄວາມ ມິດ ແລະ ຄວາມເສົ້າໂສກຫນັກຂອງປະຊາຊົນອັນຫລວງຫລາຍ ກໍປະກອບກັນດີກັບຄວາມດີອັນປະເສີດຂອງຜູ້ເຖິງແກ່ກັມໄປນີ້ເຕັມທີ່. ດັ່ງນີ້, ກໍສະແດງໃຫ້ເຫັນດີກວ່າພິທີອື່ນ. ທັງຫມົດວ່າການທີ່ນາງໄດ້ເຖິງແກ່ກັມໄປເຊັ່ນນີ້ ຜູ້ຄົນມີຄວາມເສົ້າເສັຽດາຍນາງເຫລືອທີ່ສຸດ.

<u>ຄໍາອະທິບາຍ</u>.– ສຸນທອນພົດ : ກ່າວຄໍາດີເຣື່ອງໃດເຣື່ອງນຶ່ງຕໍ່ຫນ້າປະຊາຊົນ. ຄນະ : ຫມູ່, ພັກພວກ. ທັມດາ : ຕາມເຄີຍ. ອຶນອອຍ : ໂອບອ້ອມ, ເວົ້າຄວາມອ່ອນຫວານ. ສິ້ນໃຈ : ຕາຍໄປ.

<u>ຄໍາຖາມ</u>. ໑.– ການສົ່ງສະການຂອງນາງຊີເຟລີຊຽນຜູ້ນັ້ນທໍາປຸໃສ ? ໒.– ໃນເວລາ ວັນ ເດືອນ ປີ ໃດ ? ໓.– ແມ່ນຜູ້ໃດແດ່ໄດ້ໄປສົ່ງສະການນາງຊີເຟລີຊຽນ ? ໔.– ສົບນາງຊີເຟລີຊຽນນັ້ນງາມພໍປານໃດ ? ໕.– ເປັນຫຍັງນາງເຟລີຊຽນເມື່ອສິ້ນໃຈໄປ ຈຶ່ງບໍ່ໃຫ້ທໍາການສົ່ງສະການໃຫ້ຄຶກຄື້ນ ? ເພາະເຫດໃດ ?

<u>ໃຈຄວາມ</u>.– ສົ່ງສະການ ນາງ ເຟລີຊຽນ ປຸ ສິກດອັງ ທີ ໒໓ ອາຊຸ ໑໙໒໓ ເວລາເຊົ້າ. ສົບຂອງນາງກໍຕາມທັ້ມດາ, ແຕ່

ພິລຶກປຸເອງ, ເພາະມີເຈົ້ານາຍບູ້ໄຫຍ່ຄືປອັງ, ຄົບພົ້ນເມືອງສຶກຕອັງແລະປະເທດໂກແຊງຊີນ ກໍໄປສົງສະການນາງຊີບຸ້ນີ້ທຸກຖ້ວນຫນ້າ, ນາງໄດ້ສັ່ງໄວ້ວ່າຢ່າໄດ້ສົງສະການປາງດຶກຄຶ້ນຈຶ່ງຈະເປັນການດີອັນປະເສີດ.

ສັບ.— ການສົງສະການ, ອ້າອາຊຸການ, ສົບ, ຊາວເມືອງ, ກອງຟອນ, ສຸບທອບພິດ, ຄວາມດີ, ຄວາມເສົ້າໂສກ, ປະຊາຊົນ.

ໄວຍາກອນ.— ຄຳກົງກັນຂ້າມ.

ຄຳກົງກັນຂ້າມແມ່ນຄຳທີ່ມີຄວາມຫມາຍແຕກຕ່າງເປັນຄຳອື່ນ ດັ່ງປາງ :

ຄຳກົງກັນຂ້ວມກັບ ຍາກ ແມ່ນ ງ່າຍ.
" " ສລາດສລຽວ ແມ່ນ ໂງ່ຊ້າ.
" " ກະຕັນຍູ ແມ່ນ ອະກະຕັນຍູ.

ການສະກົດຄຳ.— ການສົງສະການ, ປອັງ, ອ້າອາຊຸການ, ຄົບພົ້ນເມືອງ, ໂກແຊງຊີນ, ທັນດາ, ຊາວເມືອງ, ກອງຟອນ, ສຸບທອບພິດ, ຄວາມເສົ້າໂສກ.

ຄຳເຄົ້າຄຽງກັນ.— ເຊັ່ນ : ຮ່ຳ, ຮ່ອນ, ຮານ.

ແຕ່ງເອື່ອງ.— ໃຫ້ເຈົ້າແຕ່ງເອື່ອງທີ່ເຈົ້າໄດ້ເຫັນໃນເວລາທີ່ເຈົ້າໄດ້ໄປສົງສະການຄົນຜູ້ນຶ່ງຕາຍ.



# ໒໙. ຫລີ່ຜີ



ທີ່ບ້ານຄອນ (ປະເທດລາວ) ມີນ້ຳຕົກຕາດທີ່ສູງໄດ້ສິບຫ້າແມດ ແລະບາງທີ່ກວ້າງໄດ້ຮອດນຶ່ງກິໂລແມດ. ບ່ອນນ້ຳຕົກຕາດ, ຖ້າຈະນັບຮວມເອົາກັບຫມົດທຸກປອງນ້ຳ, ກໍກວ້າງໄດ້ປະມານສິບສອງກິໂລແມດ.

ປຸເຫນືອຫລີ່ຜີຫນ່ອຍນຶ່ງ, ນ້ຳຂອງແຄບເຂົ້າແລະແຫກໄດ້ແຕ່ຫ້າຫລືສິບກິໂລແມດເທົ່ານັ້ນແລ້ວ, ເມື່ອຮອດໃກ້ໆ ບ່ອນນ້ຳຕົກ, ມັນກວ້າງອອກໄປຕາມຫວ່າງຫມູ່ດອນ, ເທິງພລານຫີນອັນກວ້າງໃຫຍ່, ບ່ອນນີ້ກວ້າງໄດ້ຊາວກິໂລແມດ ນັບແຕ່ປັ່ງເບື້ອງນັ້ນມາຫາປັ່ງເບື້ອງນີ້ຂອງແມ່ນ້ຳຂອງ.

ພຶກສາຊາດທີ່ເກີດເທິງກ້ອນຫີນທຸກໆ ກ້ອນ ຈົນຮອດສັນນ້ຳຕົກຕາດກໍຍັງມີຫ້ວຍປຸຫັ້ນ ພາໃຫ້ນ້ຳຕົກຕາດບາງບ່ອນບໍ່ເປັນຕາ

ປ້ານຫລາຍ. ທີ່ດິນນ້ຳຕົກຕາດປາໃຫຍ່ກໍບັງມາບ້ອນແລະລອຍຫລິ້ນ ປູ ພື້ນຫລີ່ຜີແລ້ວ, ປູບ່ອນທີ່ນ້ຳຄ່ອຍໄຫລ, ນົກຫົງແລະນົກນາຫລາຍ ຊູນິວອີກກໍມາລອຍຫລິ້ນ. ປະໃຫ້ນ້ຳພັດເອົາໄປຕາມສະບາຍ.

<u>ຄຳອະທິບາຍ</u>.- ນ້ຳຕົກຕາດ : ນ້ຳຕົກລົງເຫວອັນຊັນ ໆ. ພຶກສາ ຊາດ : ຕົ້ນໄມ້.

<u>ຄຳຖາມ</u>.- ໑.- ນ້ຳຕົກຕາດທີ່ປູບ້ານຄອນນັ້ນ ເອີ້ນວ່າຢ່າງໃດ ?

໒.- ລວງສູງແລະລວງກວ້າງຂອງມັນມີເທົ່າໃດ ?

໓.- ບ່ອນນ້ຳຕົກຕາດຮວມເອົ້າກັນທັງຫມົດ ກວ້າງຈັກແມດ ?

<u>ໃຈຄວາມ</u>.- ຫລີ່ຜີແມ່ນບ່ອນນ້ຳຕົກຕາດທີ່ບ້ານຄອນສູງໄດ້ ໑໕ ແມດ. ກວ້າງໄດ້ ໑ ກລມ. ຖ້າຈະນັບຮວມເອົ້າກັນຫມົດທຸກປ່ອງນ້ຳກໍກວ້າງໄດ້ປະມານ ໑໒ ກລມ. ປູເຫນືອຫລີ່ຜີຫນ່ອຍນຶ່ງ, ນ້ຳຂອງແຄບເອົ້າແຫລກໄດ້ແຕ່ ໕ ຫລື ໑໐ ກລມ. ເທົ່ານັ້ນ ລາງບ່ອນນັ້ນກວ້າງໄດ້ ໒໐ ກລມ. ນັບແຕ່ປັ້ງເບື້ອງນັ້ນມາຫາເບື້ອງນີ້ຂອງແມ່ນ້ຳຂອງ.

<u>ສັບ</u>.- ຫລີ່ຜີ.

<u>ນາມ</u> : ນ້ຳຄອນ, ປາ, ໂງ່ນຫີນ, ນົກຫົງ.

<u>ຄຸນນາມ</u> : ກວ້າງ, ໃຫຍ່.

<u>ກິລິຍາ</u> : ຕົກ, ລອຍ, ຫລິ້ນ.



<u>ໄວຍາກອນ</u>.- ຄຸນສັບຫມາຍຖາມ.

ຄຸນສັບຫມາຍຖາມ ມີຄື ຫຍັງ, ໃສ, ບໍ່, ໃດ.
ຕາມພາສາລາວຄຸນສັບຫມາຍຖາມປູ່ຫນ້າ ປູກາງ
ຫລືປູຫລັງວັກ ຫລືປູໃນກໍໄດ້ຄືວ່າງ ເຮືອນເຈົ້າປູ
ໃສ ຫລືປູໃສເຮືອນເຈົ້າ ? ອັນນີ້ແມ່ນຫຍັງ ? ຫລືແມ່ນ
ຫຍັງອັນນີ້ ? ເປັນຫຍັງນາງສຸວັນນີຈຶ່ງຊິດຊ່ວຍແມ່ຂອງ
ລາວ ຫລືນາງສຸວັນນີເປັນຫຍັງຈຶ່ງຊິດຊ່ວຍແມ່ຂອງ
ລາວ ?

<u>ການສະກົດຄຳ</u>.- ໃຫ້ນັກຮຽນສະກົດຄຳຕໍ່ໄປນີ້ : ຄອນ, ກິໂລແມດ, ພຶກສາຊາດ, ນົກຫົງ, ນ້ຳພັດ.

<u>ຄຳເຄົ້າດຽວກັນ</u>.- ແຄບ : ຄັບ, ຄຽດ.

<u>ແຕ່ງເລື່ອງ</u>.- ຈົ່ງແຕ່ງເລື່ອງຫົວນ້ອຍຫນ່ອຍນຶ່ງ ທີ່ເຈົ້າໄດ້ເຄີຍໄປ ຫລິ້ນ.